| ກຸ່ມວິຊາສະເພາະ | ສາຍຄູອະນຸບານ |
| --- | --- |

# ວິຊາ: ວິທະຍາສາດການເມືອງ








ປີ 2023

# ວິຊາ : ວິທະຍາສາດການເມືອງ

## ປື້ມແບບຮຽນ

| | | |
|---|---|---|
| ລະບົບ: 11+1+2 | ປີ 2 | ພາກ 2 |


ຮຽບຮຽງໂດຍ:

ທ້າວ ສຸລິຍົງ ລາດຊະບຸດ

ກວດແກ້:

ທ້າວ ປັງກອນ ຄອນພິລາວັນ

ນາງ ບຸນທະຫຼາ ສີວິໄຊ


ປີ 2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ...53....ສພ.ວສ

# ໃບຢັ້ງຢືນ

## ອະນຸມັດຜ່ານການຮັບຮອງການຮຽບຮຽງເອກສານຫ້ອງການອະນຸບານ-ປະຖົມ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກປີ 2023

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຮຽບຮຽງເອກະສານປະກອບການສອນມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈິ່ງໄດ້ຮັບຮອງເອົາປື້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ຊອ ປທ ສົມບູນ ຊາມົນຕີ | ........................................ |
| ທ່ານ ປທ ອຸດຕະມະ ແສງອາລຸນ | ........................................ |

ທີ່, ສາລະວັນ, ວັນທີ 14 MAR 2023

**ປະທານສະພາວິທະຍາສາດ**

ອ.ຈ ນ. ສົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໝໝໝໝໝໝໝໝ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

# ໃບຮັບຮອງການກວດແກ້ບົດຮຽບຮຽງເອກະສານປະກອບການສອນ ວິຊາ ການເມືອງ

**ຊື່ຫົວຂໍ້:** ການເມືອງ

**ຫ້ອງການ** : ຫ້ອງການອະນຸບານ-ປະຖົມ

**ຜູ້ຮຽບຮຽງປຶ້ມ**

ທ່ານ ສຸລິຍົງ ລາດຊະບູດ

| **ຄະນະກຳມະການກວດແກ້ບົດ** | **ລາຍເຊັນ** |
|---|---|
| ທ່ານ ປັງກອນ ຄອນພະລາວັນ | ............................................ |
| ທ່ານ ນາງ ບຸນທະຫຼາ ສີວິໄຊ | ............................................ |

**ທີ່, ສາລະວັນ, ວັນທີ** 14 MAR 2023

**ຫົວໜ້າຫ້ອງການອະນຸບານ-ປະຖົມ**

ຄູອອນ

# ຄຳນຳ

ເພື່ອພັດທະນາຄຸນນະພາບ ແລະ ປະສິດທິພາບການຮຽນໃຫ້ສູງຂຶ້ນ ແນໃສ່ເພີ່ມສະມັດທະພາບຂອງຄູ ແລະ ພັດທະນາວິຊາຊີບໃຫ້ດີຂຶ້ນເທື່ອລະກ້າວ. ເລັ່ງໃສ່ຄວາມສະດວກໃນການສຶກສາຮ່ຳຮຽນຂອງນັກຮຽນ ຄູຜູ້ສອນໃນລາຍວິຊາ ວິທະຍາສາດການເມືອງ ຈຶ່ງຈັດຮຽບຮຽງປຶ້ມເຫຼັ້ມນີ້ຂຶ້ນມາເພື່ອຮັບໃຊ້.

ປຶ້ມເຫຼັ້ມນີ້ ໄດ້ຈັດຮຽບຮຽງ ແລະ ເກັບກຳຂໍ້ມູນມາໄດ້ຈາກຫຼາຍແຫຼ່ງຂໍ້ມູນ ເຊັ່ນ : ຫໍສະໝຸດ ວິທະຍາໄລຄູ ສາລະວັນ, ຈາກປຶ້ມວິຊາການສະຖາບັນ, ກົມສ້າງຄູ, ມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລແຫ່ງຊາດ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ເພື່ອເນັ້ນໃສ່ນັກສຶກສາຄູ ທີ່ຈົບຈາກ ວິທະຍາໄລຄູສາລະວັນ ມີສະມັດທະພາບດີ, ມີຄວາມຮູ້, ຄວາມສາມາດ ແລະ ເຂົ້າໃຈໃນລາຍວິຊາທີ່ຕົນເອງຮຽນໄດ້ເປັນຢ່າງດີ, ຮູ້ຈັກເອົາໄປໝູນໃຊ້ໃນຊີວິດປະຈຳວັນໄດ້ ໂດຍສະເພາະ ແມ່ນ ວິຊາ ວິທະຍາສາດການເມືອງ ເລັ່ງໃສ່ໃຫ້ນັກຮຽນເຂົ້າໃຈ ແລະ ສາມາດ ນຳໃຊ້ໄດ້ຈິງ.

ຫວັງຢ່າງຍິ່ງວ່າ ຄູ - ອາຈານ ແລະ ນັກສຶກສາຄູ ແລະ ພາກສ່ວນອື່ນໆຫາກຍັງພົບເຫັນບັນຫາໃດໜຶ່ງທີ່ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສະພາບ, ກະລຸນາປະກອບຄຳຄິດເຫັນຂອງຕົນ ເພື່ອຊ່ວຍປັບປຸງເຮັດປຶ້ມເຫຼັ້ມນີ້ໃຫ້ສົມບູນ ແລະ ມີປະສິດທິພາບຍິ່ງຂຶ້ນໃນອານາຄົດ.

# ສາລະບານ

**ເນື້ອໃນ** **ໜ້າ**

**ພາກທີ 1 ປັດຊະຍາ**

**ບົດທີ 1 ປັດຊະຍາ**

1. ຄວາມຮູ້ເບື້ອງຕົ້ນກ່ຽວກັບປັດຊະຍາ........................................................1
2. ປັດຊະຍາ ມາກຊິດ.........................................................................2

**ບົດທີ 2 ຄວາມຮູ້ເບື້ອງຕົ້ນກ່ຽວກັບວັດຖຸນິຍົມສັດຈະວິພາກ**

1. ວັດຖຸ ແລະ ການເຄື່ອນເໜັງຂອງວັດຖຸ. .........................................................6
2. ຕົ້ນກຳເນີດ ແລະ ທາດແທ້ຂອງສະຕິ...........................................................7
3. ວິທີສັດຈະວິພາກວັດຖຸນິຍົມ.....................................................................7
4. ບັນດາກົດເກນພື້ນຖານຂອງສັດຈະວິພາກວັດຖຸນິຍົມ.........................................8
5. ບັນດາຄູ່ມາດຕາເກນຂອງສັດຈະວິພາກວັດຖຸນິຍົມ. ..........................................9
6. ທິດສະດີກ່ຽວກັບຄວາມຮັບຮູ້ຂອງວັດຖຸນິຍົມປະຫວັດວິພາກ. ..............................10

**ອ່ານເພີ່ມ : ຄວາມຮູ້ເບື້ອງຕົ້ນກ່ຽວກັບລັດທິວັດຖຸນິຍົມສັດຈະວິພາກ**

1. ຊົນຊັ້ນ ແລະ ການຕໍ່ສູ້ຊົນຊັ້ນ.................................................................13
2. ບົດບາດຂອງມະຫາຊົນ ແລະ ບຸກຄົນໃນປະຫວັດສາດ.......................................14
3. ທ່ານ ໄກສອນ ພົມວິຫານ ວິລະບຸລຸດຂອງຊາດລາວ. .......................................16

**ພາກທີ II ເສດຖະສາດ**

**ບົດທີ 3 ການຜະລິດສັງຄົມ ແລະ ບົດບາດການພັດທະນາສັງຄົມມະນຸດ**

1. ການຜະລິດວັດຖຸສິ່ງຂອງແມ່ນພື້ນຖານການດຳລົງຊີວິດ. .....................................18
2. ສິນຄ້າ ແລະ ກົດເກນມູນຄ່າ. ..................................................................18
3. ການເງິນ, ທະນາຄານ ແລະ ການຄ້າ. ..........................................................19
4. ພາກສ່ວນ ແລະ ໂຄງປະກອບເສດຖະກິດຂອງ ສປປ ລາວ. .................................22
5. ການຫັນເສດຖະກິດແຫ່ງຊາດໄປສູ່ເສດຖະກິດທີ່ຜະລິດສິນຄ້າ...............................23
6. ການປ່ຽນແປງທາງດ້ານເສດຖະກິດຂອງປະຊາຄົມອາຊຽນ....................................23

**ພາກທີ III ພາກສັງຄົມສາດ**

**ອ່ານເພີ່ມ : ລະບອບການເມືອງ ແລະ ນະໂຍບາຍ ສປປ ລາວ**

1. ລະບອບປະຊາທິປະໄຕປະຊາຊົນ.................................................................25
2. ນະໂຍບາຍສັງຄົມ ແລະ ວັດທະນະທຳຂອງ ສ ປປ ລາວ. ....................................25
3. ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ................................................26
4. ນະບາຍການຕ່າງປະເທດຂອງ ສປປ ລາວ.......................................................27

**ບົດທີ 4 ວ່າດ້ວຍລັດ ແລະ ກົດໝາຍ**

1. ຄວາມຮູ້ພື້ນຖານກ່ຽວກັບລັດ, ທາດແທ້ ແລະ ອົງປະກອບຂອງລັດ.........................29
2. ການກຳເນີດ, ທາດແທ້ ແລະ ຄຸນປະໂຫຍດຂອງກົດໝາຍ...................................30
3. ລັດ ແລະ ກົດໝາຍແຫ່ງ ສປປ ລາວ ...........................................................31

**ບົດທີ 5 ລັດຖະທຳມະນູນແຫ່ງ ສປປ ລາວ**

1. ຄວາມສຳນຶກກ່ຽວກັບ ລັດຖະທຳມະນູນແຫ່ງ ສ ປ ປ ລາວ..................................32

2. ພາລະບົດບາດ - ໜ້າທີ່ຂອງລັດຖະທາມະນູນ ........................................ 32
3. ຫຼັກການ ແລະ ເນື້ອໃນພື້ນຖານຂອງລັດຖະທໍາມະນູນ ........................................ 33

**ອ່ານເພີ່ມ: ກົດໝາຍອາຍາພາກລວມ**

1. ກົດໝາຍອາຍາ, ຫຼັກການ ແລະ ຂອບເຂດການນໍາໃຊ້ກົດໝາຍອາຍາ ........................................ 34
2. ການກະທໍາຜິດ ແລະ ອົງປະກອບຂອງການກະທໍາຜິດທາງອາຍາ ........................................ 35
3. ສາເຫດ ແລະ ເງື່ອນໄຂ ທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ........................................ 36
4. ໄລຍະການກະທໍາຜິດ, ການຮ່ວມມືກະທໍາຜິດ ແລະ ການກະທໍາຜິດຫຼາຍສະຖານ. .......... 37
5. ໂທດ ແລະ ການວາງໂທດ. ........................................ 38

**ອ່ານເພີ່ມ : ກົດໝາຍອາຍາພາກສະເພາະ**

1. ການກະທໍາຜິດຕໍ່ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ . 40
2. ການກະທໍາຜິດຕໍ່ຊີວິດ, ສຸຂະພາບ ແລະ ກຽດສັກສີຂອງພົນລະເມືອງລາວ. ........................................ 40
3. ການກະທໍາຜິດຕໍ່ເສລີພາບຂອງພົນລະເມືອງ, ຕໍ່ກໍາມະສິດຂອງລັດ ແລະ ລວມໝູ່. ........... 41

**ອ່ານເພີ່ມ : ປະເທດລາວ ແລະ ມູນເຊື້ອຂອງຄົນລາວ**

1. ການກໍາເນີດຊາດລາວ ........................................ 43
2. ມູນເຊື້ອຂອງຊາດລາວ ແລະ ຄົລາວ. ........................................ 45

**ບົດທີ 6 ນະໂຍບາຍສັງຄົມ ແລະ ການແກ້ບັນຫາສັງຄົມ**

1. ຄວາມໝາຍສໍາຄັນຂອງນະໂຍບາຍສັງຄົມ. ........................................ 49
2. ໄພສັງຄົມ ແລະ ປະກົດການຫຍໍ້ທໍ້ໃນສັງຄົມ. ........................................ 50

**ອ່ານເພີ່ມ ຄວາມສາມະຄີບັນດາເຜົ່າແມ່ນພື້ນຖານຄວາມໝັ້ນຄົງຂອງຊາດ**

1. ຊາດລາວ ແລະ ເຜົ່າ ........................................ 53
2. ຄວາມສໍາຄັນ ຄວາມສາມະຄີທີ່ເປັນມູນເຊື້ອຂອງປະຊາຊົນບັນດາເຜົ່າ. ........................................ 58
3. ທິດທາງລວມ ແລະ ມາດຕາການສ້າງຄວາມສາມະຄີລະຫວ່າງເຜົ່າ. ........................................ 58

**ບົດທີ 7 ການພົວພັນ ແລະ ການຮ່ວມມືສາກົນຂອງ ສປປ ລາວ**

1. ລັກສະນະພົ້ນເດັ່ນ ແລະ ທ່າອ່ຽງການຮ່ວມມືສາກົນ. ........................................ 60
2. ສ ປປ ລາວ ໃນເວທີປະຊາຄົມໂລກ. ........................................ 60
3. ບັນດາຫຼັກການພື້ນຖານ ແລະ ທິດທາງການຮ່ວມມືສາກົນ. ........................................ 61

**ບົດທີ 8 ຄວາມສາມະຄີແບບພິເສດລາວ ແລະ ຫວຽດນາມ**

1. ຄວາມເປັນມາ ແລະ ສາເຫດແຫ່ງຄວາມສາມະຄີພິເສດ. ........................................ 64
2. ພື້ນຖານທາງກົດໝາຍ ແລະ ທິດທາງຮ່ວມມືຂອງລາວ ແລະ ສສ ຫວຽດນາມ. .............. 65

**ບົດທີ 9 ຄວາມຮູ້ກ່ຽວກັບພັກປະຊາຊົນປະຕິວັດລາວ**

1. ທາດແທ້ຂອງ ພັກ ສ ປ ປ ລາວ ........................................ 66
2. ພາລະໜ້າທີ່ຂອງພັກ ປ ປ ລາວ ໃນພາລະກິດປ່ຽນແປງໃໝ່. ........................................ 66

**ອ່ານເພີ່ມ: ພັກນໍາພາ**

1. ລະບົບສາຍໃຍການຈັດຕັ້ງພັກ ........................................ 68
2. ເນື້ອໃນຂອງການນໍາພັກ. ........................................ 69
3. ວຽກງານການຈັດຕັ້ງ ແລະ ພະນັກງານ ........................................ 70

**ອ່ານເພີ່ມ : ວຽກງານກວດກາຂອງພັກ**


1. ຄວາມຮູ້ກ່ຽວກັບວຽກງງານກວດກາ ........ 72
2. ບັນດາຫຼັກການ ແລະ ຮູບການກວດກາ ........ 73
3. ເນື້ອໃນ ແລະ ເປົ້າໝາຍໃນການກວດກາ ........ 75
4. ວິທີການ ແລະ ບາດກ້າວໃນການກວດກາ ........ 76

**ບົດທີ 10 ຄວາມຮູ້ພື້ນຖານກ່ຽວກັບກົດໝາຍແພ່ງ, ແຮງງານ ແລະ ກົດໝາຍຄອບຄົວ**

1. ກົດໝາຍແພ່ງ ........ 78
2. ກົດໝາຍແຮງງານ ........ 82
3. ກົດໝາຍຄອບຄົວ ........ 84

**ອ່ານເພີ່ມ ກົດໝາຍການສຶກສາ** ........ 89

**ອ່ານເພີ່ມ ຮູບແບບເອກະສານທາງລັດຖະການ**

1. ຄວາມສຳຄັນຂອງເອກະສານທາງລັດຖະການ ........ 112
2. ການຂຽນຮູບແບບເອກະສານທາງລັດຖະການ ........ 112
3. ຕົວຢ່າງຮູບແບບເອກະສານທາງລັດຖະການ ........ 113

**ເອກະສານອ້າງອີງ** ........ 120

# ພາກທີ I ປັດຊະຍາ ແລະ ສັງຄົມສາດ

## ບົດທີ 1

## ປະຫວັດປັດຊະຍາ

### 1. ຄວາມຮູ້ເບື້ອງຕົ້ນກ່ຽວກັບປັດຊະຍາ.

ຄຳວ່າ " ປຣັຊຍາ " ເປັນຄຳມາຈາກພາສາສັນສະກິດ 2 ຄຳຄື : " ປຣັດ " ກັບ " ຊຍາ ". ປຣັດ ແປວ່າ ປະເສີດ, ດີເລີດ, ວິເສດ. " ຊຍາ " ແປວ່າຄວາມຮູ້ ດັ່ງນັ້ນ ເມື່ອລ;ມກັນ ຈຶ່ງເປັນ " ຄວາມຮູ້ອັນປະເສີດ" ເຊິ່ງໝາຍເຖິງຄວາມຮູ້ທີ່ເກີດຂຶ້ນຫຼັງຈາກໄດ້ພິຈາລະນາຢ່າງຖີ່ຖ້ວນແລ້ວ. ແມ່ນລະບົບບັນດາລັກ ສະນະ ແລະ ຄວາມສຳນຶກລວມທີ່ສຸດຂອງຄົນເຮົາກ່ຽວກັບໂລກ ( ທຳມະຊາດ, ສັງຄົມ ແລະ ຈິດຕະນາການ ) ແມ່ນໂລກະທັດຂອງຊົນຊັ້ນໃດໜຶ່ງ ຫຼື ກຳລັງຂອງສັງຄົມໃດໜຶ່ງທີ່ແນ່ນອນ.

**ກ ຕົ້ນກຳເນີດຂອງປັດຊະຍາ.**

ເນື່ອງຈາກວ່າປັດສະຍາແມ່ນນັ້ນແມ່ນຄວາມຮູ້ອັນປະເສີດ ສະນັ້ນການກຳເນີດຂອງປັດຊະຍາແມ່ນເກີດຈາກຄົ້ນຄິດຂອງຄົນເຮົາເອງ ທີ່ເກີດຈາກການຄົ້ນຄິດເຖິງບັນຫາຕ່າງໆ ທີ່ເກີດຂຶ້ນໃນສັງຄົມມະນຸດ ເກີດມາຈາກສອງປັດໃຈຄື : ເກີດມາຈາກປັດໃຈແຫ່ງຄວາມຮັບຮູ້ຂອງຄົນເຮົາ ແລະ ມາຈາກປັດໃຈທາງສັງ ຄົມ

- **ປັດໃຈແຫ່ງຄວາມຮັບຮູ້ຂອງຄົນເຮົາ**

ໝາຍເຖິງ ການຮັບຮູ້ໃນການເຄື່ອນໄຫວໃນການດຳລົງຊີວິດຂອງຄົນເຮົາ ຜ່ານພຶດຕິກຳຕົວຈິງໃນການຜະລິດ ການຊອກຮູ້ທຳມະຊາດສັງຄົມຂອງຄົນເຮົາເປັນເວລາດົນນານ ຄົນເຮົາກໍ່ສາມາດສະສົມໄດ້ຄວາມຮູ້ກ່ຽວກັບທຳມະຊາດ ສັງຄົມນັບມື້ນັບຫຼາຍຂຶ້ນ ແລະ ອຸດົມສົມບູນຢ່າງບໍ່ຢຸດຢັ້ງ

- **ປັດໃຈຄວາມຮັບຮູ້ທາງສັງຄົມ**

ແມ່ນການຄົ້ນຄວ້າ ແລະ ສັງລວມເອົາຄວາມຮັບຮູ້ເອົາສ່ວນບຸກຄົນທີ່ກະແຈກກະຈາຍຢູ່ນັ້ນມາເປັນຄວາມຮູ້ລວມເປັນລະບົບທັດສະນະ ແລະ ຄວາມສຳນຶກຂອງຊົນຊັ້ນຕົນກ່ຽວກັບໂລກ ທຳມະຊາດ ສັງຄົມ ແລະ ຈິນຕະນາການ ໄດ້ມີປັດຊະຍາຫຼາຍໆຝ່າຍທີ່ແຕກຕ່າງກັນ ໄດ້ສັງລວມແລ້ວກໍ່ມີສອງຝ່າຍທີ່ເປັນພື້ນຖານ ແລະ ກົງກັນຂ້າມກັນນັ້ນ ແມ່ນປັດຊະຍາຝ່າຍວັດຖຸນິຍົມ ແລະ ຝ່າຍຈິດຕະນິຍົມໃນນັ້ນຝ່າຍວັດຖຸນິຍົມຕິດພັນກັບວິທະຍາສາດ, ອີງໃສ່ຜົນສຳເລັດຂອງວິທະຍາສາດ. ສ່ວນລັດທິຈິດຕະນິຍົມຊ້ຳ ພັດຕິດພັນກັບສາສະໜາ ແລະ ເຊື່ອມຈອດກັບສາສະໜາ.




ຮູບພາບ 1 : ການຄົ້ນຄິດຂອງມະນຸດ

**ຂ ບັນຫາຂອງປັດຊະຍາ**

ບັນຫາຂອງ ຄວາມຮູ້ອັນດີເລີດ ນີ້ແມ່ນບັນດາປະກົດການທາງດ້ານວັດຖຸ ( ການຄົງຕົວ ) ແລະ ບັນດາປະກົດການທີ່ຂື້ນກັບສະຕິ ( ຈິດໃຈ ) ທີ່ເກີດຂື້ນກັບຄົນເຮົາເນື່ອງຈາກວ່າ ວັດຖຸ ແລະ ຈິດໃຈມີການພົວພັນກັນຕະຫຼອດ ແລະ ບັນຫາພື້ນ ຖານຂອງປັດຊະຍາມມີ 2 ດ້ານຄື :

- ລະຫວ່າງວັດຖຸກັບຈິດໃຈອັນໃດມີກ່ອນ ແລະ ອັນໃດເປັນອັນຕັດສິນ?
- ຄົນເຮົາສາມາດຮັບຮູ້ໂລກໄດ້ບໍ?

- **ທັດສະນະຂອງລັດທິວັດຖຸນິຍົມ**

ລັດທິວັດຖຸນິຍົມຢັ້ງຢືນວ່າ ວັດຖຸແມ່ນອັນທີ່ມີກ່ອນ, ວັດຖຸເປັນອັນຕັດສິນຈິດໃຈ, ໂລກນີ້ແມ່ນພາວະອັນຄົງຕົວຢ່າງພາວະວິໃສ ບໍ່ຂື້ນກັບຈິດໃຈ, ຄົນເຮົາແມ່ນພາກສ່ວນໜຶ່ງຂອງໂລກທຳມະຊາດ, ຈິດໃຈຂອງຄົນເຮົາແມ່ນຜະລິດຕະພັນຂອງວັດຖຸໜຶ່ງທີ່ມີການຈັດຕັ້ງສູງ ນັ້ນແມ່ນສະໝອງຂອງຄົນເຮົາ.

- **ທັດສະນະຂອງລັດທິຈິດຕະນິຍົມ.**

ລັດທິຈິດຕະນິຍົມໄດ້ຢັ້ງຢືນວ່າ ຈິດໃຈເປັນອັນເກີດກ່ອນວັດຖຸ, ຈິດໃຈສາມາດຕັດສິນວັດຖຸ ແລະ ເປັນພື້ນຖານໃຫ້ການຄົງຂອງທຸກສິ່ງວັດຖຸ ແລະ ປະກົດການ, ໃນລັດທິຈິດຕະນິຍົມໄດ້ໃຫ້ທັກສະນະວ່າ ມີຈິດໃຈເດັດຖານ ຫຼື ( ຈິດໃຈສຳບູນ ) ມີມາກ່ອນໂລກທຳມະຊາດ ແລະ ມະນຸດຈິດໃຈສຳບູນນີ້ຄົງຕົວຂະ ຫຍາຍຕົວຈຶ່ງສ້າງໂລກທຳມະຊາດ ແລະ ສ້າງມະນຸດຂຶ້ນເທິງໜ້າໂລກນີ້.

**ຄ ສອງວິທີທີ່ປໍລະປັກ ແລະ ຂັດແຍ່ງໃນປັດຊະຍາ.**

**-. ວິທີສັດຈະວິພາກ**

ແມ່ນວິທີເບິ່ງໂລກໃນສາຍພົວພັນ, ມີການເຄື່ອນເໜັງ ແລະ ຂະຫຍາຍຕົວ. ວິທີສັດຈະວິພາກໄດ້ຢັ້ງຢືນວ່າໂລກວັດຖຸມີການເຄື່ອນເໜັງ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ການຂະຫຍາຍຕົວນັ້ນແມ່ນດ້ອຍກະໂຕຂອງມັນເອງ ແລະ ແມ່ນການຂະຫຍາຍຕົວແຕ່ຕ່ຳຫາສູງ, ແຕ່ງ່າຍດາຍຫາສັບສົນ, ແຕ່ບໍ່ທັນສົມບູນຫາສົມບູນ. ວິທີສັດຈະພາກ ວັດຖຸນິຍົມໄດ້ກາຍເປັນວິທີຮັບຮູ້ໂລກ ແລະ ດັດສ້າງໂລກໃນຊົນຊັ້ນກຳມະ ກອນ, ຊາວຜູ້ອອກແຮງງານ ໃນການຕໍ່ສູ້ເພື່ອໂຄ່ນລົ້ມລະບອບກົດຂີ່ຂູດຮີດ ( ທຶນນິຍົມ ) ແລະ ກໍ່ສ້າງລະບອບໃໝ່ສີວິໄລ ( ສັງຄົມນິຍົມ )

**- ວິທີເມຕາຟີຊິກ ( ວິທີກົນຈັກ )**

ວິທີເມຕາຟີຊິກ ຖືວ່າການເຄື່ອນເໜັງ ເປັນພຽງການເຄື່ອນຍ້າຍທີ່ຕັ້ງແບບງ່າຍດາຍ ຂອງສິ່ງວັດຖຸ ແລະປະກົດການໃນເທສະ, ການຂະຫຍາຍຕົວເປັນພຽງການເພີ້ມຂອງຂະໜາດເພີ່ມຂຶ້ນ ຫຼື ຫຼຸດລົງ. ພຽງແຕ່ເປັນການໝູນວຽນມາຫາອັນເກົ່າເທົ່ານັ້ນ, ບໍ່ມີການກຳເນີດ ແລະ ການຂະຫຍາຍຕົວແຕ່ຢ່າງໃດ ພວກເຂົາໄດ້ປະຕິເສດຂໍ້ຂັດແຍ່ງພາຍໃນຂອງສິ່ງວັດຖຸ, ປະຕິເສດການຕໍ່ສູ້ກັນລະຫວ່າງອັນເກົ່າ ແລະ ອັນໃໝ່, ອັນທີ່ກ້າວໜ້າຈະຕ້ອງປ່ຽນແທນອັນເກົ່າຢ່າງແນ່ນອນ.

## 2 ປັດຊະຍາ ມາກຊິດ.

ໝາຍເຖິງ ການສຶກສາຄົ້ນຄວ້າກ່ຽວກັບທິດສະດີການປະຕິວັດຊາດ ການນຳພາການຕໍ່ສູ້ຂອງບັນດາຊົນຊັ້ນທີ່ບໍ່ເທົ່າທຽມກັນໃນສັງຄົມ ການກໍ່ສ້າງລະບອບປະຊາທິປະໄຕ, ການພົວພັນກັນໃນສັງຄົມທີ່ມີຄວາມກ້າວໜ້າ ແລະ ມີນັກປັດຊະຍາດັ່ງນີ້ :

☞ ທ່ານ ກາກມາກ ເກີດເມື່ອວັນທີ 5/5/1818 ທີ່ຣັດ ປະລຸດຊີ ( Germany ) ໃນຄອບຄົວທີ່ມີຖານະດີພໍ່ເປັນທະນາຍຄວາມ ( ນັກກົດໝາຍ ) ມໍລະນະກຳລົງໃນວັນທີ 17/03/1883 ທີ່ ລອນດອນ ທ່ານເປັນຜູ້ທີ່ສ້າງຕັ້ງລັດທິມາກຊິດ ເຊິ່ງລວມມີສາມພາກສ່ວນປະກອບດ້ວຍ : ປັດຊະຍາ, ເສດຖະສາດການເມືອງ ແລະ ລັດສັງຄົມນິຍົມວິທະຍາສາດ. ແລະ ເປັນຜູ້ສ້າງສາກົນທີ 1 [(1)] ຂຶ້ນເມື່ອ 28/09/1864.

ກາກມາກ ເປັນຜູ້ສ້າງຕັ້ງລັດທິ ມາກຊິດຂຶ້ນ ເຊິ່ງລວມມີ 3 ພາກສ່ວນຄື : ປັດຊະຍາ, ເສດຖະ ສາດການເມືອງ ແລະ ລັດທິສັງຄົມນິຍົມວິທະຍາສາດ.



ຮູບພາບ 2 ທ່ານ ກາກມາກ 1818 – 1883

☞ ທ່ານ ເຟຣດຣິກ ອັງແກນ ເກີດເມື່ອວັນທີ 28/11/1820 ທີ່ເມືອງ ບຣາແມນ ( Germany ) ທ່ານກຳເນີດໃນຄອບຄົວທີ່ຖານະດີ, ພໍ່ເປັນເຈົ້າຂອງໂຮງງານ, ໂດຍປະຕິບັດຕາມຈຸດປະສົງຂອງພໍ່ປີ 1837 ອາຍຸໄດ້ 17 ປີ ທ່ານໄດ້ເຂົ້າຮຽນວິຊາການຄ້າ, ແຕ່ໃນເວລາຮຽນທ່ານບໍ່ຄ່ອຍເອົາໃຈໃສ່ໃນການຮຽນເທົ່າໃດ, ເວລາສ່ວນຫຼາຍແມ່ນໃຊ້ເຂົ້າໃນການຄົ້ນຄວ້າວິທະຍາສາດສັງຄົມ ທ່ານເສຍຊີວິດ ໃນວັນທີ 5/8/1895 ທ່ານແມ່ນເພື່ອນຮ່ວມງານ ແລະ ອຸດົມການຂອງທ່ານ ກາກມາກ ໃນຕະຫຼອດຊີວິດ, ທ່ານ ອັງແກນ ແລະ ທ່ານ ກາກມາກສ້າງສາກົນທີ 1 ຂຶ້ນ ແລະ ທ່ານ ເປັນຜູ້ທີ່ສ້າງສາກົນທີ 2 [2] ຂຶ້ນໃນວັນທີ 14/7/1889 ທີ່ ປາຣີ.



ຮູບພາບ 3 ທ່ານ ເຟຣດຣິກ ອັງແກນ 1820 – 1895

☞ ທ່ານ ວາລາດີເມຍ ອີລິດເລນິນ ເກີດເມື່ອວັນທີ່ 22/4/1870 ທີ່ເມືອງ ຊິມບັກສະກີ ແຄມຝັ່ງຂອງແມ່ນ້ຳ ໂວນກາ, ຕອນລຸ່ມຂອງເມືອງ ກາຊານ, ພໍ່ແມ່ເປັນຊາວປັນຍາຊົນກ້າວໜ້າ ແລະ ທ່ານໄດ້ເສຍຊີວິດລົງໃນວັນທີ 21/4/1924 ( ຣັດເຊຍ ) ທ່ານໄດ້ສ້າງສາກົນທີ 3 [3] ໃນວັນທີ 2/3/1919.

ທ່ານ ວາຣາລີເມຍ ເລນິນ ແມ່ນຜູ້ສືບທອດປົກປັກຮັກສາ ແລະ ເສີມຂະຫຍາຍລັດທິມາກໃນເງື່ອນໄຂປະຫວັດສາດໃໝ່, ເຮັດໃຫ້ພາກສ່ວນສຳຄັນຂອງລັດທິມາກສົມບູນຂຶ້ນຕື່ມ.



ຮູບພາບ 4 ທ່ານ ວາລາດີເມຍ ອີລິດເລນິນ 1820 – 1889

**ກ. ຄວາມສຳຄັນໃນການສຶກສາປັດຊະຍາ.**

ປັດຊະຍາມາກຊິດ - ເລນິນ ແມ່ນວິທະຍາສາດຄົ້ນຄວ້າບັນດາກົດເກນລວມໝູ່ຂອງການພົວພັນການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງທຳມະຊາດ, ສັງຄົມ ແລະ ຈິນຕະນາການ ບົນພື້ນຖານການແກ້ໄຂບັນຫາຂອງປັດຊະຍາຢ່າງຖືກຕ້ອງ ແລະ ແມ່ນໂລກະທັດວິທີວິພາກຂອງຊົນຊັ້ນກຳມະກອນຊາວຜູ້ອອກແຮງງານ.

**ຂ. ເງື່ອນໄຂການກຳເນີດຂອງປັດຊະຍາມາກ - ຊິດ.**

**- ເງື່ອນທາງດ້ານເສດຖະກິດ - ສັງຄົມ**

ແມ່ນການກຳເນີດໂດຍການປ່ຽນແປງທາງດ້ານເສດຖະກິດ ການເມືອງທີ່ມີການເຄື່ອນໄຫວໃນຫຼາຍສັງຄົມທີ່ແຕກຕ່າງກັນ, ໃນການຮຽກຮ້ອງເຖິງຄວາມເປັນທຳພາຍໃນສັງຄົມ ໃນທາງດ້ານການຈ້າງງານການໄດ້ຮັບຄ່າຕອບແທນ ໂດຍທີ່ພົ້ນເດັ່ນກວ່າໝູ່ແມ່ນການຕໍ່ສູ້ຂອງຊົນຊັ້ນກຳມະກອນ ກັບບັນດານາຍທຶນຂອງພວກເຂົາ.

**- ເງື່ອນໄຂທາງດ້ານທາມະຊາດ.**

ຄຽງຄູ່ກັບການກຳເນີດທາງດ້ານການເມືອງ ຍັງມີການກຳເນີດທາງດ້ານທຳມະຊາດ ທີ່ບົ່ງບອກເຖິງການກຳເນີດ, ຂະຫຍາຍຕົວຂອງມະນຸດ, ການປະດິດສິ່ງຂອງຂຶ້ນມາເພື່ອນຳໃຊ້.

**- ເງື່ອນໄຂທາງດ້ານທິດສະດີ.**

ທ່ານ ກາກມາກ ແລະ ຟັງຊິດ ອັງແກນ ໄດ້ສືບທອດຢ່າງມີການເລືອກເຟັ້ນບັນດາແນວຄິດອັນປະ ເສີດຂອງນັກປັດຊະຍາກາລະຊິກເຢຍລະມັນ 2 ທ່ານເຊັ່ນ : ໄດ້ສືບທອດເອົາແນວຄິດ '' ສັດຈະວິພາກ '' ຂອງທ່ານເຮແກນ, ໂດຍເອົາ ''ແກ່ນສານທີ່ສອດຄ່ອງ'' ໃນບັນດາສັດຈະວິພາກນັ້ນ ແລ້ວດັດສ້າງບົນພື້ນ ຖານວັດຖຸນິຍົມ ແລະ ປະຖິ້ມເປືອກຫຸ້ມ ''ຈິດຕະນິຍົມ'' ຂອງປັດຊະຍາ ເຮແກນ ແລະ ໄດ້ສືບທອດເອົາ ''ລັດທິວັດຖຸນິຍົມ'' ຂອງທ່ານ ເຟີແບກ, ປະຖິ້ມ ຈິດຕະນິຍົມ ກ່ຽວກັບດ້ານສັງຄົມຂອງເພິ່ນແລ້ວຈຶ່ງສ້າງເປັນ ''ລັດທິວັດຖຸນິຍົມສັດຈະວິພາກ ແລະ ປະຫວັດວິພາກ''

**ຄ. ຈຸດພິເສດຂອງປັດຊະຍາມາກ - ເລນິນ**

ແມ່ນການຕິດພັນການເຄື່ອນໄຫວປະຕິວັດ, ເຄື່ອນໄຫວຕົວຈິງຂອງຊົນຊັ້ນກຳມະກອນ ແລະ ມະ ຫາຊົນຊາວຜູ້ອອກແຮງງານ, ມັນແມ່ນອາວຸດທີ່ແຫຼມຄົມຂອງຊົນຊັ້ນນີ້ໃນການຕໍ່ສູ້ ເພື່ອປົດປ່ອຍຕົນເອງ ແລະ ຊາວຜູ້ອອກແຮງງານອອກຈາກການກົດຂີ່ຂູດຮີດ.

## ຄຳຖາມຄົ້ນຄວ້າ :

1) ປັດຊະຍາໝາຍເຖິງຫຍັງ ? ເກີດຂື້ນມາໄດ້ແນວໃດ ?
2) ປັດຊະຍາມີຄວາມສຳຄັນຄືແນວໃດ ?
3) ທິດສະດີວັດຖຸນິຍົມ ແລະ ສັດຈະນິຍົມມີຄວາມຄືກັນ ແລະ ຕ່າງກັນແນວໃດ ?
4) ປັດຊະຍາມາກຊິດແມ່ນເວົ້າກ່ຽວກັບຫຍັງ ?
5) ຈຸດພິເສດຂອງປັດຊະຍາມາກ - ເລນິນແມ່ນເວົ້າກ່ຽວກັບຫຍັງ ?

# ບົດທີ 2
# ຄວາມຮູ້ເບື້ອງຕົ້ນກ່ຽວກັບວັດຖຸນິຍົມສັດຈະວິພາກ.

## 1. ວັດຖຸ ແລະ ການເຄື່ອນເໜັງຂອງວັດຖຸ.

ວັດຖຸແມ່ນ ມາດຕາເກນໜຶ່ງຂອງປັດຊະຍາ ທີ່ໃຊ້ເພື່ອຊີ້ບອກບັນດາສິ່ງທີ່ຄົງຕົວພາວະວິໄສສິ່ງເຫຼົ່ານີ້ຄົນເຮົາສາມາດຮັບຮູ້ໄດ້ໂດຍຜ່ານການສຳຜັດທາງອິນຊີຂອງຄົນເຮົາ ແລະ ວັດຖຸຄົງຕົວໃນໂລກພາວະວິໄສ ວັດຖຸໝາຍເຖິງທຸກສິ່ງຢ່າງທີ່ຢູ່ອ້ອມຕົວເຮົາ ລວມທັງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ, ສິ່ງທີ່ມະນຸດສ້າງຂຶ້ນ ແລະ ເກີດຂຶ້ນເອງຕາມທຳມະຊາດ.

### ກ. ການເຄື່ອນເໜັງຂອງວັດຖຸ

- **ການເຄື່ອນເໜັງ**

ການເຄື່ອນໜັງຂອງວັດຖຸແມ່ນແບບວິທີການຄົງຕົວຂອງວັດຖຸ, ແມ່ນລັກສະນະປະຈຳຕົວທີ່ບໍ່ອາດຕັດແຍກອອກຈາກວັດຖຸ ການເຄື່ອນໜັງຂອງວັດຖຸແມ່ນລັກສະນະປະຈຳຕົວທີ່ມີຕະຫຼອດການບໍ່ມີໃຜປະດິດສ້າງ ແລະ ບໍ່ມີໃຜດັບສູນມັນໄດ້ຍ້ອນວ່າວັດຖຸນັ້ນກໍ່ບໍ່ມີໃຜສ້າງຂຶ້ນ ມັນພຽງແຕ່ປ່ຽນຮູບການນີ້ເປັນຮູບການອື່ນ ປ່ຽນຈາກພະລັງງານນີ້ ໄປສູ່ພະລັງງານອື່ນ ແລະ ປ່ຽນຈາກຮູບການເຄື່ອນໜັງນີ້ໄປສູ່ການເຄື່ອນໜັງອື່ນເທົ່ານັ້ນ.

**- ບັນດາຮູບການເຄື່ອນເໜັງຂອງວັດຖຸ**

ຢູ່ໃນໂລກພາວະວິໄສມີຫຼາຍຮູບການເຄື່ອນໜັງຂອງວັດຖຸທີ່ແຕກຕ່າງກັນ ແຕ່ໃນນັ້ນ ທ່ານອັງແກນ ໄດ້ສັງ ລວມແລ້ວແມ່ນມີ 5 ຮູບການທີ່ເປັນພື້ນຖານຄື :

1) ການເຄື່ອນໜັງແບບກົນຈັກ ( ການຍ້າຍທີ່ຕັ້ງຂອງວັດຖຸ, )
2) ການເຄື່ອນໜັງແບບຟີກຊິກ ( ການເຄື່ອນທີ່ຂອງຄວາມຮ້ອນ, ໄຟຟ້າ, ສັນຍານໂທລະສັບ)
3) ການເຄື່ອນໜັງແບບເຄມີສາດ ( ການສັງເຄາະ ການປະສົມທາດ )
4) ການເຄື່ອນໜັງແບບຊີວະສາດ ( ການເຄື່ອນໄຫວຂອງສິ່ງທີ່ມີຊີວິດ ແລະ ການຈະເລີນເຕີບໂຕຂອງຮ່າງກາຍ )
5) ການເຄື່ອນໜັງແບບສັງຄົມ ( ຂະບວນວິວັດຂອງການພັດທະນາສັງຄົມ ການປ່ຽນແທນຮູບຖານເສດຖະກິດສັງຄົມ)

### ຂ ການເຄື່ອນເໜັງ ແລະ ການຢຸດນິ້ງ

ແມ່ນສຳບູນຍ້ອນວ່າການເຄື່ອນເໜັງແມ່ນຕິດພັນກັບວັດຖຸ ບໍ່ມີວັດຖຸໃດຈະບໍ່ເຄື່ອນໜັງ ແລະ ບໍ່ມີການເຄື່ອນໜັງໃດໆທີ່ປັດສະຈາກວັດຖຸ ວັດຖຸລ້ວນແຕ່ຄົງຕົວຢູ່ໃນການເຄື່ອນເໜັງ

ການຢຸດນິ້ງແມ່ນສຳພັດ ຍ້ອນວ່າປະກົດການຢຸດນິ້ງພຽງແຕ່ເກີດຂຶ້ນຢູ່ໃນການພົວພັນອັນແນ່ນອນໃດໜຶ່ງເທົ່ານັ້ນ ບໍ່ແມ່ນປະກົດຂຶ້ນໃນທຸກການພົວພັນພ້ອມກັນໃນເວລາດຽວກັນ

### ຄ ວັດຖຸເຄື່ອນເໜັງໃນກາລະ ແລະ ເທສະ

ວັດຖຸມີການເຄື່ອນໜັງໃນກາລະ ແລະ ເທສະ ວັດຖຸເຄື່ອນໜັງໃນເທສະແມ່ນການເຄື່ອນໄຫວທີ່ບົ່ງບອກໃຫ້ຮູ້ເຖິງວັດຖຸທີມີຂະໜາດ, ຂອບເຂດ, ທີ່ຕັ້ງ ແລະ ບໍລິມາດມວນສານອັນແນນອນໃນໂລກພາວະວິໄສ. ວັດຖຸເຄື່ອນໜັງໃນກາລະແມ່ນການຊີ້ບອກລັກສະນະແຜ່ຫຼາຍຂອງສິ່ງວັດຖຸ ແລະ ປະກົດການຂະບວນການວິວັດທີ່ຜັນແປໄວ ຫຼື ຊ້າ ສືບຕໍ່ໄປຕາມລຳດັບອັນແນ່ນອນ ໂດຍຜ່ານບັນດາໄລຍະ, ບັນດາຍຸກສະໄໝແຫ່ງການຂະຫຍາຍຕົວ.

## 2. ຕົ້ນກຳເນີດ ແລະ ທາດແທ້ຂອງສະຕິ

### 2.1 ສະຕິ

ສະຕິແມ່ນລັກສະນະປະຈຳຕົວຂອງວັດຖຸ ແຕ່ບໍ່ແມ່ນທັງໝົດທຸກໆຮູບວັດຖຸ, ມັນພຽງແຕ່ແມ່ນລັກສະນະຈຳເພາະຂອງວັດຖຸໜຶ່ງທີ່ມີການຈັດຕັ້ງສູງ ແມ່ນຈິດສຳນຶກຂອງຄົນເຮົາໃນການຕັດສິນໃຈບາງສິ່ງຢ່າງ ໃນລະມັດລະວັງຕົວ ການຄົ້ນຄິດພິຈາລະນາບັນຫາຕ່າງໆຢ່າງຖີ່ຖ້ວນ ນັ້ນແມ່ນມັນສະໝອງຂອງຄົນເຮົານັ້ນເອງ

### 2.2 ຕົ້ນກຳເນີດຂອງສະຖິ

ສະຕິຂອງຄົນເຮົາແມ່ນມີຕົ້ນກຳເນີດມາຈາກ 4 ປັດໃຈຫຼັກຄື :

- ສະຕິເກີດມາຈາກສະໝອງຂອງຄົນເຮົາ. ມັນສະໝອງແມ່ນສູນກາງບັນຊາການທຸກການເຄື່ອນ ໄຫວຂອງຄົນເຮົາ.
- ສະຖິຕິເກີດມາຈາກໂລກພາວະວິໄສ, ໂລກພາວະວິໄສສ່ອງແສງເຂົ້າເຖິງມັນສະໝອງຂອງຄົນເຮົາໃຫ້ເກີດສະຕິ.
- ສະຕິເກີດມາຈາກການອອກແຮງງານ, ຜ່ານການອອກແຮງງານ. ຜ່ານການອອກແຮງງານຂອງຄົນເຮົາເປັນເວລາດົນນານ ຈຶ່ງເຮັດໃຫ້ສະຕິຂອງຄົນເຮົາສົມບູນຂຶ້ນ.
- ສະຕິເກີດຈາກຄຳເວົ້າ ພາສາເວົ້າແມ່ນເປືອກຂອງສະຕິ.

ດັ່ງນັ້ນ, ທາດແທ້ຂອງສະຕິແມ່ນສ່ອງແສງຄວາມເປັນຈິງພາວະວິໄສ. ແຕ່ແມ່ນການສ່ອງແສງສູງສູດທີ່ມີລັກສະນະສັງເຂບ ແລະ ຕື່ນຕົວ. ມີແຕ່ຄົນເຮົາເທົ່ານັ້ນຈຶ່ງມີສິ່ງດັ່ງກ່າວ ສ່ວນສັດເດຍລະສານແມ່ນບໍ່ມີ.



ຮູບພາບ 5 ມັນສະໝອງຂອງຄົນເຮົາ

## 3. ວິທີສັດຈະວິພາກວັດຖຸນິຍົມ

### ກ. ວິທີສັດຈະວິພາກ.

ແມ່ນວິທີແກ້ໄຂບັນຫາຢ່າງມີໂລຊິກ, ເປັນວິທີອະທິບາຍຢ່າງມີເຫດຜົນ, ແມ່ນວິທີເບິ່ງໂລກຢູ່ໃນທ່າຂະຫຍາຍ ຕົວ, ມີຄວາມສັບສົນ, ມີຄວາມຂັດແຍ່ງ, ມີລັກສະນະປະຫວັດສາດມີການພົວພັນເຊິ່ງກັນ ແລະ ກັນ.

**ຂ. ຮູບແບບການພົວພັນຂອງວິທີສັດຈະວິພາກວັດຖຸນິຍົມ.**

ບັນດາວັດຖຸ ແລະ ປະກົດການໃນໂລກພາວະວິໄສຫຼາຍຮູບ, ຫຼາຍສີແຕກຕ່າງກັນ, ມັນກໍ່ມີຄຸນປະໂຫຍດແຕກຕ່າງກັນ, ມັນກຳເນີດເກີດຂື້ນໃນເງື່ອນໄຂ ແລະ ສະພາບແວດລ້ອມຕ່າງກັນ. ດັ່ງນັ້ນ, ມັນຈື່ງມີການພົວພັນທີ່ແຕກຕ່າງກັນເຊັ່ນ :

- ການພົວພັນພາຍໃນ ແລະ ພາຍນອກ.
- ການພົວພັນທາງກົງ ແລະ ທາງອ້ອມ.
- ການພົວພັນທາດແທ້ ແລະ ບໍ່ແມ່ນທາດແທ້.
- ການພົວພັນອັນລວມ ແລະ ອັນສະເພາະ.

**ຄ. ການພົວພັນຂອງສີງວັດຖຸໃນກາລະ ແລະ ເທສະ.**

ການພົວພັນທີ່ສະແດງອອກໃນກາລະແມ່ນການກະທົບເຊີ່ງກັນ ແລະ ກັນ ຂື້ນຕໍ່ກັນໃນຂະບວນການວິວັດຢູ່ ໃນບັນດາໄລຍະແຫ່ງການຂະຫຍາຍຕົວທີ່ແຕກຕ່າງກັນຂອງສິ່ງວັດຖຸ ແລະປະກົດການ ຫຼື ເອີ້ນວ່າ : ການພົວ ພັນທາງປະຫວັດສາດ.

ການພົວພັນທີ່ສະແດງອອກໃນເທສະແມ່ນການກະທົບເຊີ່ງກັນ ແລະ ກັນລະຫວ່າງວັດຖຸ ແລະ ປະ ກົດການຢູ່ໃນທີ່ຕັ້ງຕ່າງກັນ, ບັນດາດ້ານທີ່ຕ່າງກັນຢູ່ໃນສີ່ງວັດຖຸ ແລະ ປະກົດການດຽວກັນ.

## 4. ບັນດາກົດເກນພື້ນຖານຂອງສັດຈະວິພາກວັດຖຸນິຍົມ.

### 4.1. ກົດເກນ.

ກົດເກນແມ່ນການພົວພັນທາດແທ້, ແນ່ນອນແຜ່ຫຼາຍ ແລະ ຊໍ້າໄປຊໍ້າມາຂອງບັນດາສີ່ງວັດຖຸ ແລະ ປະກົດການ, ການພົວພັນດັ່ງກ່າວແມ່ນມີການປ່ຽນແປງໄດ້ຍາກ.

ຕົວຢ່າງ : ສີ່ງທີ່ມີຊີວິດມີການເຄື່ອນເໜັງ, ການຂະຫຍາຍຕົວຢ່າງບໍ່ຢຸດນີ້ງ, ໜ່ວຍໂລກມີການໝູນວຽນອ້ອມໂຕຂອງມັນເອງ.

**ກົດເກນຕ່າງໆຂອງວິທີສັດຈະວິພາກວັດຖຸນິຍົມ**

**ກ. ກົດເກນເອກກະພາບ ແລະ ຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມ**

ແມ່ນໜື່ງໃນສາມກົດເກນພື້ນຖານຂອງວິທີສັດຈະວິພາກວັດຖຸນິຍົມ, ມັນຊີ້ໃຫ້ເຫັນຕົ້ນກຳເນີດກຳລັງດັນຕົ້ນຕໍຂອງທຸກໆການເຄື່ອນເໜັງ ແລະ ຂະຫຍາຍຕົວຂອງສີ່ງວັດຖຸ ແລະ ປະກົດການດັ່ງນັ້ນ: ທ່ານເລນິນໄດ້ເອີ້ນກົດເກນເອກະພາບ ແລະ ຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມ ແມ່ນແກ່ນສານຂອງວິທີສັດຈະວິພາກ.

ກົດເກນນີ້ໄດ້ຊີ້ໃຫ້ເຫັນວ່າທຸກໆການປ່ຽນແປງ ແລະ ການຂະຫຍາຍຕົວຂອງວັດຖຸ ແລະ ປະກົດການລ້ວນແຕ່ມີສາເຫດຈາກການກຳເນີດ ແລະ ຂະຫຍາຍຕົວຂອງຄວາມຂັດແຍ່ງພາຍໃນຂອງສີ່ງວັດຖຸ ແລະ ປະກົດການຕ່າງໆນັ້ນເອງ. ຄວາມຂັດແຍ່ງແມ່ນການພົວພັນລະຫວ່າງບັນດາດ້ານກົງກັນຂ້າມ ເພາະສະນັ້ນ ຖີ້ນຄວ້າກົດເກນນີ້ໝາຍຄວາມວ່າ ຖົ້ນຄວ້າກົດເກນການເຄື່ອນເໜັງຂອງຄວາມຂັດແຍ່ງ ຖົ້ນຄວ້າການເຄື່ອນເໜັງຂອງການກະທົບເຊີ່ງກັນ ແລະ ກັນລະຫວ່າງບັນດາດ້ານກົງກັນຂ້າມໃນສີ່ງວັດຖຸ ແລະ ປະກົດການຕ່າງໆນັ້ນເອງ.

**ຂ. ກົດເກນການຫັນປ່ຽນແຕ່ການປ່ຽນແປງທາງດ້ານປະລິມານກາຍເປັນການຫັນປ່ຽນທາງດ້ານຄຸນນະພາບ ແລະ ກົງກັນຂ້າມ.**

- **ຄຸນນະພາບ.**

ແມ່ນຄວາມສຳນຶກທີ່ຊີ້ບອກລັກສະນະກຳນົດພາຍໃນທີ່ມີມາແຕ່ເດີມຂອງສີ່ງວັດຖຸ ແລະ ປະກົດການແມ່ນການສັງລວມບັນດາລັກສະນະປະຈຳຕົວທີ່ມີມາແຕ່ເດີມເພື່ອຈຳແນກສີ່ງວັດຖຸ ຫຼື ປະກົດການນີ້ກັບສີ່ງວັດຖຸແລະ ກົດການອື່ນ.

ຕົວຢາງ:

ຄຸນນະພາບຂອງຄຳບໍ່ເຂົ້າໜ້ຽງ, ອ່ອນໜຽວແໜ້ນ, ສົ່ງກະແສໄຟຟ້າໄດ້ດີ.............

ຄວາມໝາຍຂອງຄຸນນະພາບແມ່ນຢາກເວົ້າເຖິງລະດັບດີ ຫຼື ວ່າບໍ່ດີຂອງສິ່ງວັດຖຸ ແລະ ປະກົດການໜຶ່ງ ຫຼື ຢາກເວົ້າເຖິງປະສິດທິຜົນຂອງວຽກງານໃດໜຶ່ງ ຄຸນນະພາບມັນມີລັກສະນະພາວະວິໄສ ແລະ ມັນແມ່ນລັກສະນະສະເພາະກຳນົດພາຍໃນ ແລະ ແມ່ນລັກສະນະປະຈຳຕົວທີ່ມີມາແຕ່ເດີມຂອງສິ່ງວັດຖຸ ແລະ ປະກົດການ ເຊິ່ງມັນບໍ່ຂຶ້ນກັບຈິດໃຈຂອງຄົນເຮົາ. ສິ່ງວັດຖຸມີຫຼາຍລັກສະນະປະຈຳຕົວເທົ່າໃດຄຸນນະພາບຍິ່ງຫຼາຍເທົ່ານັ້ນ.

- **ປະລິມານ**

ແມ່ນຄວາມສຳນຶກທີ່ຊີ້ບອກບັນດາລັກສະນະປະຈຳຕົວທີ່ມີມາແຕ່ເດີມຂອງສິ່ງວັດຖຸ ແລະ ປະກົດການ ມັນບໍ່ໄດ້ແຈ້ງ ຄວາມແຕກຕ່າງກັນທາງດ້ານພື້ນຖານຂອງສິ່ງວັດຖຸນີ້ກັບສິ່ງວັດຖຸອື່ນ. ມັນມີແຕ່ເວົ້າເຖິງຂອບເຂດ , ໃຫຍ່, ນ້ອຍ, ຕ່ຳ, ສູງ, ກວ້າງ, ແຄບ, ຈານວນນ້ອຍ, ຈານວນຫຼາຍຂອງສິ່ງວັດຖຸ ແລະ ປະກົດການນັ້ນ

**<u>ການພົວພັນລະຫວ່າງປະລິມານ ແລະ ຄຸນນະພາບ</u>**

- ປະລິມານ ແລະ ຄຸນນະພາບມີການພົວພັນນຳກັນແບບສັດຈະວິພາກ. ພວກມັນຄົງຕົວຢູ່ໃນວັດຖຸອັນດຽວກັນ

- ການປ່ຽນແປງຄຸນນະພາບຈະເຮັດໃຫ້ສິ່ງວັດຖຸ ແລະ ປະກົດການປ່ຽນແປງໄປສູ່ທາດໃໝ່, ແຕ່ການປ່ຽນແປງທາງດ້ານປະລິມານຢູ່ໃນລະດັບໜຶ່ງໜຶ່ງທີ່ແນ່ນອນຍັງບໍ່ທັນເຮັດໃຫ້ສິ່ງວັດຖຸປ່ຍນແປງໄປສູ່ສິ່ງວັດຖຸອື່ນເທື່ອ.

**ຄ. ກົດເກນປະຕິເສດຊ້ອນປະຕິເສດ**

ແມ່ນໜຶ່ງໃນສາມກົດເກນຂອງຂອງສັດຈະວິພາກທີ່ໄດ້ເວົ້າເຖິງທ່າອ່ຽງຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປະກົດການໃນໂລກພາວະວິໄສ. ມັນແມ່ນຂີດໝາຍບາດກ້າວທີ່ສຳຄັນໃນຂະບວນວິວັດ ແລະ ການກຳນົດຂອບເຂດ ( ຕ່ອງໂສ້ )ຕິດຕໍ່ກັນລະຫວ່າງອັນເກົ່າ ແລະ ອັນໃໝ່

**<u>ການປະຕິເສດແບບສັດຈະວິພາກ</u>**

ແມ່ນການປ່ຽນແທນອັນເກົ່າດ້ວຍອັນໃມ່ ແຕ່ບົນພື້ນຖານອັນເກົ່າເນື່ອງຈາກວ່າໂລກພາວະວິໄສມີການເຄື່ອນເໜັງ ແລະ ຂະຫຍາຍຕົວເລື່ອຍໆ. ອັນເກົ່າໝົດໄປ ອັນໃໝ່ເກີດຂຶ້ນມາແທນ.

**ຕົວຢ່າງ:**

ວົງຈອນຊີວິດຂອງກົບ: ກົບອອກລູກເປັນໄຂ່, ການປະຕິເສດໄຂ່ເກີດເປັນໂຕຮອກ, ການປະຕິເສດໂຕຮອກເກີດເປັນໂຕກົບ

**ຕົວຢ່າງ:**

ການປູກເຂົ້າ: ຊາວນານຳເອົາແນວພັນທີ່ເປັນເມັດເຂົ້າວ່ານໃສ່ໄຮ່ນາ, ການປະຕິເສດເມັດເຂົ້າກໍ່ຄືຕົ້ນກ້າ, ການປະຕິເສດຕົ້ນກ້າກໍ່ຄືກົກເຂົ້າເກີດເປັນຮວງມີເມັດເຂົ້າ, ນີ້ຄືການປະຕິເສດແບບສັດຈະວິພາກ ອັນເກົ່າໝົດໄປ ອັນໃໝ່ເກີດຂຶ້ນມາແທນ.

## 5. ບັນດາຄູ່ມາດຕາເກນຂອງສັດຈະວິພາກວັດຖຸນິຍົມ.

**ກ. ອັນລວມ ແລະ ອັນສະເພາະ.**

- ອັນລວມ : ແມ່ນມາດຕາເກນໜຶ່ງທີ່ຊີ້ບອກບັນດ້ານ, ບັນດາລັກສະນະປະຈຳຕົວ, ບັນດາການພົວພັນຊ້ຳໄປ ຊ້ຳມາຄ້າຍຄືກັນຂອງສິ່ງວັດຖຸ ແລະ ປະກົດການໃນຂະບວນວິວັດ.

- ອັນສະເພາະ : ແມ່ນມາດຕາເກນໜຶ່ງທີ່ຊີ້ບອກສິ່ງວັດຖຸ ແລະ ປະກົດການ ຫຼື ຂະບວນວິວັດໃດໜຶ່ງຢູ່ໃນໂລກພາວະວິໄສ, ມັນສ່ອງແສງເຖິງຈຸດພິເສດສະເພາະຂອງແຕ່ລະວັດຖຸ ແລະ ປະກົດການໃນຂະບວນວິວັດ.

**ຂ. ເຫດ ແລະ ຜົນ.**

- ສາເຫດ : ແມ່ນມາດຕາເກນໜຶ່ງທີ່ໃຊ້ເພື່ອຊີ້ບອກການກະທົບເຊິ່ງກັນ ແລະ ກັນ ບັນດ້ານພາຍໃນຂອງວັດຖຸໃດໜຶ່ງ, ປະກົດການໜຶ່ງ ຫຼື ລະຫວ່າງສິ່ງວັດຖຸ ແລະ ປະກົດການນຳກັນ ພາໃຫ້ມີການປ່ຽນແປງອັນແນ່ນອນ.

- ໝາກຜົນ : ແມ່ນມາດຖາເກນທີ່ຊີ້ບອກການປ່ຽນແປງຂອງສິ່ງວັດຖຸ ແລະ ປະກົດການທີ່ເກີດຂຶ້ນຍ້ອນໜຶ່ງ ຫຼືຫຼາຍເຫດການທີ່ມີການພົວພັນກັນ.

**ຄ. ທາດແທ້ ແລະ ປະກົດການ.**

- ທາດແທ້ ແມ່ນການລວບລວມບັນດາການການພົວພັນທີ່ຈຳເປັນ, ທີ່ປົກກະຕິສຳພັດຢູ່ເບື້ອງໃນຂອງວັດຖຸ ແລະ ປະກົດການ, ມັນກຳນົດການເຄື່ອນໜັງ ແລະ ການຂະຫຍາຍຕົວຂອງວັດຖຸ ແລະ ປະກົດການນັ້ນຖ້າຫາກເວົ້າກ່ຽວກັບ ຄົນກໍ່ແມ່ນ ນິໄສໃຈຄໍຂອງຄົນນັ້ນເອງ.

- ປະກົດການ : ແມ່ນປະກົດການທີ່ບົ່ງບອກເຖິງປະກົດການທາງພາຍນອກຂອງວັດຖຸ ຂະບວນການວິວັດແມ່ນ ການ ຂະບວນວິວັດແມ່ນຮູບການສະແດງອອກເບື້ອງນອກຂອງທາດແທ້ ທີ່ຄົນເຮົາສາມາດຮັບຮູ້ໄດ້ທາງອິນຊີ.

**ງ. ເນື້ອໃນ ແລະ ຮູບການ.**

- ເນື້ອໃນ : ແມ່ນມາດຕາເກນໜຶ່ງທີ່ຊີ້ບອກບັນດາປັດໃຈ, ຂະບວນວິວັດທັງໝົດ ທີ່ປະກອບເປັນພື້ນຖານການຄົງ ຕົວ ແລະ ຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປະກົດການ.

- ຮູບການ : ແມ່ນການຄົງຕົວຂອງວັດຖຸ ແລະ ປະກົດການແມ່ນວິທີການຈັດຕັ້ງ ແມ່ນໂຄງປະກອບຂອງເນື້ອໃນ ເວົ້າເຖິງການຜະລິດການພົວພັນແຫ່ງການຜະລິດ, ການພົວພັນລະຫວ່າງການຜະລິດ, ຈະປະກອບດ້ວຍນການ ກຳການຜະລິດ ການພົວພັນລະຫວ່າງຄົນກັບຄົນ ຮູບການມີທັງຮູບການ ພາຍໃນ ແລະ ພາຍນອກ ຮູບການ ພາຍໃນແມ່ນວິທີສັບຊ້ອນວິທີຈັດວາງໂຄງປະກອບຂອງເນື້ອໃນ, ແມ່ນບັນດາພາກສ່ວນທີ່ຈຳເປັນ ( ສາຄັນຕັດສິນ ) ຮູບການພາຍນອກແມ່ນຮູບຮ່າງ, ສີສັນ, ຂອບເຂດ, ຂະ ໜາດ ( ສາຄັນແຕ່ບໍ່ຕັດສິນ ).

**ຈ. ອັນແນ່ນອນ ແລະ ອັນບັງເອີນ.**

- ອັນແນ່ນອນ : ແມ່ນມາດຕາເກນໜຶ່ງທີ່ໃຊ້ຊີ້ບອກ ທີ່ເລີ່ມອອກຈາກທາດແທ້ຂອງສິ່ງວັດຖຸ, ມາຈາກການພົວພັນ ພາຍໃນຂອງສິ່ງວັດຖຸ ປະກົດການໃນເງື່ອນໄຂອັນແນ່ນອນ ມັນຕ້ອງເກີດຂຶ້ນແນວນັ້ນບໍ່ຕ່າງນັ້ນໄປ.

- ອັນບັງເອີນ : ແມ່ນມາດຕາເກນໜຶ່ງທີ່ໃຊ້ຊີ້ບອກເຫດການອັນເລີ່ມຕົ້ນ ອອກມາຈາກການພົວພັນພາຍນອກ ດັ່ງນັ້ນມັນອາດເກີດຕາມແບບນີ້ ຫຼື ເກີດເປັນແນວອື່ນກໍ່ໄດ້.

**ສ. ຄວາມສາມາດ ແລະ ຄວາມເປັນຈິງ.**

- ຄວາມສາມາດ : ແມ່ນມາດຕາເກນໜຶ່ງທີ່ຊີ້ບອກເຖິງເງື່ອນໄຂໃໝ່, ບັນດາທ່າອ່ຽງແຫ່ງການຂະຫຍາຍຕົວມັນເປັນອັນທີ່ເປັນໜໍ່ແໜງຢູ່ໃນສິ່ງວັດຖຸ ແລະ ປະກົດການຢູ່ໃນຂະບວນວິວັດ, ມັນຍັງບໍ່ທັນປະກົດຂຶ້ນ ແລະ ກາຍເປັນຄວາມຈິງໃນເວລາເງື່ອນໄຂອັນເໝາະສົມ.

- ຄວາມເປັນຈິງ : ແມ່ນອັນຄົງຕົວອັນແທ້ຈິງມັນອັນທີພວມໄປຮອດ, ອັນທີ່ພວມປະກົດອອກ

## 6. ທິດສະດີກ່ຽວກັບຄວາມຮັບຮູ້ຂອງວັດຖຸນິຍົມປະຫວັດວິພາກ.

### ກ. ຄວາມຮັບຮູ້

ແມ່ນຂະບວນການສ່ອງແສງ ຂອງໂລກພາວະວິໄສ ເຂົ້າໃສ່ມັນສະໝອງຂອງຄົນເຮົາແລ້ວເກີດມີຄວາມຮູ້ສຶກ ( ຮັບຮູ້ ), ການດຳລົງຊີວິດຂອງມະນຸດແຕ່ມື້ເກີດຜ່ານການເວລາຫຼາຍປີ ເກີດມີການສຳຜັດ ການຮັບຮູ້ໂລກພາວະວິໄສ ເຮັດໃຫ້ມີການຄົ້ນຄິດຮັບຮູ້ໂລກ.

**ຂ. ພຶດຕິກຳແມ່ນພື້ນຖານການຮັບຮູ້.**

- ພຶດຕິກຳ : ແມ່ນທັງໝົດການເຄື່ອນໄຫວທາງດ້ານວັດຖຸທີ່ມີລັກສະນະສັງຄົມ, ລັກສະນະປະ ຫວັດສາດຂອງຄົນເຮົາ ເຊິ່ງແນໃສ່ດັດສ້າງໂລກພາວະວິໄສ.

- ພຶດຕິກຳເປັນພື້ນຖານການຮັບຮູ້ : ການເຄື່ອນໄຫວຂອງມວນມະນຸດລ້ວນແຕ່ແມ່ນພຶດຕິກຳ ການເຄື່ອນໄຫວນັ້ນຈະສ່ອງແສງເຂົ້າໃນມັນສະໝອງ ເພື່ອເກີດຂະບວນການຄົ້ນຄິດ ແລະ ສ້າງຈິນຕະນາການຄວາມຮູ້ເກີດຂຶ້ນ.

- ພຶດຕິກຳເປັນກຳລັງດັນຂອງຄວາມຮັບຮູ້ : ໂດຍຜ່ານພຶດຕິກຳຕົວຈິງນັ້ນ, ພຶດຕິກຳໄດ້ວາງຄວາມຕ້ອງການ ແລະ ໜ້າທີ່ອອກໃຫ້ຄວາມຮັບຮູ້, ຄວາມຕ້ອງການຂອງການເຄື່ອນໄຫວພຶດຕິກຳໃນແຕ່ລະດ້ານ, ແຕ່ລະຂະແໜງລ້ວນແຕ່ຮຽກຮ້ອງໃຫ້ຄົນເຮົາມີຄວາມຮັບຮູ້ກ່ຽວກັບໂລກພາວະວິໄສ.

- ພຶດຕິກຳແມ່ນຈຸດປະສົງຂອງຄວາມຮັບຮູ້ : ລວມຄວາມວ່າ ພຶດຕິກຳເປັນອັນດັບຕົ້ນຕໍກວ່າ ໝູ່ ຂອງຄວາມຮູ້ທີ່ເປັນກຳລັງດັນ ແລະ ເປັນຈຸດປະສົງຂອງຄວາມຮັບຮູ້, ຖ້າບໍ່ເລີ່ມຈາກພຶດຕິກຳ ແລະ ບໍ່ອີງໃສ່ພຶດຕິກຳແລ້ວແມ່ນບໍ່ອາດມີຄວາມຮັບຮູ້ທີ່ຖືກຕ້ອງ, ບໍ່ອາດມີຄວາມຮູ້ທາງວິທະຍາສາດໄດ້, ບໍ່ອາດອະ ທິບາຍວິວັດທະນາການໄດ້, ບໍ່ອາດອະທິບາຍວິວັດການກຳເນີດການຂະຫຍາຍຕົວຂອງຄວາມຮັບຮູ້ໄດ້.

**ຄ. ການສຳຜັດອິນຊີໂດຍກົງທີ່ມີຊີວິດຊີວາ ( ສຳຜັດຖານ )**

ແມ່ນການສຳຜັດອິນຊີໂດຍກົງ ມີຜ່ານການຮັບຮູ້ທັງອິນຊີທັງຫ້າຄື : ຫູ, ດັງ, ຕາ, ປາກ ແລະ ຜິວໜັງ ໂດຍຜ່ານບັນດາອິນຊີ ຜ່ານການເຄື່ອນໄຫວຂອງອິນຊີ ຄົນເຮົາຈຶ່ງມີຄວາມຮູ້ສຶກອັນແນ່ນອນໃດໜຶ່ງເປັນພື້ນຖານໃຫ້ແກ່ການຮັບຮູ້. ຍ້ອນແນວນັ້ນການສຳພັດອິນຊີໂດຍກົງທີ່ມີຊີວິດຊີວາເອີ້ນວ່າ : ຄວາມຮັບຮູ້ຂອງການສຳຜັດ.



ຮູບພາບ 6 ອະໄວຍະວະສຳຜັດທາງອິນຊີທັງຫ້າ

- **ຄວາມຮູ້ສຶກ**

ແມ່ນຮູບການທໍາອິດຂອງການສ່ອງແສງຄວາມເປັນຈິງພາວະວິໄສເຂົ້າໃສ້ມັນສະໝອງຂອງຄົນເຮົາ ຜ່ານການ ເຄື່ອນໄຫວຂອງອິນຊີຂອງຄົນເຮົາ ຈິ່ງເກີດມີຄວາມຮູ້ສຶກກ່ຽວກັບກິ່ນ, ສີສັນ, ລົດຊາດ, ສຽງ ແລະ ອື່ນໆ. ການສໍາພັດໄດ້ສະໝອງຂໍ້ມູນຕົວຈິງກ່ຽວກັບໂລກພາວະວິໄສແຕ່ມັນພຽງແຕ່ສ່ອງແສງໃຫ້ເຫັນແຕ່ລະດ້ານ, ແຕ່ລະລັກສະນະພິເສດປີກຍ່ອຍທີ່ຢູ່ເບື້ອງນອກຂອງສິ່ງວັດຖຸເທົ່ານັ້ນ. ຄວາມຮູ້ສຶກແມ່ນບາດກ້າວໜຶ່ງທີ່ມີບົດບາດອັນໃຫ່ວຫຼວງໃນຂະບວນວິວັດແຫ່ງຄວາມຮັບຮູ້, ມັນພົວພັນຄົນເຮົາກັບໂລກ, ແມ່ນຕົ້ນກໍາເນີດແຫ່ງຄວາມຮັບຮູ້ຂອງຄົນເຮົາກ່ຽວກັບໂລກ.

- **ເຈຕະສຶກ ( ການຮັບຮູ້ )**

ແມ່ນໄລຍະຄວາມຮັບຮູ້ທີ່ເດຂຶ້ນບົນພື້ນຖານຄວາມຮູ້ສຶກ, ມັນສ່ອງແສງເຖິງສິ່ງວັດຖຸໃນທຸກດ້ານ ແລະທຸກລັກສະນະພາະຂອງມັນ ແລະ ສ້າງເປັນຄວາມຮັບຮູ້ທີ່ເປັນເອກະພາບມັນລວບລວມເອົາທັງຄວາມຮູ້ສຶກ ມັນສອງແສງເຖິງສິ່ງວັດຖຸໃນທຸກດ້ານ ແລະ ຄວາມຮັບຮູ້ໂດຍສະເພາະ, ມັນໄດ້ປະກົດຕົວຂຶ້ນຢູ່ໃນຈິດສໍານຶກຂອງຄົນເຮົາ.

- **ຮູບລາລຶກ ( ມະໂນພາບ )**

ແມ່ນຄວາມຮັບຮູ້ໄລຍະສູງ ຂອງການສ່ອງແສງທາງອະໄວຍະວະຄວາມຮູ້ສຶກ ນັ້ນແມ່ນການວາດພາບການວາດພາບແມ່ນການສ່ອງແສງຄືນຮູບພາບຂອງສິ່ງວັດຖຸທີ່ໄດ້ຮັບຮູ້ມາແລ້ວ (ໄດ້ກະທົບມາແລ້ວ) ເຊິ່ງໃນຂະນະນັ້ນສິ່ງວັດຖຸດັ່ງກ່າວບໍ່ໄດ້ກະທົບຄືນອີກ, ແຕ່ຍ້ອນການວາດພາບຈິດສໍານຶກຂອງຄົນຈິ່ງໄດ້ຮັບຄວາມເປັນເອກະລາດແບບທຽບຖານ, ມີຄວາມສາມາດໝູນໃຊ້ຮູບພາບດັ່ງກ່າວ ແລະ ກໍ່ສ້າງຮູບພາບໃໝ່ຂຶ້ນໂດຍໃຊ້ການວາດພາບຄົນເຮົາສາມາດສ້າງຮູບພາບຂອງວັດຖຸທີ່ບໍ່ມີໃນຕົວຈິງ ແລະ ວາດພາບເຖິງອະນາຄົດໄດ້.

ດັ່ງນັ້ນ, ການວາດພາບມີບົດບາດສໍາຄັນໃນການເຄື່ອນໄຫວປະດິດສ້າງຂອງຄົນເຮົາເຊັ່ນ. ນັກຮຽນ, ນັກແຕ້ມ, ນັກສະຖາປານິກ ແລະ ອື່ນໆ.

**ງ. ຈິນຕະນາການນາມມະທໍາ ( ຕັກກະຖານ )**

ແມ່ນບາດກ້າວຄວາມຮັບຮູ້ອັນສູງສຸດ ທີ່ເກີດຂຶ້ນໂດຍອີງໃສ່ ຄວາມເປັນຈິງທີ່ເກີດຂຶ້ນຕາມຄວາມເປັນຈິງທີ່ຜ່ານການເວລາທາງດ້ານຄວາມຮັບຮູ້ທາງດ້ານອິນຊີທັງຫ້າ ຈິນຕະນາການນາມມະທໍາປະກອບດ້ວຍ 3 ໄລຍະຄື : ຄວາມສໍານຶກ, ການສັນນິຖານ ແລະ ການສະຫຼຸບໄຕ່ຕອງ.

- **ຄວາມສານຶກ**

ແມ່ນຮູບແບບພື້ນຖານຂອງແນວຄິດ, ຄວາມສໍານຶກເກີດຂຶ້ນແມ່ນບາດກ່າວກະໂດດຂັ້ນຂອງຄວາມຮັບຮູ້, ຄວາມສໍານຶກໄດ້ສ່ອງແສງບັນດາລັກສະນະທີ່ສໍາຄັນ, ອັນເປັນທາດແທ້, ອັນລວມຂອງສິ່ງວັດຖຸ ແລະ ປະກົດການ ສະນັ້ນ. ທຸກໆຄວາມຮູ້ຕັກກະຖານລ້ວນແຕ່ເລີ່ມຈາກຄວາມສໍານຶກລວມເຊິ່ງສະແດງພາຍໄຕ້ພາສາ

- **ການສັນນິຖານ**

ແມ່ນຮູບແບບວິທີຂອງແນວຄິດ ອັນໃດໜຶ່ງເຊິ່ງຖືກຢັ້ງຢືນ ຫຼືຖືກປະຕິເສດລັກສະນະທາດແທ້, ການພົວພັນພາຍໃນຂອງສິ່ງວັດຖຸ, ການສັນນິຖານມີການທ້ອນໂຮມເອົາສອງ ຫຼື ຫຼາຍຄວາມສໍານຶກ.

- **ການສະຫຼຸບໄຕ່ຕອງ**

ເປັນການສ້າງການພົວພັນລະຫ່ວາງ 2 ຫຼື ຫຼາຍການສັນນິຖານນໍາກັນ ເພື່ອຖອດຖອນເອົາຂໍ້ສະຫຼຸບອອກມາ. ການສະຫຼຸບແບບອະນຸມານ ແມ່ນການສຫຼຸບແບບສະເພາະຖອດຖອນອອກຈາກການສັນນິຖານລວມ. ກົງກັນຂ້າມການສະຫຼຸບແບບອຸປະມານແມ່ນການສະຫຼຸບລວມ ຖອດຖອນອອກຈາກການສັນນິຖານສະເພາະ. ການໄຕ່ຕອງທີ່ມີເຫດຜົນ ແມ່ນພາຫານະອັນເຂັ້ມແຂງຂອງຄວາມຮັບຮູ້, ມັນຊີ້ໃຫ້ເຫັນວ່າການພົວພັນພາຍໃນ,

ທາດແທ້ຂອງສິ່ງວັດຖຸ ການໄຕ່ຕອງມີເຫດຜົນສາມາດຊີ້ໃຫ້ເຫັນ 3 ໄລຍະແຫ່ງການຂະຫຍາຍຕົວຂອງສິ່ງວັດຖຸ ເຊັ່ນ, ອະດີດ, ປັດຈຸບັນ ແລະ ອະນາຄົດ. ລັດທິມາດ-ເລນິນກໍແມ່ນການໄຕ່ຕອງທີ່ມີເຫດຜົນຂອງມາກ-ອັງແກນ ແລະ ເລນິນເວົ້າລວມ ຈິນຕະນາການາມມະທຳແມ່ນບາດກ້າວຮັບຮູ້ດ້ວຍສະຕິທີ່ສ່ອງແສງເຖິງການພົວພັນພາຍໃນທາດແທ້ແນ່ນອນຂອງຄວາມເປັນຈິງພາວະວິໄສ ໂດຍຜ່ານບັນດາບາດກ້າວຂອງມັນ ແຕ່ຄວາມຮູ້ສຶກເຖິງການສ້າງເປັນລະບົບທິດສະດີ.

**ຈ. ສັດຈະທຳ.**

ສັດຈະທຳແມ່ນຄວາມເປັນຈິງຫາກບໍ່ແມ່ນການຫຼອກລວງ ແລະ ປອມແປງ. ສັດຈະທຳມັນໄດ້ຄອບຄອງຢູ່ໃນທຸກຂົງເຂດຂອງສັງຄົມ ເຊັ່ນ : ຂົງເຂດການຜະລິດ, ຂົງເຂດການຄຸ້ມຄອງ, ຂົງເຂດການ ດຳລົງຊີວິດ, ແນວຄິດຈິດໃຈ ແລະ ການກະທຳຂອງແຕ່ລະຄົນ. ແຕ່ລະຄົນຕ້ອງເຮັດຕາມຄວາມເປັນຈິງ ບໍ່ ຝືນຄວາມຈິງ ຈຶ່ງຈະມີສັດຈະທຳອັນແທ້ຈິງເຊັ່ນ : ບໍ່ຜະລິດສິນຄ້າປອມ, ບໍ່ໂລບມາກໂລພາ, ບໍ່ຫຼິ້ນກິນ ຟຸມເຟືອຍ, ບໍ່ກິນຄ່າຈ້າງສິນບົນບໍ່ຕວະ, ບໍ່ຕົ້ມ ແລະ ບໍ່ຫຼອກລວງ, ບໍ່ເຫັນແກ່ສ່ວນຕົວ, ບໍ່ຖີ້ມຜົນງານຂອງລວມໝູ່, ບໍ່ຂົ່ມຂູ່ຍໍໂຕ ແລະ ອື່ນໆ. ຈາກນັ້ນສັດຈະທຳຍັງຍ້ອງຍໍຊົມເຊີຍບຸກຄົນຜູ້ຊື່ສັດທ່ຽງທຳ.

ດັ່ງນັ້ນ, ສັດຈະທຳແມ່ນຮຽກຮ້ອງໃຫ້ທຸກຄົນ, ທຸກພາກສ່ວນ, ກົມກອງ ແລະ ທຸກຂັ້ນການນຳ ພາຕ້ອງຄົ້ນຄວ້າ ແລະ ເອົາແຕ່ຄວາມເປັນຈິງຮອບດ້ານ, ຊອກໃຫ້ເຫັນທາດແທ້ຂອງຄວາມເປັນຈິງ ແລະ ເຮັດໃຫ້ມັນສອດຄ່ອງຢ່າງແທ້ຈິງລະຫວ່າງ ເນື້ອໃນ ແລະ ຮູບການ, ທາດແທ້ ແລະ ປະກົດການ, ເຫດ ແລະ ຜົນ. ຄວາມສາມາດ ກັບ ຜົນງານຕົວຈິງ ແລະ ທິດສະດີແນວທາງນະໂຍບາຍຂອງພັກກັບພຶດຕິກຳ.

*ຄຳສິງ ຈັນວິໄລສັກ ວິທະຍາສາດການເມືອງ ກຸ່ມວິຊາສະເພາະ ນະຄອນຫຼວງວຽງຈັນ 09.01.2009*

## ຄຳຖາມຄົ້ນຄວ້າ :

1) ວັດຖຸໝາຍເຖິງຫຍັງ ? ຍົກຕົວຢ່າງປະກອບ 10 ຢ່າງ ?
2) ວັດຖຸມີຈັກປະເພດ ?
3) ຈົ່ງບອກຮູບແບບການເຄື່ອນເໜັງຂອງວັດຖຸ ພ້ອມອະທິບາຍ ?
4) ຈົ່ງບອກບັນດາຄູ່ມາດຕາເກນຂອງວິທີສັດຈະວິພາກວັດຖຸນິຍົມມີຄືແນວໃດ ?
5) ການຮັບຮູ້ໝາຍເຖິງຫຍັງ ? ຮັບຮູ້ໄດ້ແນວໃດ ?

# ( ອ່ານເພີ່ມ )

# ຄວາມຮູ້ເບື້ອງຕົ້ນກ່ຽວກັບລັດທິວັດຖຸນິຍົມ ປະຫວັດວິພາກ

## 1. ຊົນຊັ້ນ ແລະ ການຕໍ່ສູ້ຊົນຊັ້ນ.

ຊົນຊັ້ນໝາຍເຖິງ ການແບ່ງຊົນຊັ້ນວັນນະຂອງຄົນໃນສັງຄົມທີ່ມີຄວາມແຕກຕ່າງກັນທາງດ້ານ ຖາ ນະ ການ ເປັນຢູ່, ຄວາມຮູ້ວິຊາຊີບ, ຄຸນສົມບັດ, ດ້ານຖານະອິດທິພົນທາງດ້ານສັງຄົມ ແລະ ຊົນຊັ້ນແມ່ນກຸ່ມຄົນ ຈຳນວນ ຫຼາຍທີ່ແຕກຕ່າງກັນທາງດ້ານການເປັນຢູ່ ໃນລະບອບການຜະລິດອັນແນ່ນອນຂອງປະຫວັດສາດ ຕ່າງ ກັນທາງດ້ານ ການພົວພັນຂອງພວກເຂົາ ທາງດ້ານພາຫະນະການຜະລິດ ຕ່າງກັນທາງດ້ານບົດບາດທີ່ມີໃນ ສັງຄົມ.

☞ **ລັກສະນະພິເສດທີ່ເປັນພື້ນຖານຂອງຊົນຊັ້ນ**

- ບັນດາຊົນຊັ້ນທີ່ມີຖານະແຕກຕ່າງກັນໃນລະບອບການຜະລິດສັງຄົມທີ່ແນນອນ.
- ບັນດາຊົນຊັ້ນທີ່ມີການພົວພັນຕ່າງກັນກ່ຽວກັບພາຫະນະການຜະລິດຂອງສັງຄົມ.
- ບັນດາຊົນຊັ້ນມີແບບວິທີ ແລະ ຂະໜາດລາຍຮັບທີ່ແຕກຕ່າງກັນກ່ຽວກັບວັດຖຸຊັບສິນຂອງສັງຄົມ.




ຮູບພາບ 7 ຮູບແບບຊົນຊັ້ນໃນເອຢິບ

### ກ. ຕົ້ນກຳເນີດຂອງຊົນຊັ້ນ.

ຊົນຊັ້ນກຳເນີດເກີດຂຶ້ນທຳອິດແມ່ນຢູ່ທີ່ ເອຢິບ ແລະ ເມໂຊໂປຕາມີ ໃນທ້າຍສັດຕະວັດທີ 3 ຫາຕົ້ນສັດ ຕະວັດທີ 4 ກ່ອນ ຄ ສ. ສາເຫດທີ່ພາໃຫ້ເກີດມີຊົນຊັ້ນເກີດຂຶ້ນກໍເນື່ອງຈາກການຜະລິດ ທີ່ໄດ້ນຳໄປເຖິງການກຳ ເນີດເກີດມີຜະລິດຕະພັນສ່ວນເກີນ, ມີການແບ່ງງານ, ມີການແລກປ່ຽນ ແລະ ເກີດມີກຳມະສິດສ່ວນຕົວຕໍ່ ພາຫະນະ ການຜະລິດ ບົດບາດສຳຄັນທີ່ສຸດໃນການກຳເນີດຊົນຊັ້ນນັ້ນແມ່ນການແບ່ງງານ ໃນເມື່ອເລີ່ມມີການ ແບ່ງງານ ແລະ ມີ ເຈົ້າຂອງພາຫະນະການຜະລິດ ຜູ້ທີ່ມີທ່າແຮງມີພາຫະນະການຜະລິດສາມາດເປັນຜູ້ສັງ, ໃຫ້ການຈ້າງງານແກ່ຜູ້ທີ ບໍ່ມີທ່າແຮງ.

**ຂ. ການຕໍ່ສູ້ຊົນຊັ້ນ.**

☞ **ຄວາມໝາຍຂອງການຕໍ່ສູ້ຊົນຊັ້ນ**

ແມ່ນການຕໍ່ສູ້ລະຫວ່າງຊົນຊັ້ນຂ້າທາດ ຊາວກຳມະກອນ ຜູ້ທີ່ອອກແຮງງານ ຜູ້ທີ່ທຸກຍາກທີ່ຖືກກົດຂີ່ຂູດ ຮີດຈາກພວກນາຍທຶນ ແລະ ຜູ້ທີ່ມີສິດອຳນາດໃນສັງຄົມ ເພື່ອປົດປ່ອຍຕົວເອງອອກຈາກແອກປົກຄອງຂອງພວກ ເຂົາ ຍາດແຍ່ງເອົາຄວາມເປັນເອກະລາດ ແລະ ຄວາມຍຸດຕິທຳເຂົ້າມາໃນສັງຄົມໃຫ້ເທົ່າ

ທຽມກັນ.

ໃນນັ້ນການຕໍ່ສູ້ຂອງຊົນຊັ້ນກຳມະກອນແມ່ນມີການຂັດແຍ່ງກັນຮຸນແຮງກ່ອນໝູ່ ແລະ ເປັນການຕໍ່ສູ້ທີ່ຍຶດຍາວທີ່ສຸດໃນການຕໍ່ສູ້ຊົນຊັ້ນ ການຕໍ່ສູ້ຂອງຊົນຊັ້ນໄດ້ດຳເນີນໄປຕາມ 4 ຮູບການຄື : ການຕໍ່ສູ້ດ້ານເສດຖະກິດ, ການຕໍ່ສູ້ທາງດ້ານການເມືອງ, ການຕໍ່ສູ້ທາງດ້ານແນວຄິດ ແລະ ການຕໍ່ສູ້ຂອງຊົນຊັ້ນກຳມະກອນ.

☞ **ການຕໍ່ສູ້ຂອງຊົນຊັ້ນກຳມະກອນ**

ເປັນການຕໍ່ສູ້ທີ່ເລິກຊຶ້ງກ່ວາໝູ່ ຈຸດປະສົງໃນການຕໍ່ສູ້ນັ້ນແມ່ນແນໃສ່ເພື່ອລຶບລ້າງຊົນຊັ້ນ ກໍ່ສ້າງລະບອບທີ່ ບໍ່ມີຊົນຊັ້ນ ບໍ່ມີການກົດຂີ່ຂູດຮີດ ມີສິດເສລີພາບ

**- ການຕໍ່ສູ້ທາງດ້ານເສດຖະກິດ :** ແມ່ນຮູບການທຳອິດໃນການລິເລີ່ມການຕໍ່ສູ້ຊົນຊັ້ນ ແມ່ນເລີ່ມຈາກການຕໍ່ສູ້ແບບກະແຈກກະຈາຍ ຂອງຊາວກຳມະກອນໃນໂຮງຈັກໂຮງງານຕ່າງໆ ຕ້ານກັບເຈົ້າຂອງໂຮງງານນັ້ນ, ເພື່ອຮຽກຮ້ອງທາງດ້ານຄ່າຈ້າງງານເພື່ອໃຫ້ ເກີດຄວາມຍຸດຕິທຳ.

**- ການຕໍ່ສູ້ທາງດ້ານການເມືອງ :** ແມ່ນຮູ້ການຕໍ່ສູ້ທີ່ສູງສຸດໃນການຕໍ່ສູ້ຊົນຊັ້ນຂອງຊາວກຳມະກອນ ເພື່ອການຍາດແຍ່ງເພື່ອຍາດແຍ່ງເອົາອຳ ນາດການປົກຄອງເຂົ້າມາໃນມືຂອງຕົນ ແລະ ທຳລາຍກົງຈັກລັດຂອງຊົນຊັ້ນນາຍທຶນ, ກໍ່ສ້າງພື້ນຖານຜະເລັດການ ກຳມະຊີບຂຶ້ນ ( ອຳນາດລັດ ) ໝູນໃຊ້ພື້ນຖານຜະເດັດການກຳມະຊີບນີ້ ( ສັງຄົມທີ່ບໍ່ມີຊົນຊັ້ນ )

**- ການຕໍ່ສູ້ທາງດ້ານແນວຄິດ :** ແມ່ນການສຶກສາອົບຮົມໃຫ້ມະຫາຊົນ ໄດ້ຊາບຊຶມທາງດ້ານແນວຄິດທາງດ້ານຍຸດທະສາດນະໂຍບາຍຂອງພັກ ແລະ ເຮັດໃຫ້ແວທາງນັ້ນກາຍເປັນການກະທຳຕົວຈິງຂອງມະຫາຊົນກາຍເປັນກຳລັງແຮງດ້ານວັດຖຸ ເພື່ອດັດສ້າງໂລກແຫ່ງຄວາມເປັນຈິງ



ຮູບພາບ 8 ການຕໍ່ສູ້ຕ້ານນາຍທຶນຢູ່ປະເທດອັງກິດ

## 2. ບົດບາດຂອງມະຫາຊົນ ແລະ ບຸກຄົນໃນປະຫວັດສາດ.

ສັງຄົມມະນຸດມີການເຄື່ອນເໜັງ ແລະ ການຂະຫຍາຍຕົວຕາມພາວະວິໄສຄືກັບໂລກທຳມະຊາດ ແຕ່ກົດເກນຂອງສັງຄົມພັດແຕກຕ່າງກັນກັບ ກົດເກນທາງທຳມະຊາດບ່ອນວ່າ : ກົດເກນສັງຄົມກະທົບເຊິ່ງກັນ ແລະ ກັນ ໂດຍຜ່ານການເຄື່ອນໄຫວຂອງສັງຄົມ. ດັ່ງນັ້ນ ລັດທິວັດຖຸນິຍົມປະຫວັດວິພາກຈຶ່ງໄດ້ຢັ້ງຢືນວ່າ : ບໍ່ແມ່ນຟ້າແຖນພະອິນພະພົມປະດິດສ້າງປະຫວັດສາດຂອງສັງຄົມມອນມະນຸດ. ແຕ່ປະຫວັດສາດກໍ່ຊີ້ໃຫ້ເຫັນວ່າ ຄຽງຄູ່ກັບບົດບາດຂອງມະຫາຊົນນັ້ນມີ ບົດບາດຂອງວິລະຊົນ ແລະ ບັນດາວິລະບຸລຸດນຳອີກ.

ດັ່ງນັ້ນ, ຈະຕີລາຄາແນວໃດໃຫ້ມັນຖືກຕ້ອງກ່ຽວກັບບົດບາດຂອງມະຫາຊົນ ແລະ ບຸກຄົນໃນປະຫວັດສາດ ບັນດານັກວັດຖຸນິຍົມກ່ອນມາກນັ້ນ ເຖິງວ່າບໍ່ເຊື່ອພະອິນພະພົມ ແຕ່ກໍ່ຖືວ່າວິລະຊົນເປັນຜູ້ສ້າງນຸກສະໃໝ ແລະ ກໍ່ແມ່ນບັນດາວິລະບຸລຸດ ວິລະຊົນເປັນຜູ້ຕັດສິນການຊຸມໂຊມ ແລະ ການຂະຫຍາຍ ຕົວຂອງປະຫວັດສາດ ລັດທິວັດຖຸນິຍົມປະຫວັດວິພາກບໍ່ໄດ້ປະຕິເສດບົດບາດຂອງບຸກຄົນໃນປະຫວັດສາດ, ວິລະບຸລຸດ ວິລະຊົນ ແຕ່ຍົກໃຫ້ເຫັນວ່າປະຊາຊົນຜູ້ອອກແຮງງານປະດິດສ້າງປະຫວັດສາດຢ່າງແທ້ຈິງ ສ່ວນນັກວິລະຊົນ ວິລະບຸລຸດ ແມ່ນມີບົດບາດສຳຄັນໃນການນຳພາ, ຜູ້ທີ່ຕັດສິນການປະຕິວັດສຳເລັດຜົນແມ່ນປະຊາຊົນເປັນຜູ້ເຮັດ. ໃນນັ້ນມະຫາຊົນມີບົດບາດຫຼັກຄືດັ່ງນີ້ :

- ມະຫາຊົນເປັນຜູ້ສ້າງສັງຄົມໃຫ້ຄົງຕົວ ແລະ ຂະຫຍາຍຕົວ.
- ມະຫາຊົນເປັນຜູ້ປະດິດແຕ່ງຄຸນຄ່າທາງດ້ານວັດທະນະທຳ.
- ມະຫາຊົນເປັນກຳລັງແຮງຂອງທຸກການປະຕິວັດ.

ຕົວຢ່າງບຸກຄົນໃນປະຫວັດສາດຂອງ ສປປ ລາວ ຄື : ເຈົ້າຟ້າງຸ່ມ, ທ່ານ ໄກສອນ ພົມວິຫານ ເຈົ້າ ສຸພານຸວົງ, ນາຍຄູຄຳ, ວິລະຊົນສີທອງ, ອົງແກ້ວ ອົງກົມມະດຳ...

**ການເສີມຂະຫຍາຍບົດບາດຂອງມະຫາຊົນ ແລະ ບຸກຄົນໃນ ສປປ ລາວ**

ເພື່ອເສີມຂະຫຍາຍບົດບາດຂອງມະຫາຊົນໃຫ້ກ້າວໜ້າ ແຂງແຮງໃນພາລະກິດແຫ່ງການດັດສ້າງ ແລະ ກໍ່ສ້າງລັດທິສັງຄົມຢູ່ປະເທດເຮົານີ້ຕ້ອງເອົາໃຈໃສ່ບາງວຽກສຳຄັນດັ່ງນີ້ :

- ຕໍ່ປະຕິບັດນະໂຍບາຍຫັນລົງກໍ່ສ້າງຮາກຖານຮອບດ້ານຂອງພັກຢ່າງເຂັ້ມງວດ ແລະ ມີປະສິດທິຜົນ ເພື່ອຮັດແໜ້ນການພົວພັນລະຫວ່າງພັກປະຊາຊົນ ແລະ ສະມາຊິກພັກ ກັບ ມະຫາຊົນ.
- ສຶກສາອົບຮົມນໍ້າໃຈຮັກຊາດ, ຮັກສັງຄົມນິຍົມໃຫ້ມະຫາຊົນເພື່ອປັບປຸງຄວາມເປັນເອກະສັນທາງດ້ານການເມືອງໃນໝູ່ປະຊາຊົນ.
- ສຶກສາອົບຮົມມະຫາຊົນທາງດ້ານນະໂຍບາຍຂອງພັກ - ລັດ.
- ຮັບປະກັນສິດເປັນເຈົ້າ ລວມໝູ່ຂອງປະຊາຊົນຜູ້ອອກແຮງງານທຸກຂົງເຂດ.
- ຍົກສູງລະດັບໃຫ້ມະຫາຊົນທຸກດ້ານຢ່າງບໍ່ຢຸດຢັ້ງ.
- ກຳຈັດການປະພຶດທີ່ຝືນຕໍ່ທັດສະນະມະຫາຊົນໃນໝູ່ພະນັກງານ ແລະ ສະມາຊິດພັກຂັ້ນຕ່າງໆ.



( ຮູບພາບ 9 ທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີແຫ່ງ ສປປ ລາວ 2017 )

## 3. ທ່ານ ໄກສອນ ພົມວິຫານ ວິລະບຸລຸດຂອງຊາດລາວ.

ທ່ານ ໄກສອນ ພົມວິຫານ ເກີດເມື່ອວັນທີ 13 ທັນວາ 1920 ທີ່ ບ້ານ ນາເຊັງ, ເມືອງ ຈັນທະບູລີ ແຂວງ ສະຫວັນນະເຂດ. ເປັນລູກຊາຍຂອງທ່ານ ລວນ ທີ່ເປັນລາຊະການ ແລະ ນາງ ດົກ ທີ່ເປັນຊາວນາ ພາຍຫຼັງທີ່ ທ່ານຮຽນຈົບປະຖົມພາສາລາວ ແລະ ຊັ້ນປະຖົມຝຣັ່ງທີ່ສະຫວັນນະເຂດ ແລ້ວທ່ານໄດ້ຍ້າຍໄປຮຽນທີ່ໂຮງຮຽນ ໂປຼເຕັກໂຕລາ ທີ່ ຮ່າໂນ້ຍ ປະເທດຫວຽດນາມ.



( ຮູບພາບ 10 ທ່ານ ໄກສອນ ພົມວິຫານ )

ທ່ານໄດ້ເຂົ້າຮ່ວມການຕໍ່ສູ້ ເພື່ອສິດເສລີພາບ ປະຊາທິປະໄຕຂອງຊາວໜຸ່ມຫວຽດນາມ ໃນປີ 1936 1939 ແລະ ໄດ້ເຂົ້າເປັນສະມາຊິກໜຸ່ມລາວກູ້ຊາດ ໃນປີ 1994.

ໃນປີ 1945 – 1947 ທ່ານໄດ້ເຈົ້າຮ່ວມການຍຶດອຳນາດຈາກຟາຊິດ ຍີ່ປຸ່ນ ຢູ່ສະຫວັນນະເຂດ ແລະ ທ່ານກໍ່ໄດ້ເຂົ້າຮ່ວມວຽກໃນຂະນະຕິດຕໍ່ລາວ - ຫວຽດ ທີ່ຮ່າໂນ້ຍ ແລະ ໄດ້ເຂົ້າເຮັດວຽກໃນໜ່ວຍໂຄສະນາ ຢູ່ທີ່ ເຂດ 12 ຢູ່ທາງພາກເໜືອຂອງຫວຽດນາມ.

ປີ 1949 ທ່ານໄດ້ເປັນຫົວໜ້າກອງຕະລຸມບອນ ຢູ່ເຂດພາກເໜືອຂອງລາວ ແລະ ເຮັດວຽກກໍ່ສ້າງຮາກ ຖານການເມືອງ, ຈັດຕັ້ງກຳລັງປະກອບອາວຸດ ສ້າງເຂດທີ່ໝັ້ນຢູ່ເຂດຕາເວັນອອກສ່ຽງເໜືອຂອງລາວ ໂດຍເອົາບໍ່ ລິເວນລາວຮຸ່ງ, ພຽງສາ, ໜອງນ້ຳ, ຜາຫຼວງທີ່ຂຶ້ນກັບເມືອງຊຽງຄໍ້ ແຂວງຫົວພັນເປັນຖານທີ່ໝັ້ນ.

ປີ 1949 ທ່ານໄດ້ປະກາດສ້າງຕັ້ງກອງທັບອິດສະຫຼະ ( 20/1/1949 ) ໂດຍແມ່ນທ່ານເປັນຜູ້ບັນຊາເອງ ໃນປີດຽວກັນນັ້ນ ທ່ານໄດ້ສະໝັກເຂົ້າເປັນສະມາຊິກພັກຄອມມູນິດອິນດູຈີນ ແລະ ເປັນສະມາຊິກພັກສົມບູນ ໃນວັນທີ 28 ກໍລະກົດ 1949

ໃນປີ 1950 – 1955 ທ່ານໄດ້ຖືກເລືອກຕັ້ງເປັນກຳມະການ ໃນຄະນະແນວລາວອິດສະຫຼະ ແລະ ເປັນລັດຖະມົນຕີກະຊວງປ້ອງກັນປະເທດ ໃນປີ 1950 ທ່ານໄດ້ຖືກເລືອກຕັ້ງເປັນຮອງປະທານສູນກາງແນວ ລາວຮັກຊາດ ຈາກກອງປະຊຸມໃຫຍ່ແນວລາວຮັກຊາດ.

➢ **ພາຍຫຼັງທີ່ມີຍຶດອຳນາດ ປີ 1975 ທ່ານມີຕຳແໜ່ງສຳຄັນດັ່ງນີ້ :**

- ທ່ານໄດ້ຖືກແຕ່ງຕັ້ງໃຫ້ເປັນນາຍົກລັດຖະມົນຕີແຫ່ງ ສປປ ລາວ ປີ 1975 – 1991.
- ທ່ານໄດ້ຮັບເລືອກຕັ້ງເປັນເລຂາທິການໃຫຍ່ ຂອງພັກປະຊາຊົນປະຕິວັດລາວ ຈາກກອງ

ປະຊຸມໃຫຍ່ຄັ້ງທີ 3 ປີ 1982 ແລະ ຄັ້ງທີ 4 ປີ 1986.

- ທ່ານໄດ້ຮັບເລືອກຕັ້ງ ເປັນປະທານຄະນະບໍລິຫານສູນກາງພັກປະຊາຊົນປະຕິວັດລາວຈາກກອງປະຊຸມຄັ້ງທີ 5 ຂອງພັກປີ 1991.
- ກອງປະຊຸມສະພາແຫ່ງຊາດຄັ້ງທີ 6 ສະໄໝທີ 3 ຄັ້ງວັນທີ 15/8/1991 ທ່ານໄດ້ຖືກເລືອກຕັ້ງເປັນປະທານປະເທດແຫ່ງ ສປປ ລາວ.

**➾ ມູນມໍລະດົກທີ່ທ່ານໄກສອນ ພົມວິຫານໄດ້ປະໄວ້ໃຫ້ :**

- ເສັ້ນທາງກ້າວຂຶ້ນອັນຖືກຕ້ອງຂອງຊາດເຮົາ
- ພັກ ສ ປ ປ ລາວ ແລະ ລະບອບປະຊາທິປະໄຕ
- ກຳລັງປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ
- ນ້ຳໃຈຮັກຊາດອັນແທ້ຈິງ
- ຄວາມສາມະຄີ ທີ່ເປັນມູນເຊື້ອລະຫວ່າງປະຊາຊົນບັນດາເຜົ່າ ແລະ ຊົນຊັ້ນໃນສັງຄົມ
- ບົດຮຽນອັນອຸດົມຮັ່ງມີ ໃນພາລະກິດການປ່ຽນແປງໃໝ່

**➾ ຜົນງານ ແລະ ຄຸນງາມຄວາມດີຂອງທ່ານ**

- ທ່ານເປັນນັກປະຕິວັດທີ່ດີເດັ່ນ
- ເປັນຜູ້ນຳທີ່ດີ ເອົາໃຈໃສ່ຕໍ່ວຽກງານການເມືອງ ແນວຄິດ ວຽກງານພັກ ແລະ ພະນັກງານ.
- ເປັນນັກປະຕິວັດທີ່ມີນ້ຳໃຈສາກົນຜ່ອງໃສ ແລະ ເປັນນັກເຄື່ອນໄຫວຕ່າງປະເທດທີ່ກ້ວາງຂວາງ
- ທ່ານ ເປັນນັກຍຸດທະສາດການທະຫານທີ່ມີຄວາມຊຳນິຊຳນານ
- ທ່ານ ເປັນຜູ້ລິເລີ່ມການປ່ຽນແປງໃໝ່ຢ່າງຮອບດ້ານຢູ່ ສປປ ລາວ
- ທ່ານ ເປັນນັກປະຕິບັດທີ່ມີລະບຽບແບບແຜນວິທີເຮັດວຽກລະອຽດ ແລະ ຕິດແທດກັບຕົວຈິງ

*ປັງກອນ ຄອນພິລາວັນ ວິທະຍາສາດການເມືອງ ກຸ່ມວິຊາສະເພາະ ນະຄອນຫຼວງວຽງຈັນ 09.01.2009*

**ຄຳຖາມຄົ້ນຄວ້າ :**

1) ຊົນຊັ້ນໝາຍເຖິງຫຍັງ ?
2) ຊົນຊັ້ນກຳເນີດຢູ່ໃສກ່ອນໝູ່ ແລະ ຍ້ອນສາເຫດໃດຈິ່ງເກີດມີຊົນຊັ້ນ ?
3) ລັກສະນະພິເສດຂອງຊົນຊັ້ນເປັນຄືແນວໃດ ?
4) ຈົ່ງບອກປະຫວັດຂອງ ທ່ານ ໄກສອນ ພົມວິຫານ ໂດຍຫຍໍ້ ?
5) ທ່ານ ໄກສອນ ພົມວິຫານ ໄດ້ປະຜົນງານອັນໃດແດ່ໄວ້ ?

# ພາກ II ເສດຖະສາດ

# ບົດທີ 3

# ການຜະລິດສັງຄົມ ແລະ ບົດບາດການພັດທະນາສັງຄົມມະນຸດ

## 1. ການຜະລິດວັດຖຸສິ່ງຂອງແມ່ນພື້ນຖານການດາລົງຊີວິດ.

ໃນການດຳລົງຊີວິດຂອງມວນມະນຸດທຸກໆສັງຄົມ ລ້ວນແຕ່ຕ້ອງມີການຜະລິດ, ເພື່ອຄົງຕົວ ແລະ ຂະຫຍາຍຕົວ ເຊັ່ນ : ການເຄື່ອນໄຫວການເມືອງ, ການຄົ້ນຄວ້າ, ການຮຽນ - ການສອນ, ການຫາມາຫາກິນ, ການຜະລິດເຄື່ອງນຸ່ງ, ຢາປົວພະຍາດ...ທີ່ຈຳເປັນແກ່ຊີວິດການເປັນຢູ່ ແຕ່ປັດໃຈຕ່າງໆທີ່ກ່າວມາລ້ວນແຕ່ຕ້ອງມີການຜະລິດຈື່ງຈະກຳເນີດຂຶ້ນໄດ້, ຖ້າຫາກສັງຄົມໃດຫາກປັດສະຈາກການຜະລິດແລ້ວແມ່ນຈະບໍ່ສາມາດຄົງຕົວຢູ່ໄດ້ ດັ່ງນັ້ນພວກເຮົາຈຶ່ງເວົ້າໄດ້ວ່າ ການຜະລິດວັດຖຸສິ່ງຂອງແມ່ນພື້ນຖານການດຳລົງຊີວິດ.

### 1.1 ປັດໃຈຕ່າງໆໃນການອອກແຮງງານ.

ປັດໃຈການອອກແຮງງານໝາຍເຖິງ ວັດຖຸ ອຸປະກອນໃນການນຳມາໃຊ້ເຂົ້າໃນການຜະລິດ ກຳລັງແຮງງານຂອງຄົນເຮົາ ແລະ ເປົ້າໝາຍການຜະລິດວັດຖຸ ໃຫ້ເກີດມີປະໂຫຍດ ແລະ ໃນປັດໃຈການອອກແຮງງານນີ້ຍັງປະກອບມີ 3 ປັດໃຈຫຼັກຄື : ແຮງງານຄົນ, ພາຫະນະການອອກແຮງງານ ແລະ ເປົ້າໝາຍການອອກແຮງງານ.

ກ. ການອອກແຮງງານຂອງຄົນ.

ຂ. ເປົ້າໝາຍການອອກແຮງງານ.

ຄ. ພາຫະນະການອອກແຮງງານ.

ໃນນັ້ນພາຫະນະການຜະລິດແບ່ງອອກເປັນສອງຊະນິດຄື :

- ພາຫະນະປະເພດການນຳໃຊ້ເພື່ອການປ່ຽນຮູບແບບຂອງວັດຖຸດິບ ເຊັ່ນ : ຄົມໜີບ ມີດຕັດ, ຄ້ອນຕີ...
- ພາຫະນະປະເພດ ການນຳໃຊ້ເພື່ອຈັດເກັບ ແລະ ເປັນທີພັກພາອາໃສ ເຊັ່ນ : ກະຕຸກນ້ຳ, ຈອກ, ແກ້ດເຈ້ຍ..

### 1.2 ແບບວິທີການຜະລິດ.

**- ກາລັງການຜະລິດ.**

ກຳລັງການຜະລິດແມ່ນການພົວພັນລະຫວ່າງຄົນກັບໂລກທຳມະຊາດ, ກຳລັງການຜະລິດສະແດງເຖິງແຮງທາງດ້ານວັດຖຸ ແລະ ເຕັກນິກຂອງຂະບວນການວິວັດການຜະລິດ ຄົນເຮົາໝູນໃຊ້ແຮງງານທາງມັນສະໝອງ, ສະຕິປັນຍາ, ຄວາມຮູ້ຄວາມສາມາດ, ບົດຮຽນຄວາມຊຳນິຊຳນານໃນການອອກແຮງງານຂອງຕົນເອງ. ເພື່ອສ້າງໃຫ້ ແລະ ນຳໃຊ້ພາຫະນະການອອກແຮງງານກະທົບໃສ່ເປົ້າໝາຍການອອກແຮງງານ. ກຳລັງການຜະລິດປະກອບດ້ວຍກຳລັງແຮງງານ ພາຫະນະການຜະລິດ ແລະ ປັດໃຈການອອກແຮງງານ.

**- ການພົວພັນການຜະລິດ.**

ການພົວພັນການຜະລິດໝາຍເຖິງການພົວພັນລະຫວ່າງຄົນກັບຄົນ ລະຫວ່າງຄົນກັບການຜະລິດ, ຄົນກັບທຳມະຊາດ ແມ່ນມີການເຄື່ອນໄຫວທຳການຜະລິດໃດໜຶ່ງ ໃນຂົງເຂດໃດໜຶ່ງ ເພື່ອສ້າງສັນຜະລິດຕະພັນໜຶ່ງຂຶ້ນມາ.

## 2. ສິນຄ້າ ແລະ ກົດເກນມູນຄ່າ.

**- ສິນຄ້າ ແລະ ການຜະລິດສິນຄ້າ.**

ສິນຄ້າ ໝາຍເຖິງສິ່ງທີ່ມະນຸດເຮົາສ້າງຂຶ້ນມາ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຄົນເຮົາ ແມ່ນຜະລິດຕະພັນທີ່ນຳໃຊ້ເພື່ອຊື້ - ຂາຍ ແລະ ແລກປ່ຽນເຊິ່ງກັນແລະກັນ ສິ່ງເຫຼົ່ານີ້ເອີ້ນວ່າ : ສິນຄ້າ.

ການຜະລິດສິນຄ້າໝາຍເຖິງ ການຜະລິດສິ່ງຂອງເພື່ອຂາຍ ແລະ ບໍລິການ ທີ່ມີການຜະລິດທັງຂະໜາດໃຫຍ່ ແລະ ຂະໜາດນ້ອຍ ທັງເປັນບຸກຄົນ ແລະ ກຸ່ມຮຸ້ນສ່ວນ, ມີການເສຍພາສີ, ເສຍຄ່າເຊົ່າໃຫ້ແກ່ອົງການທີ່ກ່ຽວຂ້ອງ. ການຜະລິດນີ້ແມ່ນພາກສ່ວນທີ່ສຳຄັນໃນການຂະຫຍາຍຕົວທາງເສດຖະກິດ ເນື່ອງຈາກການຜະລິດແມ່ນຈຸດເລີ່ມຕົ້ນຂອງການສ້າງລາຍຮັບໃຫ້ແກ່ສັງຄົມ ສິ່ງເຫຼົ່ານັ້ນສາມາດຕອບສະໜອງໃຫ້ຜູ້ທີ່ຊົມໃຊ້ມີຄວາມເພິ່ງພໍໃຈ ຫຼື ອັດຖະປະໂຫຍດໃນລັກສະນະຕ່າງໆ.

**- ລັກສະນະປະຈາຕົວຂອງສິນຄ້າ.**

ມູນຄ່າໃຊ້ສອຍ : ແມ່ນປະໂຫຍດຂອງສິນຄ້າ ເຊິ່ງສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຊົມໃຊ້ຂອງຄົນໄດ້ເຊັ່ນ : ເຄື່ອງນຸ່ງ, ເຄື່ອງປຸງແຕ່ງ...ແລະ ຕອບສະໜອງທາງດ້ານຈິດເຊັ່ນ : ຂ່າວ, ສານ, ການຫຼິ້ນເຟຣບຸກ.....

ມູນຄ່າແລກປ່ຽນ : ແມ່ນການແລກປ່ຽນທາງດ້ານປະລິມານ, ຄຸນະພາບ, ແລະ ມູນຄ່າໃຊ້ສ່ອຍ ເຊິ່ງສິ່ງແລກປ່ຽນດັ່ງກ່າວນີ້ແມ່ນຕ້ອງມີຄວາມເພິ່ງພໍໃຈລະຫວ່າງສອງຝ່າຍ ທີ່ຈະທຳການແລກປ່ຽນ ແລະ ມີຄວາມຍຸດຕິທຳ ຕົວຢ່າງ ທ້າວ ປອດ ມີໄກ່ 1 ໂຕ ເອົາໄປແລກ ໄພ້ 1 ກັບ ທ້າວ ໃຈ, ໄກ່ ແລະ ໄພ້ ມີມູນຄ່າໃຊ້ສອຍແຕກຕ່າງກັນ ແຕ່ສາມາດແລກປ່ຽນກັນໄດ້.

**- ກົດເກນມູນຄ່າ.**

ແມ່ນກົດເກນເສດຖະກິດແຫ່ງການຜະລິດ ແລະ ການຈໍລະຈອນສິນຄ້າ ມັນແມ່ນຄອບງຳທາງດ້ານການຜະລິດ ແລະ ການຈໍລະຈອນສິນຄ້າ ໝາຍຄວາມວ່າການແລກປ່ຽນສິນຄ້າຕ້ອງອີງໃສ່ມູນຄ່າໃຊ້ສອຍຂອງມັນ, ມູນຄ່າສະເພາະຂອງແຕ່ລະສິນຄ້າ ຕ້ອງສອດຄ່ອງກັບມູນຕ່າທາງສັງຄົມຂອງມັນ, ຜູ້ຜະລິດ, ຜູ້ແລກປ່ຽນສິນຄ້າ ແລະ ຜູ້ປະກອບການຈະເຫັນການເຄື່ອນໜັງຂອງກົດເກນມູນຄ່າໄດ້ກໍ່ຕໍ່ເມື່ອມັນທະວີຂຶ້ນ ຫຼື ຫຼຸດລົງຂອງລາ ໝາຍຄວາມວ່າ ເຂົາປະຕິບັດຕາມຄຳສັ່ງຂອງລາຄາ, ລາຄາໃນທ້ອງຕະຫຼາດນັ້ນຂຶ້ນໆລົງໆນັ້ນແມ່ນມີຜົນກະທົບມາຈາກກົດເກນມູນຄ່າ, ກົດເກນສະໜອງ, ກົດເກນຄວາມຕ້ອງການ, ກົດເກນການແກ່ງແຍ້ງ, ກົດເກນການຈໍລະຈອນສິນຄ້າ, ເງິນຄາ ແລະ ກົດເກນລາຄາອື່ນໆ.

☞ **ການກຳເນີດແບບວິທີການຜະລິດທຶນນິຍົມ.**

ການຜະລິດທຶນນິຍົມເກີດມາຈາກ 2 ປັດໃຈຄື :

- ຕ້ອງມີບຸກຄົນທີ່ມີກຳລັງແຮງງານ ແຕ່ຂາດຕົ້ນທຶນໃນການຜະລິດ ແະ ຈຳເປັນຕ້ອງໄປຮັບຈ້າງທີ່ເອີ່ນວ່າຜູ້ອອກແຮງງານ.
- ຕ້ອງມີບຸກຄົນທີ່ມີພ້ອມທາງດ້ານທຶນຮອນ ແລະ ເປັນຜູ້ລົງທຶນໃນການສ້າງການຜະລິດ ເຊິ່ງເອີນວ່າ ຜູ້ຈ້າງງານ

## 3. ການເງິນ, ທະນາຄານ ແລະ ການຄ້າ.

### 3.1 ການເງິນ

ການເງິນໝາຍເຖິງກົດເກນພື້ນຖານຂອງເສດຖະກິດສິນຄ້າ ໃນການຄຸ້ມຄອງລະບອບການເງິນຂອງບັນດາຫົວ ໜ່ວຍທຸລະກິດຕ່າງໆ ໃນສັງຄົມໃຫ້ມີສະເຖຍນະພາບດີ ມີຄວາມເປັນສື່ກາງໃນການແລກປ່ຽນສິນຄ້າ ໃຫ້ມີຄວາມດູນດ່ຽງ. ການເງິນແມ່ນລະບົບການພົວພັນເສດຖະກິດລະບົບໜຶ່ງເຊິ່ງສະແດງອອກໃນການສ້າງ ແລະ ແຈກຢາຍບັນດາຄັງເງິນ ຢູ່ໃນພື້ນຖານເສດຖະກິດແຫ່ງຊາດຢ່າງມີແບບແຜນ ຈຸດປະສົງເພື່ອແນໃສ່ຮັບປະກັນການຂະຫຍາຍເສດຖະກິດການຜະລິດ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນ.

ກ. ເງິນ.

ເງິນແມ່ນສິນຄ້າພິເສດເຊິ່ງຖືກນຳໃຊ້ເປັນວັດຖຸທຽບເທົ່າລາຄາລວມຂອງສິນຄ້າທັງໝົດແມ່ນສິນຄ້າຍອມຮັບກັນທົ່ວໄປແລະໃຊ້ເປັນສື່ກາງໃນການແລກປ່ຽນເວລາ ແລະ ສະຖານທີ່ໜຶ່ງໆ,ເງິນອາດຈະເຮັດສິ່ງໃດກໍ່ ໄດ້ແຕ່ມີລັກສະນະເດັ່ນຄືຖືກກຳນົດເປັນໜ່ວຍເງິນຕາວັດແທກມູນຄ່າສິນຄ້າແລະບໍລິການເພື່ອອຳນວຍຄວາມສະ ດວກໃນການແລກປ່ຽນ.



( ຮູບພາບ 10 ເງິນກີບລາວ )

ຂ. ບົດບາດ ແລະ ໜ້າທີ່ຂອງເງິນ.

- ໜ້າທີ່ແຈກຢາຍຍອດປະລິມານຜົນຜະລິດສັງຄົມ ແລະ ລາຍໄດ້ແຫ່ງຊາດພາຍໃຕ້ຮູບແບບເງິນຕາ
- ໜ້າທີ່ສຳຫຼວດກວດກາແບບການເງິນຕໍ່ບັນດາການເຄື່ອນໄຫວເສດຖະກິດ - ສັງຄົມ

. ຄວາມສາຄັນຂອງເງິນ.

- ມີຄວາມສຳຄັນສຳລັບການຜະລິດໃນດ້ານຜູ້ຜະລິດ.
- ມີຕວາມສຳຄັນສຳລັບທຸລະກິດໃນດ້ານບໍ່ລິໂພກ
-ມີຄວາມສຳຄັນສຳລັບຊີວິດການເປັນຢູ່

ໜ້າຂອງເງິນ.

- ເງິນເປັນເຄື່ອງວັດແທກມູນຄ່າ
- ເປັນສື່ກາງການແລກປ່ຽນ
- ເງິນເປັນໜ້າທີ່ສະສົມມູນຄ່າ
- ເປັນເຄື່ອງຊາລະໜີ້ສິນ
- ໜ້າທີ່ເປັນເງິນຕາສາກົນ

ຄ. ຊະນິດຂອງເງິນ.

**- ເງິນເປັນສິນຄ້າ :** ເງິນໃນຮູບແບບຂອງສິນຄ້າ, ຜົນຜະລິດ ຫຼື ສິ່ງຂອງທີ່ຜະລິດຂຶ້ນມາ ແລະ ເກີດຂຶ້ນຕາມທຳມະຊາດ ເຊັ່ນ : ສາລີ, ຢາສູບ, ລູກງົວ....

**- ເງິນເປັນໂລຫະ** : ເງິນທີ່ເປັນໂລຫະແມ່ນເງິນຢູ່ໃນຮູບແບບແທ່ງ ຫຼື ຫຼຽນ (ຜະລິດດ້ວຍຄຳ ເງິນທອງ) ທາດປະສົມ ຫຼື ໂລຫະອື່ນໆ.

**- ເງິນເຈ້ຍ :** ໝາຍເຖິງເງິນທີ່ຈັດພິມດ້ວຍທະນາຄານແຫ່ງລັດ ເຊິ່ງມີຫຼັກຊັບ ( ທຶນສຳຮອງ, ເງິນຕາຊັບສິນ ) ຄ້ຳປະກັນ ຫຼື ເອີ້ນອີກຢ່າງໜຶ່ງວ່າທະນາບັດ ເງິນເຈ້ຍໝູນວຽນຢ່າງແຜ່ຫຼາຍໃນທ້ອງຕະຫຼາດ ແລະ ເປັນສື່ກາງໃນການຊື້ຂາຍ.

**- ເງິນເຄດິດສ :** ໝາຍເຖິງເງິນທີ່ເກີດຂຶ້ນດ້ວຍການເຊື່ອຖືເຊິ່ງກັນ ແລະ ກັນທາງບັນຊີລະຫວ່າງຜູ້ເຮັດການແລກປ່ຽນ ( ເງິນຊະນິດນີ້ມີລັກສະນະເປັນ ( ຄຳສັ່ງຈ່າຍໂອນ ) ເຊິ່ງປະຈຸບັນປະກົດເຫັນໃນຮູບ ( ເຊັກ ) ເຊິ່ງເກີດຈາກການຝາກເງິນຢູ່ທະນາຄານ.

## 3.2 ທະນາຄານ.

### 3.2.1 ທະນາຄານ.

ທະນາຄານ ( ພາສາອັງກິດ: Bank ) ແມ່ນສະຖາບັນຄັງສິນເຊື່ອສາທາລະນະທົ່ວໄປ ແລະ ມີຜົນຕອບແທນທີ່ໜ້າສົນໃຈ. ຫຼັງຈາກນັ້ນ, ເງິນຝາກໄປຫາເອກະຊົນ ຫຼື ໜ່ວຍງານຂອງລັດເພື່ອກູ້ຄືນ ແລະໄດ້ຮັບອັດຕາດອກເບ້ຍກູ້ຢືມທີ່ແຕກຕ່າງຈາກ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ. ມັນບໍ່ໄດ້ຮັບອະນຸ ຍາດໃຫ້ດຳເນີນທຸລະກິດທະນາຄານທຸລະກິດ. ໃນນັ້ນທະນາຄານໃນ ສປປ ລາວ ແມ່ນມີ 2 ພາກສ່ວນຫຼັກຄື : ທະນາຄານແຫ່ງຊາດ ແລະ ທະນາຄານທຸລະກິດ.




( ຮູບພາບ 11 ທະນາຄານການຄ້າ ສາຂາໃຫຍ່ ຖະໜົນປາງຄຳ, ບ. ຊຽງຍືນ, ມ. ຈັນທະບູລີ )

**ການຜະລິດກັບທະນາຄານ.**

ການຜະລິດກັບທະນາຄານມີການພົວພັນ ຄື ທະນາຄານເປັນຜູ້ສະໜອງເງິນໃຫ້ແກ່ການຜະລິດ ຫຼື ວ່າເປັນຜູ້ໃຫ້ທຶນຮອນແກ່ການຜະລິດ, ນອກຈາກນີ້ທະນາຄານຍັງໃຫ້ຕົວເລກຄາດໝາຍການຜະລິດ ເຮັດໜ້າທີ່ກວດກາລາຍຮັບ - ລາຍຈ່າຍ ໃນການຜະລິດ ເພື່ອໃຫ້ຮູ້ວ່າການຜະລິດຂາດທຶນ ຫຼື ໄດ້ກຳໄລ.

ສະນັ້ນ, ການຜະລິດກັບທະນາຄານຈຶ່ງມີການພົວພັນກັນຢ່າງສະໜິດແໜ້ນ.

## 3.3. ການຄ້າ.

ການຄ້າແມ່ນສາຍພົວພັນອັນໜຶ່ງໃນຂະບວນວິວັດ ແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ ເຊັ່ນວ່າ : ເມື່ອມີການຜະລິດນັບມື້ເພີ່ມຂຶ້ນ ເຮັດໃຫ້ເກີດມີການສະສົມ. ເມື່ອມີການແບ່ງງານສັງຄົມເຮັດໃຫ້ມີ ການ

ແລກປ່ຽນ. ສິ່ງທີ່ນຳເອົາມາແລກປ່ຽນນັ້ນ ແມ່ນຜະລິດຕະພັນສະສົມທີ່ລື່ນເຫຼືອຈາກການຊົມໃຊ້ສ່ວນ ຕົວການແລກປ່ຽນຊື້ຂາຍແມ່ນມີການພັດທະນາຂຶ້ນ.

**ບົດບາດຂອງການຄ້າ.**

ການຄ້າມີບົດບາດອັນໃຫຍ່ຫຼວງ ເປັນການເສີມຂະຫຍາຍການຜະລິດ ຕອບສະໜອງສິນຄ້າແກ່ທ້ອງຕະຫຼາດໃຫ້ມີຄວາມໝັ້ນຄົງ ແຈກຢາຍສິນຄ້າໃຫ້ສະໝໍ່າສະເໝີ, ການຄ້າເປັນຂພາກສ່ວນໜຶ່ງທີ່ເຮັດໃຫ້ປະສິດທິພາບຂອງສິນຄ້າມີການພັດທະນາ ແລະ ການສົ່ງອອກ, ນຳເຂົ້າສິນຄ້າໄດ້ຊຸກຍູ້ໃຫ້ມີລິດນິຍົມອັນໃໝ່ ເໝາະສົມທີ່ມີຕໍ່ສິນຄ້າ. ການຄ້າໄດ້ສົ່ງອອກຜະລິດຕະພັນພາຍໃນທີ່ຄ່າງປະເທດມີຄວາມຕ້ອງການ ພ້ອມກັນນັ້ນກໍ່ນຳເຂົ້າສິນຄ້າໄປພ້ອມໆກັນ ໃນສາຂາທີ່ພາຍໃນບໍ່ສາມາດຜະລິດເອງໄດ້, ການຄ້າຍັງເປັນພາກສ່ວນໜຶ່ງທີ່ສຳຄັນທີ່ສຸດໃນການປັບປຸງສິນເຊື່ອການເງິນ ແລະ ລະບອບການເງິນໃຫ້ເຂັ້ມແຂງ.

## 4. ພາກສ່ວນ ແລະ ໂຄງປະກອບເສດຖະກິດຂອງ ສປປ ລາວ.

### 4.1 ບັນດາຮູບແບບກຳມະສິດໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາ

ແຕ່ລະປະເພດຮູບຖານເສດຖະກິດ - ສັງຄົມ ເວລາໃດກໍ່ຈະມີຮູບແບບກຳມະສິດສະເພາະ, ທີ່ເຮັດບົດບາດເປັນຫຼັກແຫຼ່ງ, ພ້ອມກັນນັ້ນ ກໍ່ຍັງມີການຄົງຕົວຂອງບັນດາຮູບແບບ, ຮູບການກຳມະສິດອື່ນ. ໃນພຶດຕິກຳຕົວຈິງຂອງໂລກສີວິໄລໃຫ້ເຫັນວ່າ, ບໍ່ວ່າຈະຢູ່ປະເທດໃດ, ເຖິງວ່າຈະມີລະດັບການເຕີບໂຕ ທາງດ້ານເສດຖະກິດທີ່ຕ່າງກັນ ແລະ ມີລະບອບການເມືອງທີ່ຕ່າງກັນກໍ່ຕາມ, ແຕ່ກໍ່ຍັງມີການຄົງຕົວຂອງຫຼາຍປະເພດ, ຮູບແບບກຳມະສິດໃນ ນັ້ນມີຮູບແບບກຳມະສິດໜຶ່ງທີ່ເຮັດບົດບາດຄອບງຳ ແລະ ກໍ່ກາຍເປັນສ່ວນລວມຂອງລະບອບກຳມະສິດນັ້ນ.

ຕົວຢ່າງ ລະບອບກຳມະສິດຂ້າທາດ, ສັກດີນາ, ທຶນນິຍົມ... ໃນສະໄໝຂ້າມຜ່ານກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາຍັງຄົງຕົວຢູ່ 3 ຮູບແບບ (ລະບອບ) ກຳມະສິດພື້ນຖານ: ກຳມະສິດທົ່ວປວງຊົນ, ກຳມະສິດລວມໝູ່ກຳມະສິດເອກະຊົນ.

ແຕ່ລະຮູບແບບກຳມະສິດ ພັດມີຫຼາຍຮູບການຈັດຕັ້ງກຳມະສິດທີ່ແນ່ນອນ, ພັດທັງມີຮູບແບບກຳມະສິດໜຶ່ງທີ່ເປັນຄົນລັກສະນະສະເພາະ, ຫຼື ເວົ້າວ່າມັນຄົງຕົວຫຼາຍຮູບການກຳມະສິດ ແຕ່ໃນນັ້ນເວ ລາໃດກໍ່ຄົງຕົວຮູບແບບກຳມະສິດໜຶ່ງທີ່ຄອບງຳລະບົບເສດຖະກິດ - ສັງຄົມ, ເມື່ອກ່ອນ, ການຂ້າມຜ່ານກ້າວຂຶ້ນສັງຄົມນິຍົມໄດ້ມີທັດສະນະວ່າ ແມ່ນຂະບວນການຫັນຮູບແບບ, ຮູບການກະມະສິດທີ່ເປັນງ່າຍດາຍ, ຟ້າວຟັ່ງຢາກຈະມີລະບອບກຳມະສິດສາທາລະນະໃນທັນທີທັນໃດ ພາຍໃຕ້ຮູບການກຳມະສິດລັດ ແລະ ລວມໝູ່. ແຕ່ລະຮູບແບບກຳມະສິດພັດມີຫຼາຍຮູບການກຳມະສິດທີ່ຕ່າງກັນ. ຕົວຢ່າງ: ຮູບແບບກຳມະສິດສາທາລະນະ ອາດຄົງຕົວພາຍໃຕ້ຮູບການກຳມະສິດທົ່ວປວງຊົນ, ກຳມະສິດແຫ່ງລັດ ກຳມະສິດລວມໝູ່...; ຮູບແບບກຳມະສິດເອກະຊົນອາດປະກອບມີ: ເອກະຊົນຂະໜາດນ້ອຍ, ເອກະຊົນຂະໜາດໃຫ່ຍ, ກຳມະສິດຂອງກຸ່ມຄົນໜຶ່ງ ( ບໍລິສັດມະຫາຊົນຈຳກັດ...); ຮູບແບບກຳມະສິດແບບປະສົມ ປະກອບດ້ວຍ: ກຳມະສິດໃນບັນດາວິຊາຫະກິດຂອງທຶນນິຍົມແຫ່ງລັດ, ໃນການດຳເນີນທຸລະກິດ ປະກອບທຶນຂອງລັດ, ເອກະຊົນ ແລະ ລວມໝູ່...ແຕ່ລະຮູບການກຳມະສິດລະອຽດ ລ້ວນແຕ່ເໜັງຕີງ, ໄຫວພິບ ແລະ ນັບມື້ນັບກໍ່ໃຫ້ເກີດບັນດາຮູບການກຳມະສິດໃໝ່ທີ່ສົມບູນກວ່າ.

### 4.2 ໂຄງປະກອບພາກສ່ວນເສດຖະກິດ ໃນລະບອບປະຊາທິປະໄຕ ປະຊາຊົນລາວ

ສະໄໝຂ້າມຜ່ານແມ່ນສະໄໝປະຫວັດສາດພິເສດ, ໃນນັ້ນໂຄງປະກອບທາງດ້ານເສດຖະກິດ - ສັງຄົມມີທັງປັດໄຈສັງຄົມເກົ່າທີ່ພວມຊຸດໂຊມລົງ ແລະ ມີທັງປັດໄຈໃໝ່ທີ່ຫາກໍ່ກຳເນີດຂຶ້ນ ເຕີບໃຫ່ຍ ຂະຫຍາຍຕົວ

ເປັນກ້າວໆ ແຕ່ບໍ່ທັນສາມາດເອົາຊະນະຢ່າງສົມບູນ ນັ້ນມີຄວາມໝາຍວ່າ ມັນມີລັກສະນະຂ້າມຜ່ານປີ 1918 ເມື່ອໃຫ້ຂໍ້ສັງເກດກ່ຽວກັບລັກສະນະພື້ນຖານຂອງເສດຖະກິດຣັດເຊຍ. ທ່ານ ເລນິນ ໄດ້ຂຽນວ່າ " ບໍ່ມີຜູ້ໃດຖ້າ ຄົ້ນຄວ້າເສດຖະກິດຣັດເຊຍແລ້ວ ຈະປະຕິເສດລັກສະນະຂ້າມຜ່ານຂອງພື້ນ ຖານເສດຖະກິດດັ່ງກ່າວ ". ບໍ່ມີນັກກອມມູນິດຄົນໃດທີ່ຈະປະຕິເສດສິ່ງທີ່ຈະກ່າວຕໍ່ໄປນີ້: ໃນຖານະເປັນປະເທດ ສາທາລະນະລັດ ໂຊວຽດ ສັງຄົມນິຍົມນັ້ນໝາຍຄວາມວ່າອຳນາດການປົກຄອງໂຊວຽດ ຕັດສິນໃຈປະຕິບັດບັນດາບາດກ້າວ ຫັນປ່ຽນກ້າວຂຶ້ນສັງຄົມນິຍົມ, ໂດຍບໍ່ໝາຍເຖິງການຮັບຮອງເອົາລະບອບເສດຖະກິດໃໝ່ ເປັນລະບອບສັງຄົມນິຍົມ " ທ່ານ ເລນິນໄດ້ອະທິບາຍຕື່ມອີກວ່າ " ໃນຄຳສັບ ຂ້າມຜ່ານນັ້ນໝາຍຄວາມວ່າແນວໃດ ? ເມື່ອໝູນໃຊ້ເຂົ້າໃນເສດຖະກິດແມ່ນບໍ? ມັນມີຄວາມໝາຍວ່າໃນລະບອບປະຈຸບັນ ມີບັນດາພາກສ່ວນ, ບັນດາສ່ວນປະກອບ, ມີທັງສິ່ງທີ່ເປັນຂອງທຶນນິຍົມ ແລະ ສັງຄົມນິຍົມ? ບໍ່ວ່າໃຜກະລ້ອນແຕ່ຮັບຮອງວ່າມີ "

## 5. ການຫັນເສດຖະກິດແຫ່ງຊາດໄປສູ່ເສດຖະກິດທີ່ຜະລິດສິນຄ້າ.

### 5.1. ເສດຖະກິດທຳມະຊາດ ແລະ ເສດຖະກິດສິນຄ້າ

### ກ. ເສດຖະກິດແບບທຳມະຊາດ.

ແມ່ນເສດຖະກິດທີ່ມີການຜະລິດສິນຄ້າເພື່ອສ້າງຄຸນຄ່າໃຊ້ສອຍ ໂດຍການໃຊ້ແຮງງານຕົວຈິງກະທົບໃສ່ເປົ້າໝາຍເທົ່ານັ້ນ ຜະລິດເພື່ອໃຊ້ພາຍໃນຄອບຄົວເທົ່ານັ້ນ ຜະລິດໄວ້ເພື່ອແລກປ່ຽນເຊິ່ງກັນ ແລະ ກັນໂດຍເຊິ່ງປະສະຈາກການແຂ່ງຂັນ

### ຂ. ເສດຖະກິດການຄ້າ.

ເສດຖະກິດການຄ້າແມ່ນເສດຖະກິດທີ່ຜະລິດສິນຄ້າຂຶ້ນມາເພື່ອການ ຊື້ - ຂາຍ ແລະ ແລກປ່ຽນໂດຍກົງເປັນການຜະລິດເພື່ອສ້າງລາຍຮັບແກ່ຄອບຄົວ ຫຼື ຂົງເຂດສັງຄົມໃດໜຶ່ງ ເພື່ອເປັນການສ້າງເສດຖະກິດໃຫ້ມີຄວາມເຂັ້ມແຂງ ເສດຖະກິດສາມາດຂັບເຄື່ອນຂະຫຍາຍຕົວໄດ້ຢ່າງວ່ອງໄວ.

### ຄ. ຄວາມຈຳເປັນໃນການຫັນເສດຖະກິດແຫ່ງຊາດໄປສູ່ເສດຖະກິດຕະຫຼາດ

ເນື່ອງຈາກວ່າການຜະລິດແມ່ນພາກສ່ວນທີ່ສຳຄັນ ໃນການພັນຂະຫຍາຍເສດຖະກິດ - ສັງຄົມ ໃຫ້ມີຄວາມ ກ້າວໜ້າພັດທະນາໃຫ້ທຽບທັນບັນດາປະເທດທີ່ພັດທະນາແລ້ວ ເພື່ອສ້າງກຳລັງການຜະລິດທີ່ມີປະສິດທິພາບ ແລະ ມີສີມືແຮງງານສູງ ສ້າງການສ້າງງານໃຫ້ເພີ່ມຂຶ້ນ ດັ່ງນັ້ນການຫັນເສດຖະກິດແບບທຳມະຊາດໄປສູ່ເສດຖະກິດຕະຫຼາດ ຈຶ່ງເປັນພາກສ່ວນສຳຄັນຢ່າງຍິ່ງ.

## 6. ການປ່ຽນແປງທາງດ້ານເສດຖະກິດຂອງປະຊາຄົມອາຊຽນ

### 6.1 ຄວາມເປັນມາ.

ສະມາຄົມປະຊາຊາດຂອງອາຊີຕາເວັນອອກສ່ຽງໃຕ້ ( Association of South East Asian Nation : ASEAN ) ຫຼື ອາຊ້ຽນ ສ້າງຕັ້ງຂຶ້ນເມື່ອວັນທີ 8 ສິງຫາ 1967 ( ບາງກອກ )ໂດຍມີສະມາຊິກຜູ້ກໍ່ຕັ້ງ 5 ປະເທດຄື : ໄທ, ມາເລເຊຍ, ຟີລິບປິນ, ອິນໂດເນເຊຍ ແລະ ສິງກາໂປຣ, ຕໍ່ມາໄດ້ມີສະມາຊິກເພີ່ມຂຶ້ນເປັນ 10 ປະເທດຄື :

- ບຣູໄນ ເຂົ້າໃນວັນທີ 8 ສິງຫາ ປີ 1984
- ຫວຽດນາມ ເຂົ້າ ໃນ ວັນທີ 8ມັງກອນ ປີ 1995
- ລາວ ແລະ ມຽນມາ ເຂົ້າໃນ ວັນທີ 23 ກໍລະກົດ ປີ 1997
- ກຳປູເຈຍ ເຂົ້າ ໃນວັນທີ 28 ກໍລະກົດ ປີ 1999

### 6.2 ຈຸດປະສົງໃນການສ້າງກຸ່ມ ASEAN

ສະມາຄົມປະຊາຊາດອາຊີອາຄະເນ (ASEAN) ສ້າງຕັ້ງຂຶ້ນ ເພື່ອສ້າງຄວາມສັນຕິພາບໃນພູມີພາກອາຊີຕາເວັນອອກຊຽງໃຕ້ອັນນໍາມາຊຶ່ງສະຖຽນລະພາບທາງການເມືອງ ຄວາມຈະເລີນກ້າວໜ້າທາງເສດຖະກິດ - ສັງຄົມ ແລະ ວັດທະນະທໍາ. ຈຸດປະສົງຫຼັກໆຂອງອາຊຽນແມ່ນມີດັ່ງຕໍ່ໄປນີ້:

- ເສີມສ້າງການພັດທະນາດ້ານເສດຖະກິດ ສັງຄົມ ແລະວັດທະນະທໍາຂອງພູມີພາກ
- ຮັກສາສະຖຽນລະພາບທາງດ້ານລາຄາ ແລະ ຄວາມໝັ້ນຄົງຂອງພູມີພາກ
- ໃຊ້ເປັນເວທີໃນການແກ້ໄຂຂໍ້ຂັດແຍງໃນພູມີພາກ

### 6.3 ຈຸດແຂງ ແລະ ຈຸດອ່ອນໃນການເຂົ້າເປັນສະມາຄົມອາຊຽນ.

### ກ. ຈຸດແຂງຂອງການເຂົ້າກຸ່ມ ASEAN

- ຂະຫຍາຍໂອກາດທາງດ້ານການຄ້າ ແລະ ການລົງທຶນໃນພູມີພາກ
- ເກີດການໃຊ້ຊັບພະຍາກອນຢ່າງມີປະສິດທິພາບ
- ເສີມສ້າງອໍານາດຕໍ່ລອງ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນ
- ຍົກລະດັບຄຸນນະພາບຊີວິດແລະຄວາມເປັນຢູ່ຂອງຊາວອາຊຽນໃຫ້ດີຂຶ້ນ
- ເປັນແຫຼ່ງດຶງດູດດ້ານການທ່ອງທ່ຽວທີ່ສໍາຄັນຂອງໂລກ
- ສາມາດເຄື່ອນຍ້າຍແຮງງານໃນພູມີພາກໄດ້ຢ່າງເສລີ
- ມີລະບົບເສດຖະກິດແບບເສລີ ແລະ ເປີດກວ້າງ
- ເປັນປະຊາຄົມແຫ່ງການຕິດຕໍ່ເຊື່ອມໂຍງໃນພູມີພາກ

### ຂ. ຈຸດອ່ອນຂອງການເຂົ້າກຸ່ມ AEC

- ກົດລະບຽບທີ່ແຕ່ກຕ່າງກັນແລະມີການປຽ່ນແປງຢູ່ສະເໝີອາດເຮັດໃຫ້ມີຄວາມແຕ່ກຕ່າງກັນດ້ານຕົ້ນທຶນ
- ລະບົບສາທາລະນະປະໂພກຂັ້ນພື້ນຖານຂອງບາງປະເທດຍັງຢູ່ລະຫວ່າງການພັດທະນາເຊັ່ນເສັ້ນທາງການຄົມມະນາຄົມອາດເຮັດໃຫ້ຕົ້ທຶນທີ່ສູງຂອງຜູ້ປະກອອຍການ
- ຄວາມແຕ່ກຕ່າງດ້ານວັດທະນະທໍາ ເສດຖະກິດ ການເມືອງ ແລະ ສັງຄົມ
- ສິນຄ້າທີ່ຜະລິດເພື່ອສົ່ງອອກໄປຍັງພູມີພາກອາຊຽນສ່ວນໃຫຍ່ຈະແຂ່ງຂັນກັນເອງ
- ບັນຫາຄົນວ່າງງານ (ແຮງງານຂາດທັກສະ)
- ຜູ້ປະກອບການຍັງຂາດທັກສະ ຂາດຄວາມເຂົ້າໃຈໃນດ້ານກົດມາຍສັບສິນທາງປັນຍາ ອາດເຮັດໃຫ້ສິນຄ້າດູດລອກລຽ່ນແບບທັ້ງຮູບລັກສະນະ ລິຂະສິດ ແລະເຄື່ອງໝາຍການຄ້າ.

### ຄໍາຖາມຄົ້ນຄວ້າ :

1. ການຜະລິດມີຄວາມສາຄັນຕໍ່ການດາລົງຊີວິດແນວໃດ ?
2. ປັດໃຈການຜະລິດປະກອບມີຫຍັງແດ່ ?
3. ເງິນມີຄວາມສໍາຄັນຄືແນວໃດ ?
4. ເງິນມີຈັກປະເພດ ປະເພດໃດແດ່ ?
5. ທະນາຄານມີໜ້າທີ່ເຮັດຫຍັງ ?
6. ທະນາຄານມີຄວາມສໍາຄັນຕໍ່ການຜະລິດຄືແນວໃດ ?
7. ການເຂົ້າເປັນປະຊາຄົມ ອາຊຽນ ມີຈຸດແຂ່ງ ແລະ ຈຸດອ່ອນແນວໃດ ?

# ພາກທີ III ພາກສັງຄົມສາດ
# ລະບອບການເມືອງ ແລະ ນະໂຍບາຍຂອງ ສປປ ລາວ.
# ( ອ່ານເພີ່ມເຕີມ )

## 1. ລະບອບປະຊາທິປະໄຕປະຊາຊົນ.

ປະຊາທິປະໄຕແມ່ນຮູບແບບໜຶ່ງຂອງລັດ ເຊິ່ງສິດອຳນາດຂຶ້ນກັບປະຊາຊົນ ຫຼື ເວົ້າອີກຢ່າງໜຶ່ງປະຊາທິປະໄຕ ແມ່ນຮູບແບບຂອງການພົວພັນທາງດ້ານການເມືອງ ເຊິ່ງອຳນາດທັງໝົດເປັນຂອງປະຊາຊົນ ຂຶ້ນກັບປະຊາຊົນ ໂດຍປະຊາຊົນ. ເນື້ອແທ້ຂອງປະຊາທິປະໄຕ ມັນແມ່ນຜະລິດຕະພັນແຫ່ງການພົວພັນຊົນຊັ້ນ, ແມ່ນການຈັດຕັ້ງສິດອຳນາດການເມືອງຂອງຊົນຊັ້ນປົກຄອງຕໍ່ສັງຄົມ.

ປະຊາທິປະໄຕມີ 2 ລະບອບຄື : “

- ປະຊາທິປະໄຕປະຊາຊົນ : ແມ່ນປະຊາທິປະໄຕຂອງຄົນສ່ວນຫຼາຍຂອງພົນລະເມືອງທົ່ວປະເທດ ສິດອຳນາດທັງໝົດຂຶ້ນກັບປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະໂຫຍດຂອງປະຊາຊົນ.
- ປະຊາທິປະໄຕນາຍທຶນ : ແມ່ນປະຊາທິປະໄຕຂອງຄົນສ່ວນໜ້ອຍ ແມ່ນປະຊາທິປະໄຕຂອງພວກນາຍທຶນ ເຂົາເນັ້ນໜັກປະຊາທິປະໄຕຜ່ານຕົວແທນແບບລວມໆ ແມ່ນມີລັກສະນະປົກປ້ອງສິດຜົນປະໂຫຍດຂອງພວກນາຍທຶນສະເພາະ.

## 2. ນະໂຍບາຍສັງຄົມ ແລະ ວັດທະນະທຳຂອງ ສ ປປ ລາວ.

ນະໂຍບາຍວັດທະນະທຳ - ສັງຄົມແມ່ນສ່ວນປະກອບອັນໜຶ່ງໃນລະບົບນະໂຍບາຍຂອງພັກ ແລະ ລັດຖະບານ, ແມ່ນບັນດາວິທີການ ມາດຕະການກ່ຽວກັບການແກ້ໄຂບັນຫາສັງຄົມ ຢ່າງແທດເໝາະກັບຈຸດໝາຍ ແລະ ທາດແທ້ຂອງຊົນຊັ້ນກຳອຳນາດ, ລະບອບສັງຄົມແຕກຕ່າງກັນ ຈຸດປະສົງເປົ້າໝາຍຂອງນະໂຍບາຍສັງຄົມກໍ່ແຕກຕ່າງກັນ ເພື່ອແນໃສ່ປົກປ້ອງຜົນປະໂຫຍດຊົນຊັ້ນກຳອຳນາດ ໃນນັ້ນມີນະໂຍບາຍດ້ານຕ່າງໆລຸ່ມນີ້ :

**ກ. ນະໂຍບາຍດ້ານການສຶກສາ :** ຍຸກປັດຈຸບັນ, ວິທະຍາສາດ - ເຕັກໂນໂລຊີກາຍເປັນກຳລັງການ ຜະລິດໂດຍກົງ ແລະ ເປັນປັດໃຈການຕັດສິນການພັດທະນາ. ດັ່ງນັ້ນ, ຕ້ອງໄດ້ພັດທະນາລະບົບການສຶກສາແຫ່ງຊາດໃຫ້ມີຄຸນະພາບ ແລະ ມີການປ່ຽນແປງອັນຕັ້ງໜ້າສູ່ຄວາມທັນສະໄໝທັງສອງດ້ານໄປພ້ອມໆ ກັນ ຄື : ເອົາໃຈໃສ່ທາງດ້ານການເມືອງ, ແນວຄິດ ແລະ ອຸດົມຄະຕິສັງຄົມນິຍົມ, ສ້າງສະຕິກົດໝາຍ ແລະ ລະບຽບວິໄນ; ສ້າງໃຫ້ເກັ່ງດ້ານວິຊາສະເພາະ, ວິຊາການໃຫ້ທຽບທັນກັບບາງຊາດເປັນກ້າວໆ, ປັນ ຍາສຶກສາ, ສິລະປະສິສຶກສາ, ກາຍະສຶກສາ ແລະ ແຮງງານສຶກສາ, ສົມທົບການສຶກສາໃນໂຮງຮຽນກັບການສຶກສາໃນຄອບຄົວ ແລະ ສັງຄົມ.

**ຂ. ນະໂຍບາຍດ້ານວຽກງານສາທາລະນະສຸກ :** ເພື່ອເຮັດໃຫ້ປະຊາຊົນຢູ່ດີກິນດີ ມີສຸຂະພາບອະນາໄມທີ່ດີ, ພວກເຮົາຕ້ອເອົາໃຈໃສ່ບາງບັນຫາດັ່ງນີ້ :

- ຂະຫຍາຍວຽກງານພື້ນຖານສາທາລະນະສຸກໄປສູ່ຮາກຖານໃຫ້ທົ່ວເຖິງ, ກໍ່ສ້າງ ແລະ ປັບປຸງບັນ ດາໂຮງໝໍ ແລະ ສາທາລະນະສຸກຕາມທ້ອງຖິ່ນຕ່າງໆທີ່ມີແລ້ວໃຫ້ສາມາດໃຊ້ບໍລິການໄດ້ເໝາະສົມ.

- ປະຕິບັດນະໂຍບາຍປິ່ນປົວສຸຂະພາບຂອງພະນັກງານ, ທະຫານຕຳຫຼວດ, ດ້ອຍຄັງທີ່ສ້າງຂຶ້ນ, ປະ ຕິບັດນະໂຍບາຍປິ່ນປົວບໍ່ເສຍຄ່າໃຊ້ຈ່າຍສຳລັບຜູ້ທີ່ທຸກຍາກຂາດເຂີນ, ເດັກກຳພ້າອານາຖາໃຫ້ເປັນຈິງ.

- ຍົກລະດັບຄວາມທັນສະໄໝ ແລະ ຄຸນນະພາບທາງດ້ານການບໍລິການຂອງໂຮງໝໍ, ເອົາໃຈໃສ່ກໍ່ ສ້າງ ແລະ ບຳລຸງລະດັບແພດໝໍ ໃຫ້ມີຄວາມກ້າວໜ້າທາງດ້ານວິທະຍາສາດ ດ້ານສາທາລະນະສຸກ.

- ເອົາໃຈໃສ່ຊຸກຍູ້ສົ່ງເສີມຂະບວນການກິລາກາຍຍະກຳຂອງມະຫາຊົນ, ສູ້ຊົນເຮັດໃຫ້ແຕ່ລະໂຮງ ຮຽນ ແລະ ຊຸມຊົນມີບ່ອນຫຼິ້ນກິລາ, ສົ່ງເສີມໃຫ້ເປັນວິຊາຊີບ ເພື່ອຍົກລະດັບຄວາມສາມາດຂອງນັກກິລາໃຫ້ສູງຂຶ້ນ.

## 3. ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

### 3.1 ເງື່ອນໄຂນະໂຍບາຍ ຂອງພວກລ່າເມືອງຂື້ນ.

ກ. ດ້ານການເມືອງ - ແນວຄິດ.

ນະໂຍບາຍທາງດ້ານການເມືອງ - ແນວຄິດ ເຂົາໄດ້ປຸກລະດົມໃຫ້ປະຊາຊົນຕັດແຍກອອກຈາກການປະຕິວັດ, ແກ່ດຶງປະຊາຊົນໃຫ້ຫຼົບຫຼີກການປະຕິບັດພັນທະຂອງພົນລະເມືອງ ຕໍ່ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ໃສ່ຮ້າຍປ້າຍສີແນວທາງນະໂຍບາຍຂອງພັກ ແລະ ລັດ, ໂຄສະນາທັບຖົມຜົນງານຜົນສຳເລັດຂອງການປະຕິວັດ, ພວກເຂົາສ່ອຍໃຊ້ຈຸດອ່ອນ, ຄວາມຜິດພາດ ແລະ ປະກົດການຫຍໍ້ທໍ້ຕ່າງໆຂອງພະນັກງານ, ທະຫານຕຳຫຼວດຂອງພວກເຮົາ ໃນການຈັດຕະນະໂຍບາຍຂອງພັກ, ໃນການຄຸ້ມຄອງລັດ.

ຂ. ດ້ານເສດຖະກິດ.

ພວກເຂົາສວຍໃຊ້ນະໂຍບາຍເປີດກວ້າງການພົວພັນ ແລະ ຮ່ວມມືດ້ານເສດຖະກິດກັບຕ່າງປະເທດຂອງພວກເຮົາ ເພື່ອເຊື່ອມຊຶມເຂົ້າພາຍໃນພວກເຮົາ, ກົດໜ່ວງ, ດຶງຈ່ອງ, ຂັດຂວາງການຂະຫຍາຍເສດຖະກິດຂອງພວກເຮົາໃນຫຼາຍຮູບການ, ພວກເຂາຊຸກຍູ້ການຄ້າຂາຍເຖື່ອນ, ເຄື່ອນໄຫວທຸລະກິດຜິດກົດໝາຍ, ອັນສຳຄັນແມ່ນພວກເຂົາໃຊ້ວັດຖຸຊື້ຈ້າງຈອບອອຍພະນັກງານ, ທະຫານ ແລະ ປະຊາຊົນ.

ຄ. ດ້ານວັດທະນະທຳ - ສັງຄົມ.

ພວກເຂາໄດ້ນຳເອົາວັດທະນະທຳຕາເວັນຕົກມາເຜີຍແຜ່, ດຶງດູດ, ສຶດສອນຊາວໜຸ່ມໃຫ້ກາຍເປັນນັກເລັງອັນຕະພານ, ປຸ້ນຈີ້, ງັດແງະ, ຂົ່ມຂືນທຳຊຳເລົາ, ຫຼິ້ນການພະນັນ....

ງ. ດ້ານການທະຫານ.

ພວກເຂົາປັບປຸງ ແລະ ນຳສົ່ງກຳລັງປະຕິການລາວພັດຖິ່ນເຂົ້າມາເຄື່ອນໄຫວ, ໂຄສະນາປົ່ນປ່ວນ, ສະກັດລັດຕີ ນາບຄູ່ແນວຄິດຂອງປະຊາຊົນ, ກໍ່ຄວາມຫຍຸ້ງຍາກໃນການທຳມາຫາກິນ, ເຕົ້າໂຮມກຳລັງໃຕ້ດິນໃຫ້ເຄື່ອນໄຫວກຳສະພາບ, ຊອກຮູ້ຈຸດອ່ອນ, ຄວາມຂັດແຍ່ງ ແລະ ຂໍ້ບົກພ່ອງຕ່າງໆຂອງພວກເຂົາ.

### 3.2 ຄວາມສາຄັນຂອງວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ແມ່ນວຽກງານທີ່ມີຄວາມສຳຄັນຫຼາຍມີການປັບປຸງຢ່າງຕັ້ງໜ້າຢ່າງບໍ່ຢຸດຢັ້ງ ເຮັດໜ້າທີ່ປ້ອງກັນຊາດປ້ອງກັນຄວາມສະຫງົບໃຫ້ມີຄວາມໝັ້ນຄົງ ແລະ ຄວາມເປັນເອກະລາດຂອງປະເທດ ທັງນີ້ກໍ່ເພາະວ່າປະເທດຊາດໜຶ່ງໆລ້ອນແຕ່ມີຄວາມບໍ່ສະຫງົບໃນຫຼາຍໆດ້ານ ດັ່ງນັ້ນວຽກງານປ້ອງກັນຊາດຈຶ່ງເປັນວຽກງານທີ່ສຳຄັນຫຼາຍ.

### 3.3 ຄວາມຈາເປັນທີ່ຕ້ອງເພີ້ມທະວີວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.

ການປົກປັກຮັກສາປະເທດຊາດ ແມ່ນໜ້າທີ່ອັນສຳຄັນຂອງທຸກຊາດທີ່ຕ້ອງໄດ້ປະຕິບັດ, ສ້າງໃຫ້ປະເທດມີສະເຖຍນະພາບ, ເອກະລາດ, ປະຊາທິປະໄຕ, ອິດສະຫຼະພາບ ແລະ ຄວາມສະຫງົບສຸກຂອງປະເທດ. ມີການຂະຫຍາຍຕົວທາງດ້ານເສດຖະກິດຢ່າງເຂັ້ມແຂງ. ການເມືອງ, ສັງຄົມ, ວັດທະນະທຳຢ່າງສີວິໄລ. ສະນັ້ນ, ວຽກງານປ້ອງກັນ ຊາດ - ປ້ອງກັນຄວາມສະຫງົບແມ່ນປັດໃຈໜຶ່ງທີ່ສາຄັນໃນບັນດາປະເທດ.

### 3.4 ທິດທາງ ແລະ ໜ້າທີ່ຂອງວຽກງານປ້ງກັນຊາດ - ປ້ອງກັນຄວາມສະຫງົບ.

**ກ. ທິດທາງ**

- ຢຶດໝັ້ນປະຕິບັດແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນ ແລະ ຮອບດ້ານ, ເສີມຂະຫຍາຍມູນເຊື້ອ ທຸກຄອບຄົວເຮັດໜ້າທີ່ຮັກສາຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.
- ເພີ່ມທະວີການນຳທີ່ເດັດຂາດ, ໂດຍກົງ ແລະ ຮອບດ້ານຂອງພັກຕໍ່ກຳລັງປະກອບອາວຸດປະຕິບັດຢ່າງບໍ່ຢຸດຢັ້ງ, ສົມທົບແໜ້ນແຟ້ນ, ປັບປຸງກົດໝາຍວ່າດ້ວຍພັນທະປ້ອງກັນຊາດໃຫ້ສອດຄ່ອງກັບເງື່ອນໄຂ.

- ເອົາໃຈໃສ່ປັບປຸງ, ກໍ່ສ້າງ ແລະ ຍົກສູງຄຸນະພາບຂອງກຳລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ດ້ວຍການເພີ້ມການສຶກສາອົບຮົມການເມືອງ - ແນວຄິດຢ່າງເລິກເຊິ່ງ.

- ຕັ້ງໜ້າປັບປຸງ ແລະ ຍົກລະດັບຄວາມສາມາດ, ຄວາມເດັດຂາດຂອງກຳລັງທີ່ເຮັດໜ້າທີ່ປ້ອງກັນຊາດ ພາຍໃນ, ກວດກາຄອບຄຸມຢາເສບຕິດ ແລະ ປ້ອງກັນເສດຖະກິດ.

- ຕ້ອງເພີ່ມທະວີຄວາມເອົາໃຈໃສ່ການປະຕິບັດນະໂຍບາຍທາງວັດຖຸ ແລະ ຈິດໃຈຕໍ່ພະນັກງານນັກຮົບ ຄອບຄົວຜູ້ເສຍຊີວິດ, ເສຍອົງຄະ, ນັກຮົບເກົ່າ, ຜູ້ມີຜົນງານ…

**ຂ. ໜ້າທີ່**

- ເພີ່ມທະວີການສຶກສາອົບຮົມໃຫ້ປະຊາຊົນເຊີດຊູນ້ຳໃຈຮັກຊາດ, ຮັກລະບອບໃໝ່, ຍົກສູງສະຕິລະວັງ ຕົວ ຮັບຮູ້ແຈ້ງກົນອຸບາຍຂອງສັດຕູ, ຕັ້ງໜ້າຕໍ່ຕ້ານສົງຄາມຈິດຕະສາດ, ສົງຄາມນັກສືບແນມ ແລະ ທຸກການມ້າງ ເພຂອງ ສັດຕູ.

- ຕັ້ງໜ້າກໍ່ສ້າງບັນດາການຈັດຕັ້ງຮາກຖານໃຫ້ເຂັ້ມແຂງ, ໜ່ວຍພັກແຂງຮູ້ນຳພາຮອບດ້ານ, ປັບປຸງອຳນາດ ການປົກຄອງ, ອົງການຈັດຕັ້ງມະຫາຊົນແຕ່ລະຂັ້ນໃຫ້ເຂັ້ມແຂງ ແລະ ກຳລັງປ້ອງກັນຊາດ - ປ້ອງກັນຄວາມສະ ຫງົບ.

- ຄະນະພັກ ແລະ ອຳນາດການປົກຄອງຂັ້ນຕ່າງໆ, ຕ້ອງນຳພາໂດຍກົງຕໍ່ການປະຕິບັດແຜນນະໂຍບາຍ ລະດົມຊາວໜຸ່ມອອກເປັນທະຫານພັນທະ, ປະຕິບັດນະໂຍບາຍຕໍ່ຜູ້ເສຍສະຫຼະ.

## 4. ນະບາຍການຕ່າງປະເທດຂອງ ສປປ ລາວ.

### 4.1 ສະພາບໃນປັດຈຸບັນ.

**ກ. <u>ດ້ານວິທະຍາສາດ - ເຕັກນິກ</u>**

ການຂະຫຍາຍຕົວທາງດ້ານວິທະຍາສາດ - ເຕັກໂນໂລຊີໄດ້ຂະຫຍາຍຕົວຢ່າງແຂງແຮງ, ກາລັງການຜະ ລິດໄດ້ຫັນປ່ຽນຢ່າງໄວວາ ໂດຍສະເພາະ ແມ່ນການຂະຫຍາຍຕົວຢ່າງແຂງແຮງຂອງເຕັກໂນໂລຊີຂ່າວສານ, ເຊິ່ງ ເຮັດໃຫ້ ບັນດາພາຫະນະໃໝ່ປະກົດຕົວຂຶ້ນເຊັ່ນ : ເງິນຕາເອເລັກໂຕນິກ, ການບໍລິການເອເລັກໂຕນິກ, ການຄ້າເອ ເລັກໂຕນິກ…ເຊິ່ງເຮັດໃຫ້ຕົ້ນທຶນການຜະລິດຫຼຸດລົງ, ປະຫຍັດເວລາ, ຍົກຜະລິດຕະພາບຂອງງານຂຶ້ນຫຼາຍກວ່າ ເກົ່າ ກະທົບຂອງການປະຕິວັດທາງດ້ານວິທະຍາສາດ - ເຕັກໂນໂລຊີ ນີ້ພາໃຫ້ພື້ນຖານເສດຖະກິດໃໝ່ເກີດຂຶ້ນ ເຊິ່ງເອີ້ນວ່າ : ເສດຖະກິດພູມປັນຍາ. ສາເຫດດັ່ງກ່າວ ພາໃຫ້ປະເທດທີ່ດ້ອຍພັດທະນາ, ຄວາມຮູ້ຂອງປະຊາຊົນ ຍັງຕໍ່າ, ເງື່ອນໄຂຄວາມສະດວກທາງດ້ານຕ່າງໆຍັງຕໍ່າ ເຮັດໃຫ້ໄພຫວ່າງງານ ແລະ ຄວາມທຸກຍາກເກີດຂຶ້ນ ປະ ເທດທີພັດທະນາເທົ່ານັ້ນທີ່ໄດ້ປຽບ.

**ຂ. <u>ດ້ານການພົວພັນຮ່ວມມື.</u>**

ປະເທດເຮົາຍັງເປັນປະເທດທີ່ດ້ອຍພັດທະນາຢູ່, ການຜະລິດສ່ວນໃຫຍ່ແມ່ນການຜະລິດທີ່ຫັນຈາກການ ຜະລິດ, ນ້ອຍກຸ້ມຕົນເອງ, ພໍພຽງກະແຈກກະຈາຍກ້າວສູ່ການຜະລິດສິນຄ້າໃນຂັ້ນຕົ້ນ, ພື້ນຖານເສດຖະກິດ ແຫ່ງຊາດຍັງບໍ່ທັນໜັກແໜ້ນ, ການສະສົມພາຍໃນຍັງຕໍ່າ, ປະສິດທິພາບຂອງງານຍັງຕໍ່າ, ເສດຖະກິດສິນຄ້າ ແລະ ຕະຫຼາດໄດ້ເລີ້ມຕົ້ນຂະຫຍາຍຕົວ, ວິທະຍາສາດ - ເຕັກນິກ, ລະດັບການສຶກສາ, ສາທາລະນະສຸກຍັງຕ່ຳ ແລະ ດ້ານອື່ນໆຍັງບໍ່ທັນເຂັ້ມແຂງ. ສະນັ້ນ, ການເຊື່ອມໂຍມພາກພື້ນກັບສາກົນຂອງປະເທດເຮົາຈຶ່ງຍັງບໍ່ທັນ ເຂັ້ມແຂງການລົງທຶນ ແລະ ການການຖ່າຍທອດເຕັກໂນໂລຊີເພື່ອພັດທະນາເສດຖະກິດ, ເພື່ອເພີ້ມຄວາມສາ ມາດໃນການແກ່ງແຍ້ງ, ຈຳກັດຄວາມສ່ຽງຕ່າງໆ ພ້ອມນັ້ນກໍ່ຕ້ອງຮັກສາລະບອບການເມືອງ - ສັງຄົມຂອງປະ ເທດເຮົາໃຫ້ໝັ້ນຄົງ.

**4.2 ວຽກງານຕ່າງປະເທດ ແລະ ຮ່ວມມືສາກົນຂອງພັກ - ລັດ.**

**ກ. <u>ຄວາມຈຳເປັນ.</u>**

- ໃນປັດຈຸບັນມີທ່າອ່ຽງ ຫັນຈາກການຂະຫຍາຍຕົວລວງກວ້າງຫັນໄປສູ່ລວງເລິກ, ຄວາມຕ້ອງການທາງດ້ານເຕັກໂນໂລຊີສູງ. ການຂະຫຍາຍຕົວຂອງກຳລັງການຜະລິດໄດ້ມີການແບ່ງງານສາກົນຢ່າງວ່ອງໄວ.

- ເສດຖະກິດຂອງໂລກມີລັກສະນະກວມລວມກວ່າເກົ່າ, ຕໍ່ການພົວພັນ ແລະ ທ່າອ່ຽງໃນການປະສົມປະສານສົມທົບກໍ່ເພີ່ມຂຶ້ນ.

- ໃນປັດຈຸບັນຕະຫຼາດໂລກກຳລັງກາຍເປັນລະບອບໜຶ່ງ ເຊິ່ງມີການເຂົ້າຮ່ວມຂອງຫຼາຍປະເທດ ໂດຍບໍ່ຈຳແນກລະບອບການເມືອງ ແລະ ສັງຄົມທີ່ແຕກຕ່າງກັນ.

**ຂ. <u>ທິດທາງວຽກງານການຕ່າງປະເທດໃນໄລຍະໃໝ່.</u>**

- ຢືດໝັ້ນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ, ບົນພື້ນຖານຫຼັກການເຄົາລົບເອກະລາດ ຂອງກັນ ແລະ ກັນ ເຊິ່ງຕ່າງຝ່າຍກໍ່ຕ່າງໄດ້ຜົນປະໂຫຍດ.

- ສືບຕໍ່ຮັດແໜ້ນ ແລະ ເພີ່ມທະວີການພົວພັນ - ຮ່ວມມືຮອບດ້ານຂອງບັນດາປະເທດເພື່ອນມິດຍຸດທະສາດສັງຄົມນິຍົມ.

- ຖືການພົວພັນອັນດີງາມ ແລະ ການຮ່ວມມືຮອບດ້ານກັບບັນດາປະເທດອື່ນໆ ຕັ້ງໜ້າປະກອບສ່ວນໃນການເຄື່ອນໄຫວຂອງປະຊາຄົມບັນດາປະເທດອາຊີ.

- ເພີ່ມທະວີການພົວພັນກັບບັນດາພັກກຳອຳນາດ, ພັກການເມືອງ ແລະ ຂະບວນການຕ່າງໆບົນພື້ນຖານການເຄົາລົບເອກະລາດ ແລະ ຄວາມເປັນເຈົ້າຕົນເອງ.

**ຄ. <u>ນະໂຍບາຍເປີດກວ້າງການພົວພັນເສດຖະກິດກັບຕ່າງປະເທດ.</u>**

- ການຮ່ວມມືແບບຫຼາຍທິດ ແມ່ນການຮ່ວມມືກັບຫຼາຍໆປະເທດ ໂດຍບໍ່ຈຳແນກລະບອບການເມືອງ, ສັງຄົມທີ່ແຕກຕ່າງກັນ, ຈະແມ່ນປະເທດທຶນນິຍົມ, ສັງຄົມນິຍົມ, ປະເທດບໍ່ຮ່ວມກຸ່ມ ປະເທດພັດທະນາແລ້ວ, ພວມພັດທະນາກໍ່ລ້ວນແຕ່ສາມາດມາລົງທຶນຢູ່ ສປປ ລາວໄດ້.

- ການຮ່ວມມືຫຼາຍຮູບແບບການລົງທຶນລະຫວ່າງລັດກັບລັດ, ລັດກັບເອກະຊົນ, ເອກະຊົນກັບເອກະຊົນເປັນຕົ້ນ.

- ການຮ່ວມມືມີຫຼາຍລະດັບຊາດ, ລະດັບທ້ອງຖິ່ນ, ໂຄງການເຫຼົ່ານີ້ມີຄວາມແຕກຕ່າງກັນທາງດ້ານທຶນຮອນ.

## ຄຳຖາມຄົ້ນຄວ້າ :

1. ລະບອບປະຊາທິປະໄຕໝາຍຄວາມວ່າແນວໃດ ?
2. ວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບມີຄວາມສຳຄັນແນວໃດ ?
3. ນະໂຍບາຍການຕ່າງປະເທດມີຄວາມສຳຄັນແນວໃດ ?

# ບົດທີ 4
# ວ່າດ້ວຍລັດ ແລະ ກົດໝາຍ

## 1. ຄວາມຮູ້ພື້ນຖານກ່ຽວກັບລັດ, ທາດແທ້ ແລະ ອົງປະກອບຂອງລັດ.

### 1.1. ລັດ

ລັດ : ໝາຍເຖິງຂົງເຂດໃດໜຶ່ງທີ່ມີການຈັດຕັ້ງ ການປົກຄອງອັນແນ່ນອນ ຂອງລະບອບການເມືອງ ການປົກຄອງຂອງປະເທດຊາດ ທີ່ມີລະບຽບແບບແຜນ ມີກົດໝາຍການປົກຄອງອັນເຄັ່ງຄັດ ແລະ ລັດຍັງປະກອບມີ 3 ປັດໄຈຄື :

- ປະຊາກອນໃນລັດດັ່ງກ່າວ ເປັນປັດໃຈທີ່ສໍາຄັນ
- ປັດໄຈເທສະ ຫຼື ສະຖານທີ່ເຊິ່ງແມ່ນຂອບເຂດຊາຍແດນອັນແນ່ນອນປະກອບດ້ວຍທາງໜ້າດິນ, ທາງນໍ້າ ແລະ ທາງອາກາດ ( ນ່ານຟ້າ ).
- ປັດໄຈສັງຄົມ ແລະ ກົດໝາຍ ເຊິ່ງແມ່ນການປົກຄອງຂັ້ນລັດນັ້ນເອງ.

### 1.2 ພາລະໜ້າທີ່ ແລະ ທາດແທ້ຂອງລັດ.

- **ສິດຕ່າງໆຂອງລັດ**

- ລັດແມ່ນນິຕິບຸກຄົນມີສິດ ແລະ ພັນທະ, ແຕ່ສິດ ແລະ ພັນທະຂອງລັດແຕກຕ່າງກັນກັບຂອງບຸກຄົນ ເພາະ ລັດມີໜ້າທີ່ຮັບຜິດຊອບຜົນປະໂຫຍດລວມຂອງທົ່ວທັງໝົດໃນສັງຄົມ

- ລັດມີສິດພິເສດທີ່ບຸກຄົນບໍ່ສາມາດມີໄດ້ ເຊັ່ນ ເປັນເຈົ້າກໍາມະສິດກ່ຽວກັບທີ່ດິນ, ຊັບພະຍາກອນທໍາມະຊາດ, ຖະໜົນ ແລະ ອື່ນໆ.

- ລັດມີສິດເອົາກໍາມະສິດຂອງບຸກຄົນມາເປັນຂອງລັດ ເພື່ອສ້າງຜົນປະໂຫຍດລວມຂອງຊາດ
- ລັດເປັນອົງການຊີ້ນໍາວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ
- ລັດເປັນອົງການຊີ້ນໍາວຽກງານປົກຄອງ
- ລັດເປັນອົງການຊີ້ນໍາວຽກງານຍຸດຕິທໍາ
- ລັດເປັນອົງການຊີ້ນໍາວຽກງານພັດທະນາເສດຖະກິດ
- ລັດເປັນອົງການຊີ້ນໍາວຽກງານການສຶກສາ
- ລັດເປັນອົງການຊີ້ນໍາວຽກງານ ວັດທະນະທໍາ ແລະ ສັງຄົມ

- **ທາດແທ້ຂອງລັດ.**

ທາດແທ້ຂອງລັດແມ່ນກົງຈັກປາບປາມ ຫຼື ຄວາມຮຸນແຮງອັນໜຶ່ງຂອງຊົນຊັ້ນປົກຄອງຕໍ່ຊົນຊັ້ນ ອື່ນ ຫຼື ແມ່ນຜະເດັດການຂອງຊົນຊັ້ນປົກຄອງຕໍ່ຊົນຊັ້ນທີ່ຖືກປົກຄອງ.

- ທາດແທ້ຂອງລັດທີ່ກົດຂີ່ຂູດຮີດ ແມ່ນຜະເດັດການຂອງຊົນຊັ້ນກົດຂີ່ຂູດຮີດຕໍ່ປະຊາຊົນຜູ້ອອກແຮງງານຈໍານວນຫຼວງຫຼາຍອັນມີລັດຂ້າທາດ, ສັກດີນາ ແລະ ລັດນາຍທຶນ.

- ສ່ວນທາດແທ້ຂອງລັດສັງຄົມນິຍົມແມ່ນຜະເດັດການຂອງຊົນຊັ້ນກໍາມະກອນ, ຊາວກະສິກອນ ແລະ ຊາວຜູ້ອອກແຮງງານອື່ນໆ ຕໍ່ຊົນຊັ້ນຂູດຮີດທີ່ຫວັງຟື້ນຕົວກໍ່ການກະບົດ.

- ລັດປະຊາທິປະໄຕປະຊາຊົນລາວ, ທາດແທ້ແມ່ນຜະເດັດການຂອງປະຊາຊົນ ຕໍ່ພວກທີ່ທໍາລະຍົດຕໍ່ສິດຜົນປະໂຫຍດຂອງປະຊາຊົນ.

### 1.3 ລັດແຫ່ງ ສປປ ລາວ.

ການກໍາເນີດ ພາຍໃຕ້ການນໍາພາອັນສະຫຼາດສ່ອງໃສ ແລະ ປີຊາສາມາດຂອງພັກປະຊາຊົນປະຕິວັດລາວ ປະຊາຊົນລາວບັນດາເຜົ່າໄດ້ດໍາເນີນການຕໍ່ສູ້ກູ້ຊາດ ເພື່ອໂຄ່ນລົ້ມອໍານາດການປົກຄອງຂອງພວກ ຈັກກະພັດລ່າເມືອງຂຶ້ນ ແລະ ສັກດີນາປະຕິການຂາຍຊາດ, ປົດປ່ອຍປະເທດຊາດໄດ້ຢ່າງສົມບູນ ລົບລ້າງ ລະບອບລາຊາທິປະ

ໄຕ, ແລ້ວສ້າງຕັ້ງລະບອບປະຊາທິປະໄຕປະຊາຊົນລາວຂຶ້ນຢ່າງສົມບູນ ໃນວັນທີ 2 ທັນວາ ປີ 1975. ການກຳເນີດ ສປປ ລາວ ແມ່ນໝາກຜົນແຫ່ງການຕໍ່ສູ້ປະຕິວັດອັນຍືດເຍື້ອນຍາວນານ ເຕັມໄປດ້ວຍຄວາມຫຍຸ້ງຍາກລຳບາກ ແລະ ຄວາມເສຍສະຫຼະຂອງກອງທັບ ແລະ ປະຊາຊົນບັນດາເຜົ່າ.

ສ ປປ ລາວ ແມ່ນລັດປະຊາທິປະໄຕປະຊາຊົນ, ເປັນອົງການແຫ່ງສິດອຳນາດທາງການເມືອງຂອງ ປະຊາຊົນລາວບັນດາເຜົ່າ, ສິດອຳນາດທັງໝົດເປັນຂອງປະຊາຊົນ ໂດຍປະຊາຊົນ ແລະ ຜົນປະໂຫຍດປະຊາຊົນ.

ພາລະກຳປະຫວັດສາດຂອງລັດແຫ່ງ ສປປ ລາວ ແມ່ນປຸກລະດົມຂົນຂວາຍ, ສຶກສາອົບຮົມ ແລະ ຈັດຕັ້ງປະຊາຊົນບັນດາເຜົ່າດຳເນີນການປົກປັກຮັກສາເອກະລາດແຫ່ງຊາດ ແລະ ພັດທະນາສ້າງສາປະເທດ ຊາດຕາມທິດກ້າວສູ່ສັງຄົມນິຍົມ, ກຳລັງແຮງຂອງລັດ ແມ່ນກ້ອນກຳລັງສາມະຄີເປັນປຶກແຜ່ນອັນໜຶ່ງອັນດຽວຂອງປະຊາຊົນລາວທັງຊາດ, ບົນພື້ນຖານພັນທະພາບກຳມະກອນ - ຊາວກະສິກອນ ແລະ ນັກຮຽນປັນຍາຊົນພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ.

**1.4. ລັກສະນະຂອງລັດແຫ່ງ ສປປ ລາວ.**

- ລັກສະນະຊົນຊັ້ນຂອງ ສປປ ລາວ ແມ່ນໄດ້ຮັບການສ້າງຕັ້ງຂຶ້ນບົນພື້ນຖານ ພັນທະພາຍກາມະ ກອນ, ຊາວກະສິກອນ, ນັກຮຽນຮູ້ປັນຍາຊົນປະຕິວັດ ແລະ ປະຊາຊົນບັນດາຊັ້ນຄົນທີ່ຮັກຊາດພາຍໃຕ້ ການນຳພາຂອງພັກ ສປປ ລາວ.

- ລັກສະນະຊາດຂອງລັດ ສປປ ລາວ ແມ່ນເອກະພາບທົ່ວປວງຊົນລາວ ປະກອບດ້ວຍຫຼາຍເຜົ່າທີ່ ສາມະຄີປອງດອງເປັນອັນໜຶ່ງອັນດຽວກັນ ໂດຍຕັດແຍກອອກຈາກກັນບໍ່ໄດ້. ປະຊາຊົນເຜົ່າຕ່າງໆມີສິດ ສະເໝີພາບ, ມີເອກະລັກທາງດ້ານວັດທະນະທຳ ແລະ ມີຄວາມຮັກຫອມຕອມຕຸ້ມຂອງຊາດລາວ.

- ລັກສະນະປະຊາຊົນຂອງລັດ ສປປ ລາວ ແມ່ນມີລັກສະນະຄວາມເປັນເອກະລາດສົມບູນ ແມ່ນ ລັດທີ່ມີປະຊາຊົນເປັນເຈົ້າຂອງປະເທດຊາດ ແລະ ຊາຕາກຳຂອງຕົນຢ່າງເຕັມສ່ວນເຊິ່ງອຳນາດທັງໝົດແມ່ນຂຶ້ນກັບປະຊາຊົນເອງ.

- ລັກສະນະປະຊາທິປະໄຕຂອງລັດ ສປປ ລາວ ແມ່ນລັດທີ່ດຳເນີນການປົກຄອງ ແລະ ຄຸ້ມຄອງຕາມລັດຖະທຳມະນູນ ແລະ ກົດໝາຍ. ລັດດຳເນີນຕາມມາດຕະການ ແລະ ນະໂຍບາຍເພື່ອຂຸດຄົ້ນເສີມ ຂະຫຍາຍກຳລັງແຮງງານສັງລວມພາຍໃນຊາດສົມທົບກັບ ການຍາດແຍ່ງກຳລັງແຮງຈາກສາກົນ ເພື່ອສ້າງສາພັດທະນາປະເທດຊາດ ຕາມທິດກ້າວຂຶ້ນສູ່ສັງຄົມນິຍົມ.

**1.5 ທາດແທ້ຂອງລັດປະຊາທິປະໄຕປະຊາຊົນ.**

ແມ່ນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ທັງນີ້ກໍ່ຍ້ອນວ່າລັດເຮົາມີ ທາດແທ້ຊົນຊັ້ນກຳມະກອນເຊິ່ງເປັນຊົນຊັ້ນນຳພາອັນມີພັກ ສປປ ລາວ ເປັນແກນນຳ.

- ລັດຂອງປະຊາຊົນ : ໝາຍວ່າ ປະຊາຊົນເປັນຜູ້ສ້າງຕັ້ງລັດ ພາຍຫຼັງທີ່ຍາດແຍ່ງເອົາໄຊຊະນະມາ ໄດ້ ໃນການຕໍ່ສູ້ປົດປ່ອຍຊາດທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກລຳບາກນາໆປະການ.

- ລັດເພື່ອປະຊາຊົນ : ລັດເປັນຜູ້ຮັບໃຊ້ປະຊາຊົນ, ອຳນາດທັງໝົດນັບແຕ່ສູນກາງຫາຂັ້ນທ້ອງຖິ່ນ ຮາກຖານບ້ານຕ້ອງເປັນຜູ້ຮັບໃຊ້ທີ່ຊື່ສັດບໍລິສຸດຕໍ່ປະຊາຊົນ ແລະ ສຸດກົກສຸດປາຍ.

- ລັດໂດຍປະຊາຊົນ : ລັດຂອງພວກເຮົາເຄື່ອນໄຫວປະຕິວັດໜ້າທີ່ວຽກງານພາຍໃຕ້ການນຳພາຂອງພັກ ສປປ ລາວ, ມີປະຊາຊົນບັນດາເຜົ່າ ຫຼື ຕົວແທນຂອງເຂົາເຈົ້າເປັນຜູ້ຕິດຕາມດູແລ ແລະ ກວດກາ ປະ ຊາຊົນມອບສິດອຳນາດການປົກຄອງຂັ້ນຕ່າງໆ ບໍລິຫານວຽກງານຂອງບ້ານເມືອງ.

## 2. ການກຳເນີດ, ທາດແທ້ ແລະ ຄຸນປະໂຫຍດຂອງກົດໝາຍ.

**໒. ການກຳເນີດຂອງກົດໝາຍ.**

ການກຳເນີດຂອງກົດໝາຍຕິດພັນໂດຍກົງກັບການກຳເນີດຂອງລັດ, ໝາຍຄວາມວ່າລັດກຳເນີດຂຶ້ນ, ກົດໝາຍກໍ່ກຳເນີດຂຶ້ນ, ເຊິ່ງເງື່ອນໄຂອັນພື້ນຖານຂອງມັນ ກໍ່ແມ່ນມາຈາກການແບ່ງສັງຄົມອອກເປັນຊົນຊັ້ນທີ່ປໍລະ

ປົກກັນນັ້ນເອງ.

ເມື່ອສັງຄົມກໍາເນີດມີຊົນຊັ້ນ, ຂໍ້ຊັດແຍ່ງທາງຊົນຊັ້ນໃນສັງຄົມ ບໍ່ສາມາດລົງລອຍກັນໄດ້, ຊົນຊັ້ນປົກຄອງ ໄດ້ສ້າງກົງຈັກອໍານາດລັດຂອງຕົນຂຶ້ນ ເພື່ອປົກປ້ອງສິດຜົນປະໂຫຍດ ແລະ ອໍານາດຂອງຕົນຕ້ານ ກັບຊົນຊັ້ນອື່ນ, ອໍານາດດັ່ງກ່າວປະກອບດ້ວຍກໍາລັງການທະຫານ, ຕໍາຫຼວດ, ກົງຈັກບັນຊາ ແລະ ຂໍ້ບັງຄັບຕ່າງໆ ເຊິ່ງເອີ້ນວ່າ : ກົດໝາຍ.

**ຂ. ທາດແທ້ຂອງກົດໝາຍ**

ກົດໝາຍມີທາດແທ້ຊົນຊັ້ນຢ່າງຈະແຈ້ງບໍ່ວ່າກົດໝາຍຂອງລັດໃດ, ລະບອບການເມືອງ ແລະ ສັງ ຄົມໃດ ກໍລ້ວນແຕ່ແມ່ນເຈດຈໍານົງຂອງຊົນຊັ້ນທີ່ມີອໍານາດ ຫຼື ຊົນຊັ້ນທີ່ຄອບຄອງພາຫະນະການຜະລິດຕົ້ນຕໍຂອງສັງຄົມກໍານົດຂຶ້ນເປັນກົດໝາຍ.

**ຄ. ໜ້າທີ່ຕົ້ນຕໍຂອງກົດໝາຍ**

- ເຮັດໜ້າທີ່ດັດປັບສາຍພົວພັນສັງຄົມ ໂດຍວາງລະບຽບ - ຂໍ້ການົດໃນການພົວພັນສັງຄົມ ແນໃສ່ເຮັດໃຫ້ທ່າອ່ຽງການເຄື່ອນໄຫວຂອງບັນດາການຈັດຕັ້ງ, ກຸ່ມຄົນ, ບຸກຄົນ, ສັງຄົມຕ້ອງມີການເຄື່ອນໄຫວ ແລະ ດໍາລົງຊີວິດຖືກຕ້ອງຕາມລະບຽບກົດໝາຍ.

- ປົກປ້ອງສາຍພົວພັນພາຍໃນສັງຄົມແມ່ນການກັນ ແລະ ຕ້ານທຸກໆການກະທໍາທີ່ລ່ວງລະເມີດຕໍ່ສາຍພົວພັນທາງສັງຄົມ, ຖ້າຫາກມີຜູ້ລະເມີດກໍ່ຕ້ອງປະຕິບັດ ແລະ ແກ້ໄຂຢ່າງເຂັ້ມງວດຕາມລະບຽບກົດໝາຍ.

## 3. ລັດ ແລະ ກົດໝາຍແຫ່ງ ສປປ ລາວ.

ພ້ອມໆກັບການກໍາເນີດຂອງລັດແຫ່ງ ສ ປປ ລາວ ກົດໝາຍກໍ່ໄດ້ຮັບການສ້າງຕັ້ງຂຶ້ນ, ໃນເບື້ອງຕົ້ນກົດໝາຍສະແດງອອກເປັນມັດຕິຕ່າງໆ ຂອງກອງປະຊຸມໃຫຍ່ຜູ້ແທນປະຊາຊົນຄັ້ງວັນທີ 2 ທັນວາ 1975 ດັ່ງນີ້ :

- ມະຕິຕົກລົງລົບລ້າງ ລະບອບປະຊາທິປະໄຕ.
- ມະຕິຈົກລົງສ້າງຕັ້ງ ລະບອບປະຊາທິປະໄຕ ປະຊາຊົນລາວ.
- ມະຕິຕົກລົງແຕ່ງຕັ້ງ ປະທານປະເທດແຫ່ງ ສປປ ລາວ.
- ມະຕິຕົກລົງແຕ່ງຕັ້ງ ນາຍົກລັດຖະມົນຕີ ສປປ ລາວ.

ບັນດາມັດຕິຕ່າງໆເຫຼົ່ານີ້ ໄດ້ເປັນພື້ນຖານໃຫ້ແກ່ການກໍ່ສ້າງກົດໝາຍຕ່າງໆ ໃນຕໍ່ມາເຊັ່ນ : ລັດຖະທໍາມະນູນແຫ່ງ ສປປ ລາວ. ສະບັບທໍາອິດ, ເຊິ່ງສະພາປະຊາຊົນສູງສຸດໄດ້ຮັບຮອງເອົາໃນວັນທີ 14 ສິງຫາ 1991 ແລະ ໄດ້ປະກາດນໍາໃຊ້ໃນວັນທີ 15 ສິງຫາ 1991 ຕາມລັດຖະດໍາລັດຂອງປະທານປະເທດ ເລກທີ 55/ປທປທ ມາເຖິງປັດຈຸບັນ ກໍ່ໄດ້ມີການປະກາດນໍາໃຊ້ກົດໝາຍສະບັບຕ່າງໆຫຼາຍກວ່າ 50 ສະບັບເຊັ່ນ : ກົກດໝາຍອາຍາ ກົດໝາຍແພ່ງ, ກົດໝາຍແຮງງານ ແລະ ກົດໝາຍອື່ນໆ.

## ຄໍາຖາມຄົ້ນຄວ້າ

1. ລັດໝາຍຄວາມວ່າແນວໃດ ?
2. ປັດໃຈໃດແດ່ທີ່ປະກອບເປັນລັດຂຶ້ນມາ ?
3. ການກໍາເນີດຂອງກົດໝາຍມີຄືແນວໃດ ?
4. ກົດໝາຍແມ່ນຫຍັງ ?

# ບົດທີ 5

# ລັດຖະທຳມະນູນແຫ່ງ ສປປ ລາວ

## 1. ຄວາມສຳນຶກກ່ຽວກັບ ລັດຖະທຳມະນູນແຫ່ງ ສ ປ ປ ລາວ.

### 1.1. ລັດຖະທຳມະນູນ.

ລັດຖະທຳມະນູນແຫ່ງ ສປປ ລາວ ແມ່ນກົດໝາຍພື້ນຖານທີ່ສະແດງເຖິງ ເຈດຈຳນົງຂອງຊົນຊັ້ນປົກຄອງ ໃນການກຳນົດລະບອບການເມືອງ, ເສດຖະກິດ - ສັງຄົມ, ສິດ, ພັນທະພື້ນຖານຂອງພົນລະ ເມືອງ, ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ.

ລັດຖະທາມະນູນຍັງເປັນກົດໝາຍພື້ນຖານ ໃຫ້ແກ່ບັນດາກົດໝາຍອື່ນໆ ການົດບັນດາໜ້າທີ່ກໍ່ຄືບັນຫາທີ່ກວມລວມ ແລະ ບັນດາຫຼັກການທີ່ສຳຄັນກວ່າໝູ່ ເຊິ່ງເປັນພື້ນຖານໃຫ້ແກ່ການສ້າງລະບົບກົດ ໝາຍອື່ນໆ.

ບັນຫາພື້ນຖານກວ່າໝູ່ຂອງລັດຖະທຳມະນູນແມ່ນທາດແທ້ຂອງຊົນຊັ້ນຂອງມັນ ແລະ ລັກສະນະຊົນຊັ້ນຂອງລັດ, ຂອງລະບອບການເມືອງ, ອຳນາດການປົກຄອງຕົກຢູ່ໃນກຳມືຂອງຊົນຊັ້ນໃດ ແລະ ຮັບໃຊ້ໃຜແມ່ນສະແດງອອກໃນລັດຖະທຳມະນູນ.

### 1.2. ຄວາມສາຄັນຂອງ ລັດຖະທາມະນູນ

ນອກຈາກນີ້ລັດຖະທຳມະນູນ ຍັງມີຄວາມຈຳເປັນເນື່ອງຈາກພາຍໃນສັງຄົມມີການດຳລົງຊີວິດຢູ່ຮ່ວມກັນຂອງຄົນຈຳນວນຫຼາຍ ດັ່ງນັ້ນ ການມີລັດຖະທຳມະ ນູນມາປົກຄອງຈຶ່ງເປັນເລື່ອງທີ່ສຳຄັນ, ເພື່ອປົກຄອງການດຳລົງຊີວິດ ປະຕິບັດລະບຽບການປົກຄອງພາຍໃນຂົງເຂດປະ ເທດຂອງຕົນຢ່າງເຂັ້ມງວດ ປະຕິບັດຕາມແຜນແນວທາງນະໂຍບາຍຕ່າງໆຂອງພັກ ແລະ ລັດ ເຊິ່ງແມ່ນພື້ນຖານທາງດ້ານກົດໝາຍກໍ່ສາມາດບັນລຸໝາກຜົນອັນຈົບງາມເຮັດໃຫ້ປະເທດຊາດມີຄວາມກ້າວໜ້າຢ່າງຮອດດ້ານ.

ສະພາປະຊາຊົນສູງສຸດ ຊຸດທີ 2 ໄດ້ຄົ້ນຄວ້າໂຄງຮ່າງ ແລະ ຜ່ານການປະກອບຄຳຄິດເຫັນຂອງປະ ຊາຊົນບັນດາເຜົ່າໃນທົ່ວປະເທດ, ປະທານປະເທດໄດ້ປະກາດໃຊ້ລັດຖະທຳມະນູນຂອງ ສປປ ລາວ ສະ ບັບທຳອິດເລກທີ 07/ສປສ ລົງວັນທີ 15 ສິງຫາ 1991 ຢ່າງເປັນທາງການ.

## 2. ພາລະບົດບາດ - ໜ້າທີ່ຂອງລັດຖະທາມະນູນ.

### 2.1. ພາລະບົດບາດ

ມີບົດບາດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນ ປົກປັກຮັກສາໝາກຜົນການປະຕິວັດ, ປາບປາມສັດຕູພາຍໃນ ແລະ ພາຍນອກທັງມີພາລະກໍ່ສ້າງລະບອບໃໝ່ ກໍ່ສ້າງພື້ນຖານເສດຖະກິດໃໝ່ ວັດທະນະທຳອັນດີງາມກໍ່ສ້າງຄົນຮຸ່ນໃໝ່ໃຫ້ກາຍເປັນພົນລະ ເມືອງດີ.

### 2.2. ໜ້າທີ່ຂອງລັດຖະທານູນ

**- ໜ້າທີ່ທາງດ້ານການເມືອງ :** ກຳນົດລະບອບການເມືອງ ເສດຖະກິດ - ສັງຄົມ, ທາດແທ້ຊົນຊັ້ນຂອງລັດແນວທາງການເມືອງພາຍໃນ ແລະ ການຕ່າງປະເທດ, ສິດພັນທະຂອງພົນລະເມືອງ, ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ.

**- ໜ້າທີ່ທາງດ້ານກົດໝາຍ :** ລັດຖະທຳມະນູນແມ່ນກົດໝາຍພື້ນຖານ, ແມ່ນໃຈກາງທາງດ້ານກົດໝາຍທັງແມ່ນຍຸດທະສາດທາງດ້ານກົດໝາຍ.

**- ໜ້າທີ່ທາງດ້ານແນວຄິດ :** ລັດຖະທຳມະນູນມີການກະທົບທາງດ້ານແນວຄິດຕໍ່ສັງຄົມ, ສຶກສາອົບຮົມປະຊາຊົນໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ເຊີດຊູສະຕິເປັນເຈົ້າຂອງປະເທດຊາດ ແລະ ສະຕິເຄົາລົບກົດໝາຍ.

## 3. ຫຼັກການ ແລະ ເນື້ອໃນພື້ນຖານຂອງລັດຖະທຳມະນູນ.

### 3.1 ຫຼັກການພື້ນຖານຂອງລັດຖະທຳມະນູນ

ຫຼັກການພື້ນຖານຂອງລັດຖະທຳມະນູນມີດັ່ງນີ້ :

- ຫຼັກການອຳນາດຂອງປະຊາຊົນ.
- ຫຼັກການນຳພາຂອງພັກ.
- ຫຼັກການອຳນາດເອກະພາບ.
- ຫຼັກການລວມສູນປະຊາທິປະໄຕ.
- ຫຼັກການນິຕິທຳ.
- ຫຼັກການເສລີພາບ ແລະ ປະຊາທິປະໄຕພົນລະເມືອງ.

○ **ນອກຈາກນີ້ລັດຖະທຳມະນູນ** ສປປ ລາວ ຍັງໄດ້ກຳນົດພາສາ, ອັກສອນ, ເຄື່ອງໝາຍຊາດ ທຸງຊາດ, ເພັງຊາດ ແລະ ນະຄອນຫຼວງຂອງປະເທດ

- ພາສາ ແລະ ອັກສອນລາວເປັນພາສາ ແລະ ອັກສອນທີ່ໃຊ້ໄດ້ເປັນທາງການ
- ເຄື່ອງໝາຍຂອງ ສປປ ລາວ ເປັນຮູບວົງເດືອນດ້ານລຸ່ມມີຮູບເຄິ່ງກົງຈັກເປັນແຂ້ວ ແລະ ໂບສີແດງຂຽນຕົວອັກສອນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນຮູບເຟືອງພະຈັນ ແລະ ໂບສີແດງຂຽນຕົວອັກສອນສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດ ທະນະຖາວອນ, ລະຫວ່າງກາງຂອງສອງປາຍຮວງເຂົ້າມີຮູບທາດຫຼວງ, ຢູ່ກາງຮູບວົງມົນມີຫົນທາງ, ທົ່ງ ນາ, ປ່າໄມ້ ແລະ ເຂື່ອນໄຟຟ້ານ້ຳຕົກ.
- ທຸງຊາດຂອງ ສປປ ລາວແມ່ນມີພື້ນສີຄາມ, ແຂບແດງ ແລະ ວົງເດືອນສີຂາວ, ລວງກວ້າງຂອງທຸງເທົ່າກັບສອງສ່ວນສາມຂອງລວງຍາວ, ແຂບແດງແຕ່ລະເບື້ອງເທົ່າກັບເຄິ່ງໜຶ່ງຂອງພື້ນສີຄາມ ແລະ ວົງເດືອນສີຂາວກວ້າງເທົ່າກັບສີ່ສ່ວນຫ້າຂອງພື້ນສີຄາມ.
- ເພັງຊາດຂອງ ສປປ ລາວແມ່ນເພັງທີ່ມີຊື່ວ່າ : ຊາດລາວ.
- ນະຄອນຫຼວງຂອງປແທດ ສປປ ລາວ ແມ່ນນະຄອນຫຼວງວຽງຈັນ.

### 3.2. ເນື້ອໃນຂອງລັດຖະທຳມະນູນ ສປປ ລາວ

ມີ 5 ພາກສ່ວນໃຫຍ່ຄື :

- ຄຳນຳ
- ລະບອບການເມືອງ
- ລະບອບເສດຖະກິດ - ສັງຄົມ
- ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ
- ການຈັດຕັ້ງຂອງກົງຈັກລັດ

**<u>ຄຳຖາມຄົ້ນຄວ້າ</u>**

1. ລັດຖະທຳມະນູນໝາຍຄວາມວ່າແນວໃດ ?
2. ລັດຖະທຳມະນູນມີຄວາມສຳຄັນແນວໃດ ?
3. ຈົ່ງບອກບັນດາຫຼັກການຂອງລັດຖະທຳມະນູນ ?
4. ຈົ່ງບອກພາລະບົດບາດຂອງລັດຖະທຳມະນູນ ?
5. ທຸງຊາດ ແລະ ກາຊາດມີຄວາມໝາຍແນວໃດ ?

# ( ອ່ານເພີ່ມ )

# ກົດໝາຍອາຍາພາກລວມ

## 1. ກົດໝາຍອາຍາ, ຫຼັກການ ແລະ ຂອບເຂດການນຳໃຊ້ກົດໝາຍອາຍາ.

### 1.1 ກົດໝາຍອາຍາ.

ກົດໝາຍອາຍາມີໜ້າທີ່ປົກປັກຮັກສາລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກຳມະສິດຂອງລັດ, ຂອງລວມໝູ່ແລະຂອງບຸກຄົນ, ຊີວິດສຸຂະ ພາບ, ສິດ ແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານ ແລະ ສະກັດກັ້ນການກະທຳຜິດ ແລະ ສຶກສາອົບຮົມພົນລະເມືອງທຸກຄົນໃຫ້ມີຕື່ນຕົວເຄົາລົບກົດໝາຍ.

ເພື່ອປະຕິບັດໜ້າທີ່ດັ່ງກ່າວ ກົດໝາຍສະບັບນີ້ໄດ້ກຳນົດວ່າ ການກະທຳອັນໃດທີ່ເປັນອັນຕະລາຍຕໍ່ສັງຄົມ ແມ່ນເປັນການກະທຳຜິດທາງອາຍາແລ້ວຈຶ່ງໄດ້ກຳນົດໂທດໃສ່ຜູ້ກະທຳຜິດ.

ກົດໝາຍອາຍາແມ່ນຂໍ້ກຳນົດທີ່ວາງອອກ ແລະ ຄຸ້ມຄອງໂດຍລັດ, ເຊິ່ງກ່າວເຖິງບັນດາພຶດຕິກຳ ທີ່ຖືວ່າ ເປັນການກະທຳຜິດທາງອາຍາ, ກຳນົດເງື່ອນໄຂ ແລະ ວິທີການກ່ຽວກັບການວາງໂທດ, ກຳນົດສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ແລະ ເງື່ອນໄຂກ່ຽວກັບການພົ້ນຈາກການລົງໂທດ.

### 1.2. ໜ້າທີ່ຂອງກົດໝາຍອາຍາ.

ກົດໝາຍອາຍາມີໜ້າທີ່ປົກປັກຮັກສາລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງ ສ ປປລາວ ກຳມະສິດຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດ, ສຸຂະພາບ, ສິດ ແລະ ເສລີພາບຂອງພົນລະເມືອງ ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານ ແລະ ສະກັດກັ້ນການກະທຳຜິດ ແລະ ສຶກສາອົບຮົມພົນລະເມືອງທຸກຄົນໃຫ້ມີຄວາມຕື່ນຕົວເຄົາລົບກົດໝາຍ.

### 1.3. ຫຼັກການຂອງກົດໝາຍອາຍາ.

ຫຼັກການຂອງກົດໝາຍອາຍາແມ່ນ ບັນດາແນວຄິດຊີ້ນຳກ່ຽວກັບການສ້າງ ແລະ ນຳໃຊ້ກົດໝາຍອາຍາ ເຊິ່ງມີບັນດາຫຼັກການລວມດັ່ງນີ້:

### ກ. ຫຼັກການຊົນຊັ້ນ

ຫຼັກການນີ້ສະແດງອອກຢູ່ບ່ອນວ່າ ທຸກໆຂໍ້ກຳນົດຂອງກົດໝາຍອາຍາ ຮັບໃຊ້ສິດຜົນປະໂຫຍດ ຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງລັດ, ແນ່ໃສ່ຮັບປະກັນສິດເປັນເຈົ້າຂອງປະຊາຊົນລາວ ບັນດາເຜົ່າ.

### ຂ. ຫຼັກການນິຕິທຳ

ເນື້ອໃນຂອງຫຼັກການນິຕິທຳ ແມ່ນການເຄົາລົບຂໍ້ກຳນົດຂອງກົດໝາຍ ຢ່າງເຂັ້ມງວດ, ການເຄົາລົບຂໍ້ກຳນົດຂອງກົດໝາຍຢ່າງເຂັ້ມງວດ ແມ່ນພັນທະຂອງໝົດທຸກຄົນ, ໂດຍສະເພາະພະນັກງານປົກປ້ອງກົດໝາຍ ການປະຕິບັດກົດໝາຍຕ້ອງເຂັ້ມງວດ, ເດັດຂາດ ແລະ ກົງໄປກົງມາ. ຢູ່ໃນກົດໝາຍອາຍາໄດ້ກຳນົດຢ່າງຄົບຖ້ວນ ແລະ ຊັດເຈນພື້ນຖານເງື່ອນໄຂ ແລະ ຂອບເຂດຄວາມຮັບຜິດຊອງຂອງທາງອາຍາພຶດຕິກຳຖືວ່າ ເປັນການກະທຳຜິດ ແລະ ຕ້ອງໂທດ. ດັ່ງນັ້ນ, ການນຳໃຊ້ກົດໝາຍບໍ່ຖືກກັບເປົ້າໝາຍຈະເປັນການສ້າງຄວາມອັບປະໂຫຍດໃຫ້ແກ່ສັງຄົມ ແລະ ບຸກຄົນຢ່າງໜັກໜ່ວງ.

**ຄ. ຫຼັກການມະນຸດສະທຳ.**

ກົດໝາຍອາຍາຂອງ ສ ປປລາວ ເອົາໃຈໃສ່ການປົກປັກຮັກສາບຸກຄົນ, ສັງຄົມ, ການປ່ຽນແປງ ແລະ ການສຶກສາອົບຮົມຜູ້ກະທຳຜິດ ແມ່ນເພື່ອໃຫ້ສາມາດກັບຄືນເຂົ້າສູ່ການດຳລົງຊີວິດທີ່ປອດໄສຂາວສະອາດ ດ້ວຍການອອກແຮງງານທີ່ຊື່ສັດບໍລິສຸດໃນສັງຄົມ, ກົດໝາຍອາຍາຍັງກຳນົດເງື່ອນໄຂທີ່ພາ ໃຫ້ພົ້ນຈາກຄວາມຮັບຜິດ ຊອບທາງອາຍາ ແລະ ໂທດ, ການພາກໂທດ, ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ ແລະ ອື່ນໆ.

**ງ. ຫຼັກການຄວາມຮັກຊາດ.**

ຫຼັກການນີ້ສະແດງອອກຢູ່ບ່ອນວ່າ ທຸກໆການກະທຳຜິດທີ່ແຕະຕ້ອງເຖິງເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ ລ້ວນແຕ່ໄດ້ຮັບໂທດໜັກກວ່າການກະທຳຜິດອື່ນໆ. ດັ່ງນັ້ນ, ກົດໝາຍອາຍາຈຶ່ງເປັນພື້ນຖານໜຶ່ງໃຫ້ແກ່ການສຶກສາອົບຮົມພົນລະເມືອງ ໃຫ້ມີຄວາມຈົ່ງຮັກພັກ ດີຕໍ່ປະເທດຊາດ ຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກລະບອບໃໝ່, ປະຕິບັດພັນທະຂອງຕົນຕໍ່ຊາດຢ່າງຄົບຖ້ວນ.

**ຈ. ຫຼັກການສາກົນນິຍົມ.**

ກົດໝາຍອາຍາ ສ ປ ປ ລາວ ນອກຈາກຈະມີໜ້າປົກປັກຮັກສາ ສິດຜົນປະໂຫຍດຂອງຊາດ ຂອງສັງຄົມ ແລະ ຂອງຕົນແລ້ວ ຍັງປົກປັກຮັກສາສິດຜົນປະໂຫຍດຂອງຊາດອື່ນອີກ, ໂດຍສະເພາະສິດຜົນປະໂຫຍດຂອງບັນດາປະເທດ ທີ່ມີລະບອບ ການເມືອງດຽວກັນ.

**1.4. ຂອບເຂດການນາໃຊ້ກົດໝາຍອາຍາ.**

ຂອບເຂດການນຳໃຊ້ກົດໝາຍອາຍາແມ່ນ ຂອບເຂດທີ່ກົດໝາຍອາຍາ ສາມາດໃຊ້ໄດ້ຢ່າງມີຜົນສັກສິດຕາມແຕ່ລະມາດຕາທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຂອບເຂດການນຳໃຊ້ກົດໝາຍອາຍາມີ 2 ຢ່າງຄື:

ກ. ການນຳໃຊ້ກົດໝາຍອາຍາ ທາງດ້ານພື້ນທີ່ປະກອບດ້ວຍ.

- ກົດໝາຍອາຍາສະບັບທີ່ກຳລັງມີຜົນສັກສິດ
- ຕາມສັນຊາດຂອງຜູ້ກະທາຜິດ

ຂ. ການນຳໃຊ້ກົດໝາຍອາຍາທາງດ້ານເວລາ, ເຊິ່ງການນຳໃຊ້ນີ້ ແມ່ນອີງໃສ່ 3 ຫຼັກການໃຫ່ຍ ຄື:

- ກົດໝາຍອາຍາສະບັບທີ່ກຳລັງມີຜົນສັກສິດ
- ຈະຖືກຢ້ອນຫຼັງຄືນ ( ກົດໝາຍອາຍາສະບັບເກົ່າ )
- ນາໃຊ້ກົດໝາຍສະບັບໃໝ່ໄປເລີຍ

## 2. ການກະທຳຜິດ ແລະ ອົງປະກອບຂອງການກະທຳຜິດທາງອາຍາ.

### 2.1 ນິຍາມການກະທາຜິດ.

ນິຍາມການກະທຳຜິດ ແມ່ນທຸກການກະທຳ ຫຼື ທຸກການເມີນເສີຍ ທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງຊາດ, ຕໍ່ກຳມະສິດຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດສຸຂະພາບ, ສິດ ແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເຊິ່ງບົ່ງໄວ້ໃນກົດໝາຍອາຍາຈະຖືວ່າເປັນການກະທຳຜິດທາງອາຍາ.

### 2.2 ອົງປະກອບຂອງການກະທາຜິດ.

ບັນດາເຄື່ອງໝາຍທີ່ບອກວ່າ ພຶດຕິກຳໃດໜຶ່ງ ເປັນການກະທຳຜິດ ທຸກການກະທຳຜິດຕ້ອງມີ 4 ອົງປະກອບຄື :

**ກ. ວັດຖຸກຳ**

ວັດຖຸກຳຂອງການກະທຳຜິດທາງອາຍາ ແມ່ນສາຍພົວພັນສັງຄົມ ທີ່ໄດ້ຮັບການຄຸ້ມຄອງຈາກກົດໝາຍອາຍາ ເຊິ່ງການກະທຳຜິດແນ່ໃສ່ການທຳລາຍ, ໝາຍຄວາມວ່າ ສາຍພົວພັນອັນຖືກຕ້ອງ ແລະ ເປັນທຳຂອງສັງຄົມທີ່ຖືກແຕະຕ້ອງດ້ວຍການກະທຳຜິດແມ່ນວັດຖຸກຳຂອງການກະທຳຜິດທາງອາຍາ.

**ຂ. ດ້ານພາວະວິໄສ**

ແມ່ນບັນດາເຄື່ອງໝາຍຂອງການກະທຳຜິດ ທີ່ສະແດງອອກພາຍນອກເຊິ່ງໄດ້ສ້າງ ແລະ ແນໃສ່ສ້າງຄວາມເສຍຫາຍໃຫ້ແກ່ສາຍພົວພັນສັງຄົມ ທີ່ກົດໝາຍອາຍາຄຸ້ມຄອງລວມມີ 4 ເຄື່ອງໝາຍດັ່ງນີ້:

● **ພຶດຕິກຳ**

ແມ່ນບັນດາການກະທຳ ຫຼື ການເມີນເສີຍ ທີ່ເປັນໄພອັນຕະລາຍຕໍ່ສັງຄົມ. ການກະທຳແມ່ນການເຄື່ອນໄຫວທີ່ເປັນອັນຕະລາຍຕໍ່ສັງຄົມ ແລະ ເປັນການລະເມີດກົດໝາຍອາຍາ. ການເມີນເສີຍແມ່ນການທີ່ບໍ່ໃນສິ່ງທີ່ກົດໝາຍບອກໃຫ້ເຮັດ.

● **ຜົນສະທ້ອນຈາກພຶດຕິກຳ**

ແມ່ນຄວາມເສຍຫາຍທີ່ເນື່ອງມາຈາກພຶດຕິກຳ, ຄວາມເສຍຫາຍອາດແມ່ນດ້ານຮ່າງກາຍ, ວັດຖຸ ກຽດສັກສີ, ຊື່ສຽງ ແລະ ອື່ນໆ.

● **ສາຍພົວພັນເຫດ ແລະ ຜົນລະຫວ່າງພຶດຕິກຳ ແລະ ຜົນສະທ້ອນ**

ແມ່ນສາຍພົວພັນລະຫວ່າງພຶດຕິກຳ ແລະ ຜົນສະທ້ອນທີ່ເກີດຈາກພຶດຕິກຳ, ພຶດຕິກຳຕ້ອງເກີດກ່ອນ ແລະ ເປັນສາເຫດທີ່ຈຳເປັນໃຫ້ແກ່ຜົນສະທ້ອນນັ້ນ.

● **ວັນເວລາ ແລະ ສະຖານທີ່** ແລະ ພາຫະນະຂອງການກະທາຜິດ ແມ່ນສາຍພົວພັນດ້ານເວລາສະຖານທີ່ເກີດເຫດການພາຫະນະທີ່ນຳໃຊ້ ເຂົ້າໃນການກະທຳຜິດ.

**ຄ. ດ້ານອັດຕະວິໄສ.**

ດ້ານອັດຕະວິໄສຂອງການກະທຳຜິດ ແມ່ນທັດສະນະຂອງຜູ້ກະທຳຜິດ ( ເຈົ້າກຳ ) ຕໍ່ການກະທຳຜິດຂອງຕົນທີ່ສະແດງອອກ ຢູ່ໃນຮູບການຂອງການກະທຳຜິດເຊັ່ນ ເຈຕະນາ, ບໍ່ລະມັດລະວັງ.

**ງ. ເຈົ້າກຳ.**

ເຈົ້າກຳຂອງການກະທາຜິດແມ່ນ ບຸກຄົນຜູ້ກະທຳຜິດ ທີ່ມີສະຕິຈິດສຳນຶກ ສົມບູນ ແລະມີກະສຽນອາຍຸ 15 ປີຂຶ້ນໄປໃນເວລາກະທາຜິດນັ້ນ.

## 3. ສາເຫດ ແລະ ເງື່ອນໄຂ ທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ.

ແມ່ນສາເຫດ ແລະ ເງື່ອນໄຂເຊິ່ງຜູ້ກະທຳຜິດໄດ້ມີພຶດຕິກຳ ທີ່ຖືວ່າເປັນການກະທຳຜິດແຕ່ບໍ່ໄດ້ຮັບຜິດຊອບທາງອາຍາມີດັ່ງນີ້:

- ເດັກທີ່ມີອາຍຸບໍ່ທັນເຖິງ 15ປີ ໃນເວລາກະທຳຜິດ
- ບຸກຄົນທີ່ໄດ້ລົງມືກະທຳຜິດ ໃນຂະນະທີ່ມີອາການເປັນບ້າ, ເສຍຈິດເຖິງຂັ້ນເສຍສະຕິ, ບໍ່ສາມາດຮັບຮູ້ໄດ້ເຖິງຜົນສະທ້ອນທີ່ຕົນເອງກະທຳ.
- ການກະທຳຜິດດ້ວຍການຖືກບັງຄັບ ຫຼື ຖືກຂົ່ມຂູ່ນັ້ນ ຫາກເປັນການກະທຳຜິດຖານຄະລຸໂທດການຖືກບັງຄັບ ຫຼື ຂົ່ມຂູ່ ຈະເປັນພຽງສາເຫດທີ່ໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາ ຍາເທົ່ານັ້ນ.

- ການກະທຳທີ່ກໍ່ຂຶ້ນ ເພື່ອປົກປ້ອງຜົນປະໂຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຫຼື ບຸກຄົນອື່ນເພື່ອຕ້ານການບຸກລຸກທີ່ເປັນອັນຕະ ລາຍຕໍ່ສັງຄົມ ການບຸກລຸກຕ້ອງມີຈິງ ແລະ ເປັນອັນຕະລາຍແທ້ ແລະ ການກະທຳເພື່ອປົກປ້ອງນັ້ນຕ້ອງກະທຳໃນເວລາທີ່ມີການບຸກລຸກນັ້ນ ແລະ ບໍ່ໃຫ້ກາຍຂອບເຂດຂອງການບຸກລຸກ.

- ການກະທຳທີ່ກໍ່ເກີດຂຶ້ນດ້ວຍຄວາມຈຳເປັນ ເພື່ອຫຼີກເວັ້ນໄພອັນຕະລາຍ ທີ່ຂົ່ມຂູ່ຜົນປະໂຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະໂຫຍດອັນຊອບ ທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ ແລະ ໃນເມື່ອໄພອັນຕະລາຍດັ່ງກ່າວ ຫາກບໍ່ສາມາດຫຼີກເວັ້ນດ້ວຍວິທີອື່ນ.

- ບັນດາການກະທຳຜິດ ເຊິ່ງຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ເຊັ່ນ ການທຳຮ້າຍຮ່າງກາຍລະຫວ່າງຍາດໃກ້ສິດ ທີ່ບໍ່ມີບາດເຈັບສາຫັດ ຫຼື ເສຍອົງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດສາກສົບ ຫຼື ຊື່ສຽງຂອງຜູ້ຕາຍ, ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ. ການລ່ວງລະເມີດເຄຫະສະຖານ ແລະ ການລ່ວງລະເມີດຄວາມລັບສ່ວນຕົວ, ຖ້າຫາກບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍກໍຈະດຳເນີນຄະດີບໍ່ໄດ້ ແລະ ຈະບໍ່ມີຄວາມຮັບຜິດຊອບທາງອາຍາ.

- ຜູ້ກະທຳຜິດໄດ້ເສຍຊີວິດ ຈະແມ່ນກ່ອນ ຫຼື ຫຼັງການຮ້ອງຟ້ອງ, ການດຳເນີນຄະດີອາຍາກໍຈະຢຸດຕິລົງ.

- ຈະບໍ່ສາມາດຮ້ອງຟ້ອງທາງອາຍາໄດ້ຖ້າກາຍກຳນົດ

➢ ໜຶ່ງປີສາລັບການກະທາຜິດໃນຖານລະຫຸໂທດ

➢ ເຈັດປີສາລັບການກະທາຜິດໃນຖານໂທສານຸໂທດ

➢ ສິບຫ້າປີສາລັບການກະທາຜິດໃນຖານຄະລຸໂທດ

ອາຍຸຄວາມໃນການຮ້ອງຟ້ອງແມ່ນ ນັບແຕ່ມື້ໄດ້ກະທຳຜິດເປັນຕົ້ນໄປ, ໃນກໍລະນີທີ່ໄດ້ກະທຳຜິດເທື່ອໃໝ່ພາຍໃນກຳນົດອາຍຸຄວາມຂອງການກະທຳຜິດເທື່ອກ່ອນນັ້ນ, ອາຍຸຄວາມໃນການຮ້ອງຟ້ອງແມ່ນໃຫ້ເລີ່ມແຕ່ມືກະທຳຜິດເທື່ອໃໝ່ເປັນຕົ້ນໄປ.

## 4. ໄລຍະການກະທຳຜິດ, ການຮ່ວມມືກະທຳຜິດ ແລະ ການກະທຳຜິດຫຼາຍສະຖານ.

### 4.1 ໄລຍະການກະທຳຜິດ.

ແມ່ນຂັ້ນຕອນເຄື່ອນກະທຳຜິດ ທີ່ຜູ້ກະທຳໄດ້ກະທຳໂດຍເຈດຕະນາ ເຊິ່ງສະແດງອອກໃນຂັ້ນຕອນຕ່າງໆດັ່ງນີ້:

**ກ. ໄລຍະກະກຽມກະທຳຜິດ**

ແມ່ນການຫ້າງຫາພາຫະນະ ອຸປະກອນການສ້າງເງື່ອນໄຂ ຫຼື ປັດໄຈອື່ນໆ ໃຫ້ແກ່ການກະທຳປິດໂດຍເຈດຕະນາ.

ແມ່ນຫ້າງຫາພາຫະນະອຸປະກອນ ການສ້າງເງື່ອນໄຂ ແລະ ຕົກລົງກັບບຸກຄົນອື່ນເພື່ອກະທຳຜິດ ແມ່ນສະແດງເຖິງດ້ານພາວະວິໄສຂອງການກະກຽມ, ພ້ອມນັ້ນເມື່ອດີວ່າການກະທຳດັ່ງກ່າວ ແມ່ນເປັນການກະທຳຜິດແຕ່ຕ້ອງການໃຫ້ມັນເກີດຂຶ້ນ ເປັນດ້ານອັດຕະວິໄສຂອງການກະທຳຜິດ.

**ຂ. ການພະຍາຍາມການກະທຳຜິດ**

ຄວາມພະຍາຍາມກໍ່ການກະທຳຜິດ ແມ່ນການລົງມືກະທຳຜິດ ສ່ວນໃດສ່ວນໜຶ່ງໂດຍເຈຕະນາ. ແຕ່ຍ້ອນມີສາເຫດນອກຕົວມາຂັດຂວາງ ເຊິ່ງພາໃຫ້ການກະທຳດັ່ງກ່າວນັ້ນ ບໍ່ສຳເລັດຜົນ.

ການພະຍາຍາມການກະທຳຜິດ ໝາຍຄວາມວ່າ ຜູ້ກະທຳຜິດໄດ້ລົງມື ກະທຳຜິດແລ້ວ ແລະ ກຳລັງດຳເນີນກະທຳຜິດຢູ່ ແຕ່ການກະທຳຜິດດັ່ງກ່າວບໍ່ທັນສຳເລັດຜົນຍ້ອນ ມີສາເຫດສາເຫດນອກຕົວ ເຊິ່ງບໍ່ຂຶ້ນກັບເຈຕະນາຂອງຜູ້ກະທຳຜິດນັ້ນມາຂັດຂວາງ ຈຶ່ງເອີ້ນວ່າ ແມ່ນໄລຍະພະຍາຍາມກະທຳຜິດ.

**ຄ. ການກະທຳຜິດຊິ້ນສຸດ ຫຼື ສຳເລັດແລ້ວ**

ແມ່ນການກະທຳຜິດ ທີ່ໄດ້ບັນລຸຕາມຈຸດປະສົງ ຂອງຜູ້ກະທຳຜິດແລ້ວ ແລະ ປະກອບດ້ວຍກ້ານພາວະວິໄສ ແລະ ອັດຕະວິໄສຢ່າງຄົບຖ້ວນ.

**ງ. ການເລີກລົ້ມ ການກະທຳຜິດດ້ວຍຄວາມສະໝັກໃຈ**

ແມ່ນການຢຸດການກະທຳຜິດ ຂອງຜູ້ກະທຳຜິດ ດ້ວຍຄວາມສະໝັກໃຈ ຈະແມ່ນຢູ່ໃນໄລຍະກະກຽມ ຫຼື ຄວາມພະຍາຍາມ ເພື່ອກະທຳຜິດກໍ່ຕາມ ທັ້ງໆ ທີ່ມີຄວາມສາມາດສືບຕໍ່ການກະທຳຜິດ ໃຫ້ສຳ ເລັດໄດ້ ແຕ່ມີຄວາມສະໝັກໃຈ, ຈຶ່ງໃຈເລີກລົ້ມການກະທຳຜິດຢ່າງສິ້ນເຊີງ ແລະ ເດັດຂາດ ກໍຈະມີຄວາມຮັບຜິດຊອບທາງອາຍາ, ເວັ້ນເສຍແຕ່ການກະທຳນັ້ນຫາກມີອົງປະກອບເປັນການກະທຳຜິດອື່ນ.

**4.2 . ການຮ່ວມມືກະທຳຜິດ**

**ກ. ຄວາມໝາຍ**

ການຮ່ວມມືກະທຳຜິດ ແມ່ນການເຂົ້າຮ່ວມໃນການກະທຳຜິດ ໂດຍເຈຕະນາແຕ່ສອງຄົນຂຶ້ນໄປ ແຕ່ລະຄົນລ້ວນແຕ່ມີສິຕິຊໍາປະຊັນຍະ ແລະ ເຖິງກະສຽນອາຍຸທາງອາຍາ, ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນອຳນວຍຄວາມສະດວກ ຫຼື ປົດບັງ, ເຊິ່ງຮູ້ດີວ່າຈະເປັນໄພອັນຕະລາຍຕໍ່ສັງຄົມ ແຕ່ຕ້ອງການຢາກໃຫ້ຜົນສະທ້ອນນັ້ນເກີດຂຶ້ນ. ການຮ່ວມມືກະທຳຜິດ ໄດ້ສະແດງອອກໃນປະເພດ ຜູ້ຮ່ວມມືກະທຳຜິດ ແລະ ປະເພດການຮ່ວມມືກະທຳຜິດ.

**ຂ. ປະເພດຜູ້ຮ່ວມມືກະທຳຜິດ**

ປະເພດຜູ້ຮ່ວມມືກະທຳຜິດມີ 4 ປະເພດຄື : ຕົວການ, ຜູ້ປະຕິບັດ, ຜູ້ຍຸແຍ່, ຜູ້ສົມຮູ້ຮ່ວມຄິດ.

**ຄ. ປະເພດການຮ່ວມມືການກະທຳຜິດ ມີ 3 ປະເພດຄື**

ການພ້ອມພຽງກັນກະທຳຜິດ; ການຮ່ວມມືກະທຳຜິດ ໂດຍມີບົດບາດແຕກຕ່າງກັນ; ການຮ່ວມມືໂດຍມີການຈັດຕັ້ງເປັນກຸ່ມກ້ອນ.

## 5. ໂທດ ແລະ ການວາງໂທດ.

**ກ. ໂທດ.**

ແມ່ນມາດຕະການບັງຄັບ ຂອງລັດເຊິ່ງບົ່ງໄວ້ ໃນກົດໝາຍອາຍາ ແລະ ແມ່ນສານເປັນຜູ້ວາງໂທດ ໃນນາມລັດໃສ່ຜູ້ກະທຳຜິດ. ຈຸດປະສົງຂອງການລົງໂທດແມ່ນ ເພື່ອດັດສ້າງ ແລະ ສຶກສາອົບຮົມຜູ້ຖືກລົງໂທດ ໃຫ້ມີແບບແຜນການດຳລົງຊີວິດທີ່ຖືກຕ້ອງ, ມີຄວາມຊື່ສັດບໍລິສຸດ, ມີທັດສະນະແຮງງານປະດິດສ້າງຢ່າງຖືກຕ້ອງ ແລະ ເຄັ່ງຄັດ.

**ຂ. ປະເພດໂທດ.**

- ໂທດຕົ້ນຕໍມີການວາງໂທດຄື :
  - ຕໍານິວິຈານຕໍ່ໜ້າມະຫາຊົນ.
  - ດັດສ້າງໂດຍບໍ່ຕັດອິດສະຫຼະພາບ.

- ຕັດອິດສະຫຼະພາບ.
- ປະຫານຊີວິດ.

➢ ໂທດເພີ່ມລວມມີການວາງໂທດຄື :

- ປັບໄໝ ( ໃນບາງກໍລະນີທີ່ເປັນໂທດຕົ້ນຕໍ )
- ຮິບວັດຖຸສິ່ງຂອງ.
- ຮິບຊັບ.
- ປົດສິດຕຳແໜ່ງ ແລະ ສະໝັກຮັບເລືອກຕັ້ງ.
- ຈຳກັດທີ່ຢູ່.

**ຄ. ການວາງໂທດ.**

➢ ການວາງໂທດເບົາ.

- ເດັກອາຍຸຕໍ່າກວ່າ 18 ປີກະທຳຄວາມຜິດ.
- ແມ່ຍິງຖືພາກະທຳຄວາມຜິດ.
- ການປ້ອງກັນຕົວເອງເກີດຂອບເຂດ.
- ການກະທຳຜິດຍ້ອນຖືກແຕະຕ້ອງ ທາງຈິດໃຈ ຢ່າງໜັກຈົນບໍ່ສາມາດຄວບຄຸມສະຕິໄດ້ດ້ວຍ ການກະທຳອັນບໍ່ຖືກຕ້ອງ ຕາມກົດໝາຍຂອງຜູ້ຖືກເຄາະຮ້າຍ.
- ການກະທຳຜິດຍ້ອນຖືກບັງຄັບ ຫຼື ຖືກຂົ່ມຂູ່.
- ຜູ້ກະທຳຜິດ ສະກັດກັ້ນຜົນເສຍຫາຍ ຂອງການກະທຳຜິດທີ່ຕົນໄດ້ກໍ່ຂຶ້ນ ຫຼື ຈິງໃຈໃຊ້ແທນຄ່າເສຍຫາຍ ໂດຍສະໝັກໃຈ.
- ກະທຳຜິດຍ້ອນສະພາບໜັກໜ່ວງທາງສ່ວນຕົວ ຫຼື ຄອບຄົວ.
- ຜູ້ກະທຳຜິດທີ່ໄດ້ມີຄຸນປະໂຫຍດຕໍ່ປະເທດຊາດ.

➢ ການວາງໂທດໜັກ.

- ການກະທຳຄວາມຜິດບໍ່ເຂັດຫຼາບ.
- ການກະທຳຄວາມຜິດໂດຍມີການຈັດຕັ້ງເປັນກຸ່ມ.
- ການກະທຳຄວາມຜິດດ້ວຍຄວາມໂລກມາກໂລພາ.
- ການກະທຳຄວາມຜິດຕໍ່ເດັກ, ຄົນເຖົ້າ, ຜູ້ທີ່ບໍ່ສາມາດປ້ອງກັນຕົວເອງໄດ້.
- ການກະທຳຄວາມຜິດດ້ວຍການຍຸແຍ່ເດັກທີ່ຍັງບໍ່ທັນກະສຽນອາຍຸທຳຄວາມຜິດ.
- ການກະທຳຄວາມຜິດແບບໂຫດຮ້າຍ, ປ່າເຖື່ອນ ແລະ ປະຈານຜູ້ທີ່ຖືກກະທຳຜິດ.
- ການກະທຳຄວາມຜິດໂດຍການສວຍໂອກາດເວລາເກີດໄພພິບັດ.
- ການກະທຳຄວາມຜິດຍ້ອນເມົາເຫຼົ້າ ເມົາຢາເສບຕິດ.
- ການກະທຳຄວາມຜິດໂດຍການໃສ່ຮ້າຍປ້າຍສີຜູ້ອື່ນ.
- ການກະທຳຄວາມຜິດໂດຍການປົກປ້ອງຜູ້ທີ່ກະທຳຜິດ.

## ( ອ່ານເພີ່ມ )

## ກົດໝາຍອາຍາພາກສະເພາະ

### 1. ການກະທຳຜິດຕໍ່ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງ ຄົມ.

### 1.1. ເນື້ອໃນ.

ແມ່ນການຮ່ວມມືກັບຄົນຕ່າງປະເທດ ຫຼື ອົງການຈັດຕັ້ງຕ່າງປີເທດຂອງພົນລະເມືອງລາວເພື່ອເຄື່ອນໄຫວທຳລາຍມ້າງເພຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ. ຜົນປະໂຫຍດອັນໄຫຍ່ຫຼວງທາງດ້ານການເມືອງ, ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ເສດຖະກິດ ວັດທະນະທາ ແລະ ສັງຄົມຂອງ ສປປ ລາວ.

### 1.2. ອົງປະກອບການກະທຳຜິດ.

**ກ. ວັດຖຸກຳ :** ແມ່ນຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜົນປະໂຫຍດອັນໄຫຍ່ຫຼວງ ຂອງ ສປປ ລາວ.

**ຂ. ດ້ານພາວະວິໃສ :** ແມ່ນການກະທຳຜິດຕົວຈິງ ທີ່ໄດ້ກໍ່ຄວາມເສຍຫາຍແກ່ຄວາມເປັນເອກະລາດ ອຳນາດອະທິປະໄຕ ແລະ ຜົນປະໂຫຍດຂອງຊາດ ເຊັ່ນ : ອຳນວຍຄວາມສະດວກເຮືອນພັກເຊົ່າ, ບ່ອນປະຊຸມ, ພາຫະນະຮັບໃຊ້, ສິ່ງອາຫານ ຫຼື ຜູ້ເຂົ້າຮ່ວມລົງມືປະຕິບັດໂດຍກົງ ເຊັ່ນ : ຂຽນປ້າຍໂຄສະນາ ໃສ່ຮ້າຍປ້າຍສີຕ້ານ ສປປ ລາວ, ກໍ່ການຄາດຕະກຳຜູ້ນຳ ຫຼື ບຸກຄົນສຳຄັນອື່ນໆ.

### 1.3. ໂທດ.

ໂທດທີ່ກຳນົດ ໃນບັນດາມາດຕາຂອງກົດໝາຍອາຍາພາກສະເພາະ ກ່ຽວກັບການກະທຳຜິດຕ່າງໆຕໍ່ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ເຊິ່ງຍົກຕົວຢ່າງດັ່ງນີ້ :

- **ການທໍລະຍົດຕໍ່ຊາດ ( ມາດຕາ 51 ) :** ການກທຳຜິດຕໍ່ປະເທດຊາດບ້ານເມືອງ ໃນກໍລະນີນີ້ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ 10 ປີ ຫາ 20 ປີ, ຈະຖືກປັບໃໝແຕ່ 10,000,000 ກີບ ຫາ 500,000,000 ກີບ ອາດຈະຖືກຮິບຊັບຕາມມາດຕາ 32 ແລະ ອາດຈະຖືກຈຳກັດທີ່ຢູ່ ຫຼື ອິດສະຫຼະ ພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.
- **ການທຳລາຍມ້າງເພ ( ມາດຕາ 56 ) :** ບຸກຄົນໃດຫາກທຳລາຍມ້າງເພ, ຈູດເຜົາໂຮງງານ, ໂຮງ ງານ, ສຳນັກງານ, ອົງການ, ເສັ້ນທາງ, ພາຫະນະຄົມມະນາຄົມຂົນສົ່ງ, ສື່ສານ ແລະ ພື້ນຖານເສດຖະກິດ ອື່ນໆ ທີ່ສຳຄັນເພື່ອແນໃສເຮັດໃຫ້ລັດອ່ອນເພຍ ແລະ ເສດຖະກິດແຫ່ງຊາດຊຸດໂຊມ, ໄດ້ຫວ່ານຢາພິດເຄມີ ຫຼື ປ່ອຍເຊື້ອພະຍາດໃສ່ຄົນອື່ນ ຫຼື ຝູງສັດ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ 8 ປີ ຫາ 20 ປີ, ຈະ ຖືກປັບໄໝແຕ່ 5,000,000 ກີບ ຫາ 100,000,000 ກີບ. ອາດຈະຖືກຮິບຊັບຕາມມາດຕາ 32 ແລະ ອາດຈະຖືກຈາກັດທີ່ຢູ່ ຫຼື ອິດສະຫຼະ ພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.
- **ການໂຈລະກຳ ( ມາດຕາ 61 ) :** ບຸກຄົນໃດເຂົ້າໃນການຈັດຕັ້ງ ເປັນກຸ່ມປະກອບອາວຸດແລ້ວໂຈມຕີ, ທຳລາຍໂຮງຈັກ, ໂຮງງານ, ສຳນັກງານ, ອົງການຈັດຕັ້ງສັງຄົມ, ຈັບ ຫຼື ຂ້າພະນັກງານ, ປະຊາຊົນ ຫຼື ປຸ້ນເອົາຊັບສົມບັດຂອງລັດ, ລວມໝູ່, ຂອງບຸກຄົນ ກໍລະນີນີ້ຈະຖືກຕັດອິດສະຫຼະພາບແຕ່ 5 ປີ ຫາ20 ປີ, ຖືກປັບໄໝແຕ່ 5,000,000 ກີບ ຫາ 100,000,000 ກີບ ອາດຈະຖືກຮິບຊັບຕາມມາດຕາ 32 ແລະ ອາດຈະຖືກຈາກັດທີ່ຢູ່ ຫຼື ອິດສະຫຼະ ພາບຕະຫຼອດຊີວິດ ຫຼື ປະຫານຊີວິດ.

### 2. ການກະທຳຜິດຕໍ່ຊີວິດ, ສຸຂະພາບ ແລະ ກຽດສັກສີຂອງພົນລະເມືອງລາວ.

### 2.1. ເນື້ອໃນ :

ການກະທຳຜິດຂອງຜູ້ກະທຳຜິດ ທີ່ເຮັດໃຫ້ຜູ້ອື່ນເສຍຊີວິດ, ໄດ້ຮັບບາດເຈັບໂດຍເຈຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ ຫຼື ເຮັດໃຫ້ຜູ້ອື່ນເສຍກຽດສັກສີ, ຊື່ສຽງ ແລະ ບົດບາດໃນສັງຄົມ.

**2.2. ອົງປະກອບການກະທຳຜິດ.**

**ກ. ວັດຖຸກຳ :** ຊີວິດ, ສຸຂະພາບ, ກຽດສັກສີຂອງຄົນອື່ນ.

**ຂ. ດ້ານພາວະວິໄສ :** ການກະທຳ, ການເມີນເສີຍ, ຄວາມເວົ້າ ຫຼື ຂໍ້ຄວາມທີ່ຂຽນເປັນຕົວໜັງສື, ທີ່ເຮັດໃຫ້ຄົນອື່ນໄດ້ຮັບຄວາມເສຍຫາຍ ເຊັ່ນ : ການເສຍຊີວິດ, ໄດ້ຮັບບາດເຈັບ, ຂາດຄວາມໄວ້ເນື້ອເຊື່ອໃຈ, ຄວາມນັບຖືຈາກສັງຄົມ.

**ຄ. ດ້ານອັດຕະວິໄສ :** ໂດຍເຈດຕະນາ ແລະ ໂດຍຄວາມບໍ່ລະມັດລະວັງ.

**ງ. ເຈົ້າກຳ :** ແມ່ນບຸກຄົນທີ່ມີສະຕິສຳປະຊັນຍະ ແລະ ກະສຽນອາຍຸທາງອາຍາ.

**2.3. ໂທດ.**

- **ການຄາດຕະກຳ :** ບຸກຄົນໃດທີ່ເຮັດໃຫ້ຜູ້ອື່ນເສຍຊີວິດ, ໄດ້ຮັບບາດເຈັບໂດຍເຈຕະນາຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ 10 ປີ ຫາ 50 ປີ ຈະຖືກປັບໄໝ 1,000,000 ກີບ ຫາ 5,000,000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກເອົາການຄາດຕະກຳເປັນອາຈີນ, ຂ້າຄົນໂດຍມີແຜນການ, ຂ້າຄົນຢ່າງໂຫດຮ້າຍປ່າເຖື່ອນ, ຂ້າພະນັກງານທີ່ກຳລັງປະຕິບັດໜ້າທີ່, ຂ້າຫຼາຍຄົນ, ຜູ້ຍິງຖືພາ, ຂ້າເພື່ອປິດບັງການກະທຳຜິດຂອງຄົນອື່ນ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ 10 ປີ ຫາ 20 ປີ, ອາດຈະຈຳກັດທີ່ຢູ່ ຫຼື ຕັດອິດສະຫຼະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ ຈະຖືກປັບໄໝແຕ່ 2,000,000 ກີບ ຫາ 10,000,000 ກີບ.

- **ການທຳຮ້າຍຮ່າງກາຍ ( ມາດຕາ 83 ) :** ບຸກຄົນໃດຫາກທຳໃຫ້ຄົນອື່ນບາດເຈັບ ໂດຍເຈດຕະນາຈະຖືກລົງໂທດ ຕັດອິດສະຫຼະພາບ ແຕ່ 3 ເດືອນຫາ 1 ປີ ຈະຖືກປັບໄໝແຕ່ 100,000 ກີບ ຫາ 500,000 ກີບ.

ໃນກໍລະນີຫຸ້ນຕີ ຫຼື ກໍລະນີການກະທຳຜິດດັ່ງກ່າວຫາກໄດ້ເຮັດໃຫ້ມີການບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ 1 ປີ ຫາ 5 ປີ, ຈະຖືກປັບໄໝ 500,000 ກີບ ຫາ 1,500,000 ກີບ.

ກໍລະນີການກະທຳຜິດ ດັ່ງກ່າວຫາກໄດ້ເຮັດໃຫ້ມີການເສຍອົງຄະ ຫຼື ເສຍຊີວິດຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ 5 ປີ ຫາ 10 ປີ, ປັບໄໝ 500,000 ກີບ ຫາ 1,500,000 ກີບ.

- **ການປ້ອຍດ່າ ( ມາດຕາ 88 ) :** ຫາກບຸກຄົນໃດໃຊ້ວາຈາ, ຂຽນ ຫຼື ການກະທຳທີ່ຍາບຊ້າໃສ່ຄົນອື່ນເພື່ອໃຫ້ເສື່ອມເສຍກຽດສັກສີຢ່າງຮ້າຍແຮງຈະຖືກດັດສ້າງ ໂດຍບໍ່ຖືກຕັດອິດສະຫຼະພາບ ຫຼື ປັບໄໝແຕ່ 50,000 ກີບ ຫາ 300,000 ກີບ.

- **ການນິນທາ ແລະ ການໃສ່ຮ້າຍ ( ມາດຕາ 87 ) :** ບຸກຄົນໃດຫາກເຮັດໃຫ້ຜູ້ອື່ນເສຍກຽດສັກສີຢ່າງຮ້າຍແຮງ ດ້ວຍການຂຽນ, ການເວົ້າ ຫຼື ຮູບການອື່ນໆ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ 3 ເດືອນ ຫາ 1 ປີ ປັບໄໝ 50,000 ກີບ ຫາ 300,000 ກີບ.

ບຸກຄົນໃດຫາກໃສ່ຮ້າຍປ້າຍສີຄົນອື່ນ ໂດຍບໍ່ມີຄວາມຈິງດ້ວຍການຂຽນ, ການເວົ້າ ຫຼື ດ້ວຍຮູບການອື່ນໆ ເຊິ່ງເຮັດໃຫ້ຄົນອື່ນເສຍກຽດຢ່າງຮຸນແຮງ ຈະຖືກລົງໂທດຕັດອິດສະຫຼະພາບ ແຕ່ 3 ເດືອນ ຫາ 1 ປີ ປັບໄໝ 50,000 ກີບ ຫາ 300,000 ກີບ.

## 3. ການກະທຳຜິດຕໍ່ເສລີພາບຂອງພົນລະເມືອງ, ຕໍ່ກຳມະສິດຂອງລັດ ແລະ ລວມໝູ່.

### 3.1. ການກະທຳຜິດຕໍ່ສິດ ແລະ ເສລີພາບຂອງພົນລະເມືອງ.

**ກ. ເນື້ອໃນ.**

ແມ່ນພຶດຕິກຳທີ່ຝືນຕໍ່ສິດ ແລະ ເສລີພາບຂອງພົນລະເມືອງ ເຊິ່ງບົ່ງໄວ້ໃນກົດໝາຍອາຍາ.

**ຂ. ອົງປະກອບຂອງການກະທຳຜິດ.**

- **ວັດຖຸກຳ :** ແມ່ນສິດ ແລະ ເສລີພາບອັນຖືກຕ້ອງຂອງພົນລະເມືອງ ແລະ ຖືກລ່ວງລະເມີດດ້ວຍການກະທຳຜິດ ເຊັ່ນ : ການລ່ວງລະເມີດເຄຫະສະຖານ ແລະ ອື່ນໆ.

- **ດ້ານພາວະວິໄສ :** ການບັງຄັບ, ນາບຄູ່, ກີດຂວາງ ຫຼື ລວງສິດຂອງຜູ້ອື່ນ ເຊິ່ງເຮັດໃຫ້ບຸກຄົນອື່ນບໍ່ໄດ້ປະຕິບັດຕາມສິດ ແລະ ເສລີພາບອັນຖືກຕ້ອງຕາມກົດໝາຍຂອງຕົນເອງ, ຕົວຢ່າງ : ການເລືອກຕັ້ງ ຫຼື ຮັບສະ

ໝັກເລືອກຕັ້ງ.

**- ດ້ານອັດຕະວິໄສ :** ໂດຍເຈຕະນາ.

**- ເຈົ້າກຳ :** ແມ່ນບຸກຄົນທີ່ມີສະຕິສຳປະຊັນຍະ ແລະ ກະສຽນອາຍຸທາງອາຍາ.

**ຄ. ໂທດ.**

**- ການບັງຄັບ ( ມາດຕາ 90 ) :** ບຸກຄົນໃດຫາກບັງຄັບຜູ້ອື່ນໂດຍການໃຊ້ກຳລັງ ຫຼື ອາວຸດ ຫຼື ການນາບຂູ່ ເພື່ອໃຫ້ກະທຳ ຫຼື ບໍ່ໃຫ້ກະທຳໃນສິ່ງໃດສິ່ງໜຶ່ງທີ່ຕົນຕ້ອງການ ຈະຖືກຕັດອິດສະຫຼະພາບ ແຕ່ 3 ເດືອນ ຫາ 3 ປີ, ປັບໃໝແຕ່ 100,000 ກີບ ຫາ 1,000,000 ກີບ. ໃນກໍລະນີການບັງຄັບນັ້ນ ຫາກແມ່ນການຈີ້ລົດ ຫຼື ກຳປັ່ນ ຫຼື ຍົນ ຈະຖືກລົງໂທດຕັດອິດສະຫຼະພາບແຕ່ 3 ປີ ຫາ 10 ປີ, ປັບໃໝ 1,000,000 ກີບ ຫາ 50,000,000 ກີບ.

**- ການຂາຍຄົນ ຫຼື ລັກພາຕົວ ( ມາດຕາ 92 ) :** ບຸກຄົນໃດຫາກໄດ້ຂາຍຄົນ ຫຼື ລັກພາຕົວຄົນໄປ ເພື່ອເອົາຄ່າໄຖ່, ຂາຍ ຫຼື ອື່ນໆ ຈະຖືກຕັດອິດສະຫຼະພາບ ແຕ່ 5 ປີ ຫາ 15 ປີ, ປັບໃໝແຕ່ 5,000,000 ກີບ ຫາ 50,000,000 ກີບ.

**- ການລ່ວງລະເມີດເສລີພາບຂອງບຸກຄົນ ( ມາດຕາ 94 ) :** ບຸກຄົນໃດຫາກລະເມີດສິດເສລີພາບຂອງຜູ້ອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍດ້ວຍການໃຊ້ຄວາມຮຸນແຮງ, ການນາບຂູ່, ການໃຊ້ເອກະສານປອມ, ການປອມແປງເປັນເຈົ້າໜ້າທີ່ ຫຼື ວິທີການອື່ນໆ ຈະຖືກຕັດອິດສະຫຼະພາບ ແຕ່ 6 ເດືອນ ຫາ 2 ປີ, ປັບໃໝແຕ່ 300,000 ກີບ ຫາ 1,000,000 ກີບ.

**- ການຂັດຂວາງການເລືອກຕັ້ງ ຫຼື ການສະໝັກຮັບເລືອກຕັ້ງ ( ມາດຕາ 95 ) :** ບຸກຄົນໃດຫາກຂັດຂວາງການເລືອກຕັ້ງ ຫຼື ການສະໝັກຮັບເລືອກຕັ້ງຂອງພົນລະເມືອງເຂົ້າໃນສະພາປະຊາຊົນດ້ວຍການນາບຂູ່, ການຊື້ຈ້າງ ຫຼື ການຕົວະຈະຖືກຕັດອິດສະຫຼະພາບ ແຕ່ 3 ເດືອນ ຫາ 1 ປີ, ປັບໃໝແຕ່ 100,000 ກີບ ຫາ 1,000,000 ກີບ.

**3.2. ການກະທຳຜິດຕໍ່ກຳມະສິດຂອງລັດ ແລະ ລວມໝູ່.**

**ກ. ເນື້ອໃນ.**

ການລັກຊັບສິ່ງຂອງ ຂອງລັດ ຫຼື ລວມໝູ່ ແມ່ນການນຳເອົາຊັບສິ່ງຂອງ ຂອງລັດ ຫຼື ຂອງລວມໝູ່ມາເປັນຂອງຕົນເອງໂດຍທາງລັບ.

**ຂ. ອົງປະກອບການກະທຳຜິດ.**

**- ວັດຖຸກາ :** ແມ່ນກຳມະສິດຂອງລັດ ຫຼື ຂອງລວມໝູ່ກ່ຽວກັບຊັບສິ່ງຂອງຕ່າງໆ ເຊັ່ນ : ເງິນ, ລົດ ແລະ ອຸປະກອນອື່ນໆ.

**- ດ້ານພາວະວິໄສ :** ແມ່ນການນຳເອົາສິ່ງຂອງ ຂອງລັດ ຫຼື ຂອງລວມມາຢູ່ໃນການຄອບຄອງຂອງຕົນ.

**- ດ້ານອັດຕະວິໄສ :** ໂດຍເຈຕະນາ ເຊິ່ງເຈົ້າກຳຮູ້ດີວ່າຕົນເອງບໍ່ເປັນເຈົ້າກຳມະສິດໃນຊັບດັ່ງກ່າວ. ແຕ່ຕ້ອງການຢາກໄດ້ຊັບນັ້ນມາເປັນຂອງຕົນເອງ.

**- ເຈົ້າກາ :** ແມ່ນບຸກຄົນທີ່ມີສະຕິສຳປະຊັນຍະ ແລະ ກະສຽນອາຍຸທາງອາຍາ.

**ຄ. ໂທດ.**

**- ການປຸ້ນຊັບຂອງລັດ ຫຼື ລວມໝູ່ ( ມາດຕາ 98 ) :** ບຸກຄົນໃດຫາກໄດ້ໃຊ້ຄວາມຮຸນແຮງບຸກລຸກ ຫຼື ໄດ້ໃຊ້ການນາບຂູ່ໂດຍກົງຕໍ່ຊີວິດ ຫຼື ສຸຂະພາບຂອງຜູ້ອື່ນ ເພື່ອເອົາຊັບຂອງລັດ ຫຼື ລວມໝູ່ ຈະຖືກຕັດອິດສະຫຼະພາບ ແຕ່ 5 ປີ ຫາ 10 ປີ, ປັບໃໝແຕ່ 1,000,000 ກີບ ຫາ 10,000,000 ກີບ.

ໃນກໍລະນີຜູ້ກະທຳຜິດເປັນອາ ຈົນ, ມີການຈັດຕັ້ງເປັນກຸ່ມ, ເຮັດໃຫ້ຄົນອື່ນບາດເຈັບສາຫັດ ຫຼື ເສຍຊີວິດ ຫຼື ໃນກໍລະນີເສຍຫາຍຢ່າງຫຼວງຫຼາຍ ຈະຖືກຕັດອິດສະຫຼະພາບ ແຕ່ 10ປີ ຫາ 20 ປີ, ປັບໃໝແຕ່ 5,000,000 ກີບ ຫາ 20,000,000 ກີບ.

**- ການສໍ້ໂກງຂອງລັດ ຫຼື ລວມໝູ່ ( ມາດຕາ 100 ) :** ບຸກຄົນໃດໃຊ້ເລ້ລ່ຽມຕວະຍວະ ຫຼອກລວງດ້ວຍວິທີການໃດກໍ່ຕາມເພື່ອເຮັດໃຫ້ຜູ້ທີ່ຮັບຜິດຊອບຊັບຂອງລັດ ຫຼື ລວມໝູ່ ຫຼື ຜູ້ອື່ນເອົາຊັບມາໃຫ້ຕົນ ຈະຖືກຕັດອິດສະ ຫຼະພາບ ແຕ່ 6 ເດືອນ ຫາ 3 ປີ, ປັບໃໝແຕ່ 200,000 ກີບ ຫາ 7,000,000 ກີບ.

ໃນກໍລະນີຜູ້ກະທຳຜິດຫາກໄດ້ຍັກຍອກຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີເສຍຫາຍຈຳນວນຫຼາຍ ຈະຖືກຕັດອິດສະຫຼະພາບ ແຕ່ 3 ປີ ຫາ 7 ປີ, ປັບໃໝແຕ່ 5,000,000 ກີບ ຫາ 15,000,000 ກີບ.

**- ການຍັກຍອກຊັບຂອງລັດ ຫຼື ລວມໝູ່ ( ມາຕາ 101 ) :** ບຸກຄົນໃດຫາກສວຍໃຊ້ຄວາມເຊື່ອໃຈເພື່ອລັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຂອງລັດ ຫຼື ລວມໝູ່ທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ, ຂົນສົ່ງ, ກໍ່ສ້າງ, ສ້ອມແປງ ຫຼື ເຮັດວຽກໃດໜຶ່ງ ຈະຖືກຕັດອິດສະຫຼະພາບ ແຕ່ 6 ເດືອນ ຫາ 3 ປີ, ປັບໃໝແຕ່ 5,000,000 ກີບ ຫາ 15,000,000 ກີບ.

# ( ອ່ານເພີ່ມ )

# ປະເທດລາວ ແລະ ມູນເຊື້ອຂອງຄົນລາວ

## 1. ການກຳເນີດຂອງຊາດລາວ.

### 1.1 ສະພາບລວມທາງດ້ານພູມສາດ ແລະ ຊາດພັນວິທະຍາ

### ກ. ສະພາບພູມີສາດ

ສະພາບທາງດ້ານພູມີສາດຂອງຊາດລາວໃນອະດີດ ປະກອບໄປດ້ວຍແມ່ນ້ຳລຳເຊ, ຫ້ວຍຮ່ອງ, ທົ່ງຮາບແຄມແມ່ນ້ຳທີ່ຮາບສູງ, ໂຄກ, ພູສູງ ແລະ ທີ່ຮາບແຄບໆ ຕາມຮ່ອມພູສະຫຼັບສັບຊ້ອນກັນ. ທີ່ຮາບພຽງສ່ວນໃຫ່ຍຈະຂະໜານໄປກັບແມ່ນ້ຳຂອງເປັນຈຸດສຳຄັນ ແລະ ແມ່ນ້ຳໃຫ່ຍຕ່າງໆທີ່ເປັນເສັ້ນທາງຄົມມະນາຄົມ ເຊິ່ງບໍ່ແຕກຕ່າງໄປຈາກອະດີດຕະການ ເມື່ອຫຼາຍໝື່ນພັນປີ.

ເມື່ອ 200 ລ້ານປີກ່ອນນັ້ນ ນັກທໍລະນີສາດບອກວ່າ ລຸ່ມແມ່ນ້ຳຂອງແມ່ນພາກສ່ວນໜຶ່ງ ຂອງມະຫາທະວີບທີ່ມີຊື່ວ່າ “ ໂລກອາຊີ ” ໃນໄລຍະນັ້ນລະດັບນ້ຳທະເລສູງກວ່າປະຈຸບັນເຮັດໃຫ້ບໍລິເວນອ້ອມ ແອ້ມແມ່ນ້ຳຂອງຍັງຈົມຢູ່ໃຕ້ທະເລ ເຊັ່ນ : ໄທ, ຫວຽດນາມ, ກຳປູເຈຍ. ສະພາບດິນຟ້າອາກາດຂອງລຸ່ມແມ່ນ້ຳຂອງອົບອຸ່ນຊຸ່ມເຢັນ ເຊິ່ງເໝາະສົມແກ່ການດຳລົງຊີວິດຂອງພືດພັນສັດສາວາສິ່ງນາໆຊະນິດ ແລະ ບັນດາສັດສາວາສິ່ງທີ່ມີຊີວິດໃນຍຸກນັ້ນມີຫຼາຍຊະນິດ ເຊິ່ງປະຈຸບັນນີ້ໄດ້ສູນພັນໄປແລ້ວ ເຊັ່ນ: ຊາກໄດໂນເສົາຢູ່ເມືອງທ່າພະລານໄຊ ແຂວງສະຫວັນນະເຂດ.

### ຂ. ຊາດພັນວິທະຍາ

ໃນດ້ານມະນຸດວິທະຍາຢູ່ລ້ອງແມ່ນ້ຳຂອງກໍຄືປະເທດລາວ ໃນປັດຈຸບັນແມ່ນດິນແດນທີ່ປະກອບດ້ວຍຊົນເຜົ່າຕ່າງໆໃນອະດີດກໍ່ຄືປະຈຸບັນ, ໂດຍສະເພາະໃນແຖບປ່າເຂົາ ຍັງມີເຜົ່າພັນມະນຸດເກົ່າແກ່ ຫຼາຍເຜົ່າທີ່ສືບພັນມາຈາກມະນຸດເຜົ່າດັ່ງເດີມ ໃນສະໄໝຕົ້ນຂອງມະນຸດຊາດ ເຊັ່ນ: ພວກເຜົ່ານິກຣິໂຕໃນສະໄໝດຶກດຳບັນ ແລະ ຍັງມີເຜົ່າອື່ນໆທີ່ຄ້າຍຄືເຜົ່າອິນໂດເນເຊຍ ແລະ ຍັງຄົງຢູ່ໃນສະພາບທີ່ຂະຫຍາຍ ຕົວຊ້າ, ເມື່ອສັງຄົມຂະຫຍາຍຕົວ ແລະ ມີການອົບພະຍົບເຄື່ອນຍ້າຍເຮດໃຫ້ການປະສົມລະຫວ່າງເຜົ່າຕ່າງໆ ຈິ່ງກໍ່ໃຫ້ເກີດຄວາມສັບສົນໃນເລື່ອງເຊື້ອຊາດ, ພາສາ, ວັດທະນະທຳຂອງປະຊາຊົນໃນດິນແດນລຸ່ມ
ແມ່ນ້ຳຂອງຢ່າງວິຈິດພິສະດານທີ່ສຸດ ໝາຍຄວາມວ່າປະກົດມີສິ່ງໃໝ່ທີ່ແປກປະຫຼາດ ແລະ ສວຍງາມທີ່ສຸດເກີດຂຶ້ນ.

**1.2 ສັງຄົມມະຫາະຊົນປະຖົມບູຮານລາວ.**

ຢູ່ລຸ່ມແມ່ນ້ຳຂອງຕອນກາງ ນີ້ເປັນດິນແດນທີ່ມີສະພາບອາກາດດີ ແລະ ອຸດົມສົມບູນໄປດ້ວຍພືດພັນສັດສາວາສິ່ງນາໆຊະນິດ ເຊັ່ນ ເພິ່ນໄດ້ຄົ້ນພົບຊາກໄດໂນເສົາຢູ່ເມືອງທ່າພະລານໄຊ ແຂວງສະຫວັນນະເຂດ ເຊິ່ງມີອາຍຸໄດ້ 170 ລ້ານປີ. ເມື່ອປະມານ 5 ແສນປີ. ຜ່ານມາຢູ່ດິນແດນແຫ່ງນີ້ຍັງເປັນທາງຜ່ານຂອງມະນຸດຊາວາ ແລະ ມະນຸດປັກກິ່ງ. ນອກຈາກນີ້ ຢູ່ຖ້ຳພູເລີຍ ແຂວງຫົວພັນໄດ້ຄົ້ນພົບແຂ້ວບູຮານ ມີອາຍຸປະມານ 5 ແສນປີເຊິ່ງເປັນມະນຸດຈຳພວກລ່າສັດ, ຫາປາ, ເກັບພືດພັນຕາມທຳມະຊາດກິນເປັນອາຫານ, ມະນຸດພວກນີ້ມີວັດທະນະທຳໃກ້ຄຽງກັບວັດທະນະທຳຮວາປິງ ແລະ ດົງເຊີນຂອງຫວຽດນາມ. ດັ່ງນັ້ນ, ດິນແດນແມ່ນ້ຳຂອງຕອນກາງອັນເປັນເປັນເຂດແດນຂອງ ສປປລາວ. ປັດຈຸບັນຈຶ່ງເປັນດິນແດນທີ່ອຸ ດົມສົມບູນ ແລະ ເປັນທາງຜ່ານຂອງວັດທະນະທຳຕ່າງໆໃນແຕ່ລະໄລຍະຂອງປະຫວັດສາດດັ່ງນີ້:

**ກ. ສັງຄົມສະຫະຊົນປະຖົມບູຮານຕອງຕົ້ນ ຫຼື ຍຸກຫີນເກົ່າ**

ໃນລະຫວ່າງ 5 ແສນ - 20 ພັນປີກ່ອນ ຄ.ສ ມະນຸດສະໄໝນັ້ນດຳລົງຊີວິດຕາມທຳມະຊາດ ເຊັ່ນ: ຫາກິນດ້ວຍການລ່າສັດ, ເກັບພືດເປັນອາຫານ, ມີການເຄື່ອນຍ້າຍບ່ອນຢູ່ອາໄສ, ຢູ່ຕາມຖ້ຳ, ເຫຼົາຫີນໂກນໄມ້, ຮູ້ໃຊ້ກ້ອນຫີນເປັນອາວຸດ, ເລີ່ມຮູ້ໃຊ້ໄຟປຸງແຕ່ງອາຫານ, ປະດິດຄຳເວົ້າ ແລະ ງານສິລະປະຕາມຝາພະໜັງຖ້ຳ. ຮ່ອງຮອຍສະໄໝຫີນເກົ່າໄດ້ຄົ້ນພົບຢູ່ຫຼາຍບ່ອນ ໂດຍສະເພາະທີ່ແຂວງຫົວພັນ, ຊຽງຂວາງວັງວຽງ (ແຂວງວຽງຈັນ), ມະຫາໄຊ (ແຂວງຄຳມ່ວນ) , ຫຼວງພະບາງເຊັ່ນ: ທີ່ຖ້ຳຜາຊຽງທອງບ້ານຊຽງເຫຼັກ, ບ້ານໂພນເໜືອ, ບ້ານຜາໂຄມໄດ້ຄົ້ນພົບເຄື່ອງມືຍຸກຫີນເກົ່າລວມທັງເຄື່ອງມືທີ່ສ້າງຈາກກະດູກສັດ ເຊັ່ນ: ເບັດ, ສິ່ວ ແລະ ອື່ນໆ.

**ຂ. ສັງຄົມມະຫະຊົນປະຖົມບູຮານຕອງກາງ ຫຼື ຍຸກຫີນກາງ**

ໃນລະຫ່ວາງປະມານ 20 ພັນ - 8 ພັນປີກ່ອນ ຄສ, ຄົນໃນແຜນດິນລາວໃນສະໄໝນັ້ນໄດ້ວິວັດທະນາການສູ່ອີກລະດັບໜຶ່ງ ເຊັ່ນ: ນອກຈາກການລ່າສັດ, ເກັບພືດໝາກໄມ້ຕາມທຳມະຊາດກິນເປັນອາຫານແລ້ວ ຍັງຮູ້ຈັກຜະ ລິດອາຫານດ້ວຍການເລີ່ມຕົ້ໜການປູກ , ປະດິດເຄື່ອງນຸ່ງຫົ່ມ, ຮູ້ນຳໃຊ້ເຄື່ອງມືດ້ວຍຫີນແບບມີດ້າມຮູ້ໃຊ້ກະດູກ ເຂົາສັດເປັນອາວຸດ, ເລີ່ມຮູ້ຈັກຕັ້ງບ້ານເຮືອນກາງແຈ້ງ ແລະ ຖືລະບອບປະຊາທິປະໄຕ, ການປຸງອາຫານພາສາເວົ້າ ແລະ ວຽກງານສິລະປະກໍ່ຂະຫຍາຍເພີ່ມຂຶ້ນກວ່າເກົ່າ.

**ຄ. ສັງຄົມມະຫະຊົນປະຖົມບູຮານຕອນປາຍ ຫຼື ຍຸກຫີນໃໝ່.**

ໃນລະຫວ່າງ 8 ພັນ - 6 ພັນປີກ່ອນ ຄ.ສ ເຄື່ອງມືຫີນມະນຸດໃນສັງຄົມສະຫະຊົນປະຖົມບູຮານຕອນປາຍນີ້ໄດ້ຮັບການພັດທະນາສູງຂຶ້ນຄື ເປັນເຄື່ອງມືຫີນຝົນເພາະປະກົດມີຂວານຫີນປະເພດມີບ່າ, ມີຮູໃສ່ດ້າມ ມີປາຍແຫຼມຄົມເຊິ່ງປະຊາຊົນລາວບາງທ້ອງຖິ່ນເອີ້ນວ່າຂວານຟ້າ, ຂວານແຖນ, ຂວານນິກກາບ. ເຄື່ອງມືຫີນປະເພດທີ່ພົບທົ່ວໄປໃນແຜນດິນລຸ່ມແມ່ນ້ຳຂອງ ໂດຍສະເພາະຕັ້ງແຕ່ຍອດອູ ( ແຂວງ ຜົ້ງສາລີ ) ລົງຮອດຊຽງແຕງ ( ປະເທດກຳປູເຈຍ ) ແລະ ຕັ້ງແຕ່ລ້ອງແມ່ນ້ຳດຳ ສັນພູຫຼວງຮອດພູພະຍາໄຟ, ພະຍາພໍ່ ເຊິ່ງເອີ້ນວ່າແຜນດິນລາວບູຮານເປັນບໍ່ເກີດແຫ່ງສັງຄົມສະຫະຊົນປະຖົມບູຮານຕອນປາຍ. ເຄ່ອງມືຫີນຝົນດັ່ງກ່າວມີປະສິດທິພາບສູງກວ່າເຄື່ອງມືຫີນຕ່ອຍ ເພາະມັນເປັນອີງປະກອບອັນໜຶ່ງທີ່ເຮັດໃຫ້ວິຖີດຳລົງຊີວິດຂອງຄົນບູຮານ ມີການປ່ຽນແປງຈາກການລ່າສັດ, ເກັບຂອງປ່າຕາມທຳມະຊາດມາສູ່ການກະສິ ກຳລ້ຽງສັດຫາປາທີ່ມີເຕັກນິກສູງກວ່າເກົ່າ.

**1.3 ສັງຄົມເມືອງແບບກົກເຫຼົ່າ ຫຼື ຊົນເຜົ່າ**

ໃນຕອນທ້າຍ ຂອງຍຸກສະໄໝສັງຄົມຍຸກຫີນໃໝ່ຂະຫຍາຍຕົວສະຫຼັບສັບຊ້ອນຂຶ້ນ, ສັງຄົມສະຫະຊົບ

ແບບວົງຕະກຸນຂະຫຍາຍຕົວເປັນສັງຄົມຊົນເຜົ່າ ມີການນັບຖືຜີທຳມະຊາດ ໄດ້ກາຍເປັນການນັບຖືແບບບັນພະບຸລຸດ ວັດທະນະທຳຫີນໃໝ່ໄດ້ປະກົດຕົວຂຶ້ນ, ອຸປະກອນເຄື່ອງມືເຄື່ອງໃຊ້ໄດ້ພັດທະນາມາສູ່ໂລຫະ ແລະ ໜໍ່ແໜງຂອງສັງຄົມຂ້າທາດ ຫຼື ສັກດີນາໄດ້ເລີ່ມຕົ້ນປະກົດຕົວຂຶ້ນໃນສັງຄົມກົກເຫຼົ່າ.

ສັງຄົມຊົນເຜົ່ານີ້ເປັນລະບົບສັກດີນາເບື້ອງຕົ້ນ ຫຼື ເປັນການກຳເນີດຂອງລັດຄັ້ງທຳອິດ ທີ່ຂະຫຍາຍຕົວຈາກສະຫະຊີບວົງຕະກຸນ, ສັງຄົມຊົນເຜົ່າຈະດຳລົງຊີວິດແບບລວມໝູ່ໃນເຜົ່າພັນຂອງຕົນ ການເຝິກແອບໃຫ້ຮູ້ຈັກຊ່ວຍວຽກກັນ ໂດຍສະເພາະແມ່ນຢູ່ຕາມທົ່ງພຽງ, ຕາມຫ້ວຍນໍ້າລຳເຊ, ຮ່ອມພູທີ່ມີດິນອຸດົມສົມບູນມີບາງເທື່ອກໍ່ເກີດມີການຂັດແຍ່ງກັບເຜົ່າອື່ນໃນການເຄື່ອນໄຫວ ແລະ ຍາດເຂດທຳມາຫາກິນ. ດັ່ງນັ້ນ, ເພື່ອກຳນົດໃຫ້ຮູ້ວ່າໃຜເປັນຄົນເຜົ່າໃດນັ້ນໃນເວລາໃດພົບເຫັນກັນຈຶ່ງຕ້ອງໃຊ້ເຄື່ອງໝາຍປະ ຈຳຂອງຊົນເຜົ່າ ເຊິ່ງພວກເຂົາໄດ້ນຳໃຊ້ຮູບສັດຕ່າງໆ ເຊັ່ນ: ໝີ, ຊ້າງ, ເສືອ, ສິງ, ງູ, ນາກ...ເພື່ອຊີ້ບອກໃຫ້ຮູ້ວ່າເປັນພວກດຽວກັນ, ມີຄວາມເຊື່ອຖືກັນ ແລະ ເພື່ອຊ່ວຍເຫຼືອກັນ.

### 1.4 ສັງຄົມນະຄອນລັດ

#### ກ. ການກຳເນີດ ແລະ ການຂະຫຍາຍຕົວຂອງນະຄອນລັດລາວບູຮານ

ລະຫວ່າງຕົ້ນຂອງຄະລິດຕະສັງກາ ດແຜນດິນລຸ່ມແມ່ນໍ້າຂອງ ແມ່ນບ່ອນຢູ່ອາໄສຕົ້ນຕໍຂອງຄົນມອນຂອມ ແລະ ໄຕ, ໃນນີ້ຕົ້ນຕໍແມ່ນຄົນລາວ. ຊົນເຜົ່າລາວະຕັ້ງຖິ່ນຖານກອມເອົາບັນດາເຂດພູຜາບໍລິເວນທາງພາກເໜືອ ໂດຍສະເພາະແມ່ນບັນດາຮາບພຽງລຽບຕາມຕີນພູ, ຕີນຜາ ແລະ ລຍບຕາມແຄມແມ່ນໍ້າລຳເຊ.

ເບິ່ງຕາມສະພາບລວມຂອງທົ່ວບໍລິເວນອາຊີອາຄະເນຈະເຫັນວ່າ ໃນໄລຍະຕົ້ນຂອງຄະລິດຕະສັງກາດ ຫຼື ອາດຈະໄວກວ່ານັ້ນອີກ ໃນບໍລິເວນດິນແດນທີ່ເປັນຂອງລາວເຮົາປັດຈຸບັນນີ້ໂດຍສະເພາະແມ່ນລ້ອງແມ່ນໍ້າຂອງໄດ້ມີຊົນເຜົ່າຈຳນວນໜຶ່ງ ເຊິ່ງເປັນຕົວແທນໃຫ້ແກ່ຊາວໄຕຄື, ຊາວລື້ເມືອງສິງ, ອູໃຕ້, ອູເໜືອ ຫຼື ຊາວຜູ້ໄຕຢູ່ເຂດກາງ ແລະ ເຂດໃຕ້ຂອງລາວ. ພວກເຂົາຢູ່ຮ່ວມກັນກັບຊາວລາວ ແລະ ປະສົມຢູ່ກັບພາກສ່ວນໜຶ່ງຂອງຊົນເຜົ່າມອນ, ຂະແມໃນໄລຍະນັ້ນຊາວລາວຍັງມີບົດບາດຕົ້ນຕໍ ໃນເວທີຂອງຊົນເຜົ່າ.

#### ຂ. ນະຄອນລັດລາວບູຮານ

ໃນນະຄອນລັດລາວບູຮານ ໄດ້ມີນະຄອນລັດຕ່າງໆກະແຈກກະຈາຍ ຢູ່ທົ່ວໄປໃນດິນແດນລາວກໍ່ຄືລຸ່ມແມ່ນໍ້າ ຂອງເຊິ່ງມີບັນດານະຄອນລັດທີ່ສຳຄັນດັ່ງຕໍ່ໄປນີ້ ຊຽງແສນ, ເມືອງແຖນ, ເມືອງຊວາ, ເມືອງວຽງຈັນເມືອງຕະບອງເມືອງຮ້ອຍເອັດ, ເມືອງຈຳປານະຄອນ...ໃນແຕ່ລະເມືອງກໍ່ແມ່ນມີຜູ້ປົກຄອງ ຮອດປີ 1353 ເຈົ້າຟ້າງຸ່ມໄດ້ທ້ອນໂຮມເອົາບັນດາຫົວເມືອງຕ່າງໆເຂົ້າເປັນອານາຈັກລ້ານຊ້າງ ອັນເປັນຕົ້ນກຳເນີດຂອງຊາດລາວເຮົາ.

## 2. ມູນເຊື້ອຂອງຊາດລາວ ແລະ ຄົນລາວ.

ຊາດລາວເປັນຊາດທີ່ມີປະຫວັດອັນສະຫງ່າງາມໃນການກໍ່ຕັ້ງ, ປົກປັກຮັກສາ, ພັດທະນາປະເທດຊາດຂອງຕົນໃຫ້ເຕີບໃຫ່ຍ ແລະ ຍືນຍົງຄົງຕົວມາໄດ້ຫຼາຍພັນປີແລ້ວ.ຕະຫຼອດຂະບວນວິວັດດັ່ງກ່າວ ປະຊາຊົນລາວເຖິງວ່າຈະປະກອບມີຫຼາຍເຜົ່າຊົນ, ມີຜິວພັນແຕກຕ່າງກັນ ແລະ ມີລະດັບວັດທະນະທຳການດຳລົງຊີວິດຫຼຸດໂຕນກັນກໍ່ຕາມ ແຕ່ເຂົາເຈົ້າຮູ້ດີວ່າຕົນເອງລ້ວນແຕ່ເປັນລູກຫຼານຂອງມາຕຸພູມລາວຮ່ວມຊາ ຕາກຳອັນດຽວກັນຮູ້ຈັກອາໄສ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອການຄົງຕົວ ແລະ ຂະຫຍາຍຕົວຈົນເຖິງປັດຈຸບັນ.

### ກ. ບັນດາມູນເຊື້ອອັນພິລະອາດຫານຂອງຊາດລາວ, ຄົນລາວ.

- **ຄົນລາວມີມູນເຊື້ອອັນພິລະອາດຫານ, ເດັດຂາດບໍ່ຍອມຈຳນົນ**

ໃນປະຫວັດສາດຂອງຊາດເຮົາແມ່ນປະຫວັດສາດແຫ່ງການຕໍ່ສູ້, ປົກປັກຮັກສາ, ສ້າງສາປະເທດຊາດອັນຍືດເຍື້ອຍາວນານຢ່າງພິລະອາດຫານ, ທໍລະຫົດອົດທົນຕ້ານການຮຸກຮານ ແລະ ຄອບຄອງຂອງສັກດີນາຕ່າງປະເທດກໍ່ຄືພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່. ມາຮອດປະຈຸບັນນີ້ ຄົນລາວກໍ່ຍັງຮັກສາມູນເຊື້ອດັ່ງກ່າວນັ້ນຢ່າງໝັ້ນໜຽວດ້ວຍການປົກປ້ອງຜືນແຜ່ນດິນ ແລະ ອຳນາດອະທິປະໄຕຂອງຊາດ ກໍ່ຄືການຮັກສາຄວາມໝັ້ນຄົງຂອງລະບອບໃໝ່ໄວ້ຢ່າງໜັກແໜ້ນ.

- **ຄົນລາວເຜົ່າຕ່າງໆທີ່ມີມູນເຊື້ອສາມັກຄີປອງດອງມີຄວາມເອກະພາບກັນ**

ໃນຂະບວນວິວັດແຫ່ງການທ້ອນໂຮມປະເທດຊາດໃຫ້ເປັນເອກະພາບ ແລະ ເຮັດໃຫ້ວິງຄະນະຍາດແຫ່ງຊາດລາວເປັນຮູບຮ່າງຂຶ້ນມານັ້ນ, ບັນພະບຸລຸດຂອງພວກເຮົາໄດ້ສາມັກຄີກັນລຸກຂຶ້ນຕໍ່ສູ້ຢ່າງເນື່ອງນິດລຽນຕິດຕ້ານການຮຸກຮານ, ການຄອບຄອງ ແລະ ການແບ່ງແຍກຂອງພວກສັກດີນາຈັກກະພັດລ່າເມືອງຂຶນແບບເກົ່າ ແລະ ໃໝ່. ນັ້ນມັນສະແດງເຖິງຄວາມສາມັກຄີ ເປັນປຶກແຜ່ນໜາແໜ້ນໃນວິງຄະນາຍາດແຫ່ງຊາດ ເພື່ອປົກປັກຮັກສາຄວາມເປັນເອກະລາດໄວ້ຈົນຮອດເຊັ່ນລູກ - ຫຼານຂອງພວກເຮົາ.

ເຖິງແມ່ນວ່າປະເທດເຮົາເປັນປະເທດທີ່ມີຫຼາຍຊົນເຜົ່າ, ແຕ່ລະເຜົ່າກໍມີຮີດຄອງປະເພນີ, ມີຄວາມເຊື່ອຖື, ມີນິໄສໃຈຄໍແຕກຕ່າງກັນ ແລະ ມີລະດັບວັດທະນະທຳຫຼຸດໂຕນກັນແຕ່ຄົນລາວທັງຊາດພັດມີຈຸພິເສດລວມອັນນຶ່ງເປັນເອກະລັກຂອງວິງຄະນະຍາດແຫ່ງຊາດທີ່ເອກະພາບກັນຄື ເຜົ່າຕ່າງໆທີ່ຕິດພັນກັນຢ່າງສະໜິດແໜ້ນເຊິ່ງສະແດງອອກດັ່ງນີ:

- ເຜົ່າຕ່າງໆໃນທົ່ວປະເທດໄດ້ຮ່ວມມືກັນອາໄສຢູ່ໃນຜືນແຜ່ນດິນອັນດຽວກັນ, ໄດ້ຮ່ວມແຮງກັນປົກປັກຮັກສາ ແລະ ສ້າງສາປະເທດຊາດ, ມີຄວາມສາມັກຄີປອງດອງກັນກັນຢ່າງເປັນປຶກແຜນແໜ້ນໜາມາແຕ່ບູຮານນະການ.

- ເຜົ່າຕ່າງໆໃນທົ່ວປະເທດມີການດຳລົງຊີວິດສະຫຼັບສັບຊ້ອນກັນ, ບໍ່ມີເຜົ່າໃດເຜົ່າໜຶ່ງດຳລົງຊີວິດແບບໂດດດ່ຽວ ເປັນບໍລິເວນທີ່ກ້ວາງຂວາງ.

- ເຜົ່າຕ່າງໆໃນທົ່ວປະເທດມີພື້ນຖານວັດທະນະທຳສັງຄົມຮ່ວມກັນ, ເຖິງວ່າລະດັບການຂະຫຍາຍ ຕົວບໍ່ສະໝໍ່າສະເໝີກັນ ແຕ່ປະຊາຊົນບັນດາເຜົ່າຂອງພວກເຮົາກໍມີພື້ນຖານວັດທະນະທຳລວມຂອງຊາດ ເຊິ່ງແມ່ນການປະສານສົມທົບຢ່າງກົມກຽວກັນກັບສິ່ງຍອດຍິ່ງ ທາງດ້ານວັດທະນະທຳຂອງທຸກເຜົ່າ, ພາສາ ແລະ ຕົວໜັງສືລາວແມ່ນພາສາກາງເຊິ່ງແມ່ນຕົວໜັງສືປະຈຳຊາດຂອງທຸກເຜົ່າ. ແຕ່ວ່າແຕ່ລະເຜົ່າກໍຍັງຮັກສາພາສາປາກເວົ້າ ແລະ ຮີດ ຄອງປະເພນີທີ່ເປັນເອກະລັກຂອງເຜົ່າຕົນ.

- ກ້າວເຂົ້າສູ່ໄລໃໝ່ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ຄວາມສາມັກຄີປອງດອງຊາດ ດັ່ງກ່າວ ຍິ່ງນັບມື້ນັບເພີ່ມພູຄູນສ້າງໃຫ້ກາຍເປັນກຳລັງມະຫາສະມັກຄີ ໃນວິງຄະນະຍາດແຫ່ງຊາດທີ່ເປັນເອກະພາບ. ພັກເຮົາເຄີຍໄດ້ຕັກເຕືອນ ແລະ ສັ່ງສອນເລື້ອຍໆວ່າ "ສາມັກຄີມະຫາສາມັກຄີ, ໄຊຊະນະມະຫາໄຊຊະນະ" ຈົ່ງຮັກສາຄວວາມສາມັກຄີເໝືອນດັ່ງຮັກສາແກ່ນຕາຂອງຕົນເອງ.

- **ຄົນລາວມີຄວາມອົດທົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ດຸໝັ່ນໃນການອອກແຮງງານ**

ໃນປະວັຫັດສາດແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງຕົນນັ້ນ, ປະຊາຊົນພວກເຮົາໄດ້

ພົບຄວາມຫຍຸ້ງຍາກຕ່າງໆນາໆປະການ ນັບແຕ່ອະດີດເຖິງປັດຈຸບັນ ຄົນລາວແມ່ນມີຄວາມອົດທົນ, ບຸກບືນ, ສູ້ຊົນຜ່ານພາຂໍ້ຫຍຸ້ງຍາກໃນການທຳມາຫາກິນ ແລະ ມີຄວາມດຸໝັ່ນຂະຫຍັນພຽນ. ເຖິງຢ່າງໃດກໍດີ ເພື່ອລົບລ້າງຄວາມທຸກຍາກໃຫ້ໄດ້ ເພື່ອສ້າງໃຫ້ຄອບຄົວມີພໍກິນພໍໃຊ້, ຮັ່ງມີຂຶ້ນ ແລະ ເຮັດໃຫ້ປະເທດຊາດຫຼຸດຈາກຄວາມດ້ອຍພັດທະນານັ້ນ ພວກເຮົາຕ້ອງສູ້ ແລະ ເພີ່ມທະວີຄວາມດຸໝັ່ນຕື່ມອີກ.

- **ຄົນລາວມີມູນເຊື້ອປະດິດສ້າງທາງດ້ານສິລະປະ - ວັດທະນະທຳ**

ນັບຫຼາຍພັນປີຜ່ານມາບັນພະບຸລຸດຂອງຄົນລາວ, ປູ່ຍ່າຕາຍາຍຂອງພວກເຮົາໄດ້ສ້າງວິລະກຳທີ່ບໍ່ຕ່ຳຕ້ອຍໜ້ອຍໜ້າເພື່ອຖ່າຍທອດບົດຮຽນໃຫ້ແກ່ ເຊັ່ນລູກຫຼານຕໍ່ໆມາ ເຊິ່ງສະແດງອອກໃຫ້ເຫັນຄື :

- **ດ້ານເສດຖະກິດ**

- ແຕ່ບູຮານນະການຄົນລາວໄດ້ຂະຫຍາຍການກະສິກຳໂດຍການປູກຝັງ ແລະ ລ້ຽງສັດ, ໂດຍຖືເອົາການເຮັດໄຮ່ ເຮັດນາເປັນຕົ້ນຕໍ.
- ປະຊາຊົນບັນດາເຜົ່າໄດ້ສ້າງຫັດຖະກຳດ້ວຍສີມືອັນປານິດທີ່ມີຊື່ລືນາມ ເຊັ່ນ: ການຈັກສານ, ການປັ້ນໝໍ້ຫຼໍ່ໄຫ, ການຕ່ຳຫູກ, ມັດໝີ່, ການຄວັດລວດລາຍ, ການແກະສະລັກ, ຕີເງິນ, ຕີດາບ, ຕີຄຳງ້າວ, ຫອກ, ສິບໄຖ ແລະ ອື່ນໆ.

- **ດ້ານວັດທະນະທຳ**

ຍ້ອນປະເທດລາວຕັ້ງຢູ່ໃຈກາງຂອງອາຊີອາຄະເນ ເຊິ່ງເປັນແຫຼ່ງກຳເນີດຂອງມວນມະນຸດ, ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນ ແລະ ທັງເປັນເສັ້ນທາງຄົມມະນາຄົມແຫ່ງຊາດ. ສະນັ້ນ, ປະເທດລາວຈຶ່ງໄດ້ຮັບການກະທົບ ແລະ ຜົນສະທ້ອຍບໍ່ໜ້ອຍຈາກວັດທະນະທຳ, ອະລິຍະທຳອັນຊາລືມາແຕ່ສະໄໝດຶກດຳບັນໃນຂົງເຂດນີ້. ເຖິງຈະຢູ່ໃນທີ່ຕັ້ງ ແລະ ເງື່ອນໄຂຄືແນວນັ້ນກໍ່ຕາມ, ຊາດລາວເຮົາບໍ່ພຽງແຕ່ຄົງຕົວຢູ່ໄດ້, ແຕ່ຫາກຍັງສາມາດຂະຫຍາຍຕົວຮັກສາສີສັນດັ້ງເດີມຂອງຕົນໄວ້ໄດ້ ແລະ ຍັງສາມາດສ້າງວັດທະນະທຳ ທີ່ຮຸ່ງເຮືອງຂອງຕົນຂຶ້ນຫຼາຍໆຢ່າງ ເຊິ່ງແມ່ນຜົນຈາກການອອກແຮງງານ ແລະ ການດຳລົງຊີວິດຂອງເຂົາເຈົ້າ.

- **ຄົນລາວເປັນຄົນຍິ້ມແຍ້ມເບີກບານ ໂອບເອື້ອອາລີ ຊື່ສັດ ກະຕັນຍູ ແລະ ມີມູນເຊື້ອອັນດີງາມຂອງຊາດ**

ຄົນລາວເປັນຄົນທີ່ມັກສະຫງົບມັກຄວາມສັນຕິ, ມີຄວາມຍິ້ມແຍ້ມແຈ່ມໃສ່, ເບີກບານມ່ວນຊື່ນ, ມີຈິດໃຈກ້ວາງຂວາງ, ມີນ້ຳໃຈໄມຕີຈິດຕໍ່ເພື່ອນມິດ ແລະ ແຂກຄົນທີ່ມາຢ້ຽມຢາມ. ພ້ອມນັ້ນຍັງເປັນຄົນທີ່ມີຄວາມສຸພາບຮຽບຮ້ອຍ, ອ່ອນນ້ອມຖ່ອມຕົວ, ທັງມີຄວາມໂອບເອື້ອອາລີ, ມີຄວາມເຫັນໃຈຊ່ວຍເຫຼືອເຊິ່ງກັນ ແລະກັນມີຄວາມຈິງໃຈຮັກແພງ, ຮູ້ສຳມາຄາລະວະ ແລະ ມີຄວາມກະຕັນຍູຮູ້ບຸນຄຸນ.

ໝາກຜົນຂອງມູນເຊື້ອຄວາມສາມັກຄີພາຍໃນຊາດ, ການອອກແຮງງານ ແລະ ການປະດິດສ້າງໃນໄລຍະປະຫວັດສາດນັບເປັນພັນໆປີນັ້ນໄດ້ແກ່:

- ດິນດອນຕອນຫຍ້າ, ຫ້ວຍນ້ຳລຳເຊທີ່ແສນຮັກ ແລະ ຫວງແຫນ, ໄຮ່ນາຮົ້ວສ່ວນທີ່ຈະເລີນພັນ, ຖິ່ນຖານບ້ານຊ່ອງທີ່ສວຍສົດງົດງາມ ແລະ ແບບແຜນດຳລົງຊີວິດທີ່ສົດໃສ່

- ສະຖາປັດຕະຍາກຳ ແລະ ສິລະປະກຳອັນເປັນລັກສະນະຂອງຊາດ ເຊັ່ນ: ທາດຫຼວງ, ຫໍພະແກ້ວ, ວັດພູທາດອີຮັງ, ວັດຊຽງທອງດ ວັດພູສີ, ໄຫຫີນ...

- ວັດທະນະທຳທາງດ້ານຈິດໃຈທີ່ອຸດົມສົມບູນ ແລະ ຫຼາຍຮູບຫຼາຍສີຄື: ສະນຽງຄຳເວົ້າ, ຕົວອັກສອນ, ວັນນະຄະດີປະຊາລາດ, ສິລະປະທີ່ມີລັກສະນະມະຫາຊົນ, ດົນຕີ, ແບບຟ້ອນ, ການຂັບລຳຂອງແຕ່ລະເຜົ່າແຕ່

ລະທ້ອງຖິ່ນຄື: ລໍາລ່ອງຂອງ, ລໍາສີພັນດອນ, ລໍາສາລະວັນ, ລໍາຕັ່ງຫວາຍ, ລໍາພູໄທ, ລໍາມະຫາໄຊ, ຂັບງື່ມ, ຂັບທຸ້ມ, ຂັບພວນ, ຂັບຊໍາເໜືອ, ຂັບເຜົ່າມົ້ງ, ຂັບເຕີມເຜົ່າຂະມຸ...

## ຄໍາຖາມຄົ້ນຄວ້າ :

1. ການກະທໍາຜິດຕໍ່ຮ່າງກາຍຕ້ອງມີຄວາມຜິດສະຖານໃດ ?
2. ກົດໝາຍອາຍາປົກປ້ອງສິດ ແລະ ຜົນປະໂຫຍດຂອງໃຜ ?
3. ໂທດໝາຍເຖິງຫຍັງ ?
4. ການກະທໍາຜິດໝາຍຄວາມວ່າແນວໃດ ?
5. ຊາດລາວກໍາເນີດມາຈາກໃສ ?
6. ຈົ່ງບອກບັນດາຄວາມສາມະຄີຂອງປະຊາຊົນບັນດາເຜົ່າຂອງລາວ ?

# ບົດທີ 6

# ນະໂຍບາຍສັງຄົມ ແລະ ການແກ້ບັນຫາສັງຄົມ

## 1. ຄວາມໝາຍສໍາຄັນຂອງນະໂຍບາຍສັງຄົມ.

### 1.1. ຄວາມສາຄັນ.

ນະໂຍບາຍສັງຄົມແມ່ນນະໂຍບາຍທີ່ເລັງໃສ່ແກ້ໄຂບັນຫາຕ່າງໆທາງສັງຄົມດ້ວຍການດໍາເນີນມາດຕາການເພື່ອຕອບສະໜອງຜົນປະໂຫຍດທາງດ້ານວັດຖຸ ແລະ ຈິດໃຈຂອງສ່ວນບຸກຄົນ ແລະ ສ່ວນລວມ. ບັນຫາສັງຄົມ ແລະ ບັນຫາເສດຖະກິດຍິ່ງຂະຫຍາຍຕົວເທົ່າໃດ ຄວາມສາມາດໃນການແກ້ໄຂບັນຫາສັງຄົມກໍ່ຍິ່ງເພີ່ມຂຶ້ນເທົ່ານັ້ນ. ການແກ້ໄຂບັນຫາສັງຄົມໄດ້ດີຈະມີຄຸນປະໂຫຍດໃຫຍ່ຫຼວງຕໍ່ການພັດທະນາເສດຖະກິດ, ປົວແປງຊີວິດການເປັນຢູ່ຂອງປະຊາຊົນ, ປະກອບສ່ວນສໍາຄັນເຂົ້າໃນການສ້າງສະຖຽນນະພາບທາງດ້ານການເມືອງ - ສັງຄົມ ແລະ ການພັດທະນາລະບອບສັງຄົມໃຫ້ຂະຫຍາຍຕົວໄວ.

### 1.2. ນະໂຍບາຍສັງຄົມ.

ນະໂຍບາຍສັງຄົມແມ່ນນະໂຍບາຍທີ່ລັດວາງອອກ ເພື່ອປະຕິບັດການໂດຍເລັ່ງໃສ່ການສະແດງກັບການຮັບຮູ້ຜົນງານ ແລະ ຄຸນງາມຄວາມດີດ້ວຍການຕອບສະໜອງຜົນປະໂຫຍດທາງດ້ານວັດຖຸ ແລະ ຈິດໃຈ, ພ້ອມນັ້ນ ກໍ່ເລັ່ງໃສການແກ້ໄຂບັນຫາຕ່າງໆດ້ານສັງຄົມທີ່ຍັງຄົງຄ້າງເປັນຕົ້ນແມ່ນ :

- ແກ້ໄຂຄວາມທຸກຍາກຂອງປະຊາຊົນ.
- ການຮັບປະກັນຄວາມສະເໝີພາບ ແລະ ຄວາມຍຸດຕິທາຕໍ່ໜ້າກົດໝາຍ. ສະກັດກັ້ນການແຍກເປັນສອງຂົ້ວ ( ທຸກ, ຮັ່ງ ) ໃນສັງຄົມ.
- ການຮັບປະກັນໃຫ້ເດັກມີອາຍຸເກນຮຽນໄດ້ໜັງສື, ການຍົກລະດັບຄຸນະພາບຂອງການສຶກສາ ແລະ ອື່ນໆ.ການຮັບບໍລິການດ້ານການຮັກສາສຸຂະພາບ ແລະ ການປິ່ນປົວພະແບບບໍ່ເສຍຄ່າ ເຊັ່ນ : ການປອດຢາ ແລະ ສັກຢ່າກັນພະຍາດ ແລະ ພະຍາດຕິດແປດຕ່າງໆ
- ການຮັບເງິນເດືອນ, ເງິນເບ້ຍບານານ ແລະ ເງິນອຸດໜູນປະເພດຕ່າງໆ, ການສົງເຄາະ, ການຊ່ວຍເຫຼືອຜູ້ປ່ຽວພອຍ, ເດັກກໍາພ້າ, ອານາຖາ, ຜູ້ເສຍອົງຄະ ແລະ ອື່ນໆ
- ສົ່ງເສີມຄວາມສາມາດປະດິດສ້າງ ແລະ ພອນສະຫວັນຂອງຄົນ ເຊັ່ນ : ການໃຫ້ນາມມະຍົດ ແລະ ການສັນລະເສີນກຽດຕິຄຸນຂອງນັກປາດ, ນັກຄົ້ນຄວ້າວິທະຍາສາດ ແລະ ອື່ນໆ.
- ການໃຫ້ສິດ ແລະ ການອຸດໜູນພິເສດຕໍ່ນັກຣົບທີ່ແຂ່ງຂັນ, ວິລະຊົນແຫ່ງຊາດ, ວິລະຊົນແຮງງານ, ຜູ້ທີ່ສ້າງຄຸນງາມຄວາມດີ ແລະ ຜູ້ທີ່ມີຜົນງານອັນດີເດັ່ນຕໍ່ປະເທດຊາດ.
- ການສ້າງອາຄານບ້ານພັກ ແລະ ບ່ອນພັກຜ່ອນ, ພັກຟື້ນ ສໍາລັບພະນັກງານ, ການໃຫ້ພັກປະຈໍາປີ, ການໃຫ້ທັດສະນະສຶກສາ ແລະ ຍົກລະດັບຄວາມຮູ້.
- ການສົ່ງເສີມອາຊີບອິດສະຫຼະ ແລະ ຍົກລະດັບສີມືການຊ່າງ, ການຝຶກອົບຮົມວິຊາຊີບ, ຈາກການຫາວຽກ ແລະ ແກ້ໄຂບັນຫາໄພຫວ່າງງານ.

### 1.3. ການປະຕິບັດນະໂຍບາຍສັງຄົມ.

ການປະຕິບັດນະໂຍບາຍສັງຄົມ ເວລາໃດກໍ່ຂຶ້ນກັບຄວາມສາມາດຕົວຈິງທາງດ້ານເສດຖະກິດ - ການເງິນຂອງລັດ, ຖ້າຫາກເສດຖະກິດຍັງອ່ອນນ້ອຍ ແລະ ການເງິນຍັງເຂັ້ມແຂງ ( ບໍ່ທັນພຽງພໍ ) ການປະຕິບັດນະໂຍບາຍທາງສັງຄົມກໍ່ຈະຖືກຈໍາກັດ. ສະນັ້ນ, ການວາງນະໂຍບາຍສັງຄົມຕ້ອງອີງໃສ່ຄວາມສາມາດຕົວຈິງທາງດ້ານເສດຖະກິດ - ການເງິນ ຖ້າບໍ່ດັ່ງນັ້ນ, ນະໂຍບາຍທີ່ວາງອອກຈະບໍ່ໄດ້ຮັບການຈັດຕັ້ງປະຕິບັດເປັນຈິງ.

ການປະຕິບັດນະໂຍບາຍສັງຄົມ ແມ່ນວຽກງານລະອຽດອ່ອນທີ່ພົວພັນເຖິງຜົນປະໂຫຍດທາງດ້ານວັດຖຸກຽດສັກສີ ແລະ ແນວຄິດຈິດໃຈຂອງຄົນ. ສະນັ້ນ, ໃນເວລາປະຕິບັດຕ້ອງເອົາໃຈໃສ່ດັ່ງນີ້ :

- ກາແໜ້ນເປົ້າໝາຍທີ່ຈະໄດ້ຮັບນະໂຍບາຍ.
- ປະຕິບັດຖືກຕາມນະໂຍບາຍ ແລະ ລະບຽບຫຼັກການ.
- ຮັບປະກັນ ຄວາມຈະແຈ້ງ ປອດໃສ.
- ມີການຊີ້ແຈງອະທິບາຍໃຫ້ເຂົ້າໃຈຈະແຈ້ງ.

## 2. ໄພສັງຄົມ ແລະ ປະກົດການຫຍໍ້ທໍ້ໃນສັງຄົມ.

### 2.1 ຄວາມສໍານຶກກ່ຽວກັບໄພສັງຄົມ ແລະ ປະກົດການຫຍໍ້ທໍ້ໃນສັງຄົມ

ບັນຫາສັງຄົມ ແລະ ປະກົດການຫຍໍ້ທໍ້ໃນສັງຄົມເປັນອຸປະສັກຕໍ່ຄວາມໝັ້ນຄົງ ແລະ ການພັດທະນາປະເທດຊາດເອີ້ນວ່າ ໄພສັງຄົມ ເຊັ່ນ ບັນຫາຄວາມທຸກຍາກຂອງປະຊາຊົນ ບັນຫາດ້ອຍການສຶກສາ, ບັນຫາການລະບາດຂອງພະຍາດຕ່າງໆ, ບັນຫາການສໍ້ລາດບັງຫຼວງນັ້ນ, ບັນຫາໂສເພນີ, ບັນຫາຢາເສດຕິດ, ບັນຫາການໃຊ້ອໍານາດເຖື່ອນ ແລະ ເມີດກົດໝາຍບ້ານເມືອງ.

ຖ້າຫາກວ່າຢູ່ປະເທດໃດ ແລະ ສັງຄົມມີປະກົດການຫຍໍ້ທໍ້ຫຼາຍແຕ່ບໍ່ໄດ້ຮັບການແກ້ໄຂ, ປະເທດນັ້ນ ສັງຄົມນັ້ນຈະບໍ່ມີສະຖຽນລະພາບ ແລະ ຂາດຄວາມໝັ້ນຄົງອັກໜັກແໜ້ນເພາະວ່າປະກົດການຫຍໍ້ທໍ້ເຫຼົ່ານັ້ນທັງເປັນ ແລະ ທັງເປັນໄພຂົ່ມຂູ່ ຫຼື ເປັນສາເຫດທີ່ພາໃຫ້ເກີດຄວາມວຸ້ນວາຍ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ, ໃນທີ່ສຸດທີ່ຈະພາໃຫ້ລະບອບການເມືອງ - ການປົກຄອງຂອງປະເທດນັ້ນລົ້ມລະລາຍ.

ສະນັ້ນ, ການຈໍາກັດແກ້ໄຂປະກົດການຫຍໍ້ທໍ້ ແລະ ໄພສັງຄົມຈິ່ງແມ່ນແມ່ນໜ້າທີ່ສໍາຄັນອັນຈໍາເປັນເພື່ອແກ້ໄຂປະກົດການຫຍໍ້ທໍ້ ແລະ ໄພສັງຄົມໃຫ້ໄດ້ຈະຕ້ອງຮູ້ທີ່ມາ ແລະ ສາເຫດທີ່ແທ້ຈິງຂອງແຕ່ລະບັນຫາ. ການແກ້ບັນຫາທີ່ຕົ້ນເຫດນັ້ນຈະຊ່ວຍໄພສັງຄົມ ແລະ ປະກົດການຫຍໍ້ທໍ້ໃນສັງຄົມໝົດໄປເປັນກ່າວໆ.

### 2.2 ທິດທາງ ແລະ ມາດຕາການເພື່ອແກ້ໄຂ

ການແກ້ໄຂປະກົດການຫຍໍ້ທໍ້ ແລະ ໄພສັງຄົມ ຕ້ອງສົມທົບຫລາຍມາດຕະການໄປພ້ອມໆກັນ ເປັນຕົ້ນແມ່ນມາດຕະການສຶກສາອົບຮົມ ແລະ ມາດຕະການກົດໝາຍຈະປະອັນໃດໜຶ່ງກໍ່ບໍ່ໄດ້. ສະນັ້ນ, ພວກເຮົາໄດ້ປະຕິບັດຄື:

- ຄະນະພັກ, ອໍານາດການປົກຄອງທຸກຂັ້ນຕ້ອງມີທັດສະນະທ່າທີເດັດຂາດ ແລະ ມີຄວາມຮັບຜິດຊອບຕໍ່ວຽກງານ, ສະກັດກັ້ນ, ກໍາຈັດໄພສັງຄົມ ແລະ ປະກົດການຫຍໍ້ທໍ້ມີໂຄງການດໍາເນີນງານ ແລະ ມີແຜນການລະອຽດ ເພື່ອຈັດຕັ້ງນໍາພາເຮັດຢ່າງເປັນເຈົ້າການເນື່ອງນິດລຽນຕິດ, ທົ່ວໄປ ແລະ ມີຈຸດສຸມເພື່ອແກ້ໄຂແຕ່ລະບັນຫາ.
- ເອົາໃຈໃສ່ວຽກງານສຶກສາແນວຄິດຢ່າງເລິກເຊິ່ງ ເປັນປະຈໍາເປັນຕົ້ນແມ່ນອົບຮົມນໍ້າໃຈຮັກຊາດ, ຮັກລະບອບໃໝ່, ຮັກວັດທະນະທໍາປະເພນີອັນດີງາມຂອງຊາດ, ພ້ອມນັ້ນກໍ່ປຸກລະດົມມະຫາຊົນໃຫ້ຕື່ນຕົວເຂົ້າຮ່ວມຂະບວນການຕ້ານສິ່ງຫຍໍ້ທໍ້ ແລະ ໄພສັງຄົມ. ຢ່າງເອົາຈິງເອົາຈັງ ແລະ ກ້ວາງຂວາງສິ່ງສໍາຄັນແມ່ນການໂຄສະນາ ອະທິບາຍໃຫ້ປະຊາຊົນເຂົ້າໃຈກ່ຽວກັບໄພອັນຕະລາຍຂອງໄພສັງຄົມ, ປະກົດການຫຍໍ້ທໍ້ຕ່າງໆຕໍ່ຄົນຕໍ່ປະເທດຊາດ ຊີ້ແນະບອກວິທີການສະກັດກັ້ນ ແລະ ປະກອບສ່ວນແກ້ໄຂ.
- ສົມທົບແໜ້ນລະຫວ່າງການສຶກສາອົບຮົມການເມືອງແນວຄິດ ກັບ ມາດຕາການທາງດ້ານບໍລິຫານ, ຜູ້ໃດມີເຈດຕະນາກະທໍາຜິດ ແລະ ດື້ດ້ານ. ບໍ່ຍອມປຽນແປງເປັນຕົ້ນແມ່ນກໍລະນີທີ່ມີການລະເມີດລະບຽບກົດໝາຍນັ້ນຕ້ອງປະຕິບັດໂທດຕາມກົດໝາຍຢ່າງເຄັ່ງຄັດ. ພ້ອມນັ້ນກໍ່ອາດດໍາເນີນການດັດສ້າງ ຫຼື

ເອົາໄປສຶກສາອົບຮົມສົມທົບກັບການໃຫ້ອອກແຮງງານ ແລະ ເຝິກວິຊາຊີບ ເພື່ອໃຫ້ເຂົາສາມາດມີວິຊາຊີບທຳມາຫາກິນ ແລະ ດຳລົງຊີວິດຢ່າງຖືກຕ້ອງໃນສັງຄົມ.

- ບັນດາອົງການຄຸ້ມຄອງຂອງລັດທີ່ກ່ຽວຂ້ອງທຸກພາກສ່ວນ ຕ້ອງກວດກາຄືນລະບຽບ, ຂໍ້ກຳນົດ, ກົດໝາຍຕ່າງໆທີ່ມີແລ້ວ ເພື່ອດັດແປງເພີ້ມເຕີມ ແລະ ວາງອອກໃຫ້ຄົບຖ້ວນ. ພ້ອມນັ້ນກໍ່ຕ້ອງເພີ້ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດ ຄຸ້ມຄອງພະນັກງານລັດທະກອນຂອງຕົນໃຫ້ນກແໜ້ນ, ເປັນແບບຢ່າງໃນການຕ້ານສິ່ງຫຍໍ້ທໍ້ ແລະ ຈຳກັດແກ້ໄຂໄພສັງຄົມອັນໜຶ່ງຂອງການດຳເນີນຊີວິດ ໃນແຕ່ລະເດືອນຂອງອົງການລັດ, ມະຫາຊົນ, ການຈັດຕັ້ງສັງຄົມ ແລະ ໜ່ວຍພັກ.
- ຈັດຕັ້ງກິດຈະກຳ ແລະ ຂວນການຕ່າງໆທີ່ມີຫຼາຍຮູບຫຼາຍສີ. ປັບປຸງການເຄື່ອນໄຫວຂອງອົງການຈັດຕັ້ງຕ່າງຂອງສະມາຄົມມືອາຊີບ ແລະ ສະມັກຫຼິ້ນຂອງສະໂມສອນຕ່າງໆ ເພື່ອສ້າງເງື່ອນໄຂເຕົ້າໂຮມປະຊາຊົນບັນດາຊັ້ນຄົນໃນສັງຄົມ, ເປັນແມ່ນຊາວໜຸ່ມເພື່ອສ້າງສັນສິ່ງທີ່ເປັນປະໂຫຍໃຫ້ແກ່ສັງຄົມ ແລະ ປະໂຫຍດໃຫ້ແກ່ສັງຄົມ ແລະ ປະເທດຊາດ.
- ການຈັດຕັ້ງວັດທະນາທຳ ແລະ ອົງການຈັດຕັ້ງມະຫະຊົນຕ່າງໆນັບທັງນາຍໂຮ່ມ, ອົງການພຸດທະຊາດສະໜາ, ກໍ່ຄືຊັ້ນຄົນຕ່າງໆທີ່ຢູ່ຮາກຖານຕ້ອງເຄື່ອງໃຫວສຶກສາອົບຮົມ, ແນະນຳທາງສຽງສັງຄົມ, ຕຳນິວິຈານສິ່ງທີ່ຫຍໍ້ທໍ້ຢ່າງແຂງແຮງ ແນ່ໃສ່ສ້າງກຳລັງແຮງສັງລ້ອມໃນການສະກັດກັ້ນ, ຈຳກັດໄພສັງຄົມ ແລະ ສິ່ງຫຍໍ້ທໍ້, ພ້ອມນັ້ນກໍ່ໂຄສະນາປຸກລະດົມໃຫ້ທຸກຄົນໃນສັງຄົມ, ປະຕິບັດລະບຽບກົດໝາຍບ້ານເມືອງສ້າງສິ່ງທີ່ເປັນປະໂຫຍດແກ່ຄອບຄົວ, ຕົນເອງ ແລະ ບ້ານເມືອງ ຕົ້ນຕໍ່ນັ້ນແມ່ນຊຸກຍູ້ປຸກລະດົມໃຫ້ທຳມະຫາກິນຕາມລະບຽບກົດໝາຍດຸໜັ້ນຜະລິດສິນຄ້າ, ສ້າງລາຍໄດ້ໃຊ້ຄອບຄົວແກ້ໄຂຄວາມທຸກຍາກເຮັດໃຫ້ທຸກຄອບຄົວພໍຢູ່ພໍໃຊ້ແລະຮັ່ງມີຂຶ້ນ.

**2.3 ເພີ່ມທະວີຄວາມສາມາດໃນການພັດທະນາຊັບພະຍາກອນມະນຸດ ແລະ ການປະຕິບັດນະໂຍບາຍສັງຄົມ.**

- ສືບຕໍ່ເລັ່ງລັດ ແລະ ເພີ່ມທະວີຄວາມສາມາດໃນການພັດທະນາຊັບພະຍາກ່ອນມະນຸດ ເພື່ອສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີການສຶກສາ, ມີຄວາມຮູ້, ມີວິຊາຊີບ,ມີ ຄວາມສາມາດປະດິດສ້າງ ແລະ ມີຄວາມກະຕືລືລົ້ນຕໍ່ການພັດທະນາຕົນເອງໃຫ້ມີຄວາມຮູ້ຄວາມສາມາດ, ມີສຸຂະພາບ, ພາລະນາໄມສົມບູນດີມີຄຸນສົມບັດສິນທຳປອດໃສ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາປະເທດຊາດບ້ານເມືອງ.
- ພັດທະນາຊັບພະຍາກ່ອນມະນຸດ ໃຫ້ສອດຄອງກັບຍຸດທະສາດແຮງການພັດທະນາ ແລະ ໂຄງປະກອບເສດຖະກິດຂອງປະເທດ ກໍ່ຄືຄວາມຮຽກຮ້ອງຕ້ອງການຂອງການສົມຍົງເຂົ້າກັບສາກົນເພີ່ມຄວາມສາມາດດ້ານກໍ່ສ້າງຢູ່ພາຍໃນປະເທດຄຽງຄູ່ກັບການສົ່ງໄປສຶກສາຮ່ຳຮຽນ,ທັດສະນະສຶກສາ ແລະ ບຳລຸງຍົກລະດັບຢູ່ປະເທດ ດ້ວຍການຍາດແຍງທຶນຊ່ວຍເຫຼືອຈາກປະເທດເພື່ອນມິດສາກົນ ເພື່ອເຮັດໃຫ້ການພັດທະນາຊັບພະຍາກອນມະນຸດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໃນສະເພາະໜ້າ ແລະ ຍາວນານ, ສຸມການລົງທຶນເຂົ້າໃສ່ການຂະຫຍາຍຕາໜ່າງໂຮງຮຽນອາຊີວະສຶກສາ ໄປທົ່ວທຸກແຂວງ ແລະ ຕົວເມືອງເພື່ອກໍ່ສ້າງ ແລະ ເຝິກອົບຮົມຍົກລະດັບຂອງກຳມະກອນ,ນັກວາ ິຊາການ, ນັກບໍລິຫານ, ນາຍຊ່າງ, ນັກຄຸ້ມຄອງ,ນັກບໍລິການຜູ້ຈັດການ ແລະ ອື່ນໆ.
- ເອົາວຽກງານການສຶກສາເປັນວຽກງານຈຸດສຸມໃຈກາງ ຂອງການພັດທະນາຊັບພະກອນມະນຸດ ແລະ ຕ້ອງເພີ່ມການລົງທຶນຂອງລັດ ພ້ອມທັງມີນະໂຍບາຍ ແລະ ປຸກລະດົມການປະກອບສ່ວນຂອງສັງຄົມໃນການພັດທະນານັບມື້ນັບຫຼາຍຂຶ້ນ ຮີບຮ້ອນດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດ ໃຫ້ມີ

ຄຸນນະພາບ ແລະ ມາດຕາຖາດສູງຂຶ້ນເຮັດໃຫ້ການຂະຫຍາຍການສຶກສາບັງຄັບມີຜົນສຳເລັດ, ພ້ອມກັນນັ້ນ, ກໍຕ້ອງພັດທະນາຄວາມສາມາດໃນການຄົ້ນຄົວວິທະຍາສາດ ດ້ວຍການສ້າງຕັ້ງສະຖາບັນຄົ້ນຄົ້ວວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມ,ເລືອກເຟັ້ນ ແລະ ນຳໃຊ້ຜົນສຳເລັດຂອງການຄົ້ນຄວ້າ ເພື່ອຮັບໃຊ້ໃຫ້ແກ່ການພັດທະນາ, ເສດຖະກິດ-ສັງຄົມຂອງປະເທດໃຫ້ໄດ້ຫຼາຍຂຶ້ນ.

- ສືບຕໍ່ພັດທະນາຄົນທາງດ້ານຮ່າງກາຍ, ເຮັດໃຫ້ຄົນລາວມີສຸຂະພາບດີ ມີຄວາມເຂັ້ມແຂງທົນທານໃນການເຮັດວຽກງານ ດ້ວຍການສ້າງເງື່ອນໄຂໃຫ້ປະຊາຊົນໄດ້ຮັບການບໍລິການ ດ້ານສາທາລະນະສຸກດີຂຶ້ນຂະຫຍາຍຕາໜ່າງການບໍລິຫານ ແລະ ການກະຈາຍຈຳນວນແພດໝໍໄປສູ່ຊົນນະບົດ ຕິດແໜ້ນກັບການສຶກສາທາງດ້ານຈັນຍະທຳ ແລະ ນ້ຳໃຈຮັບໃຊ້ປະຊາຊົນຂອງຖັນແຖວຜູ້ປະຕິບັດງານໃນຂົງເຂດສາທາລະນະສຸກ, ປະຕິບັດນະໂຍບາຍທີ່ເສຍຄ່າ ແລະ ບໍ່ເສຍຄ່າສຳລັບແຕ່ລະເປົ້າໝາຍໃຫ້ຈະແຈງ, ເອົາໃຈໃສເປັນພິເສດຕໍ່ສຸຂະພາບຂອງແມ່ ແລະ ເດັກ ຊາວຜູ້ອອກແຮງງານ ແລະ ຜູ້ດ້ອຍໂອກາດ, ໂຄສະນາກ່ຽວກັບໂພສະນາການ, ການກິນຢູ່ທີ່ສະອາດ, ຖືກຫຼັກອະນາໄມ ແລະ ເປັນປະໂຫຍດຕໍ່ຮ່າງກາຍ, ຮັກສາສຸຂະພາບ, ຄຸ້ມຄອງ ແລະ ຄວບຄຸມຄຸນນະພາບຂອງອາຫານ ແລະ ຢາລ້ອມທັງຢາພື້ນເມືອງ ກໍຄືບໍລິຫານຕ່າງໆທີ່ກ່ຽວພັນເຖິງຊີວິດ ແລະ ສຸຂະພາບຂອງຄົນ, ດຳເນີນມາດຕະການປາບປາມການຜະລິດ - ຄ້າຂາຍ ແລະ ເສດສິ່ງເສບຕິດຢ່າງເຂັ້ມງວດແລະ ເດັດຂາດ.
- ຖືສຳຄັນການພັດທະນາທາງດ້ານຈິດໃຈກໍຄືດ້ານຈະລິຍະທຳ ແລະ ຄຸນສົມບັດ, ການສ້າງຊີວະພັດ ແລະ ໂລກະທັດທີ່ກ້າວໜ້າໄປພ້ອມໆກັບການສະກັດກັ້ນ ແກ້ໄຂການເຊື່ອຖືງົມງວາຍ, ສ່າງສັງຄົມເຮົາໃຫ້ເປັນສັງຄົມແຫ່ງພູມປັນຍາເຫື່ອລະກ້າວ.
- ສືບຕໍ່ນະໂຍບາຍປະຕິບັດສັງຄົມຕໍ່ຜູ້ທີ່ມີຄຸນງາມຄວາມດີໃນພາລະກິດປະຕິວັດປົດປ່ອຍຊາດ ກໍຄືພາລະກິດປົກຮັກສາ ແລ ພັດທະນາປະເທດຊາດໄປຄຽງຄູ່ກັບການປຸກລະດົມ ແລະ ພັດທະນາປະເທດຊາດໄປຄ້ຽງຄູ່ກັບການປຸກລະດົມຂະບວນການກະຕັນຍູ ຮູ້ບຸນຄຸນໃນທົ່ວສັງຄົມ ຕໍ່ວິລະຊົນແຫ່ງຊາດ, ຜູ້ມີຄຸນງາມຄວາມດີ ແລະ ມີຜົນງານດີເດັ່ນໃນພາລະກິດປະຕິວັດ, ກໍຄືການໃຫ້ການຊ່ວຍເຫຼືອສັງເຄາະແກ່ຄອບຄົວຍາກຈົນ-ປ່ຽວພອຍ ແລະ ອື່ນໆໃຫ້ເໝາະສົມ.

ຄຳຖາມຄົ້ນຄວ້າ :

1. ນະໂຍບາຍສັງຄົມແມ່ນໝາຍຄວາມວ່າແນວໃດ ?
2. ປະກົດການຫຍໍ້ທໍ້ຂອງສັງຄົມໝາຍຄວາມວ່າແນວໃດ ?
3. ວິທີແກ້ໄຂໄພສັງຄົມຄວນເຮັດແນວໃດ ?

# ( ອ່ານເພີ້ມ )

## ຄວາມສາມະຄີຂອງປະຊາຊົນບັນດາເຜົ່າແມ່ນພື້ນຖານແຫ່ງຄວາມໝັ້ນຄົງຂອງຊາດ

### 1. ຊາດລາວ ແລະ ເຜົ່າ.

**ກ. ຊາດລາວ :** ເປັນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານແຫ່ງການປົກປັກຮັກສາ ແລະ ສ້າງຊາດຂອງຕົນມູນເຊື້ອແຫ່ງການສ້າງຊາດ ແລະ ປົກປັກຮັກສາຊາດຂອງປະຊາຊົນລາວໄດ້ຮັບການສືບທອດຢ່າງຕໍ່ເນື່ອງ ແລະ ໄດ້ຮັບການເສີມຂະຫຍາຍຢ່າງແຂງແຮງ, ເປັນຕົ້ນແມ່ນນັບແຕ່ເຈົ້າຟ້າງຸ່ມ ວິລະບຸລຸດທີ່ປີ ຊາສາມາດໄດ້ເຕົ້າໂຮມນະຄອນລັດຕ່າງໆໃຫ້ເປັນອັນໜຶ່ງອັນດຽວ ແລະ ສະຖາປານາເປັນອານາຈັກລາວລ້ານຊ້າງ.



ຮູບພາບ 12 ພະຍາເຈົ້າຟ້າຫຼ້າທໍລະນີສີສັດຕະນາຮຸດ

☞ **ສະພາບພູມີສາດ**

ສະພາບທາງດ້ານພູມີສາດຂອງຊາດລາວໃນອະດີດ ປະກອບໄປດ້ວຍແມ່ນໍ້າລໍາເຊ, ຫ້ວຍຮ່ອງທົ່ງຮາບແຄມແມ່ນໍ້າທີ່ຮາບສູງ, ໂຄກ, ພູສູງ ແລະ ທີ່ຮາບແຄບໆ ຕາມຮ່ອມພູສະຫຼັບສັບຊ້ອນກັນ. ທີ່ຮາບພຽງສ່ວນໃຫຍ່ຈະຂະໜານໄປກັບແມ່ນໍ້າຂອງເປັນຈຸດສໍາຄັນ ແລະ ແມ່ນໍ້າໃຫຍ່ຕ່າງໆທີ່ເປັນເສັ້ນທາງຄົມມະນາຄົມ ເຊິ່ງບໍ່ແຕກຕ່າງໄປຈາກອະດີດຕະການ ເມື່ອຫຼາຍໝື່ນພັນປີ.

ເມື່ອ 200 ລ້ານປີກ່ອນນັ້ນ ນັກທໍລະນີສາດບອກວ່າ ລຸ່ມແມ່ນໍ້າຂອງແມ່ນພາກສ່ວນໜຶ່ງ ຂອງມະຫາທະວີບທີ່ມີຊື່ວ່າ “ ໂລກອາຊີ ” ໃນໄລຍະນັ້ນລະດັບນໍ້າທະເລສູງກວ່າປະຈຸບັນເຮັດໃຫ້ບໍລິເວນອ້ອມ ແອ້ມແມ່ນໍ້າຂອງຍັງຈົມຢູ່ໃຕ້ທະເລ ເຊັ່ນ: ໄທ, ຫວຽດນາມ, ກໍາປູເຈຍ. ສະພາບດິນຟ້າອາກາດຂອງລຸ່ມແມ່ນໍ້າຂອງອົບອຸ່ນຊຸ່ມເຢັນ ເຊິ່ງເໝາະສົມແກ່ການດໍາລົງຊີວິດຂອງພືດພັນສັດສາວາສິ່ງນາໆຊະນິດ ແລະ ບັນດາສັດສາວາສິ່ງທີ່ມີຊີວິດໃນຍຸກນັ້ນມີຫຼາຍຊະນິດ ເຊິ່ງປະຈຸບັນນີ້ໄດ້ສູນພັນໄປແລ້ວ ເຊັ່ນ: ຊາກໄດໂນເສົາຢູ່ເມືອງທ່າພະລານໄຊ ແຂວງສະຫວັນນະເຂດ.

☞ **ຊາດພັນວິທະຍາ**

ໃນດ້ານມະນຸດວິທະຍາຢູ່ລ້ອງແມ່ນ້ຳຂອງກໍຄືປະເທດລາວ ໃນປັດຈຸບັນແມ່ນດິນແດນທີ່ປະກອບດ້ວຍຊົນເຜົ່າຕ່າງໆໃນອະດີດກໍ່ຄືປະຈຸບັນ, ໂດຍສະເພາະໃນແຖບປ່າເຂົາ ຍັງມີເຜົ່າພັນມະນຸດເກົ່າແກ່ ຫຼາຍເຜົ່າທີ່ສືບພັນມາຈາກມະນຸດເຜົ່າດັ່ງເດີມ ໃນສະໄໝຕົ້ນຂອງມະນຸດຊາດ ເຊັ່ນ: ພວກເຜົ່ານິກຣິໂຕໃນສະໄໝດຶກດຳບັນ ແລະ ຍັງມີເຜົ່າອື່ນໆທີ່ຄ້າຍຄືເຜົ່າອິນໂດເນເຊຍ ແລະ ຍັງຄົງຢູ່ໃນສະພາບທີ່ຂະຫຍາຍຕົວຊ້າ, ເມື່ອສັງຄົມຂະຫຍາຍຕົວ ແລະ ມີການອົບພະຍົບເຄື່ອນຍ້າຍເຮດໃຫ້ການປະສົມລະຫວ່າງເຜົ່າຕ່າງໆ ຈິ່ງກໍ່ໃຫ້ເກີດຄວາມສັບສົນໃນເລື່ອງເຊື້ອຊາດ, ພາສາ, ວັດທະນະທຳຂອງປະຊາຊົນໃນດິນແດນລຸ່ມແມ່ນ້ຳຂອງຢ່າງວິຈິດພິສະດານທີ່ສຸດ ໝາຍຄວາມວ່າປະກົດມີສິ່ງໃໝ່ທີ່ແປກປະຫຼາດ ແລະ ສວຍງາມທີ່ສຸດເກີດຂຶ້ນ.

☞ **ສັງຄົມມະຫາະຊົບປະຖົມບູຮານລາວ.**

ຢູ່ລຸ່ມແມ່ນ້ຳຂອງຕອນກາງນີ້ເປັນດິນແດນທີ່ມີສະພາບອາກາດດີ ແລະ ອຸດົມສົມບູນໄປດ້ວຍພືດພັນສັດສາວາສິ່ງນາໆຊະນິດ ເຊັ່ນ ເພິ່ນໄດ້ຄົ້ນພົບຊາກໄດໂນເສົາຢູ່ເມືອງທ່າພະລານໄຊ ແຂວງສະຫວັນນະເຂດ ເຊິ່ງມີອາຍຸໄດ້ 170 ລ້ານປີ. ເມື່ອປະມານ 5 ແສນປີ. ຜ່ານມາຢູ່ດິນແດນແຫ່ງນີ້ຍັງເປັນທາງຜ່ານຂອງມະນຸດຊາວາ ແລະ ມະນຸດປັກກິ່ງ. ນອກຈາກນີ້ ຢູ່ຖ້ຳພູເລີຍ ແຂວງຫົວພັນໄດ້ຄົ້ນພົບແຂ້ວບູຮານ ມີອາຍຸປະມານ 5 ແສນປີເຊິ່ງເປັນມະນຸດຈຳພວກລ່າສັດ, ຫາປາ, ເກັບພືດພັນຕາມທຳມະຊາດກິນເປັນອາຫານ, ມະນຸດພວກນີ້ມີວັດທະນະທຳໃກ້ຄຽງກັບວັດທະນະທຳຮວາບິງ ແລະ ດົງເຊີນຂອງຫວຽດນາມ. ດັ່ງນັ້ນ, ດິນແດນແມ່ນ້ຳຂອງຕອນການອັນເປັນເປັນເຂດແດນຂອງ ສ ປ ປ ລາວ. ປັດຈຸບັນຈິ່ງເປັນດິນແດນທີ່ອຸ ດົມສົມບູນ ແລະ ເປັນທາງຜ່ານຂອງວັດທະນະທຳຕ່າງໆໃນແຕ່ລະໄລຍະຂອງປະຫວັດສາດດັ່ງນີ້:

☞ **ມູນເຊື້ອຂອງຊາດລາວ ແລະຄົນລາວ**

ຊາດລາວເປັນຊາດທີ່ມີປະຫວັດອັນສະຫງ່າງາມໃນການກໍ່ຕັ້ງ, ປົກປັກຮັກສາ, ພັດທະນາປະເທດຊາດຂອງຕົນໃຫ້ເຕີບໃຫ່ຍ ແລະ ຍືນຍົງຄົງຕົວມາໄດ້ຫຼາຍພັນປີແລ້ວ.ຕະຫຼອດຂະບວນວິວັດດັ່ງກ່າວ ປະ ຊາຊົນລາວເຖິງວ່າຈະປະກອບມີຫຼາຍເຜົ່າຊົນ, ມີຜິວພັນແຕກຕ່າງກັນ ແລະ ມີລະດັບວັດທະນະທຳການດຳລົງຊີວິດຫຼຸດໂຕນກັນກໍ່ຕາມ ແຕ່ເຂົາເຈົ້າຮູ້ດີວ່າຕົນເອງລ້ວນແຕ່ເປັນລູກຫຼານຂອງມາຕຸພູມລາວຮ່ວມຊາຕາກຳອັນດຽວກັນ, ຮູ້ຈັກອາໄສ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອການຄົງຕົວ ແລະ ຂະຫຍາຍ ຕົວຈົນເຖິງປັດຈຸບັນ.

**ຂ. <u>ເຜົ່າລາວ</u> :** ສ.ປ.ປ.ລາວ ເປັນປະເທດໜຶ່ງທີ່ມີພົນລະເມືອງບໍ່ຫຼາຍ ແຕ່ຊ້ຳພັດອຸດົມສົມບູນດ້ວຍສີສັນຂອງຊົນເຜົ່າ. ແຕ່ລະຊົນເຜົ່າມີປະຫວັດສາດມີຄວາມເປັນມາ, ພາສາປາກເວົ້າ ຮີດຄອງປະເພນີ ແລະ ການດຳລົງຊີວິດທີ່ຄ້າຍຄືກັນເປັນສ່ວນໃຫຍ່. ທຸກຊົນເຜົ່າລ້ວນແຕ່ໄດ້ສຳພັນກັນເປັນວົງຄະນະຍາດແຫ່ງຊາດ. ຜ່ານທຸກຍຸກທຸກສະໄໝ, ແຕ່ລະຊົນເຜົ່າລ້ວນ ແຕ່ໄດ້ຜ່ານການປະກອບສ່ວນຢ່າງສົມກຽດໃນການກໍ່ສ້າງ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ. ປະຊາຊົນລາວ ລ້ວນແຕ່ສ້າງວິລະກຳສ້າງຄຸນຄ່າຂອງຊາດອັນປະເສີດລ້ຳຄ່າຄື ນ້ຳໃຈຮັກຊາດອັນສູງສົ່ງ, ຄວາມສາມະຄີອັນແໜ້ນໜຽວ, ມີນ້ຳໃຈຕໍ່ສູ້ອັນພິລະອາດຫານ, ນ້ຳໃຈດຸໝັ່ນຂະຫຍັນພຽນບັນດາຊົນເຜົ່າຕ່າງໆເຊິ່ງມີລາຍລະອຽດດັ່ງນີ້ :

# ລາຍລະອຽດບັນດາເຜົ່າພາຍໃນລາວ :

| ລ/ດ | ຊື່ເຜົ່າ | ຊາຍ | ຍິງ | ລວມ | % |
|---|---|---|---|---|---|
| 1 | ລາວ | 1528269 | 1538736 | 3067005 | 54,6 |
| 2 | ໄຕ | 108257 | 106997 | 215254 | 3,8 |
| 3 | ຜູ້ໄທ | 91634 | 95757 | 187391 | 3,3 |
| 4 | ລື້ | 61100 | 61954 | 123054 | 2,2 |
| 5 | ຍວນ | 14493 | 14949 | 29442 | 0,5 |
| 6 | ຢັ້ງ | 3101 | 3059 | 6160 | 0,1 |
| 7 | ແຊກ | 1799 | 1934 | 3733 | 0,1 |
| 8 | ໄທເໜືອ | 7382 | 7417 | 14799 | 0,3 |
| | *ໝວດພາສາ* | 306875 | 639650 | 1269276 | 22,6 |
| 9 | ກຶມມຸ | 306875 | 307018 | 613893 | 10,9 |
| 10 | ໄປຣ | 10843 | 11079 | 21922 | 0,4 |
| 11 | ຊິງມູນ | 4354 | 4211 | 8565 | 0,2 |
| 12 | ຜ້ອງ | 13171 | 13143 | 26314 | 0,5 |
| 13 | ແທ່ນ | 248 | 266 | 514 | 0,0 |
| 14 | ເອິດູ | 329 | 320 | 649 | 0,0 |
| 15 | ບິດ | 1014 | 950 | 1964 | 0,0 |
| 16 | ລະເມດ | 9460 | 10367 | 19827 | 0,4 |
| 17 | ສາມຕ່າວ | 1761 | 1772 | 3533 | 0,1 |
| 18 | ກະຕາງ | 58366 | 59910 | 117876 | 2,1 |
| 19 | ມະກອງ | 57823 | 60019 | 117842 | 2,1 |
| 20 | ຕຣີ | 13130 | 13550 | 26680 | 0,5 |
| 21 | ຢຣຸ | 23009 | 24166 | 47175 | 0,8 |
| 22 | ຕຣຽງ | 14356 | 14778 | 29134 | 0,5 |
| 23 | ຕະໂອ້ຍ | 16156 | 16021 | 32177 | 0,5 |
| 24 | ແຢະ | 5274 | 5296 | 10570 | 0,2 |
| 25 | ເບຣົາ | 11134 | 11638 | 22772 | 0,4 |
| 26 | ກະຕູ | 11179 | 11580 | 22759 | 0,4 |
| 27 | ຮາຮັກ | 10449 | 10831 | 21280 | 0,4 |
| 28 | ໂອຍ | 11083 | 11375 | 22458 | 0,4 |
| 29 | ກຣຽງ | 6375 | 6504 | 12879 | 0,2 |
| 30 | ເຈັງ | 3699 | 3860 | 7559 | 0,1 |
| 31 | ສະດາງ | 467 | 471 | 938 | 0,1 |
| 32 | ຊ່ວຍ | 20792 | 22042 | 42834 | 0,8 |
| 33 | ຍະເຫີນ | 3430 | 3355 | 6785 | 0,1 |

| | | | | | |
|---|---|---|---|---|---|
| 34 | ລະວີ | 608 | 585 | 1193 | 0,0 |
| 35 | ປະໂກະ | 8242 | 8508 | 16750 | 0,3 |
| 36 | ຂະແມ | 2882 | 2943 | 5825 | 0,1 |
| 37 | ຕຸມ | 2252 | 2206 | 4458 | 0,1 |
| 38 | ງວນ | 339 | 383 | 722 | 0,0 |
| 39 | ມ້ອຍ | 277 | 257 | 534 | 0,0 |
| 40 | ກຣີ | 249 | 246 | 495 | 0,0 |
| | *ໝວດພາສາ* | 79833 | 79465 | 159298 | 2,8 |
| 41 | ອາຄາ | 45563 | 45135 | 90698 | 1,6 |
| 42 | ພູນ້ອຍ | 18554 | 18893 | 37447 | 0,7 |
| 43 | ລາຫູ | 7619 | 7619 | 15238 | 0,3 |
| 44 | ສີລາ | 1517 | 1422 | 2939 | 0,1 |
| 45 | ຮ່າຍີ | 427 | 421 | 848 | 0,0 |
| 46 | ໂລໂລ | 836 | 855 | 1691 | 0,0 |
| 47 | ຫໍ້ | 5317 | 5120 | 10437 | 0,2 |
| | *ໝວດພາສາ* | 241564 | 237831 | 479395 | 8,5 |
| 48 | ມົ້ງ | 227689 | 224257 | 451946 | 8,8 |
| 49 | ອິວມ່ຽນ | 13875 | 13574 | 27449 | 0,5 |
| **ລວມ** | | 3395330 | 3744695 | 7140025 | 100% |




ຮູບພາບ 13 ຊົນເຜົ່າລະແວ

ກ່ຽວກັບບັນຊີລາຍຊື່ຊົນເຜົ່າ ແລະຈຳນວນເຜົ່າທີ່ກ່າວມາຂ້າງເທິງນັ້ນ, ໃນກອງປະຊຸມ ສຳມະ ນາວິຊາການກ່ຽວກັບຊື່ເອີ້ນຊົນເຜົ່າ ແລະຈຳນວນເຜົ່າໃນສປປ.ລາວ, ທີ່ນະຄອນຫຼວງວຽງຈັນ,ໃນວັນ ທີ 9-10 ເດືອນຕຸລາປີ 2007, ເ ຊິ່ງແມ່ນກຳມາທິການບັນດາເຜົ່າ, ສະພາແຫ່ງຊາດໂດຍສົມທົບກັບກົມຊົນ ເຜົ່າ, ສູນກາງແນວລາວສ້າງຊາດ ແລະສະຖາບັນຄົ້ນຄວ້າຊົນເຜົ່າ ແລະສາສະໜາ, ສະຖາບັນວິທະຍາ ສາດສັງຄົມແຫ່ງຊາດຈັດຂຶ້ນ; ໂດຍມີຜູ້ແທນສະພາຝ່າຍກຳມາທິການບັນດາເຜົ່າແຕ່ລະເຂດ, ເຈົ້າກົກ ເຈົ້າເຫຼົ່າ, ຜູ້ຊົງຄຸນວຸດທິບາງຊົນເຜົ່າ ແລະ ບັນດາກະຊວງ, ທະບວງກົມທີ່ກ່ຽວຂ້ອງຈຳນວນໜຶ່ງກໍ່ໄດ້ ເຂົ້າຮ່ວມ. ຜ່ານກອງປະຊຸມດັ່ງກ່າວ, ໄດ້ມີຜົນສະຫຼຸບຄືດັ່ງນີ້:

1. ກອງປະຊຸມສຳມະນາເຫັນດີລົບລ້າງ ບັນດາຊື່ເອີ້ນຊົນເຜົ່າທີ່ມີຄວາມໝາຍດູຖູ ແລະ ດູໝິ່ນປະໝາດເຊິ່ງກັນ ແລະ ກັນໃນເມື່ອກ່ອນເຊັ່ນ: ຄຳວ່າ "ຂ້າ" ( ຂ້າສາມທາງ, ຂ້າແຂ້ວຕັດ,...) ແລະ ຄຳວ່າ " ແມ້ວ " ເປັນຕົ້ນ.

2. ກອງປະຊຸມສຳມະນາເຫັນດີລົບລ້າງຊື່ເອີ້ນ: ສາມຊົນຊາດໃນເມືອກ່ອນມາເປັນຊົນເຜົ່າ ເຊິ່ງປະຈຸບັນໃນສປປ.ລາວລວມ ມີ 49 ຊົນເຜົ່າ.

3. ກອງປະຊຸມສຳມະນາຕົກລົງເຫັນດີລົບລ້າງການນຳໃຊ້ວ່າ: ຊົນເຜົ່າສ່ວນຫຼາຍ, ຊົນເຜົ່າສ່ວນໜ້ອຍໃນເມື່ອກ່ອນມາເປັນຊົນເຜົ່າຈຳນວນຫຼາຍ,ຊົນເຜົ່າຈຳນວນໜ້ອຍ.

4.ຊື່ເອີ້ນຊົນເຜົ່າຊົງສີລີໃນເມື່ອກ່ອນປ່ຽນມາເປັນຊື່ເອີ້ນຊົນເຜົ່າພູນ້ອຍເໝືອນເດີມ.

5.ກອງປະຊຸມເຫັນດີເປັນເອກະພາບໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ຄົ້ນຄວ້າບັນດາເຜົ່າດັ່ງນີ້:

– ເຜົ່າເຄີ,ມູຈີ,ພູຊາງຢູ່ແຂວງຜົ້ງສາລີ.

– ເຜົ່າກົງສາດ ຢູ່ແຂວງອຸດົມໄຊ.

– ເຜົ່າກະໂດ, ກະໄນ, ຕົງ, ຢຶນຣ ຢູ່ແຂວງສາລາວັນ

– ເຜົ່າກະຢອງ ຢູ່ແຂວງອັດຕະປື.

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ VI ທີ່ນະຄອນຫຼວງວຽງຈັນ ຄັ້ງວັນທີ 24 ພະຈິກ 2008, ພາກສ່ວນທີ່ກ່ຽວຂ້ອງໄດ້ສະເໜີກ່ຽວກັບການກຳນົດ, ສັບຊ້ອນຊື່ ແລະ ຈຳ
ນວນຊົນເຜົ່າ ເຊິ່ງກອງປະຊຸມນີ້ໄດ້ຮັບຮອງຢ່າງເປັນເອກະພາບວ່າ ໃນ ສປປ.ລາວ ມີ 49 ຊົນເຜົ່າ.

**ສະຫຼຸບ.**

ກ່າວໂດຍສະຫຼຸບວ່າ ທີ່ຜ່ານມາ, ບັນດານັກຄົ້ນຄວ້າມະນຸດວິທະຍາໃນສາຫາລະນະ ລັດປະຊາ ທິປະໄຕປະຊາຊົນລາວ ຜ່ານການຈັດຫຼາຍຄັ້ງຫຼາຍຫົນມາເຖິງປະຈຸບັນໄດຢັ້ງຢືນວ່າ ມີ 49 ຊົນເຜົ່າ ທີ່ຢູ່ກະ ແຈກກະຈາຍຕາມພູມີປະເທດ, ມີບາງຊົນເຜົ່າຍັງຢູ່ເປັນກຸ່ມກ້ອນ,ບາງເຜົ່າກໍ່ຢູ່ສັບປົນກັນ, ເຜົ່າທີ່ມີພົນລະ ເມືອງຫຼາຍກ່ວາໝູ່ໄດ້ແກ່ບັນດາເຜົ່າໝວດພາສາລາວ-ໄຕ 8ຊົນເຜົ່າ ປະຈຸບັນມີປະຊາກອນ 3.646.838 ຄົນ ( ເທົ່າກັບ 64,9% ), ບັນດາເຜົ່າໝວດພາສາມອນ-ຂະແມ (32 ເຜົ່າ ) ມີປະຊາກອນ 1.269.276 ຄົນ (ເທົ່າກັບ 22,6%). ບັນດາເຜົ່າໝວດພາສາຈີນ – ຕິເບດມີປະຊາກອນ ( 7 ຊົນເຜົ່າ) 159.298 ຄົນ (ເທົ່າກັບ 2,8%), ບັນດາເຜົ່າໝວດພາສາມົ້ງ-ອີວມ່ຽນມີປະຊາກອນ 479.395 ຄົນ (ເທົ່າກັບ 8,5%).ພວກເຮົາເວົ້າໄດ້ວ່າ ນີ້ແມ່ນບັນຊີລາຍຊື່ຊົນເຜົ່າຢູ່ລາວ (49 ຊົນເຜົ່າ) ທີ່ຜ່ານການຈັດຢ່າງ ເປັນລະບົບມາ. ເຖິງແມ່ນວ່າບັນຊີລາຍຊື່ຊົນເຜົ່າດັ່ງກ່າວຍັງບໍ່ທັນປະກາດໃຊ້ຢ່າງເປັນທາງການກໍ່ຕາມ, ໃນແງ່ວິຊາການທາງມະນຸດວິທະຍາແລ້ວ ມັນເປັນຂໍ້ມູນທີ່ສຳຄັນເພື່ອອ້າງອີງໃຫ້ແກ່ການຈັດຊົນເຜົ່າໃນຂັ້ນຕໍ່ໄປ. ແນ່ນອນວ່າ ວັດທະນະທຳຂອງບັນດາເຜົ່າແມ່ນມີ ການປ່ຽນແປງຢູ່ຕະຫຼອດເວລາ, ລະຫວ່າງເຜົ່າກໍ່ມີການຮັບຜົນສະ ທ້ອນທາງດ້ານວັດທະນະທຳເຊິ່ງກັນແລະກັນຕະຫຼອດມາ, ຈາກນັ້ນ ຈຶ່ງເກີດມີການລວມຕົວ ແລະ ແຍກຕົວຂອງເຜົ່າຕ່າງໆ. ສະນັ້ນ, ການຈັດຊົນເຜົ່າໃນ ສປປ.ລາວ ຈຶ່ງເປັນວຽກງານທີ່ຄວນຈະໄດ້ສືບຕໍ່ຄົ້ນຄວ້າຢ່າງຈິງຈັງ ແລະ ຢ່າງພາວະວິໄສ. "

ວິວັດທະນາການແຫ່ງການຈັດຊົນເຜົ່າໃນ ສປປ.ລາວ ໂດຍ: ດຣ. ຄຳແພງ ທິບມູນຕາລີ ສະຖາບັນຄົ້ນຄວ້າຊົນເຜົ່າ ແລະ ສາສະໜາ ''

## 2. ຄວາມສຳຄັນ ຄວາມສາມະຄີທີ່ເປັນມູນເຊື້ອຂອງປະຊາຊົນບັນດາເຜົ່າ.

ການຂະຫຍາຍຕົວຂອງບັນດາເຜົ່າໃນລາວ ກໍ່ມີຈຸດພິເສດສະເພາະຕົວ ແຕ່ກໍ່ມີສາຍພົວພັນສາມະຄີທີ່ເປັນມູນເຊື້ອອັນດີງາມຂອງວິງຄະນະຍາດແຫ່ງຊາດອັນດຽວກັນມາຕັ້ງແຕ່ດົນນານແລ້ວ ເຊິ່ງສາຍພົວ ພັນ ແລະ ຄວາມສາມະຄີຊົນຊາດ - ຊົນເຜົ່າລາວໄດ້ສະແດງອອກໃນຫຼາຍດ້ານລຸ່ມນີ້ :

- ບັນດາເຜົ່າດຳລົງຊີວິດປົນເປກັນ, ບໍ່ມີຊົນເຜົ່າໃດແບ່ງຕົວອອກຢູ່ຢ່າງເອກະລາດ.
- ປະຊາຊົນສ່ວນຫຼາຍແມ່ນໃຊ້ພາສາລາວເປັນພາສາທາງການ ແລະ ວັດທະນະທຳອັນດຽວກັນແບບທຽບຖານ...ແຕ່ພ້ອມກັນນັ້ນກໍ່ຍັງມີບາງຊົນເຜົ່າພວມຢູ່ໃນໄລຍະເບື້ອງຕົ້ນແຫ່ງການສ້າງເປັນເຜົ່າ.
- ຢູ່ໃນປະຫວັດສາດລາວແມ່ນບໍ່ເຄີຍມີເຜົ່າໃດເຜົ່າໜຶ່ງທີ່ຈະຖືກກົດຂີ່ຂູດຮີດຂົ່ມເຫັງ ແລະ ບັງ ຄັບໃຫ້ຊົນເຜົ່າອື່ນທີ່ຕ້ອງຂຶ້ນກັບຕົນ, ແຕ່ກົງກັນຂ້າມທຸກໆຊົນເຜົ່າ ລ້ວນແຕ່ມີມູນເຊື້ອສາມະຄີກັນລຸກຂຶ້ນຕໍ່ຕ້ານການຮຸກຮານການແຊກແຊງຕະຫຼອດມາ.
- ວັດທະນະທຳລາວ ແມ່ນວັດທະນະທຳລວມຂອງບັນດາເຜົ່າທັງໝົດ, ພາສາລາວ ເປັນພາຫະນະໃນການປາກເວົ້າ, ປະຊາຊົນບັນດາເຜົ່າກໍ່ຍັງຮັກສາພາສາປາກເວົ້າ ແລະ ຮີດຄອງປະເພ ນີອັນດີງາມຂອງຊາດ ແລະ ເຜົ່າຕົນໄວ້.
- ຫຼາຍເຜົ່າໃນລາວຍັງມີການພົວພັນແບບໂຄດວົງເຊື້ອສາຍ ກັບ ຊົນເຜົ່າ ແລະ ບັນດາປະເທດໃກ້ຄຽງ.

## 3. ທິດທາງລວມ ແລະ ມາດຕາການສ້າງຄວາມສາມະຄີລະຫວ່າງເຜົ່າ.

### ກ. <u>ທິດທາງລວມ</u>.

ຄວາມສາມະຄີລະຫວ່າງຊົນເຜົ່າຕ່າງໆແມ່ນບັນດາພື້ນຖານກວ່າໝູ່ ແລະ ຕັດສິນການຢືນຍົງຄົງຕົວ ແລະ ຄວາມຈະເລີນກ້າວໜ້າຂອງຊາດ. ດັ່ງນັ້ນ, ພັກເຮົາຖືວ່າ ຄວາມສາມະຄີບັນດາເຜົ່າ, ຄວາມເປັນເອກະພາບເປັນອັນໜຶ່ງອັນດຽວຂອງຊາດແມ່ນບໍ່ເກີດແຫ່ງກຳລັງແຮງສັງລວມພາຍໃນຊາດ ແລະ ສາເຫດພື້ນຖານຕັດສິນໄຊຊະນະຂອງທຸກການປະຕິວັດ. ສະນັ້ນ, ທິດທາງລວມຂອງການສ້າງຄວາມສາມະຄີປອງດອງຂອງບັນດາເຜົ່າແມ່ນ :

- ເຄົາລົບ ແລະ ປະຕິບັດສິດສະເໝີພາບລະຫວ່າງເຜົ່າ, ໂດຍສ້າງໃຫ້ແຕ່ລະຊົນເຜົ່າໄດ້ເຂົ້າຮ່ວມພາລະກິດການປົກປັກຮັກສາ ແລະ ສ້າງສາປະເທດຊາດ.
- ສຶກສາອົບຮົມຊົນເຜົ່າຕ່າງໆ ໃຫ້ປະລະແນວຄິດຊົນເຜົ່າຄັບແຄບ, ແນວຄິດ ແລະ ການກະທຳທີ່ເປັນການໝິ່ນປະໝາດເຜົ່າອື່ນ ຫຼື ຕີຕົວຕໍ່າ, ບໍ່ຈຳແນກຊົນເຜົ່ານີ້ກັບຊົນເຜົ່າອື່ນ, ລົບລ້າງຄວາມອາຄາດບາດໝາງໃນແຕ່ລະເຜົ່າ ແລະ ລະຫວ່າງເຜົ່າຕ່າງໆ.
- ສືບຕໍ່ນະໂຍບາຍຕໍ່ຊາວລາວຢູ່ຕ່າງປະເທດ ທີ່ຍັງມີນໍ້າໃຈຮັກຊາດ ຮັກບ້ານເກີດເມືອງນອນ, ບໍ່ເປັນປໍລະປັກກັບລະບອບປະຊາທິປະໄຕ ປະຊາຊົນ.

### ຂ. ມາດຕະຖານຕົ້ນຕໍເພື່ອເພີ່ມທະວີຄວາມສາມະຄີລະຫວ່າງເຜົ່າ.

ວຽກງານຂອງຊົນເຜົ່າແມ່ນວຽກງານຂອງທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນ ແລະ ອຳນາດການປົກຄອງທຸກຂັ້ນ, ໃນນັ້ນແນວລາວສ້າງຊາດມີພາລະໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງເພື່ອເພີ່ມຄວາມສາມະຄີລະຫວ່າງເຜົ່າ. ດັ່ງນັ້ນ, ຕ້ອງສຸມໃສ່ວຽກງານ ແລະ ມາດຕະການດັ່ງນີ້ :

- ຫັນລົງສູ່ຮາກຖານປະຊາຊົນ, ສຶກສາແນວຄວາມຄິດການເມືອງໃຫ້ປະຊາຊົນບັນດາເຜົ່າຢ່າງເນື່ອງນິດລຽນຕິດ.

- ກໍາແໜ້ນຜູ້ເປັນຫຼັກແຫ່ງຜູ້ທີ່ມີບົດບາດໃນເຜົ່າ, ແຕ່ລະຊັ້ນຄົນເຕົ້າໂຮມຄວາມສາມະຄີທຸກຊົນເຜົ່າ, ຊັ້ນຄົນ, ສາສະໜາ ແລະ ເພດໄວໃນພື້ນຖານຄວາມເປັນເອກະພາບໃນອຸດົມການສັງຄົມນິຍົມ.

- ອະທິບາຍໃຫ້ປະຊາຊົນບັນດາເຜົ່າເຂົ້າໃຈຈະແຈ້ງເຖິງກົນອຸບາຍຂອງອິດທິກໍາລັງປໍລະປັກ ທີ່ຫວັງມາທັບມ້າງຄວາມສາມະຄີລະຫວ່າງເຜົ່າ. ເອົາໃຈໃສ່ສຶກສາແນວຄິດໃຫ້ປະຊາຊົນບັນດາເຜົ່າໂຮມຕຸ້ມ, ຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

- ປະຕິບັດນະໂຍບາຍແຕ່ລະຊັ້ນຄົນ ແລະ ອີງການຈັດຕັ້ງສັງຄົມ ໃນທ້ອງປະເທດໃຫ້ຂຸດຄົ້ນ ຄວາມອາດສາມາດບົມຊ້ອນຂອງເຂົາເຈົ້າດ້ານທຶນຮອນ, ສະຕິປັນຍາ ແລະ ປະສົບການອັນກ້າວ ໜ້າເຂົ້າມາໃນການພັດທະນາເສດຖະກິດສັງຄົມ.

- ປະຕິບັດນະໂຍບາຍສາສະໜາຢ່າງສະເໝີຕົ້ນ ສະເໝີປາຍ.

- ປຸກລະດົມໃຫ້ປະຊາຊົນທຸກຊົນເຜົ່າເຂົ້າຮ່ວມ ການປະຕິບັດໜ້າທີ່ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ.

- ປຸກລະດົມໃຫ້ປະຊາຊົນບັນດາເຜົ່າມີຄວາມກະຕືລືລົ້ນ, ດຸໝັ່ນ, ອົດທົນ ແລະ ປະຢັດມັດທະ ຍັດສາມະຄີກັນສ້າງບ້ານແປງເຮືອນພັດທະນາຕົນ ເພື່ອຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ.

- ຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວ ແລະ ການເຊື່ອຖືຂອງບັນດາເຜົ່າໃຫ້ໄປຕາມແນວ ທາງນະໂຍບາຍຂອງພັກ ແລະ ກົດໝາຍ. ສະກັດກັ້ນການສວຍໂອກາດໃນການໃຊ້ສາສະໜາ
ເພື່ອກໍ່ໃຫ້ເກີດບັນຫາໃນເຜົ່າ.

- ສ້າງພື້ນຖານໂຄງລ່າງເສດຖະກິດ ແລະ ວັດທະນະທໍາ - ສັງຄົມຢູ່ຊົນນະບົດ, ເຂດພູດອຍຊົນເຜົ່າເຊັ່ນ: ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ໄຟຟ້າ, ນໍ້າສ້າງນໍ້າລິນ, ໂຮງຮຽນ, ໂຮງໝໍ…

## ຄໍາຖາມຄົ້ນຄວ້າ :

4. ລັດທະທໍາມະນູນໝາຍຄວາມວ່າແນວໃດ ?
5. ບົດບາດຂອງລັດຖະທໍາມະນູນມີຄືແນວໃດ ?
6. ລັດຖະທໍາມະນູນມີໜ້າທີ່ຄືແນວໃດ ?
7. ຫຼັກການ ແລະ ເນື້ອໃນພື້ນຖານຂອງລັດຖະທໍາມະນູນເວົ້າເຖິງຫຍັງ ?

# ບົດທີ 7

# ການພົວພັນ ແລະ ການຮ່ວມມືສາກົນຂອງ ສປປ ລາວ

## 1. ລັກສະນະພົ້ນເດັ່ນ ແລະ ທ່າອ່ຽງການຮ່ວມມືສາກົນ.

ໃນໂລກຂອງພວກເຮົາມີປະເທດ ເຂດແຄ້ວນເປັນຈຳນວນຫຼວງຫຼາຍ ເຊິ່ງໃນນັ້ນສ່ວນໃຫຍ່ເປັນສະມາຊິກຂອງອົງການສະຫະປະຊາຊາດ. ປະເທດຕ່າງໆລ້ວນແຕ່ມີການຮ່ວມມືກັນບົນພື້ນຖານຫຼັກການພົວພັນ ແລະ ກົດໝາຍລະຫວ່າງປະເທດ ທີ່ປະຊາຊາດຮັບຮ້ອງເອົາ ອາດເວົ້າໄດ້ວ່າບໍ່ມີປະເທດໃດທີ່ປະຢູ່ໄດ້ຢ່າງໂດດດ່ຽວປາສະຈາກການພົວພັນ ແລະ ຮ່ວມມືກັບປະເທດອື່ນໆ ລັດທິວັດຖຸນິຍົມສັດຈະວິພາກໄດ້ຢັ້ງຢືນວ່າທຸກສິ່ງວັດຖຸ ແລະ ປະກົດການລ້ວນແຕ່ມີການພົວພັນເຊິ່ງກັນແລະກັນ,ບໍ່ມີວັດຖຸ ແລະ ປະກົດການໃດຄົງຕົວຢູ່ນອກການພົວພັນ, ເມື່ອກ້າວສູ່ສັດຕະວັດທີ 21 ໂລກໄດ້ມີການປ່ຽນແປ້ງອັນໃຫຍ່ຫຼວງຫຼາຍປະການ ເຊິ່ງການປ່ຽນແປ້ງດັ່ງກ່າວນັ້ນໄດ້ເຮັດໃຫ້ເກີດມີທ່າອ່ຽງລ້ວນ ແລະລັກສະນະພົ້ນເດັ່ນບາງຢ່າງດັ່ງນີ້ :

- ການຕໍ່ສູ້ເພື່ອສັນຕິພາບການເປີດກ້ວາງການພົວພັນຮ່ວມມື ເພື່ອການພັດທະນາຍັງເປັນທ່າອ່ຽງຕົ້ນຕໍ.
- ການແຂ່ງຂັນກັນ ແລະ ການຕໍ່ສູ້ເພື່ອຜົນປະໂຫຍດ ຍັງດຳເດີນໄປຢ່າງແຂງແຮງໄປພ້ອມໆກັນກັບການຮ່ວມມືກັນແບບສອງຝ່າຍ ແລະ ຫຼາຍຝ່າຍ ກໍ່ຄືການໂຮມມືດ້ານເສດຖະກິດ ເຊັ່ນ: ກຸ່ມສະຫະພາບຢູໂຣບ, ກຸ່ມອາຊຽນ, ກຸ່ມປະເທດອາເມຣິກາເໜືອ ຫຼື ໂຮມເຂົ້າເປັນເຂດການຄ້າເສລີ ເຊັ່ນ: ເຂດການຄ້າອາເມຣິກາເໜືອ ຫຼື (NAFTA), ເຂດການຄ້າເສລີອາຊຽນ (AFTA) ເຊິ່ງເອີ້ນວ່າການເຊື່ອມເຂົ້າກັນທາງດ້ານເສດຖະກິດ ຫຼື ວ່າໂລກາພິວັດທາງດ້ານເສດຖະກິດ ຫຼື ດ້ານເສດຖະກິດເປັນແບບທົ່ວໂລກ
- ການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ການປະດິດ, ຄົ້ນຄ້ວາສິ່ງໃໝ່ໆທຸກດ້ານ ຫຼື ເຕັກໂນໂລຢີດຳເນີນໄປຢ່າງວ່ອງໄວ ແລະ ກ້ວາງຂວາງແບບບໍ່ເຄີຍມີມາກ່ອນຄວາມຮູ້ ແລະ ສະຕິປັນຍານັບມືນັບມີຄຸນຄ່າສູງ ແລະ ສະຫງວນເປັນລິຂະສິດ, ສັງຄົມມີການປ່ຽນແປ້ງສູ່ສັງຄົມແຫ່ງປັນຍາຄວາມຮູ້ ແລະ ຂໍ້ມູນຂ່າວສານ.
- ຄວາມຂັດແຍ່ງບໍລະປັກລະຫວ່າງປະເທດຍັງມີຢູ່ ເຊິ່ງເປັນສາເຫດໃຫ້ເກີດສົງຄາມຮຸກຮານ. ສົງຄາມພາກສ່ວນ ແລະ ທ້ອງຖິ່ນ. ສົງຄາມເຊື້ອຊາດ, ສາສະໜາອາດຈະເກີດຂຶ້ນ, ບາງປະເທດຍັງສືບຕໍ່ປະຕິບັດເຈົ້າອຳນາດເພື່ອປົກປ້ອງ ແລະ ສະແຫວງຫາຜົນປະໂຫຍດໃຫ້ແກ່ຕົນເອງ ເຊັ່ນ: ໄປຮຸກຮານ, ແຊກແຊງ, ກົດໜີບປະເທດອື່ນ
- ການຕໍ່ສູ້ຂອງບັນດາປະຊາຊາດ ເພື່ອຄວາມເປັນເອກະລາດ ແລະ ສິດເປັນເຈົ້າຕົນເອງ, ເພື່ອຄວາມເປັນທຳໃນການພົວພັນຮ່ວມມືສາກົນ, ສ້າງບຽບໃໝ່ຂອງໂລກຂຶ້ນ ແລະ ຍັງຈະສືບຕໍ່ຢ່າງແຂ່ງແຮງ
- ລັດທິສັງຄົມນິຍົມ ຍັງເປັນອຸດົມການຂອງບັນດາປະຊາຊາດ, ບັນດາປະເທດສັງຄົມນິຍົມສືບຕໍ່ດຳເນີນການບູລະນະ ແລະ ກໍ່ສ້າງສັງຄົມນິຍົມໃຫ້ມີຜົນສຳເລັດມີຄວາມກ້າວໜ້າ ແລະ ທັນສະໄໝຍິ່ງຂຶ້ນ.

## 2. ສ ປປ ລາວ ໃນເວທີປະຊາຄົມໂລກ.

ພາຍຫຼັງການສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຊິ່ງເປັນປະເທດທີ່ມີເອກະລາດ, ມີອຳນາດປະທິປະໄຕ, ພັກເຮົາໄດ້ດຳເນີນນະໂຍບາຍການຕ່າງປະເທດ ທີ່ສອດຄ່ອງກັບສະພາບການຂອງໂລກ ແລະ ທ່າອ່ຽງຂອງຍຸກສະໄໝໃນແຕ່ລະໄລຍະຢ່າງສະເໝີຕົ້ນສະເໝີປາຍ ຍ້ອນມີແນວທາງທີ່ຖືກຕ້ອງ ແລະ ຍ້ອນການເຄື່ອນໄຫວດ້ານການຕ່າງປະເທດທີ່ຫ້າວຫັນ ສ.ປ.ປ ລາວ ເຮົາໄດ້ມີບົດບາດ, ມີຖານະສູງເດັ່ນໃນເວທີ

ປະຊາຄົມໂລກໂດຍສະເພາະແມ່ນ:

- ສ.ປ.ປ ລາວ ໄດ້ເຂົ້າເປັນສະມາຊິກຂອງ ສປຊ ໃນວັນທີ 14 ເດືອນ 12 ປີ 1955, ທັງເປັນສະມາຊິກຂອງອົງການເຄື່ອຄ່າຍ ແລະ ອົງການວິຊາສະເພາະຕ່າງໆຂອງສະຫະປະຊາຊາດຫຼາຍອົງການ ເຊັ່ນ ອົງການສະຫະປະຊາຊາດເພື່ອວິທະຍາສາດ ແລະ ວັດທະນະທຳ ຫຼື ອົງການອຸຍແນສໂກ, ອົງການອະນາໄມໂລກ, ອົງການປະຊາຊາດເພື່ອການພັດທະນາ, ອົງການສະຫະປະຊາຊາດເພື່ອແມ່ ແລະ ເດັກ, ທະນາຄານໂລກ ແລະ ອື່ນໆອີກມະຕິກອງປະຊຸມໃຫຍ່ສະໄໝທີ VI ຂອງສູນກາງພັກ ຍັງຢັ້ງຢືນຕື່ມອີກວ່າເສີມຂະຫຍາຍກຳລັງແຮງຂອງຊາດສົມທົບກັບກຳລັງແຮງຂອງຍຸກສະໄໝ ເພື່ອຍາດແຍ່ງເອົາການສະໜັບສະໜູນ ແລະ ການຊ່ວຍຫຼືອຈາກສາກົນຢ່າງມີຫຼັກການແມ່ນສິ່ງທີ່ຂາດບໍ່ໄດ້ສຳລັບການສ້າງສາພັດທະນາປະເທດຊາດ.

- ພາຍຫຼັງທີ່ເປັນຜູ້ສັງເກດການຂອງສະມາຄົມປະຊາຊາດອາຊຽນໃນປີ 1992 ສ.ປ.ປ ລາວ ກໍ່ໄດ້ເຂົ້າເປັນສະມາຊິກອາຊຽນຢ່າງສົມບູນໃນວັນທີ 23/07/1997 ແລະ ພວມກຽມເຂົ້າຮ່ວມໃນເຂດການຄ້າເສລີອາຊຽນ (AFTA)

- ສ.ປ.ປ ລາວ ຍັງເປັນປະເທດ ສະມາຊິກຂອງຂະບວນການບໍ່ຮ່ວມກຸ່ມຂອງອົງການບັນດາປະເທດທີ່ໃຊ້ພາສາຝຣັ່ງ, ເປັນສະມາຊິກກອງທຶນການເງິນລະຫວ່າງປະເທດ (IMF) ເປັນສະມາຊິກຂອງທະນາຄານພັດທະນາແຫ່ງເອເຊຍ(ADB)

- ສ.ປ.ປ ລາວມີການພົວພັນການທູດກັບບັນດາປະເທດ ແລະ ເຂດແຄ້ວນຫຼາຍປະເທດໃນໂລກໃນປັດຈຸບັນມີ 121 ປະເທດ (ປີ 2005 ).

- ສ.ປ.ປ ລາວ ສ້າງການພົວພັນຮ່ວມມືກັບບັນດາປະເທດ ແລະ ເຂດແຄ້ວນຕ່າງໆໃນໂລກດ້ວຍຫຼາຍລະດັບ ແລະ ຫຼາຍຂົງເຂດ ເຊັ່ນ: ຂົງເຂດເສດຖະກິດ,ການເມືອງ,ການທູດ,ການທະຫານ,ວັດທະນະທຳວິທະຍາສາດ, ກົດໝາຍ ແລະ ຂົງເຂດວິທະຍາສາດອື່ນໆອີກ ການພົວພັນຮ່ວມມືເຫຼົ່ານີ້ໄດ້ເຮັດໃຫ້ບັນດາປະເທດ ແລະ ອົງການຈັດຕັ້ງສາກົນຮູ້ເຖິງບົດບາດຂອງປະເທດເຮົາໃນເວທີປະຊາຄົມໂລກ.

- ສ.ປ.ປ ລາວ ໃຫ້ຄວາມສຳຄັນຕໍ່ການພົວພັນ ແລະ ຮ່ວມມືກັບສາກົນ ແມ່ນຄວາມຈຳເປັນພາວະວິໄສ ແລະ ມີຄວາມໝາຍຍຸດທະສາດສຳລັບການປົກປັກຮັກສາ ແລະ ພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດເຮົາ ເພາະວ່າການພົວພັນຮ່ວມມືຂອງ ສ ປ ປ ລາວ ກັບສາກົນມີຄວາມສຳຄັນ ສຳລັບການສ້າງເງື່ອນໄຂອັນອຳນວຍໃຫ້ແກ່ຄວາມໝັ້ນຄົງຂອງລະບອບການເມືອງກໍ່ຄື ການພັດທະນາເສດຖະກິດສັງຄົມຂອງປະເທດເຮົາລວມທັງການເຈືອຈານເຂົ້າກັບທ່າອ່ຽງ ລວມຂອງໂລກ ແລະ ພາກພື້ນ ຫຼີກເວັ້ນຈາກການຖືກໂດດດ່ຽວພ້ອມນັ້ນກໍເພື່ອປະຕິບັດຕາມທິດຊີ້ນຳຂອງພັກທີ່ວ່າ ເພີ່ມມິດ ຫຼຸດຜ່ອນສັດຕູ.ເຮັດໃຫ້ປະເທດເຮົາມີເພື່ອມິດທັງໃກ້ ແລະ ໄກທົ່ວໂລກນັບມື້ນັບຫຼາຍ,ສ້າງຄວາມເຂົ້າອົກເຂົ້າໃຈ ແລະ ຍາດແຍ່ງເອົາການສະໜັບສະໜູນຊ່ວຍເຫຼືອໃນຫຼາຍດ້ານຈາກປະເທດຕ່າງໆ ແລະ ອົງການສາກົນ ເພື່ອສ້າງໂອກາດໂຄສະນາເຜີຍແຜ່ແນວທາງປ່ຽນແປງໃໝ່ທີ່ຖືກຕ້ອງຂອງພັກໃຫ້ຊາວໂລກຮັບຮູ້.

- ເປັນສ້າງໂອກາດໃຫ້ປະເທດ ແລະ ປະຊາຊົນເຮົາໄດ້ຮູ້ຈັກປະເທດ ແລະ ປະຊາຊົນປະເທດອື່ນໆ ສາມາດແລກປ່ຽນບົດຮຽນ-ການຮຽນຮູ້ເຊິ່ງກັນ ແລະ ກັນ ອັນໄດ້ເຮັດໃຫ້ຄົນໃນຊາດໄດ້ບຸກບືນ ປັບປຸງຕົວເອງໃນທຸກດ້ານ ເພື່ອໃຫ້ປະເທດເຮົາຈະເລີນກ້າວໜ້າທຽບທັນປະເທດອື່ນ.

- ເພື່ອປະຕິບັດພັນທະສາກົນ ປະກອບສ່ວນຮ່ວມກັບບັນດາປະຊາຊາດ ໃນການຕໍ່ສູ້ ເພື່ອສັນຕິພາບ

ເອກະພາບແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

## 3. ບັນດາຫຼັກການພື້ນຖານ ແລະ ທິດທາງການຮ່ວມມືສາກົນ.

### ກ.ຫຼັກການແຫ່ງການພົວພັນສາກົນ

ໃນການພົວພັນສາກົນ ສ.ປ.ປ ລາວເວລາໃດກໍຍຶດໝັ້ນໃນຫຼັກການພື້ນຖານຄື:

- ຍຶດໝັ້ນໃນການເຄົາລົບເອກະລາດປະທິປະໄຕຂອງກັນ,ບໍ່ແຊກແຊງເຂົ້າວຽກພາຍໃນຂອງກັນຮ່ວມມືກັບແບບສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ.
- ສະໜັບສະໜູນການແກ້ໄຂກໍລະນີຂັດແຍ່ງ ແລະ ຂໍ້ຜິດພາດລະຫວ່າງປະເທດດ້ວຍສັນຕິວິທີ,ບໍ່ເຫັນດີນໍາການແກ້ໄຂດ້ວຍກໍາລັງອາວຸດ ຫຼື ການຂົ່ມຂູ່ດ້ວຍອາວຸດ ຂັດຄ້ານຕໍ່ການໃຊ້ຂໍ້ອ້າງຕ່າງໆ ເພື່ອແຊກແຊງເຂົ້າວຽກງານພາຍໃນ ຫຼື ຮຸກຮານປະເທດອື່ນ
- ສະໜັບສະໜູນການສ້າງລະບຽບການສາກົນໃໝ່ດ້ານການເມືອງ ແລະ ເສດຖະກິດທີ່ເປັນທໍາ ແລະ ສົມເຫດສົມຜົນ.ພ້ອມກັນນັ້ນ ສ.ປ.ປ ລາວຍັງຍຶດໝັ້ນໃນ 5 ຫຼັກການແຫ່ງການຮ່ວມກັນໂດຍສັນຕິໄດ້ແກ່:

  - ເຄົາລົບປະຕິປະໄປເຊິ່ງກັນ ແລະ ກັນ
  - ບໍ່ແຊກແຊງກິດຈະກໍາພາຍໃນເຊິ່ງກັນແລະກັນ
  - ສິດສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ
  - ຢູ່ຮ່ວມກັນໂດຍສັນຕິ
  - ບໍ່ຮຸກຮານເຊິ່ງກັນແລະກັນ

### ຂ.ຫຼັກການຂອງ ສ.ປ.ຊ ໃນການພົວພັນຮ່ວມມືສາກົນ

ນັບແຕ່ ສ.ປ.ຊ ໄດ້ສ້າງຕັ້ງຂຶ້ນໃນວັນທີ 24/10/1945 ສ.ປ.ຊ ໄດ້ວາງຫຼັກການຂອງຕົນອອກສໍາລັບການເຄື່ອນໄຫວປະຕິບັດວຽກງານໃຫ້ມີປະສິດຕິຜົນຄື :

- ຫຼັກການສະເໝີພາບທາງດ້ານສິດຜົນປະໂຫຍດ.
- ຫຼັກການຮັບປະກັນຜືນແຜ່ນດິນອັນຄົບຖ້ວນ ບໍ່ລວງລໍ້າຄວາມເປັນເອກະລາດ ປະທິປະໄຕຂອງການປະເທດອື່ນ.
- ຫຼັກການບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນແລະກັນ
- ຫຼັກການແກ້ໄຂຂໍ້ຜິດພາດໂດຍສັນຕິວິທີ.
- ຫຼັກການດໍາລົງຄົງຕົວຢູ່ຮ່ວມກັນແບບສະໜິດສະໜົມ.

### ຄ. ຫຼັກການຂອງອາຊຽນໃນການພົວພັນ ແລະ ຮ່ວມມື

ອາຊຽນສ້າງຕັ້ງຂຶ້ນເພື່ອສົ່ງເສີມຄວາມໝັ້ນຄົງຄວາມປອດໄພ ແລະ ການພັດທະນາຢູ່ຂົງເຂດອາຊີບອາຄະເນ, ອາຊຽນສ້າງຕັ້ງຂຶ້ນໃນວັນທີ 08/08/1967 ທີ່ບາງກອກ ປະເທດໄທ ໃນການເຄື່ອນໄຫວຂອງອາຊຽນແມ່ນອີງໃສ່ຫຼັກການຄື:

- ຫຼັກການເຄົາລົບເອກະລາດ,ປະຕິປະໄຕ ຄວາມສະເໝີພາບ,ຜືນແຜ່ນດິນທີ່ສ່ອດຄ່ອງກັນ ແລະ ຄວາມເປັນຊາດຂອງທຸກໆປະເທດ.

- ສິດທິຂອງທຸກໆລັດທີ່ຈະນຳພາປະເທດຊາດຂອງຕົນໃຫ້ມີອິດສະຫຼະ ປາສະຈາກການແຊກແຊງຈາກພາຍນອກ ການໂອລົ້ມ ຫຼື ຂົ່ມຂູ່
- ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະກັນ
- ແກ້ໄຂຄວາມບໍ່ລົງລອຍ ແລະ ຂໍ້ຂັດແຍ່ງໂດຍສັນຕິວິທີ
- ບໍ່ຂົ່ມຂູ່ ຫຼື ໃຊ້ກຳລັງ
- ຮ່ວມກັນຢ່າງມີປະສິດທິຜົນ.

**3.2 ທິດທາງໃນການຮ່ວມມືສາກົນຂອງ ສ.ປ ປ ລາວ**

ອີງໃສ່ຜົນສຳເລັດ ແລະ ບົດຮຽນໃນຂົງເຂດການຕ່າງປະເທດໃນໄລຍະຜ່ານມາ ແລະ ສ.ປ.ປລາວ ແລະ ເປີດກ້ວາງການພົວພັນຮ່ວມມືຕາມທິດທາງດັ່ງນີ້ :

- ຍຶດໝັ້ນໃນແນວທາງການຕ່າງປະເທດສັນຕິພາບ ແລະ ການຮ່ວມມື້ຢ່າງສະເໝີຕົ້ນສະເໝີປ້າຍ,ສົມທົບຢ່າງແໜ້ນໜ້າລະຫວ່າງການເຊີດຊູນ້ຳໃຈຮັກຊາດສະຕິເພິ່ງຕົນເອງ,ສ້າງຄວາມເຂັ້ມແຂງດ້ວຍຕົນເອງກັນການຍາດແຍ່ງເອົາກຳລັງແຮງ ແລະ ກາລະໂອກາດທີ່ເອື້ອອຳນວຍຂອງຍຸກສະໄໝ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລາກິດປົກປັກຮັກສາໝາກຜົນຂອງການປະຕິບັດ ສ້າງສາປະເທດຊາດກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມ,ເຊີດຊູບົດບາດຂອງ ສ.ປ.ປ ລາວໃນເວທີສາກົນຮ່ວມມື້ກັບປະຊາຊາດໃນທົ່ວໂລກເພື່ອສັນຕິພາບ,ເອກະລາດແຫ່ງຊາດ,ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ
- ສືບຕໍ່ຂັດແໜ້ນ ແລະ ເພີ່ມທະວີການຮ່ວມມື້ຮອບດ້ານກັບບັນດາປະເທດເພື່ອນມິດຍຸດຕະສາດ ໂດຍສະເພາະແມ່ນການສ້າງຊາຍພົວພັນພິເສດຮ່ວມມື້ຮອບດ້ານກັບ ສ.ສ ຫວຽດນາມ ແລະ ພົວພັນຮອບດ້ານກັບ ສ.ປ ຈີນ
- ເອົາໃຈໃສ່ຮັກສາ ແລະ ເສີ່ມຂະຫຍາຍການພົວພັນທີ່ດີຢ່າງປົກກະຕິ ແລະ ຮ່ວມມື້ທີ່ມີໝາກຜົນກັບບັນດາປະເທດໃກ້ຄຽງ ແລະອາຊຽນ,ສ້າງບັນຍາກາດແຫ່ງສັນຕິພາບ,ມິດຕະພາບ
- ສືບຕໍ່ເສີມຂະຫຍາຍການພົວພັນທີ່ດີ ແລະ ເປັນປົກກະຕິກັບບັນດາປະເທດສັງຄົມນິຍົມອື່ນໆ ອາດີດສະຫະພາບໂຊຫວຽດ ແລະ ປະເທດເອີຣົບຕາເວັນອອກ ຍາດແຍ່ງການຊ່ວຍເຫຼືອຈາກບັນດາປະເທດທີ່ມີລະດັບອຸດສາຫະກຳຂະຫຍາຍຕົວ ແລະ ອີຢູ (EU)
- ເພີ່ມທະວີຄວາມສາມັກຄີ ແລະ ຮ່ວມມື້ບັນດາປະເທດທີ່ບໍ່ຮ່ວມກຸ່ມ,ບັນດາປະເທດພວມພັດທະນາ
- ຕັ້ງໜ້າເຂົ້າຮ່ວມເຄື່ອນໄຫວຢ່າງເໝາະສົມຢູ່ອົງການ ສ ປ ຊ ແລະ ອົງການຈັດຕັ້ງສາກົນອື່ນໆ
- ຕັ້ງໜ້າເສີ່ມຂະຫຍາຍການພົວພັນກັບພັກການເມືອງຂອງປະເທດຕ່າງໆໆເປັນຕົ້ນແມ່ນພັກທີ່ກຳອຳນາດບົດພື້ນຖານເຄົາລົບປະໄຕເຊິ່ງກັນແລະກັນ

## ຄຳຖາມຄົ້ນຄວ້າ :

1. ຈົ່ງບອກລັກສະນະທີ່ພົ້ນເດັ່ນຂອງການຮ່ວມມືສາກົນຂອງ ສປປ ລາວ ?
2. ຈົ່ງບອກທິດທາງຂອງການຮ່ວມມືສາກົນຂອງ ສປປ ລາວ ?
3. ສ ປປ ລາວໃນປະຊາຄົມໂລກມີການເຄື່ອນໄຫວຫຍັງແດ່ ?

# ບົດທີ 8

## ຄວາມສາມະຄີແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງລາວ ກັບ ຫວຽດນາມ

### 1. ຄວາມເປັນມາ ແລະ ສາເຫດແຫ່ງຄວາມສາມະຄີພິເສດ.

ລາວ - ຫວຽດແມ່ນສອງປະເທດບ້ານໃກ້ເຮືອນຄຽງ, ຢູ່ໃນແຫຼມອິນດູຈີນ ປະຊາຊົນສອງປະເທດໄດ້ດາລົງຊີວິດຢູ່ຮ່ວມກັນມາດົນນານ, ຮ່ວມແມ່ນ້ຳລຳເຊ, ມີສາຍພູຫຼວງ ແລະ ຊາຍແດນຕິດຈອດກັນຍາວກວ່າ2000 ກິໂລແມັດ, ແຕ່ບູຮານປະຊາຊົນສອງປະເທດລາວ - ຫວຽດນາມໄດ້ມີຄວາມຜູກພັນ ແລະ ຊ່ວຍເຫຼືອເກື້ອກູນເຊິ່ງກັນ ແລະ ກັນດ້ວຍຄວາມຈິງໃຈຕະຫຼອດມາ.

ໃນທ້າຍສັດຕະວັດທີ19 ເຖິງກາງສັດຕະວັດທີ 20 ລາວ ແລະ ຫວຽດນາມ ໄດ້ຖືກຮຸກຮານຈາກສັດຕູຈົນເກືອບໜຶ່ງສັດຕະວັດ ປະຊາຊົນລາວ ແລະ ຫວຽດນາມ ໄດ້ລຸກຮື້ຂຶ້ນຕໍ່ສູ້ດ້ວຍຄວາມອົງອາດກ້າແກ່ນບໍ່ຍອມຈຳນົນພາຍໃຕ້ການນຳພາຂອງພັກທັງສອງ ແລະ ສາມາດຍາດເອົາໄຊຊະນະໄດ້ເປັນກ້າວໆມາ ໃນນັ້ນ, ປັດໃຈສຳຄັນແມ່ນຄວາມສາມະຄີປອງດອງຊ່ວຍເຫຼືອກັນລະຫວ່າງສອງຊາດລາວ - ຫວຽດນາມ ທີ່ຜ່ານຜ່າການຕໍ່ສູ້ຢ່າງລະອິດລະອ້ຽວ ແລະ ກາຍເປັນການຮ່ວມສຳພັນສູ້ຮົບແບບພິເສດ.

ພັກກອມມູນິດອິນດູຈີນຜູ້ໃຫ້ກຳເນີດພາຍການພົວພັນແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງລາວ - ຫວຽດນາມ ກອງປະຊຸມຄັ້ງທີໜຶ່ງຂອງຄະນະບໍລິຫານງານສູນກາງພັກກອມມູນິດອິນດູຈີນປີ 1930 ໄດ້ຢືນຢັນວ່າ ການປະຕິວັດຢູ່ແຕ່ປະເທດອິນດູຈີນບໍ່ສາມາດແຍກຕົວອອກຈາກກັນໄດ້ ອັນເນື່ອງຈາກຈຸດພິເສດທາງດ້ານປະຫວັດສາດ, ພູມສາດກໍ່ຄືເສດຖະກິດການເມືອງ.

ທ່ານ ໂຮ່ຈີ່ມິນ ຜູ້ກໍ່ຕັ້ງ ແລະ ນຳພາພັກກອມມູນິດອິນດູຈີນໄດ້ເປັນຄົນທຸງເຕົ້າໂຮມ, ສຶກສາອົບຮົມ ແລະ ຊຸບຫຼໍ່ໃຫ້ຈິດໃຈປະຊາຊົນລາວ ແລະ ຫວຽດນາມຜູກແໜ້ນຄວາມສາມະຄີຊ່ວຍເຫຼືອກັນບົນອຸດົມການ ແລະ ນ້ຳໃຈສາກົນກຳມະຊີບອັນຜ່ອງໃສ.

ປະທານ ໂຮ່ຈີ່ມິນ ໄດ້ສະແດງຄວາມຮູ້ສຶກຂອງເພິ່ນຕໍ່ມິດຕະພາບອັນຍິ່ງໃຫຍ່ ແລະ ການພົວພັນແບບພິເສດລາວ - ຫວຽດນາມ ເປັນຄາກອນອາມະຕະໄວ້ດັ່ງນີ້ :

'' ຮັກຫອມກັນໝາຍໝັ້ນ ຫຼາຍສັນພູກໍ່ປີ່ນໄຕ່
ຫຼາຍນ້ຳໃຫຍ່ ແລະ ໂຄກຄ້ອຍ ຂວາງຂັ້ນກໍ່ດຸ່ງໄປ
ສອງຊາດລາວ - ຫວຽດນາມໄດ້ ຝັງຄວາມຮັກຢູ່ໃນໃຈ
ຮົງຮາທັງແມ່ຂອງ ບໍ່ເລີກປຸນປານໃດ ''.

ປະທານ ໄກສອນ ພົມວິຫານ ຜູ້ທີ່ໄດ້ປະກອບສ່ວນກໍ່ຕັ້ງ ແລະ ເປັນຄົນທຸງຂອງມິດຕະພາບອັນຍິ່ງໃຫຍ່ຄວາມສາມະຄີລາວ - ຫວຽດນາມ ໄດ້ເນັ້ນໜັກວ່າ :

'' ມິດຕະພາບຖານອ້າຍນ້ອງ ແລະ ຄວາມສາມະຄີສູ້ຮົບໄດ້ເປັນຄືແກ້ວພິທູນ
ມູນມັງອັນລ້ຳຄ່າ, ພວກຂ້າພະເຈົ້າຈະຮັກສາມິດຕະພາບ
ຄວາມສາມະຄີດັ່ງກ່າວນັ້ນປະດຸດດັ່ງແກ້ວຕາຂອງຕົນ
ເດັດຂາດຈະບໍ່ໃຫ້ຜູ້ໃດຜູ້ໜຶ່ງມາທຳລາຍຜ່າມ້າງໄດ້ ''.

## 2. ພື້ນຖານທາງກົດໝາຍ ແລະ ທິດທາງການຮ່ວມມືຮອບດ້ານລະຫວ່າງ ສປປລາວ ກັບ ສາທາລະນະລັດສັງຄົມນິຍົມຫວຽດນາມ.

ເພື່ອເສີມຂະຫຍາຍມິດຕະພາບອັນຍິ່ງໃຫຍ່ ແລະ ຄວາມສາມະຄີແບບພິເສດໃນເງື່ອນໄຂໃໝ່, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ໄດ້ເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືກັນໃນວັນທີ 18/7/1977 ຢູ່ວຽງຈັນ.

ສົນທິສັນຍາດັ່ງກ່າວ ມີຄວາມສໍາຄັນແບບພິເສດກັບ ສປປ ລາວ ແລະ ສສ ຫວຽດນາມ ເພາະມັນເປັນພື້ນຖານທາງກົດໝາຍ ສໍາລັບການຮັບປະກັນການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືຮອບດ້ານລະຫວ່າງປະເທດໃຫ້ມີຄວາມສັກສິດ ແລະ ມີປະສິດທິພາບຕອບສະໜອງຜົນປະໂຫຍດ ແລະ ຄວາມມຸ້ງມາດປາດຖະໜາຂອງປະຊາຊົນທັງສອງປະເທດ.

### ຄໍາຖາມຄົ້ນຄວ້າ :

1. ສາເຫດທີ່ມີການຮ່ວມມືແບບພິເສດລາວ - ຫວຽດນາມມີຄືແນວໃດ ?
2. ພື້ນຖານກົດໝາຍແຫ່ງການພົວພັນລະຫວ່າງລາວ - ຫວຽດນາມມີຄືແນວໃດ ?
3. ຈົ່ງບອກຄໍາກອນທີ່ທ່ານ ໂຮ່ຈິມິນ ໄດ້ກ່າວໄວ້ກັບຊາດລາວ ແລະ ຫວຽດນາມ ?

# ບົດທີ 9

# ຄວາມຮູ້ກ່ຽວກັບພັກປະຊາຊົນປະຕິວັດລາວ

### 1. ທາດແທ້ຂອງ ພັກ ສ ປ ປ ລາວ

ໄຊຊະນະຂອງມະຫາປະຕິວັດສັງຄົມນິຍົມ ຕຸລາ 1917 ຢູຣັດເຊຍ ພາຍໃຕ້ການນຳພາຂອງ ທ່ານ ເລນິນ ໄດ້ໄຂສັງກາດໃໝ່ໃຫ້ແກ່ມວນມະນຸດອອກຈາກແອກປົກຄອງຂອງພວກລ່າເມືອງຂຶ້ນ, ສັງກາດແຫ່ງການຂ້າມຜ່ານສູ່ສັງຄົມນິຍົມ, ປະທານ ໂຮ່ຈິມິນ ໄດ້ນຳເອົາລັດທິດັ່ງ ກ່າວເຂົ້າມາເຜີຍແຜ່ຢູ່ອິນດູຈີນ 03/02/1930. ພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນ ຢູ່ລາວເຮົາກໍ່ມີການສ້າງຕັ້ງພັກຂຶ້ນ ເຊິ່ງໃນເວລານັ້ນເອີ້ນວ່າ : ພັກແຄ້ນລາວ 1934, ເພື່ອນຳພາຂະບວນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ. ການຂະຫຍາຍພັກໄດ້ດຳເນີນໄປພ້ອມໆກັບການຂະຫຍາຍຕົວຂອງຂະບວນການຕໍ່ສູ້ຂອງປະຊາຊົນລາວ, ຮອດວັນທີ 12 ຕຸລາ 1945 ປະຊາຊົນ ລາວກໍ່ສາມາດຍາດເອົາການປົກຄອງຈາກກຳມືຂອງຟາຊິດຢີ່ປຸ່ນ ທີ່ປາລາໄຊຈາກສົງຄາມໂລກຄັ້ງທີ 2. ສ້າງຕັ້ງລັດຖະບານລາວອິດສະຫຼະປະກາດໃຫ້ຊາວໂລກຮັບຮູ້. ແຕ່ຄວາມເປັນເອກະລາດນັ້ນບໍ່ພໍເທົ່າໃດ, ຮອດ 03/1946 ຈັກກະພັດຝຣັ່ງໄດ້ກັບຄືນມາຮຸກຮານລາວອີກເທື່ອສອງ ພັກ ກອມມູນິດອິນດູຈີນໄດ້ນາພາປະຊາຊົນຕໍ່ສູ້ຕ້ານພວກຈັກກະພັດຝຣັ່ງອີກເທື່ອໃໝ່. ຮອດວັນທີ 22 ມີນາ 1955 ກອງປະຊຸມໄຫຍ່ຜູ້ແທນສະມາຊິກພັກກອມມູນິດອິນດູຈີນທີ່ເປັນຄົນລາວ ໄດ້ໄຂຂຶ້ນສ້າງຕັ້ງພັກປະຊາຊົນລາວຢ່າງເປັນທາງການ (ພັກປະຊາຊົນປະຕິວັດລາວ ປັດຈຸບັນ).

## ພັກ ສ ປ ປ ລາວ ແລະ ປັບປຸງຕົນເອງຕາມ 5 ຫຼັກການ

**1)** ພັກປະຊາຊົນປະຕິວັດລາວຢຶດໝັ້ນລັດທິມາກ-ເລນິນ ແລະ ມູນເຊື້ອຂອງພັກເປັນພື້ນຖານແນວຄິດທິດ ສະດີຂອງພັກ. ເສີມຂະຫຍາຍລັກສະນະນຳໜ້າ, ລັກສະນະຕໍ່ສູ້ຂອງຊົນຊັ້ນກຳ ມະກອນ ກໍ່ສ້າງພັກໃຫ້ເຂັ້ມແຂງໜັກແໜ້ນ.

**2)** ພັກ ປປລາວ ຈັດຕັ້ງຕາມລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດ ຊອບ ພັກມີວິໃນ ເຂັ້ມງວດ.

**3)** ພັກ ປປລາວ ຖືເອົາຄວາສາມະຄີເປັນອັນໜຶ່ງອັນດຽວກັນ ເປັນຫຼັກການພື້ນຖານເພື່ອຮັບປະ ກັນຄວາມ ເປັນເອກະພາບທາງການເມືອງ, ແນວຄິດ, ການຈັດຕັ້ງ ແລະ ການນຳພາຂອງພັກ

**4)** ພັກ ປປລາວ ຖືເອົາປະຊາຊົນເປັນໃຈກາງ, ຮັບໃຊ້ປະຊາຊົນດ້ວຍຄວາມຊື່ສັດສຸດຈະດິດ, ເຄື່ອນໄຫວ ຕາມແນວທາງມະຫາຊົນຂອງພັກ.

**5)** ພັກ ປປລາວ ຖືເອົາການຕິຊົມຕົນເອງ, ຕິຊົມກັນເປັນກົດເກນແຫ່ງການຄົງຕົວ ແລະ ຂະ ຫຍາຍຕົວຂອງ ພັກປະຕິວັດລາວ

## 2. ພາລະໜ້າທີ່ຂອງພັກ ປ ປ ລາວ ໃນພາລະກິດປ່ຽນແປງໃໝ່.

- ♣ ກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງໜັກແໜ້ນ
- ♣ ກໍ່ສ້າງລັດປະຊາທິປະໄຕປະຊາຊົນໃຫ້ກາຍເປັນລັດແຫ່ງກົດໝາຍໃຫ້ໝັ້ນຄົງ
- ♣ ປົດປ່ອຍ ແລະ ຂະຫຍາຍກຳລັງການຜະລິດຢ່າງແຂງແຮງສ້າງພື້ນຖານວັດຖຸ ເຕັກ ນິກທີ່ທັນສະໃໝ່ເປັນກ້າວໆ ໂດຍປະຕິບັດຢ່າງຖືກຕ້ອງຕາມແນວທາງນະໂຍບາຍເສດ ຖະກິດປ່ຽນແປງໃໝ່ຂອງພັກ.
- ♣ ພັດທະນາສັງຄົມຢ່າງກ້າວໜ້າ ດ້ວຍການພັດທະນາຊັບພະຍາກອນມະນຸດເປັນໃຈກາງ.
- ♣ ເພີ້ມທະວີການຄຸ້ມຄອງລັດ, ເສີມຂະຫຍາຍດ້ານຕັ້ງໜ້າ ແລະ ຈຳກັດດ້ານຫຍໍ້ທໍ້ຂອງເສດຖະ ກິດຕະຫຼາດ, ຮັບປະກັນໄປຕາມທິດທາງສັງຄົມນິຍົມ

- ♣ ປັບປຸງ ແລະ ສ້າງກົດໝາຍໃຫ້ຄົບຖ້ວນ, ຮັບປະກັນຄວາມສັກສິດຂອງກົດໝາຍ ເພື່ອກ້າວສ້າງຂຶ້ນເປັນລັດແຫ່ງກົດໝາຍ
- ♣ ປົກປັກຮັກສາ ແລະ ພັດທະນາວັດທະນະທຳແຫ່ງຊາດ
- ♣ ສ້າງກຳລັງປ້ອງກັນຊາດ - ປ້ອງກັນຄວາມ-ຄວາມສະຫງົບໃຫ້ເຂັ້ມແຂງ ແລະ ທັນສະໄໝເປັນກ້າວໆ.
- ♣ ສ້າງສາຍພົວພັນມິດຕະພາບ ແລະ ເພີ່ມທະວີການຮ່ວມມືກັບສາກົນ

## ຄຳຖາມຄົ້ນຄວ້າ :

1. ຈົ່ງບອກທາດແທ້ຂອງພັກ ສປປ ລາວ ?
2. ໜ້າທີ່ຂອງພັກ ສປປ ລາວມີຄືແນວໃດ ?
3. ພັກປັບປຸງຕົນເອງຕາມ 5 ຫຼັກການໃນໄລຍະໃໝ່ມີຄືແນວໃດ ?

## ( ອ່ານເພີ່ມ )

## ພັກນຳພາ

### 1. ລະບົບສາຍໄຍການຈັກຕັ້ງຂອງພັກ

ກ່ອນຈະຮັບຮູ້ສາຍໄຍການຈັດຕັ້ງຂອງພັກ ເຮົາຕ້ອງເຂົ້າໃຈກ່ຽວກັບພັກປະຊາຊົນປະຕິວັດລາວກ່ອນ ພັກປະຊາຊົນປະຕິວັດລາວ ແມ່ນກອງເສນາການເມືອງ, ເປັນກອງນຳໜ້າທີ່ມີການຈັດຕັ້ງຂອງຊົນຊັ້ນກຳມະກອນ ເປັນຕົວແທນແຫ່ງຜົນປະໂຫຍດຂອງຊາດ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າທີ່ຮັກຊາດ ແລະ ກ້າວໜ້າ ເປັນແກນນຳລະບົບການເມືອງແຫ່ງລະບອບປະຊາທິປະໄຕປະຊາຊົນ ພັກປະຊາຊົນປະຕິວັດລາວ ປະກອບດ້ວຍບຸກຄົນທີ່ຕື່ນຕົວຫ້າວຫັນປະຕິວັດຍອມເສຍສະຫຼະ ເພື່ອປະເທດຊາ ເພື່ອປະຊາຊົນ ເຊິ່ງໄດ້ຮັບຄວາມໄວ້ວາງໃຈກວ່າໝູ່ໃນຊົນຊັ້ນກຳມະກອນຊາວຜູ້ອອກແຮງງານ, ບັນດາຊົນຊັ້ນປະຕິວັດ ເຊິ່ງໄດ້ຜ່ານການທົບສອບໃນຂະບວນການວຽກງານຕົວຈິງ

ພັກປະຊາຊົນປະຕິວັດລາວ ໄດ້ນຳພາປະຊາຊົນລາວບັນດາເຜົ່າ ເຮັດສຳເລັດພາລະກິດປະຕິວັດປົດປ່ອຍຊາດ, ລົບລ້າງລະບອບສັກດີນາ ແລະ ລ່າເມືອງຂຶ້ນອັນໄດ້ໄຂສັງກາດໃໝ່ໃຫ້ແກ່ປະເທດຊາດເຮົາ. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນເປັນຕົ້ນມາ ພັກໄດ້ສືບຕໍ່ນຳພາປະຊາຊົນບັນດາເຜົ່າຕ່າງໆ ປົກປັກຮັກສາເອກະລັກໄວ້ໄດ້ຢ່າງໝັ້ນຄົງ ແລະນຳພາປະຕິວັດແນວທາງໃໝ່ຢ່າງຮອບດ້ານທີ່ມີຫຼັກການ, ໄດ້ເຮັດໃຫ້ປະເທດຊາດມີບາດກ້າວຂະຫຍາຍຕົວໃໝ່ ຊີວິດການເປັນຢູ່ຂອງປະຊາຊົນນັບມື້ໄດ້ຮັບການປ່ຽນແປງ, ສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າໄດ້ຮັບການເປີດກວ້າງ, ຄວາມສາມັກຄີປອງດອງ ລະຫວ່າງຊາດລະຫວ່າງປະຊາຊົນບັນດາເຜົ່າ ແລະ ຊົນຄົນຕ່າງໆນັບມື້ໄດ້ຮັບການປັບປຸງ, ທີ່ຕັ້ງ ແລະ ບົດບາດຂອງປະເທດຊາດໃນເວທີສາກົນໄດ້ຮັບການເຊີດຊູໃຫ້ສູງຂຶ້ນ.

ພັກປະຊາຊົນປະຕິວັດລາວມີລະບຽບວິໄນເຂັ້ມງວດ ແລະ ມີລະບົບການຈັດຕັ້ງແຕ່ສູນກາງລົງຮອດຮາກຖານ, ແໜ້ນໜາ ພັກແມ່ນການນຳໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ. ດັ່ງນັ້ນພັກຈິ່ງມີລະບົບສາຍໄຍການຈັດຕັ້ງຢ່າງເປັນລະບົບມີຢູ່ທຸກບ່ອນ, ທຸກຂົງເຂດຂອງສັງຄົມ ເພື່ອຮັບປະກັນການນຳພາ ຂອງພັກໃຫ້ທົ່ວເຖິງ ແລະ ໜັກແໜ້ນລະອຽດຄື :

#### 1.1. ຂັ້ນສູນກາງ

ລວມມີຄະນະບໍລິຫານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ນອກຈາກນີ້ຍັງມີອົງການທີ່ເປັນເສນາທິການຂອງສູນກາງພັກຄື: ຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ ຄະນະໂຄສະນາອົບຮົມສູນກາງພັກ, ຄະນະກວດກາສູນກາງພັກ, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖາບັນການເມືອງການປົກຄອງ ແລະ ຄະນະ ປກຊ-ປກສ ຂັ້ນສູນກາງ

#### 1.2. ຂັ້ນກະຊວງ, ອົງການ, ແຂວງ, ນະຄອນຫຼວງ

ລວມມີຄະນະບໍລິຫານພັກແຂວງ, ຄະນະປະຈຳພັກແຂວງ, ຄະນະພັກນະຄອນຫຼວງ, ຄະນະພັກກະຊວງອົງການ. ນອກນັ້ນຍັງມີກົງຈັກຊ່ວຍວຽກຄື: ຫ້ອງວ່າການແຂວງ, ຫ້ອງວ່າການນະຄອນຫຼວງ, ຄະນະຈັດຕັ້ງແຂວງ, ຄະນະກວດກາແຂວງ, ຄະນະໂຄສະນາອົບຮົມແຂວງ ແລະ ໂຮງຮຽນການເມືອງການປົກຄອງແຂວງ.

### 1.3. ຂັ້ນເມືອງ, ກົມກອງ ຫຼື ພາກສ່ວນ

ລວມມີຄະນະບໍລິຫານພັກເມືອງ, ຄະນະປະຈໍາພັກເມືອງ, ຄະນະພັກພາກສ່ວນ ຫຼື ກົມກອງ. ນອກນັ້ນຍັງມີອົງການຊ່ວຍວຽກຂອງຄະນະພັກເມືອງຄື: ຫ້ອງວ່າການພັກເມືອງ, ແລະ ຫ້ອງການກວດກາເມືອງ

### 1.4. ຮາກຖານ

ລວມມີຄະນະພັກຮາກຖານ ແລະ ໜ່ວຍພັກ ພັກນໍາພາໂດຍສາຍໄຍການຈັດຕັ້ງແຕ່ງເທິງລົງລຸ່ມເຊັ່ນ: ຄະນະພັກຂັ້ນລຸ່ມປະຕິບັດຕາມຄະນະພັກຂັ້ນເທິງ, ທົ່ວພັກຕ້ອງປະຕິບັດຕາມມະຕິກອງປະຊຸມໃຫຍ່ຂອງພັກ ພັກຄົນຕ້ອງເຮັດຕາມການຈັດຕັ້ງ, ຂັ້ນລຸ່ມຕ້ອງປະຕິຄໍາສັ່ງຂອງຂັ້ນເທິງ, ຕ້ອງເດັດດ່ຽວຕ້ານ ແລະ ສັດກັດກັ້ນລັດທິອານາທິປະໄຕ ແລະ ພະຍາດອາຍາສິດ ແລະ ເອກາທິປະໄຕພາຍໃນພັກ.

## 2. ເນື້ອໃນການນໍາພາຂອງພັກ

ພັກນໍາພາສະແດງອອກດ້ານເນື້ອໃນຂອງວຽກງານດັ່ງນີ້ :

### ກ. ພັກນນໍາພາດ້ວຍການວາງແນວທາງນະໂຍບາຍ ແລະ ອອກມະຕິ

ພັກກໍ່ຄືຄະນະພັກຂັ້ນຕ່າງໆ ເປັນຜູ້ວາງແນວທາງນະໂຍບາຍ ເປັນຜູ້ອອກມະຕິສອດຄ່ອງແທດເໝາະກັບສະພາບຄວາມເປັນຈິງ ໃນແຕ່ລະໄລຍະຂອງປະເທດ ຂອງທ້ອງຖິ່ນເພື່ອເປັນທິດຊີ້ນໍາ ໃຫ້ອໍານາດການປົກຄອງ (ລັດ) ແລະ ພາກສ່ວນຕ່າງໆຈັດຕັ້ງປະຕິບັດ ຈາກນັ້ນ ກໍ່ດໍາເນີນຕິດຕາມດູແລໃຫ້ການຊີ້ນາຊ່ວຍເຫຼືອແກ້ໄຂບັນຫາຄົງຄ້າງ ເພື່ອໃຫ້ການຈັດຕັ້ງປະຕິບັດໂລ່ງລ່ຽນມີປະສິດທິຜົນ.

ອັນນີ້ຈິ່ງເລັ່ງທວງ ໃຫ້ຄະນະພັກແຕ່ລະຂັ້ນແຕ່ລະສະຫາຍຮູ້ເສີມຂະຫຍາຍປະຊາທິປະໄຕກໍຄືສະຕິປັນຍາ ແລະ ບົດຮຽນຂອງໝູ່ຄະນະນໍາພາ ໝາຍຄວາມວ່າກ່ອນການອອກມະຕິໃນຄະນະພັກ ຕ້ອງມີການຄົ້ນຄວ້າປຶກສາຫາລື ແລກປ່ຽນຄໍາຄິດເຫັນກັນກົງໄປກົງມາສາກ່ອນ, ຢາກນໍາພາໄດ້ດີ ຄະນະພັກແຕ່ລະຂັ້ນຕ້ອງເປັນເຈົ້າການຄົ້ນຄວ້າກໍາແໜ້ນແນວທາງຂອງພັກ ຈາກນັ້ນກໍປຶກສາຫາລືກັນເປັນເອກະພາບຕົກລົງເປັນມະຕິ, ເປັນແຜນວຽກຂອງຄະນະພັກຂອງຕົນໃຫ້ລະອຽດ ເພື່ອມອບໝາຍຄວາມຮັບຜິດຊອບ ໃຫ້ບຸກຄົນຊີ້ນໍາ ແລະ ຈັດຕັ້ງປະຕິບັດ.

### ຂ. ພັກນໍາພາດ້ວຍການໂຄສະນາອົບຮົມ

ເພື່ອເຮັດໃຫ້ສະມາຊິກພັກພະນັກງານມະຫາຊົນເຂົ້າໃຈ ແລະ ກໍາແໜ້ນແນວທາງນະໂຍບາຍ ແລະ ມະຕິຕ່າງໆຂອງພັກ ເປັນເອກະພາບກັບແນວທາງຂອງພັກສົມບູນ ເຫັນແຈ້ງວ່າແນວທາງນະໂຍບາຍຂອງພັກແມ່ນເພື່ອຜົນປະໂຫຍດລວມກໍ່ຄື ຜົນປະໂຫຍດຂອງປະຊາຊົນເອງ, ໃນການປະຕິບັດເກີດດອກອອກຜົນມີຄວາມເຊື່ອໝັ້ນຕໍ່ແນວທາງ ແລະ ການນໍາພາຂອງພັກ, ມີຄວາມຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນມີມານະຈິດ ແລະ ອຸດົມຄະຕິສັງຄົມນິຍົມ.

ພຶດຕິກໍາຂອງພັກໄດ້ຢັ້ງຢືນວ່າ ແນວທາງນະໂຍບາຍ ແລະ ນະໂຍບາຍຂອງພັກຈະຖືກຕ້ອງປານໃດກໍ່ຕາມ ຖ້າພະນັກງານສະມາຊິກພັກ ແລະ ມະຫາຊົນບໍ່ເຂົ້າໃຈບໍ່ເຊື່ອມຊຶມແນວທາງນະໂຍບາຍດັ່ງກ່າວກໍ່ຈະດີພຽງແຕ່ຢູ່ໃນໜ້າເຈ້ຍເທົ່ານັ້ນ ຈາກນີ້ຈິ່ງມີຄວາມຈໍາເປັນ ຕ້ອງໄດ້ມີການໂຄສະນາໃຫ້ພະນັກງານສະມາຊິກພັກເຊື່ອມຊຶມ ແລະ ເຂົ້າໃຈ ຕື່ນຕົວຍົກສູງຄວາມຮັບຜິດຊອບ ແລະ ມີແນວຄິດເຊື່ອໝັ້ນມີຄວາມຫ້າວຫັນປະຕິບັດແນວທາງ ແລະ ມະຕິຂອງພັກ ສະນັ້ນວຽກງານໂຄສະນາຕ້ອງດໍາເນີນດ້ວຍຫຼາຍຮູບ ຫຼາຍສີ ແລ ເນື່ອງນິດລຽນຕິດ.

### ຄ. ພັກນໍາພາດ້ວຍວຽກງານຈັດຕັ້ງໂດຍການກໍ່ສ້າງ ແລະ ຈັດວາງພະນັກງານ

ໃນການນໍາພາຂອງພັກຕ້ອງເອົາໃຈໃສ່ກໍ່ສ້າງ ຍົກລະດັບພະນັກງານ ໂດຍເລີ່ມແຕ່ເລືອກເຟັ້ນໄປກໍ່ສ້າງ ຫຼື

ບຳລຸງຍົກລະດັບຈິນເຖິງການນຳໃຊ້, ຄຸ້ມຄອງພະນັກງານ ສ້າງໃຫ້ມີຜູ້ເປັນຫຼັກເປັນແຫຼ່ງໃນການນຳພາ ແລະ ຜູ້ສືບທອດທີ່ຈົ່ງຮັກພັກດີ ແລະໜັກແໜ້ນ, ພັກເຮົາໄດ້ສະຫຼຸບໄວ້ວ່າ ພະນັກງານມີບົດບາດຕັດສິນຜົນສຳເລັດໃນການຈັດຕັ້ງປະຕິບັດແນວທາງຂອງພັກ ສະນັ້ນ, ການປັບປຸງກໍ່ສ້າງຖັນແຖວພະນັກງານ ກໍຄືການນຳພາຂອງພັກແມ່ນຄວາມຈຳເປັນພາວະວິໄສ.

**ງ. ພັກນຳພາດ້ວຍການກວດກາ**

ພັກ-ຄະນະພັກທີເຮັດໜ້າທີ່ນຳພາຕ້ອງກວດກາຈັດຕັ້ງ ແລະ ບຸກຄະລາກອນທີ່ຢູ່ພາຍໃຕ້ການນຳພາຂອງຕົນເພີ່ມເສີມຂະຫຍາຍອັນດີອັນຕັ້ງໜ້າ ແລະ ເພື່ອຈຳກັດ, ແກ້ໄຂສິ່ງຄົງຄ້າງ ແລະ ຫຍໍ້ທໍ້ໝົດໄປ.

ທັງໝົດນັ້ນແມ່ນແນໃສ່ປັບປຸງ ແລະ ກໍ່ສ້າງພັກໃຫ້ເຂັ້ມແຂງປອດໃສມີຄວາມສາມັກຄີເປັນເອກະພາບໃນລະດັບສູງຕໍ່ແນວທາງການເມືອງ ແລະ ກົດລະບຽບຂອງພັກ, ເຊີດຊູອິດທິພົນຂອງພະນັກງານສູງຂຶ້ນ.

**ຈ. ນຳພາຜ່ານຄວາມເປັນແບບຢ່າງຂອງສະມາຊິກພັກແຕ່ລະຄົນ**

ຄວາມເປັນແບບຢ່າງນຳໜ້າຕ້ອງສະແດງອອກຄື ມີຄວາມຕື່ນຕົວຮັກຊາດສູງ, ອຸທິດຕົນສຸດຂີດທາງດ້ານຄວາມຮູ້, ຄວາມສາມາດ, ເຫື່ອແຮງ ເພື່ອຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຈະແມ່ນພາກສ່ວນໃດ, ໃນຖານະຕຳແໜ່ງໃດ ກໍເຮັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ ຊື່ສັດສຸດຈະລິດມີອົດທົນສູງ ແລະ ປະຢັດ, ມີສະຕິເຄົາລົບກົດໝາຍ ແລະ ລະບຽບວິໄນ, ມີຄວາມສາມັກຄີ, ນ້ຳໃຈເສຍສະຫຼະເພື່ອສ່ວນລວມ, ບໍ່ໂລບມາກໂລພາ, ບໍ່ປະຈົບປະແຈງ, ອີງໃສ່ປາລະມາ ແລະ ອິດທິພົນຂອງຂັ້ນເທິງເພື່ອໄດ້ຂຶ້ນໄດ້ຕຳແໜ່ງສວຍໂອກາດສ້າງຄວາມລໍ່ລວຍ, ບໍ່ອັກຄະຕິ ແລະ ບໍ່ອິດສາບັກບຽດຜູ້ອື່ນ ບໍ່ມະລຸ້ມມະລ້ວຍ, ບໍ່ຂາດວິໄນ ແລະ ຟຸມເຟືອຍ.

## 3. ວຽກງານຈັດຕັ້ງ ແລະ ພະນັກງານ

### 3.1. ຄວາມຮູ້ກ່ຽວກັບວຽກງານຈັດຕັ້ງ

ວຽກງານຈັດຕັ້ງແມ່ນອົງປະກອບທີ່ລວມສູນ ຫຼື ທ້ອນໂຮມເອົາບັນດາຂະແໜງການຈັດຈັ້ງ ແລະ ລາຍຊື່ພະນັກງານເຂົ້າເປັນໂຄ່ງຮ່າງລວມອັນດຽວກັນ, ໃນໂຄງຮ່າງການຈັດຕັ້ງອາດມີຫຼາຍຮູບການແຕກຕ່າງກັນ ແຕ່ການເຄື່ອນໄຫວວຽກງານລ້ວນແຕ່ເປັນເອກະພາບທາງດ້ານຈຸດປະສົງ ແລະ ເປົ້າໝາຍອັນດຽວກັນ ຫຼື ເວົ້າອີກຢ່າງໜຶ່ງວ່າວຽກງານຈັດຕັ້ງແມ່ນການເຕົ້າໂຮມມະຫາຊົນ ທີ່ໄດ້ຮັບການໂຄສະນາສຶກສາອົບຮົມໃຫ້ຕື່ນຕົວເຂົ້າໃນບັນດາການຈັດຕັ້ງຂອງລະບົບການເມືອງ ເພື່ອດຳເນີນການເຄື່ອນໄຫວວຽກງານຮັກສາຄວາມສະຫງົບ, ເຂົ້າຮ່ວມໃນການດຳເນີນການຜະລິດ ແລະ ເຄື່ອນໄຫວເສດຖະກິດອື່ນໆ...

### 3.2. ຄວາມສຳຄັນຂອງວຽກງານຈັດຕັ້ງ

ກົງຈັກການຈັດຕັ້ງແມ່ນເສນາທິການຂອງການນຳຂັ້ນຕ່າງໆ ໃນການຄວບຄຸມດູແລຖັນແຖວພະນັກງານລັດຖະກອນ ແລະ ບັນດາວຽກງານໃຫ້ມີປະສິດທິຜົນ, ກົງຈັກການຈັດຕັ້ງແມ່ນສ້າງຕັ້ງຂຶ້ນເພື່ອ ເປັນບ່ອນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດ, ມະຕິ ແລະ ລະບຽບການຕ່າງໆຂອງການຈັດຕັ້ງວາງອອກໃຫ້ບັນລຸໃນພາກຕົວຈິງໝາຍວ່າ ກົງຈັກການຈັດຕັ້ງແມ່ນສ້າງຂຶ້ນເພື່ອ ຮັບປະກັນໜ້າທີ່ການເມືອງຂອງພັສອດຄ່ອງກັບກົດເກດຂະຫຍາຍຕົວທາງດ້ານເສດຖະກິດ, ສັງຄົມ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານເໝາະກັບຄວາມສາມາດຂອງຖັນແຖວພະນັກງານ. ດັ່ງນັ້ນ ຕ້ອງສ້າງກົງຈັກຈັດຕັ້ງໃຫ້ເປັນການຈັດຕັ້ງທີ່ກະທັດຮັດເຂັ້ມແຂງ, ມີຄຸນນະພາບຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດແນວທາງຂອງພັກ ກົດໝາຍຂອງລັດມີປະສິດທິຜົນ.

### 3.3. ທິດທາງ, ທິດນຳ

**ກ. ທິດທາງ**

ເພື່ອຮັບປະກັນການປະຕິບັດແນວທາງການເມືອງຂອງພັກ ແລະ ລະບຽບກົດໝາຍຂອງລັດໃຫ້ບັນລຸຜົນສຳເລັດນັ້ນ ໃນຕໍ່ໜ້າຕອງເຮັດໃຫ້ກົງຈັກການຈັດຕັ້ງຄ່ອງຕົວ, ສົມເຫດສົມຜົນ ແລະ ມີປະສິດທິພາບ, ຕີຖອຍສະພາບການທ້ຳຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງ ເພື່ອສ້າງພື້ນຖານ ແລະ ເງື່ອນໄຂໃຫ້ແກ່ການຫັນປະເທດເປັນອຸດສະຫະກຳ ແລະ ທັນສະໄໝເທື່ອລະກ້າວ.

**ຂ. ທິດນຳ**

- ຮັບປະກັນລັກສະນະສືບທອດ ແລະ ຫຍາຍຕົວຕ້ານແນວຄິດຮັກສາເດີມ, ຕ້ານທ່າອ່ຽງປະຕິເສດຢ່າງຊິ້ນເຊີງ ຜົນງານທີ່ຍາດມາໄດ້.
- ດຳເນີນເປັນແຕ່ລະບາດກ້າວດ້ານຈິດຕະສາດ, ສັງຄົມ, ຮັບປະກັນການກະທັດຮັດແຕ່ມີປະສິດທິຜົນ.
- ດຳເນີນຢ່າງຄົບຊຸດໃນທົ່ວລະບົບການເມືອງ, ປັບປຸງບູລະນະ ແລະ ສ້າງກົງຈັກໃຫ້ສອດຄ່ອງກັບໜ້າທີ່ການເມືອງ ຮັບປະກັນການປະຕິບັດແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ.

### 3.4. ວຽກງານພະນັກງານ

**ກ. ພະນັກງານແມ່ນໃຜ**

ພະນັກງານແມ່ນກ້ອນທຶນປະເສີດ ແມ່ນຜູ້ປະຕິບັດໜ້າທີ່ຮັບໃຊ້ພັກ-ລັດ ແລະ ປະຊາຊົນເປັນຜູ້ນຳເອົາແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດໄປຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນຕົວຈິງ.

**ຂ. ຄວາມສຳຄັນຂອງພະນັກງານ**

ພັກເຮົາຍາມໃດກໍ່ຖືເອົາພະນັກງານມີບົດບາດສຳຄັນ ຕັດສິນຜົນໄດ້ຜົນເສຍໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ສະນັ້ນ, ການກໍ່ສ້າງບຳລຸງພະນັກງານໃຫ້ມີຄວາມຈົ່ງຮັກພັກດີຕໍ່ພັກ - ລັດ, ຕໍ່ປະຊາຊົນ ແລະ ປະເທດຊາດ, ມີຄວາມອຸດົມການສັງຄົມນິຍົມອັນອັນຈະແຈ້ງ ແລະ ຮັບປະກັນໄດ້ລັກສະນະສືບທອດຕໍ່ເນື່ອງ ແລະ ໜັກແໜ້ນແມ່ນໜ້າທີ່ຂອງສຳຄັນຂອງພັກ, ແມ່ນຄວາມຮຽກຮ້ອງຕ້ອງການຢ່າງພາວະວິໄສແຫ່ງການຂະຫຍາຍຕົວ ແລະ ແມ່ນບັນຫາທີ່ມີລັກສະນະຕັດສິນຊາຕາກຳຂອງຊາດ.

**ຄ. ທິດທາງ, ທິດນຳ**

- **ທິດທາງ**
  - ການບໍາລຸງກໍ່ສ້າງພະນັກງານ ເລີ່ມຈາກຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ໜ້າທີ່ວິຊາສະເພາະ ແລະ ການເຕີບໃຫຍ່ຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະເຮັດໃຫ້ການພັດທະນາພະນັກງານຕ້ອງຕິດພັນກັບການນຳໃຊ້ຢ່າງມີປະສິດທິຜົນ.
  - ສຸມໃສ່ຝຶກອົບຮົມຍົກລະດັບ ແລະ ກໍ່ສ້າງທັງ 3 ປະເພດພະນັກງານຄື: ພະນັກງານນຳພາ, ພະນັກງານຄຸ້ມຄອງບໍລິຫານ, ພະນັກງານວິຊາການ ໂດຍເນັ້ນໃສ່ 3 ດ້ານສະແດງອອກຄຸນທາດການເມືອງ, ຄວາມຮູ້ທາງດ້ານທິດສະດີ, ວິຊາສະເພາະນັບທັງພາສາຕ່າງປະເທດ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດ ໂດຍຖືຄຸນທາດທາງດ້ານການເມືອງເປັນກົກ, ເອົາໃຈໃສ່ສ້າງໃຫ້ມີພະນັກງານຄຸ້ມຄອງເສດຖະກິດພະນັກງານກົດໝາຍ. ພະນັກງານກະສິກຳ, ພະນັກງານທີ່ເຮັດວຽກຮ່ວມມືກັບຕ່າງປະເທດ ພະນັກງານເຜົ່າ ແລະ ພະນັກງານເພດຍິງ, ພິເສດຕ້ອງສຸມໃສ່ບຳລຸງ, ກໍ່ສ້າງພະນັກງານຂັ້ນເມືອງ ແລະ ຮາກຖານ

ເພື່ອພັດທະນາຊິນນະບົດ, ເອົາການກໍ່ສ້າງ ແລະ ຍົກລະດັບຢູ່ພາຍໃນຕິດພັນກັບສະພາບການຕົວຈິງຂອງປະເທດເປັນຕົ້ນຕໍ, ພ້ອມກັນນັ້ນກໍ່ສົ່ງໄປຍົກລະດັບຢູ່ຕ່າງປະເທດ ບາງວິຊາທີ່ເຫັນວ່າມີຄວາມຈໍາເປັນ ເຊິ່ງພວກເຮົາບໍ່ສາມາດສ້າງໄດ້.

- ການເລືອກເຟັ້ນ ແລະ ກໍ່ສ້າງພະນັກງານຕ້ອງຮັບປະກັນລັກສະນະຊົນຊັ້ນຂອງພັກຖືສໍາຄັນຖັນແຖວກໍາມະກອນ, ຊາວກະສິກອນທີ່ກ້າວໜ້າ, ນັກຮຽນຮູ້ປັນຍາຊົນປະຕິວັດ ແລະ ລູກຫຼານພະນັກງານ ໂດຍຜ່ານຂະບວນການວຽກງານຕົວຈິງສ້າງໃຫ້ໄດ້ປັນຍາຊົນທີ່ມາຈາກຊາວກະສິກອນ, ຈາກເຜົ່າ ແລະ ສ້າງໃຫ້ມີພະນັກງານທີ່ສໍານານງານ ກໍ່ສ້າງພະນັກງານທີ່ເປັນຫົວຫຼັກຫົວແຫຼ່ງ ແລະ ພະນັກງານສືບທອດຢູ່ຂັ້ນຕ່າງໆ
- ໄປຄຽງຄູ່ກັບການບໍາລຸງກໍ່ສ້າງຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ກໍາແໜ້ນພະນັກງານເປັນວິທີການ ແລະ ເງື່ອນໄຂ ເພື່ອປົກປັກຮັກສາພະນັກງານ, ເອົາການປະຕິບັດນະໂຍບາຍຕໍ່ພະນັກງານທີ່ລົງເຮັດໜ້າທີ່ຢູ່ຮາກຖານ ຫຼື ບ່ອນອື່ນໆຕາມການມອບໝາຍຂອງພັກ.

- **ທິດນໍາ**
  - ການບໍລຸງສ້າງພະນັກງານຕ້ອງດໍາເນີນໄປຢ່າງຄົບຊຸດ, ຮອບດ້ານ ແລະ ເຮັດຢ່າງຕັ້ງໜ້າ, ດໍາເນີນແຕ່ລະບາດກ້າວຢ່າງມີແຜນການລະອຽດ.
  - ຖືເອົາການບໍາລຸງຮັກສາພະນັກງານເປັນໜ້າທີ່ໃຈກາງໃນການພັດທະນາຊັບພະຍາກອນມະນຸ ແລະ ຫັນພະນັກງານເຂົ້າສູ່ມາດຕະຖານຂອງແຕ່ລະຕໍາແໜ່ງແຕ່ລະກ້າວ
  - ການຊັບຊ້ອນຈັດວາງພະນັກງານຕ້ອງໄປຄຽງຄູ່ກັບການປັບປຸງບູລະນະກົງຈັກການຈັດຕັ້ງ, ບັນຈຸ ແລະ ນໍາໃຊ້ພະນັກງານໃຫ້ຖືກຕ້ອງເໝາະກັບໜ້າວຽກ, ສິດໜ້າທີ່ໂຄງປະກອບການຈັດຕັ້ງ, ມີນະໂຍບາຍສົ່ງເສີມຜູ້ທີ່ດີ, ມີຫົວຄິດ ແລະ ເດັດດ່ຽວເອົາຜູ້ເສຍທາດຂາດຄຸນອອກຈາກການຈັດຕັ້ງ
  - ປະສານສົມທົບລະຫວ່າງພະນັກງານແຕ່ລະລຸ້ນ ແຕ່ລະປະເພດໃຫ້ສອດຄ່ອງເໝາະສົມ, ຮັບປະກັນລັກສະນະສືບທອດຕໍ່ເນື່ອງ.

# ( ອ່ານເພີ່ມ )

# ວຽກງານກວດກາ

## 1. ຄວາມຮັບຮູ້ກ່ຽວກັບການກວດກາ

ວຽກງານກວດກາແມ່ນໜຶ່ງໃນບັນດາພາລະບົດບາດຂອງການນໍາເອົາອັນຕົ້ນຕໍຂອງພັກ ແມ່ນພາກສ່ວນໜຶ່ງທີ່ສໍາຄັນໃນວຽກງານກໍ່ສ້າງພັກ ທ່ານ ເລນິນເວົ້າວ່າ ມີການກວດກາຈຶ່ງມີພັກນໍາພາ ກວດກາແມ່ນການຊອກໃຫ້ເຫັນຄວາມຖືກຕ້ອງຂອງແນວ ທາງ ແລະ ຂໍ້ຂາດຕົກບົກຜ່ອງໃນການຜັນຂະຫຍາຍແນວທາງ, ຊອກໃຫ້ເຫັນຄວາມສາມາດ ແລະ ຄວາມມເປັນແບບຢ່າງນໍາໜ້າຂອງສະມາຊິກພະນັກງານລັດຖະກອນ, ຊອກໃຫ້ເຫັນເຖິງປັດໄຈໃໝ່ທີ່ຕັ້ງໜ້າ ແລະ ຜູ້ທີ່ຫ້າວຫັນດີເດັ່ນໃນຂະບວນການວຽກງານຕົວຈິງ ເພື່ອຍ້ອງຍໍສັນລະເສີນ ແລະ ມອບໝາຍໜ້າທີ່ອັນສໍາຄັນໃຫ້ເຮັດ, ຄຽງຄູ່ກັນນັ້ນ ກໍຊອກໃຫ້ເຫັນ ແລະ ສະກັດກັ້ນປະກົດການຫຍໍ້ທໍ້.

**ກ. ຈຸດປະສົງຂອງວຽກງານກວດກາ.**

- ປົກປ້ອງແນວທາງ, ແຜນນະໂຍບາຍ, ບົດບາດການນໍາພາຂອງພັກ, ຮັບປະກັນຄວາມສາມັກຄີເປັນເອກະພາບພາຍໃນພັກ ເຮັດໃຫ້ການໄຫວຂອງຄະນະພັກ ແລະ ອໍານາດການປົກຄອງຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ຕ້ານທຸກການກະທໍາ ທີ່ມ້າງເພທໍາລາຍແນວທາງນະໂຍບາຍທີ່ຖືກຕ້ອງຂອງພັກ.
- ປົກປ້ອງການຈັດຕັ້ງຂອງພັກຕ່າງໆທີ່ຖືກຕ້ອງຕາມລະບຽບກົດໝາຍ ເຮັດໃຫ້ການຈັດຕັ້ງມີຄວາມເຂັ້ມແຂງປອດໃສຂາວສະອາດ, ຊອກໃຫ້ເຫັນດ້ານດີ, ປັດໄຈໃໝ່ທີ່ຕັ້ງໜ້າໃນການຈັດຕັ້ງໜ້າໃນການການຈັດຕັ້ງປະຕິບັດແນວທາງການປ່ຽນແປງໃໝ່ຂອງພັກທີ່ມີຫຼັກການຂອງພັກ.
- ເຮັດໃຫ້ພະນັກງານ, ສະມາຊິກຍົກສູງຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ດ້ວຍຄວາມຈົ່ງຮັກພັກດີ, ມີຄຸນທາດປະຕິວັດ ສະກັດກັ້ນ ແລະ ຈໍາກັດພະຍາດອາດຍາສິດ, ແນວຄິດໂລບມາກໂລພາ, ສໍ້ລາດບັງຫຼວງ ແລະ ປະກົດການຫໍ້ທໍ້ອື່ນໆໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວ.
- ປົກປ້ອງຊັບສິນບັດຂອງລັດລວມໝູ່ ແລະ ຂອງບຸກຄົນທຸກຊັ້ນຄົນບໍ່ໃຫ້ມີການຕົກເຮ່ຍເສຍຫາ ຫຼື ບຸກຄົນບໍ່ດີ, ສວຍໂອກາດ, ຍັກຍອກສໍ້ໂກງເອົາໄປເປັນຂອງສ່ວນຕົນບຸກຄົນ ຫຼື ສ້າງຄວາມເສຍຫາຍດ້ວຍສາເຫດອື່ນໆ.

## 2. ບັນດາຫຼັກການ ແລະ ຮູບການກວດກາ

### 2.1. ບັນດາຫຼັກການກວດກາ

**ກ. ການນໍາພາຕໍ່ວຽກງານກວດກາ**

- ວຽກງານກວດການແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງພັກ. ດັ່ງນັ້ນ, ຄະນະພັກທຸກຂັ້ນຕ້ອງມີຄວາມຮັບຜິດຊອບ ແລະ ນໍາພາໂດຍກົງຕໍ່ວຽກງານກວດກາຖືວຽກງານກວດກາເປັນໜ້າທີ່ ທີ່ຈໍາເປັນຂອງຕົນປະຕິບັດຕາມທິດນໍາທີ່ວ່າ: ບໍ່ມີການກວດກາກໍ່ບໍ່ມີພັກນໍາພາ ຫຼື ບໍ່ມີການກວດກາແມ່ນການນໍາພາທີ່ບໍ່ຄົບຊຸດ.
- ເຖິງຈະແມ່ນການກວດກາໃນຮູບການໃດ, ຢູ່ບ່ອນ, ເປົ້າໝາຍອັນໃດກໍຕ້ອງອີງໃສ່ແນວທາງ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ. ກໍາລັງແຮງທີ່ເປັນແກ່ນສານຫຼັກແຫຼ່ງໃນການນໍາພາການ

ກວດກາ, ການແກ້ໄຂຜົນຂອງການກວດກາກໍ່ແມ່ນສະມາຊິກໜ່ວຍພັກຄະນະພັກນັ້ນເອງ.

**ຂ. ການກວດການຕອງຮອບດ້ານຄົບຊຸດເລິກເຊິ່ງເຖິງຖອງ**

- ການກວດກາຮອບດ້ານ ແມ່ນການດໍາເນີນ ການກວດກາໃນທຸກຂົງເຂດວຽກງານກວດກາທຸກກົງຈັກການຈັດຕັ້ງພັກ, ລັດ, ມະຫາຊົນ, ແນວລາວສ້າງຊາດ, ຕະຫຼອດຮອດອົງການຈັດຕັ້ງສັງຄົມອື່ນໆ,ກວດແຕ່ລຸ່ມຂຶ້ນເທິງ ກວດແຕ່ເທິງລົງລຸ່ມ ກວດໃຫ້ເຫັນດ້ານດີ ຕັ້ງໜ້າເພື່ອສົ່ງເສີມ, ກວດກາໃຫ້ເຫັນດ້ານ

ອ່ອນຫຍໍ້ທໍ້ ເພື່ອແກ້ໄຂ,ຊອກໃຫ້ເຫັນສາເຫດທີ່ພາໃຫ້ດີ ແລະ ອ່ອນບໍ່ໃຫ້ການຈັດຕັ້ງ ແລະ ບຸກຄົນໃດຢູ່ນອກການກວດກາ.

- ຄົບຊຸດໝາຍວ່າ ການກວດກາແຕ່ລະເປົ້າໝາຍຕ້ອງປະກອບມີຫຼາຍພາກສ່ວນ ທີ່ມີການກ່ຽວພັນເຖິງວຽກງານທີ່ຈະໄດ້ກວດກາ, ພົວພັນເຖິງພາກສ່ວນທີ່ມີຄວາມຮັບຜິດຊອບໃນການແກ້ໄຂຜົນງານການກວດກາ.
- ເລິກເຊິ່ງເຖິງຖອງໝາຍວ່າ ຕ້ອງກວດກາໃຫ້ມັນລະອຽດທີ່ຖ້ວນຊອກໃຫ້ເຫັນອັນໃດຜິດ, ອັນໃດຖືກເຫັນໄດ້ຜູ້ທີ່ມີຜົນງານ, ເຫັນໄດ້ຜູ້ອ່ອນ. ຖ້າມີການຜິດແມ່ນມີເຈດຕະນາ ຫຼື ຮູ້ເທົ່າບໍ່ເຖິງການ ຫຼື ມີການບັງຄັບກໍ່ຕ້ອງໄດ້ວາງວິທີການແກ້ໄຂ.

**ຄ. ລັກສະນະມະຫາຊົນ**

- ກວດກາແມ່ນໜ້າທີ່ຂອງໝົດທຸກຄົນໃນສັງຄົມທີ່ຕ້ອງໄດ້ມີການກວດກາ ເຊິ່ງກັນ ແລະ ກັນ
- ກວດກາທີ່ມີຄຸນນະພາບຕ້ອງປຸກລະດົມໃຫ້ໄດ້ກຳລັກແຮງສັງລວມ ໃນສັງຄົມເຂົ້າຮ່ວມນັບທັງກຳລັງແຮງຢູ່ໃນເປົ້າໝາຍທີ່ຖືກຕ້ອງກວດກາ ແລະ ນອກເປົ້າໝາຍຂອງການກວດກາ . ໝາຍຄວາມວ່າຕ້ອງປຸກລະດົມບັນດາພະນັກງານ, ສະມາຊິກພັກ, ມະຫາຊົນທຸກອົງການຈັດຕັ້ງຂອງພັກ - ລັດ, ອົງການຈັດຕັ້ງມະຫາຊົນ ແລະ ສັງຄົມອື່ນໆ ເຂົ້າຮ່ວມໃນການກວດກາ.
- ມະຫາຊົນເປັນກຳລັງຫຼວງ, ເປັນຫູ, ເປັນຕາແມ່ນຢູ່ນຳມະຫາຊົນ, ມະຫາຊົນເປັນຜູ້ຮັບຮູ້, ເປັນຜູ້ເຫັນເປັນຜູ້ຮ່ວມການກວດກາຈຶ່ງມີປະສິດທິຜົນດີ ເພາະມະຫາຊົນແມ່ນກຳລັງຫຼວງ, ທຸກການເຄື່ອນໄຫວພຶດຕິກຳຕ້ອງສະແດງອອກໂດຍຜ່ານມະຫາຊົນ. ສະນັ້ນ, ວຽກງານກວດກາຈຶ່ງເປັນວຽກງານທີ່ຫ່າງເຫີນອອກຈາກມະຫາຊົນບໍ່ໄດ້.

**ງ. ການກວດກາຕ້ອງຊັດເຈນຖືກຕ້ອງພາວະວິໄສ**

- ເວລາດຳເນີນການກວດກາຕ້ອງຄົ້ນຄວ້າຕົກລົງບັນໃຊ້ເຈນ ຖືກຕ້ອງຕາມຄວາມເປັນຈິງຂອງເຫດການສອດຄ່ອງກັບແນວທາງ, ກົດລະບຽບຂອງພັກ - ລັດກົດໝາຍຂອງລັດ.
- ການສະຫຼຸບຕີລາຄາຕ້ອງໃຫ້ຖືກຕ້ອງເປັນທຳມີຂໍ້ມູນ ແລະ ຫຼັກຖານຢັ້ງຢືນການກຳນົດທິດທາງແກ້ໄຂຕ້ອງໃຫ້ແທດເໝາະ, ສົມເຫດສົມຜົນ.
- ການແກ້ໄຂຕ້ອງມີຄວາມເດັດຂາດ, ບໍ່ລຳອຽງ, ບໍ່ພ້ອມພຸ້ນພ້ອມພີ້, ບໍ່ມະລຸ່ມມະລ່ອຍເຫັນໃຈກັນ, ຕ້ອງປະຕິບັດໃຫ້ຖືກຕ້ອງຕາມການຕົກລົງ, ຖືກຕາມການຊີ້ນຳຂອງຂັ້ນເທິງ ໂດຍສະເພາະແມ່ນຖືກຕ້ອງຕາມລະບຽບຂອງພັກ, ກົດໝາຍຂອງລັດ.

**ຈ. ການກວດກາຕ້ອງເປີດເຜີຍ**

- ດຳເນີນການກວດກາຕ້ອງດຳເນີນຢ່າງເປີດເຜີຍ, ຕ້ອງເຮັດໃຫ້ມະຫາຊົນໄດ້ຮັບຮູ້, ໄດ້ເຊື່ອມຊຶມເຂົ້າໃຈໄດ້ເຂົ້າຮ່ວມປະກອບຄຳຄິດເຫັນຕໍ່ຈຸດປະສົງ, ເນື້ອໃນ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດແຜນການກວດ ກາ.
- ສຳເລັດການກວດກາເປົ້າໝາຍໃດໜຶ່ງ, ກໍຕ້ອງໄດ້ເຜີຍແຜ່ຜົນຂອງການກວດກາໃຫ້ມະຫາຊົນ, ພະນັກງານ, ສະມາຊິກພັກຢູ່ພາຍໃນເປົ້າໝາຍ ຫຼື ນອກເປົ້າໝາຍທັງດ້ານດີ ແລະ ດ້ານຕັ້ງໜ້າ, ດ້ານອ່ອນດ້ານຫໍ້ທໍ້ພ້ອມວິທີແກ້ໄຂດັບແປງໃນຕໍ່ໜ້າເພື່ອເປັນການສຶກສາອົບຮົມທາງດ້ານການເມືອງ - ແນວຄິດເປັນການບອກຂ່າວກ່າວເຕືອນໃຫ້ທຸກຄົນມີສະຕິ ເປັນເຈົ້າການຕອບໂຕ້ການກະທຳທີ່ບໍ່ດີ, ເປັນການຢືນຢັນແນວຄິດ ແລະ ການກະທຳຂອງພວກສວຍໂອກາດທີ່ຈະສໍ້ລາດບັງຫຼວງໃຫ້ຫຼຸດນ້ອຍຖອຍລົງ.

### 2.2. ຮູບການກວດກາ

**ກ. ການກວດກາປົກກະຕິຂອງພັກ**

- ໃນເມືອການຈັດຕັ້ງ, ສະມາຊິກພັກ ແລະ ພະນັກງານມີການເຄື່ອນໄຫວປົກກະຕິ, ວຽກງານກວດກາກໍຕ້ອງໄດ້ເຮັດເປັນປົກກະຕິຕິດແໜ້ນກັບບັນດາວຽກງານ ແລະ ການເຄື່ອນໄຫວ ຂອງສະມາຊິກພັກ ພະນັກງານດັ່ງກ່າວ.
- ການກວດກາປົກກະຕິແມ່ນການກວດກາຂອງຄະນະພັກ ອຳນາດການປົກຄອງ - ຫົວໜ້າກົມກອງ ສານັກງານຕ່າງໆເປັນຜູ້ດຳເນີນຕາມແຜນປົກກະຕິຕາມພາລະບົດບາດ, ສິດໜ້າທີ່ຂອບເຂດ ຄວາມຮັບຜິດຊອບຂອງຕົນ ໂດຍຜ່ານການສະຫຼຸບຕີລາຄາສະພາບແຕ່ລະດ້ານປະຈຳເດືອນລາຍງານໃຫ້ຂັ້ນເທິງ.
- ເນື້ອໃນແມ່ນການປະຕິບັດມະຕິຄຳສັ່ງຂອງພັກ ກົດໝາຍຂອງລັດ, ການຮ່ວມຊີວິດພັກ, ຈຳນີຕິຊົມກັນການແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ.

**ຂ. ການກວດກາຂອງຄະນະກຳມະການກວດກາ**

ຮູບການກວດການີ້ແມ່ນ ຄະນະກຳມະການກວດກາແຕ່ລະຂັ້ນດຳເນີນຕາມໜ້າທີ່. ທີ່ໄດ້ກຳນົດໄວ້ໃນມາດຕາ 38 ແລະ 40 ໝວດທີ 9 ຂອງກົດລະບຽບພັກສະໄໝທີ 8 ແລະ ດຳເນີນການກວດກາຕາມຄຳສັ່ງຂອງຄະນະພັກຂັ້ນເທິງ ຫຼື ຂັ້ນກົມຂອງຕົນ. ກວດກາການກ່າວຟ້ອງ, ຮ້ອງທຸກພະນັກງານ, ສະມາຊິກພັກ, ຕະຫຼອດຮອດປະຊາຊົນ.

## 3. ເນື້ອໃນ ແລະ ເປົ້າໝາຍຂອງການກວດກາ

### 3.1. ເນື້ອໃນກວດກາ

**ກ. ກວດກາພັກ**

- ແມ່ນກວດກາອົງການຈັດຕັ້ງພັກ ແລະ ສະມາຊິກພັກໃນການປະຕິບັດລະບຽບຂອງພັກ. ມະຕິຄຳສັ່ງຂອງພັກ, ກົດໝາຍຂອງລັດ ການປະຕິບັດຫຼັກການລວມສູນປະຊາທິປະໄຕຂອງພັກ. ມີການກວດກາມີການສະຫຼຸບຕີລາຄາ, ສິ່ງເສີມດ້ານຕັ້ງໜ້າ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຜົນຂອງການກວດກາ.
- ຄະນະກຳມະການກວດກາຂັ້ນເທິງ ມີສິດກວດກາປະຕິບັດວິໄນຕໍ່ບັນດາການຈັດຕັ້ງພັກຂັ້ນລຸ່ມໂດຍຮູບການດັ່ງນີ້

- **ການຈັດຕັ້ງພັກ**
  - ຕິຕຽນ
  - ກ່າວເຕືອນ
  - ຍຸບການຈັດຕັ້ງ
- **ສະມາຊິກພັກ**
  - ຕິຕຽນ
  - ກ່າວເຕືອນ
  - ປົດຕຳແໜ່ງ
  - ໂຈະການຮ່ວມຊີວິດພັກຊົ່ວຄາວສູງສຸດບໍ່ເກີນ 6 ເດືອນ
  - ເອົາອອກຈາກພັກ
- **ກວດກາການເງິນຂອງພັກ**
  - ເງິນທີໄດ້ຮັບຈາກງົບປະມານລັດ
  - ເງິນສະຕິພັກ
  - ຄັງສະໜັບສະໜູນພັກ
  - ລາຍຮັບອື່ນໆອີກຂອງພັກ

**ຂ. ກວດກາລັດ**

ພັກນຳພາລັດ, ກວດກາລັດ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ ດັ່ງນີ້:

- ພັກນຳພາແຜນນະໂຍບາຍ, ນຳພາວຽກແນວຄິດ, ການຈັດຕັ້ງ, ພະນັກງານ, ຕິດຕາມ ແລະ ກວດກາການປະຕິບັດວຽກງານຂອງບັນດາອົງການດັ່ງກ່າວຂ້າງເທິງ.
- ກວດກາການຫັນເອົາແຜນນະໂຍບາຍຂອງພັກຊອກເຫັນບົດຮຽນທີ່ດີ ແລະ ຫົວຄິດປະດິດສ້າງຂອງມະຫາຊົນ ເພື່ອເສີມຂະຫຍາຍດ້ານຈັດຕັ້ງໜ້າ, ດັດແປງຈຸດອ່ອນທີ່ຄົງຄ້າງ ແລະ ປະກົດການຫຍໍ້ທໍ້ຕ່າງໆໃຫ້ທ່ວງທັນເວລາ.
- ພັກກວດກາການເຄື່ອນໄຫວໃນການເຊື່ອມຊຶມ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ກົດໝາຍຂອງລັດ ໂດຍສະເພາະ ແຜນການປະຕິບັດແຜນງານບຸລິມະສິດຂອງລັດຖະບານທີ່ໄດ້ຜ່ານສະພາຮັບຮອງເອົາແລ້ວ.
- ພັກກວດກາ, ຄຸ້ມຄອງ, ນຳໃຊ້, ກໍ່ສ້າງ, ບຳລຸງຖັນແຖວພະນັກງານສະມາຊິກພັກເຊົ້າໃນການຈັດຕັ້ງຂອງລັດ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສັງຄົມ. ພ້ອມກັນນັ້ນ ພັກກໍ່ຮັບຟັງການຕຳນິສິ່ງຂ່າວຂອງອົງການຈັດຕັ້ງດັ່ງກ່າວ.
- ກວດກາການປະຕິບັດຫຼັກການທາງດ້ານງົບປະມານ, ການເງິນ, ທະນາຄານ, ລາຍຮັບ - ລາຍຈ່າຍ ການຄຸ້ມຄອງ ແລະ ນຳໃຊ້ທຶນຮອນ, ພາຫະນະຊັບສິນ ແລະ ການແບ່ງປັນຜົນປະໂຫຍດຂອງລັດໃຫ້ແກ່ສັງຄົມ.

**3.2. ເປົ້າໝາຍການກວດການ**

- ສະມາຊິກພັກ ແລະ ພະນັກງານ, ລັດຖະກອນທຸກຄົນ, ທຸກໆອົງການຈັດຕັ້ງຂອງພັກ - ລັດ ແນວລາວສ້າງຊາດ, , ອົງການຈັດຕັ້ງມະຫາຊົນ, ແລະ ສັງຄົມອື່ນໆຕ້ອງໄດ້ຮັບການກວດກາທັງໝົດ, ນັບທັງບ່ອນທີ່ດີ ແລະ ບ່ອນທີ່ອ່ອນ ເພື່ອມີບົດຮຽນ.
- ບຸກຄົນຫົວໜ່ວຍການຜະລິດ, ທຸລະກິດ, ກົມກອງ, ສຳນັກງານອົງການທີ່ມີການລະເມີດ, ລະບຽບກົດໝາຍ, ສໍ້ລາດບັງຫຼວງ, ທັງຂອງລັດ ແລະ ເອກະຊົນ
- ບຸກຄົນ ຫຼື ການຈັດຕັ້ງທີ່ມີປະກົດການທີ່ບໍ່ດີ, ມີຫາງສຽງຈົ່ມວ່າ ແລະ ບຸກຄົນຮັ່ງມີຜິດປົກກະຕິໄວວາ.
- ບັນດາຫົວໜ່ວຍ, ກະຊວງ, ອົງການທີ່ມີໜ້າທີ່ຄຸ້ມຄອງ, ຮັກສາວັດຖຸເງິນຄຳຊັບສົມບັດຂອງລັດຕ້ອງໄດ້ເອົາໃຈໃສ່ກວດກາເປັນປົກກະຕິ.

## 4. ວິທີການ ແລະ ບາດກ້າວຂອງການກວດກາ

**4.1. ວິທີການ**

- ການກວດກາຕ້ອງອີງໃສ່ການຈັດຕັ້ງພັກເພາະອົງການຈັດຕັ້ງພັກແມ່ນອົງການການນຳ, ຄຸ້ມຄອງສຶກສາອົບຮົມ, ຝຶກຝົນສະມສຊິກພັກ ແລະ ການຈັດຕັ້ງພັກຂັ້ນລຸ່ມ
- ການກວດກາຕ້ອງຕິດແໜ້ກັບການເສີມຂະຫຍາຍຄວາມຕື່ນຕົວຂອງການຈັດຕັ້ງພັກ ແລະ ສະມາຊິກພັກ ຕ້ອງປົກລະດົມ ແລະ ເສີມຂະຫຍາຍໃຫ້ໄດ້ຄວາມຕື່ນຕົວຂອງການຈັດຕັ້ງພັກ, ສະມາຊິກພັກເພື່ອດຳເນີນການກວດກາດ້ວຍຕົນເອງ
- ການກວດກາຕ້ອງຕິດແໜ້ນກັບການເສີມຂະຫຍາຍບົດບາດຂອງມະຫາຊົນໃນການກໍ່ສ້າງພັກ, ຕ້ອງປຸກລະດົມມະຫາຊົນເຂົ້າຮ່ວມໃນການກໍ່ສ້າງພັກດ້ວຍການປະກອບສ່ວນເຂົ້າໃນການກວດກາ, ການເຄື່ອນໄຫວຂອງການຈັດຕັ້ງພັກ ແລະ ຄຸນທາດຂອງພະນັກງານສະມາຊິກພັກ

- ການກວດກາຕ້ອງມີຂໍ້ມູນຫຼັກຖານທີ່ຊັດເຈນຕາມຄວາມຮຽນກຮ້ອງຕ້ອງ ການຂອງວຽກງານກວດກາຕ້ອງຕີລາຄາສະຫຼຸບໃຫ້ຖືກຕ້ອງກັບອັນດີ - ອັນອ່ອນ ຫຼື ການລະເມີດລະບຽບ ແລະ ກົດໝາຍຂອງຈັດຕັ້ງພັກກັບຄວາມເປັນຈິງ
- ການກວດກາຕ້ອງມີການປະສານສົມທົບແໜ້ລະຫວ່າອົງການຈັດຕັ້ງພັກ - ລັດກັບອົງການຈັດຕັ້ງຕ່າງໆໃນລະບົບການເມືອງ

## 4.2. ບາດກ້າວຂອງການກວດກາ

### ກ. ບາດກ້າວກະກຽມ

- ກໍາໄດ້ແໜ້ນສະພາບເຫດການ, ຂໍ້ມູນ ແລະ ຫຼັກການ,ອາດມີການປະສານສົມທົບຫຼາຍການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວພັນໃຫ້ເຂົາເຈົ້າສະໜອງຂໍ້ມູນຂ່າວສານ ຫຼັກການຕ່າງໆທີ່ເຂົາເຈົ້າສາມາດຮູ້ໄດ້ສະພາບເປົ້າໝາຍທີ່ພວກເຮົາຈະກວດກາ.
- ສ້າງແຜນການດໍາເນີນການກວດກາກໍານົດແຈ້ງຈຸດປະສົງຄວາມໝາຍເນື້ອໃນ, ບາດກ້າວຂັ້ນຕອນການປະຕິບັດ ແລະ ສິ້ນສຸດການອອກຂໍ້ກໍານົດຕ່າງໆ, ພະນັກງານຜູ້ທີ່ດີບໍ່ມີການກ່ຽວພັນເຖິງເປົ້າໝາຍທີ່ຖືກກວດກາ
- ຮ່າງຂໍ້ເຈາະຈີ້, ຕັ້ງຄໍາຖາມຕ້ອງໃຫ້ແທດເໝາະກັບສະພາບ ແລະ ເຫດການທີ່ເກີດຂຶ້ນພ້ອມທັງການກະກຽມເອກະສານຕ່າງໆຂໍ້ກໍານົດ,ກົດລະບຽບ, ມະຕິ, ດໍາລັດ ແລະ ເອະສານອື່ນໆທີ່ເຫັນວ່າພົວພັນເຖິງການຮັບໃຊ້ໃຫ້ແກ່ການກວດກາຄັ້ງນີ້.
- ຕັ້ງຝຶກອົບຮົມເຜີຍແຜ່ແນະນໍາໃຫ້ພະນັກງານທີ່ຈະລົງໄປກວດກາເຂົ້າໃຈແຈ້ງເລິກເຊິ່ງຕໍ່ຈຸດປະສົງລະດັບຄາດໝາຍ, ເນື້ອໃນວິທີການ, ບາດກ້າວປະຕິບັດຕ່າງໆເພື່ອບໍ່ໃຫ້ຖືກທ່າຮັບ.
- ກະກຽມງົບປະມານ, ວັດຖຸອຸປະກອນ, ພາຫະນະຮັບໃຊ້ຕ່າງໆທີ່ເຫັນວ່າຈໍາເປັນໃນການກວດກາ.

### ຂ. ບາດກ້າວດໍາເນີນການກວດກາຕົວຈິງ

- ເຂົ້າພົບຄະນະພັກ,ອໍານາດລັດ ຫຼື ຫົວໜ້າຄະນະຮັບຜິດຊອບທີ່ຖືກກວດການັ້ນເພື່ອແຈ້ງຈຸດປະສົງລະດັບຄາດໝາຍ, ຈິດໃຈທີ່ຢາກໄດ້ໃນແຜນການໃຫ້ຄະນະພັກຊາບ ພ້ອມທັງປຶກສາຫາລືວິທີຈັດຕັ້ງການກວດກາຕົວຈິງ.
- ເຕົ້າລວມພະນັກງານລັດຖະກອນທັງໝົດ ຢູ່ສະຖານະການທີ່ໃດໜຶ່ງ ທີ່ຖືກກວດກາແລ້ວເຜີຍແຜ່ແຜນການຂໍ້ເຈາະຈີ້ມ ກໍານົດເວລາຕາຕະລາງລະອຽດຂອງການເຮັດວຽກ.
- ລາຍງານຈາກເປົ້າໝາຍທີ່ຖືກກວດກາ ກ່ຽວກັບການເຄື່ອນໄຫວປະຕິບັດພາລະໜ້າທີ່ທັງດ້ານດີ ແລະ ດ້ານອ່ອນ, ບົດຮຽນທີ່ຖອດຖອນໄດ້.
- ຖ້າຈໍາເປັນອາດຈະໃຫ້ພະນັກງານເກັບກໍາສະພາບ ແລະ ຂໍ້ມູນຕື່ມ, ບັນຫາໃດບໍ່ທັນແຈ້ງຢູ່ໃນບັນດາຂະແໜງການຂອງກົມກອງຕ່າງໆທີ່ກ່ຽວພັນ.
- ຜ່ານໃບສໍາຫຼວດບຸກຄົນ, ສະມາຊິກພັກ.
- ປັບປຸງຄືນບົດສະຫຼຸບລາຍງານ ຂອງບ່ອນຖືກກວດກາ ຄືນໃຫ້ຄົບຖ້ວນແລ້ວໃຫ້ຜູ້ຮັບຜິດຊອບເຊັນຢັ້ງຢືນບົດລາຍງານດັ່ງກ່າວ.

- **ສະຫຼຸບຜົນຂອງການກວດກາ**
  - ຄະນະທີ່ຖືກແຕ່ງຕັ້ງຄະນະຮັບຜິດຊອບກວດກາ ຂຽນບົດລາຍງານຂໍທິດຊີ້ນໍາຈາກຂັ້ນເທິງຕົນໃນບົດລາຍງານຕ້ອງເວົ້າແຈ້ງເຖິງສະພາບ ແລະ ເຫດການເກີດຂຶ້ນ, ກໍານົດຈະແຈ້ງດ້ານການລະເມີດຂອງການຈັດຕັ້ງ ແລະ ບຸກຄົນໃຫ້ຈະແຈ້ງວ່າລະເມີດຕໍ່ຂໍ້ກໍານົດກົດລະບຽບ ແລະ ກົດໝາຍຂໍ້ໃດ ມາດຕາໃດພ້ອມທັງສະເໜີວິທີການແກ້ໄຂໃນແຕ່ລະກໍລະນີຂອງການຈັດຕັ້ງ ແລະ ບຸກຄົນບົດລາຍງານດັ່ງກ່າວຕ້ອງໄດ້ຜ່ານເອກະພາບກັນກັບຄະນະພັກ. ອໍານາດລັດບ່ອນທີ່ຖືກກວດການັ້ນ.

- ເມື່ອຄະນະພັກຂັ້ນເທິງໄດ້ມີຄໍາເຫັນຕົກລົງທິດໃນການແກ້ໄຂແລ້ວ ຈຶ່ງແຈ້ງຕອບໃຫ້ເປົ້າໝາຍ ເພື່ອປະຕິບັດ ພ້ອມນີ້ກໍສະເໜີໃຫ້ຄະນະທີ່ກ່ຽວຂ້ອງເປັນຜູ້ຮັບຜິດຊອບໃນການແກ້ໄຂຕໍ່ໄປ.

## ຄໍາຖາມຄົ້ນຄວ້າ :

1. ຈົ່ງບອກຄວາມສໍາຄັນຂອງພັກນໍາພາ ?
2. ວຽກງານກວດກາມີຄວາມສໍາຄັນແນວໃດ ?
3. ພັກນໍາພາໝາຍເຖິງຫຍັງ ?

# ບົດທີ 10

## ຄວາມຮູ້ພື້ນຖານກ່ຽວກັບກົດໝາຍແພ່ງ, ແຮງງານ ແລະ ຄອບຄົວ.

### 1. ກົດໝາຍແພ່ງ.

**ມາດຕາ1(ປັບປຸງ). ຈຸດປະສົງ**

ກົດໝາຍສະບັບນີ້ກໍານົດຫຼັກການ, ລະບຽບການ ແລະ ມາດຕາການຂອງການດໍາເນີນຄະດີເພື່ອແກ້ໄຂຂໍ້ຂັດແຍ່ງຫຼືການຮ້ອງຂໍທາງແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານໃຫ້ຖືກຕ້ອງຕາມຄວາມເປັນຈິງສອດຄ່ອງກັບກົດໝາຍ ແລະ ມີຄວາມຍຸດຕິທໍາແນໃສ່ປົກປັກຮັກສາລະບອບເສດຖະກິດ - ສັງຄົມປົກປ້ອງກໍາມະສິດຂອງລັດ, ລວມໝູ່, ອົງການຈັດຕັ້ງ, ວິສະກັດກັ້ນການລະເມີນກົດໝາຍ ສຶກສາອົບຮົມ ສະຕິເຄົາລົບແລະປະຕິບັດກົດໝາຍຢ່າງເຂັ້ມງວດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງ ຄົມຂອງປະເທດຊາດ.

**ມາດຕາ2 (ປັບປຸງ) ການດໍາເນີນຄະດີແພ່ງ.**

ຄະດີແພ່ງ ແມ່ນຂໍ້ຂັດແຍ່ງຂອງສາຍພົວພັນ ທີມີລັກສະນະຊັບສິນບັດ ເຊັ່ນ ກໍາມະສິດກ່ຽວກັບ ວັດຖຸສິ່ງຂອງ, ເງິນ, ຄໍາ, ຊັບສິນທາງປັນຍາແລະບາງສາຍພົວພັນສ່ວນຕົວ ທີ່ບໍ່ມີລັກສະນະຊັບສິນບັດ ເຊັ່ນ : ຊື່ນາມສະກຸນ, ກຽດສັກສີ.

ການດໍາເນີຄະດີແພ່ງແມ່ນ ການເຄື່ອນໄຫ່ວຂອງສານ ແລະ ຂອງຜູ້ເຂົ້າຮ່ວມໃນການດໍາເນີນ ຄະດີເພື່ອພິຈາລະນາແກ້ໄຂການຮ້ອງຟ້ອງ ແລະ ການຮ້ອງຂໍທາງແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຂໍ້ຂັດແຍ່ງອື່ນໆ ຕາມທຮ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ. ການດໍາເນີນຄະດີແພ່ງແມ່ນລວມ ທັງຄະດີການຄ້າ, ຄອບຄົວ, ເດັກ ແລະ ແຮງງານ.

**ມາດຕາ3 (ໃໝ່). ການອະທິບາຍຄໍາສັບ.**

ຄໍາສັບຕ່າງໆທີ່ນໍາໃຊ້ໃນກົດໝາຍສະບັບນີ້ມີຄວາມໝາຍດັ່ງນີ້.

1. ການຮ້ອງຟ້ແອງໝາຍເຖິ່ງ ການສະເໜີໃຫ້ສານພິຈາລະນາແກ້ໄຂຂໍ້ຂັດແຍ່ງກ່ຽວກັບຂະດີແພ່ງການຄ້າ, ຄອບຄົວ, ເດັກ ແລະ ແຮງງານ.

2. ການຮ້ອງຂໍ່ໝາຍເຖິງ ການສະເໜີໃຫ້ສານພິຈາລະນາ ຮັບຮູ້, ຢັ້ງຢືນຫຼືປະກາດກ່ຽວກັບບັນຫາໃດໜຶ່ງທີ່ບໍ່ເປັນຂໍ້ຂັດແຍ່ງ ເຊັ່ນ: ເປັນຜູ້ຫາຍສາບສູນ, ການຍັ້ງຢືນໃບຕາດິນ ເສຍຫາຍຫຼືປະກາດເປັນຜູ້ເສຍຊີວິດ.

3. ການໂຕ້ແຍ້ງໝາຍເຖິງ ການຊີແຈງຂອງຄູ່ຄວາມຝາຍໃດຝາຍໜຶ່ງ ຕໍ່ຂໍ້ສະເໜີຫຼື ຫຼັກການທີ່ຄູ່ຄວາມຝາຍກົງກັນຂ້າມຍົກ ຂຶ້ນ ໃນໄລຍະການດໍາເນີນຄະດີ ກ່ອນກ່ານເປີດປະຊຸມສານ.

4. ການໂຕ້ຖຽງໝາຍເຖິງ ການຊີແຈງຂອງຄູ່ຝາຍໃດໜຶ່ງ ຕໍ່ຂໍ້ສີເໜີຫຼືຫຼັກຖານທີ່ຄູ່ຝາຍກົງກັນຂ້າມຍົກຂຶ້ນ ໃນປະຊຸມສານ.

5. ການສອບສ່ວນໝາຍເຖິງການສອບຖາມຫຼືການເອົາຄໍາໃຫ້ການຂອງສານກ່ອນການເປີດປະຊຸມ.

6. ຄໍາໃຫ້ການໝາຍເຖິງ ຂໍ້ມູນທີ່ໄດ້ມາຈາກການສອບສ່ວນຄູ່ຄວາມແລະຜູ້ທີ່ກ່ຽວຂ້ອງອື່ນ.

7. ການໄຕ່ສ່ວນໝາຍເຖິງ ການສອບຖາມຂອງຄະນະສານໃນທີ່ປະຊຸມສານ.

8. ຂໍ້ຕົກລົງໝາຍເຖິງ ເອກະສານຂອງສານ ຊຶ່ປະກອບດ້ວຍຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິ ພາກສາຂອງສານ.

9. ຄໍາສັ່ງໝາຍເຖິງຄໍາຕົກລົງປະເພດໜຶ່ງຂອງສານ ກ່ຽວກັບການດາເນີນຄະດີເຊັ່ນ: ຄໍາສັ່ງຍຶດ ຫຼື ອາຍັດ ຊັບ. ຄໍາສັ່ງຊຸດມຽນຄະດີ,ຄໍາສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກຍຂອງສານ.

10. ຄໍາຊີ້ຂາດໝາຍເຖິງ ຄໍາຕົກລົງປະເພດໜຶ່ງຂອງສານ ເຊັ່ນ ຄໍາຊີ້ຂາດກ່ຽວກັບສິດອໍານາດຂອງສານ. ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະນາ, ການຕັດຊສິນປະຫານຊີວິດ.

11. ຄໍາຕັດສິນໝາຍເຖິງ ຄໍາຕົລົງປະເພດໜຶ່ງຂອງສານ ທີ່ຕັດສິນເປັນຂັ້ນຕົ້ນ.

12. ຄໍາພິພາກສາໝາຍເຖິງ ຄໍາຕົກລົງປະເພດໜຶ່ງຂອງສານທີຕັດສິນເປັນອຸດອນ ຄໍາສັ່ງ, ຄໍາຊີ້ຂາດ ຫຼື ຄໍາ ຕັດສິນຄັ້ນຕົ້ນ.

13. ການຂໍອຸທອນໝາຍເຖິງ ການຈ່ອງຫຼືຍື່ນຄໍາຮ້ອງຂໍອຸທອນ ຄໍາສັ່ງ,ຄໍາຊີ້ຂາດຫຼືຄໍາຕັດສິນຂອງສານຂັ້ນ ຕົ້ນ.

14. ຄໍາຮ້ອງຂໍອຸທອນໝາຍເຖິງ ຄໍາຮ້ອງຂອງຄູ່ຄວາມຫຼືບຸກຄົນທີສາມາດອ້າງເຫດຜົນໃນການບໍ່ພໍ ໃຈຄາ ສັ່ງ,,ຄໍາຊີ້ຂາດຫຼືຄໍາຕັດສິນຂອງສານຂັ້ນຕົ້ນ.

15. ການຂໍລົບລ້າງໝາຍເຖິງ ການຈອງຫຼຍື່ນຄໍາຂໍລົບລ້າງ ຄໍາສັ່ງ ຄໍາຊີ້ຂາດຫຼືຄໍາພິພາກສາຂັ້ນອຸ ທອນ.

16. ຄໍາຮ້ອງຂໍລົບລ້າງໝາຍເຖິງ ຄາຮ້ອງຂອງຄູ່ຄວາມຫຼືບຸກຄົນທີສາມທີ່ອ້າງເຫດຜົນທາງດ້ານກົດໝາຍ ໃນການບໍ່ພໍໃຈໃນຄໍາສັ່ງ,ຄໍາຊີ້ຂາດຫຼືຄໍາພິພາກສາຂອງສານຂັ້ນຕົ້ນ.

17. ໝາຍເຊີນ ໝາຍເຖິງ ເຊີນ ໜັງສືຂອງສານ ທີ່ເຊີນຜູ້ຕ່າງໜ້າ ຂອງອົງການໄອຍະການປະຊາຊົນ ອົງການຈັດຕັ້ງ ຫຼື ວິສາຫະກິດເຂົ້າຮ່ວມໃນການດໍາເນີນຄະດີຂອງສານ;

18. ເອກະສານອື່ນຂອງສານ ໝາຍເຖິງ ເອກະສານທີ່ກຽ່ວຂ້ອງກັບການດໍາເນີນຄະດີ ເຊັ່ນ: ໝາຍພາຕົວ ບົດບັນທຶກປະຊຸມສານ,ບົດບັນທຶກໃຫ້ການ;

19. ຂໍ້ມູນຂອງຄູ່ ໝາຍເຖິງ ຊື່, ນາມສະກຸນ, ອາຍຸດ ອາຊີບ ແລະ ທີ່ຢູ່ຂອງໂຈດ ຫຼືຈໍາເລີຍ;

20. ຮອບດ້ານໝາຍເຖິງ ການດໍາເນີນຄະດີ ຕ້ອງພິຈາລະນາທຸກຫຼັກຖານ ທີ່ໂຈດຮ້ອງຟ້ອງ ຈໍາເລີຍ ແກ້ຟ້ອງ ຫຼືຟ້ອງແຍ່ງ ລວມທັງຫຼັກຖານຂອງບຸກຄົນທີສາມ;

21. ຄົບຖ້ວນ ໝາຍເຖິງ ການເກັບກໍາຂໍ້ມູນຫຼັກຖານທັງໝົດ ທີ່ກຽ່ວຂອງກັບເຫດການຂອງຄະດີ;

22. ພາວະວິໄສ ໝາຍເຖິງ ການດໍາເນີນຄະດີ ຕອ້ງບົນພື້ນຖານຂໍ້ມູນຫຼັກຖານ,ກົດໝາຍ ແລະ ຄວາມ ຍຸດຕິທໍາ.

23. ຄໍາຊີ້ຂາດຂອງສານ ໝາຍເຖິງ ຄໍາຕົກລົງປະເພດໜຶ່ງຂອງສານ ,ກ່ຽວກັບການຊີ້ຂາດສິດອໍານາດຂອງ ສານ,ການບໍ່ຮັບຄະດີທີ່ພິຈາລະນາ, ຄໍາຕັດສິ້ນປະຫານຊີວິດ ແລະອື່ນໆ

24. ຄະດີຕັດສິນຂອງສານ ໝາຍເຖິງ ຄໍາຕັດສິນຂອງສານຂັ້ນຕົ້ນ;

25. ຄໍາພິພາກສາ ໝາຍເຖິງ ຄໍາຕັດສິນຂອງຂັ້ນອຸທອນ ແລະ ຂໍ້ລົບລ້າງ;

26. ຄໍາຕັດສິນທີ່ໃຊ້ຢາງເດັດຂາດ ໝາຍເຖິງ ຄໍາຕັດສິນພິພາກສາຂອງສານຊຶ່ງຄູຄວາມບໍ່ຂໍ້ອຸທອນ,ລົບ ລ້າງ ຫຼື ອົງການໄອຍະການ, ບໍ່ສະເໜີຄັດຄານຄໍາຕັດສິນ ແລະ ຄໍາພິພາກສາ;

27. ຄໍາຕົກລົງຂອງຫົວໜ້າອົງການໄອຍະການ ໝາຍເຖິງ ຄໍາສະເໜີຄັດຄ້ານຄໍາຕົກລົງບໍ່ຄັດຄ້ານ ,ຄໍາ ຕົກລົງບໍ່ຮື້ຟື້ນ, ຄໍາຕົກລົງລົບລ້າງ;

28.ສານຂໍອຸທອນ ໝາຍເຖິງ ການທີ່ຄູ່ຄວາມ ຫຼື ອົງການໄອຍະການ ບໍ່ພໍໃຈຕໍ່ຄໍາຕັດສິນຂອງສານຂັ້ນຕົ້ນ ແລະ ໄດ້ຂໍອຸທອນ ຫຼື ສະເໜີຄັດຄ້ານ;

29.ການລຶບລ້າງກົດໝາຍ ໝາຍເຖິງ ການທີ່ຄູ່ຄວາມ ຫຼື ອົງການໄອຍະການ ບໍ່ພໍໃຈຂອງສານຂັ້ນອຸທອນ ແລະ ໄດ້ຂໍລຶບລ້າງ ຫຼື ສະເໜີຄັດຄ້ານ;

30. ພຶດຕິກຳ ໝາຍເຖິງ ການກະທຳ ຫຼື ການເມີນເສີຍ;

31. ການໂຕແຍ່ງ ໝາຍເຖິງ ການຊີ້ແຈງ ຕໍ່ຂໍ້ກ່າວຫາ ຫຼື ຫຼັກຖານ ທີ່ໄດ້ຍົກຂຶ້ນ ໃນໄລຍະດຳເນີນະດີ;

32.ການໂຕ້ຖຽງ ໝາຍເຖິງ ການຊີ້ແຈງ ຕໍ່ຂໍ້ກ່າວຫາ ຫຼື ຫຼັກຖານ ທີ່ຍົກຂຶ້ນໃນປະຊຸມສານ;

33. ລະຫະໂທດ ໝາຍເຖິງ ການກະທຳຜິດທີ່ກົດໝາຍກຳນົດໂທດ ຕຳນິວິຈານຕໍ່ໜ້າມະຫາຊົນ ຫຼື ໂທດປັບໃໝ່;

34. ໂທສານຸໂທດ ໝາຍເຖິງ ການກະທຳຜິດທີ່ກຳກົດໝາຍໄດ້ກຳນົດໂທດດັດສ້າງ ໂດຍບໍ່ມີຕັດອິດສາລະພາບແຕ່ແຕ່ສາມເດືອນຫາສິບປີ ແລະ ໂທດປັບໃໝ່;

35.ຄະຣຸໂທດ ໝາຍເຖິງ ການກະທຳຜິດກົດໝາຍໄດ້ກຳນົດໂທດຕັດອິດສາລະພາບ ແຕ່ຫາປີຂຶ້ນໄປຫາຕະຫຼອດຊີວິດພ້ອມທັງໂທດປັບໃໝ ແລະ ໂທດ ປະຫານຊີວິດ.

**ມາດຕາ 6 (ໃໝ່). ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການດຳຄະດີແພ່ງ, ການຄ້າ ,ຄອບຄົວ,ເດັກ ແລະ ແຮງງານທີ່ພົວ ພັນກັບພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດທີ່ມີຂໍ່ຂັດແຍ່ງເກີດຂຶນໃນດິນ ແດນ ສ ປປ ລາວ ລວມທັງ ຂໍ້ຂັດແຍ່ງທັງພົນລະເມືອງລາວດວຍກັນທ ທີ່ເກີດຂຶ້ນຢູ່ນອກດິນແດນຂອງ ສປປ ລາວ ທີ່ຂັດແຍ່ງກັບຄົນຕ່າງປະເທດດ້ວຍກັນ ທີ່ກຳນົດໄວ້ໃນສັນຍາໃຫ້ແກ້ໄຂຕາມຂະບວນການຍຸດຕິທຳຂອງ ສ ປປລາວ.

**ມາດຕາ 8 (ໃໝ່). ຫຼັກການພື້ໃນການດຳເນີນຄະດີແພ່ງ**

**ການດຳເນີນຄະດີແພ່ງ ຕ້ອງປະຕິບັດຕາມຫຼັກພື້ນຖານ ດັ່ງນີ້:**

- ສິດ ແລະ ພັນທະຂອງສານໃນການພິຈາລະນາຕັດສິນຄະດີ;
- ຄວາມສະເໜີພາບຂອງຄູ່ຕໍ່ໜ້າກົດໝາຍ ແລະ ສານ;
- ການໂຕແຍ່ງ ແລະ ການໂຕຖຽງ;
- ການພິຈາລະນາຄະດີເປັນໝູ່ຄະນະ;
- ຄວາມກປັນເອກະລາດຂອງຜູ້ພິພາກສາ;
- ພາສາທີ່ໃນການດຳເນີນຄະດີ;
- ການໄຕ່ສວນຄະດີໃນທີ່ປະຊຸມສນ;
- ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ;
- ການດຳເນີຄະດີຮອບດ້ານ,ຄົວຖ້ວນ ແລະ ວາວະວິໄສ;
- ການໄກ່ເກັ່ຍ;
- ການຂໍຖອນຕົວ ຫຼື ການຄ້ານຕົວ;
- ຂອບເຂດການພິຈາລະນາ ຄຳຮ້ອງຟ້ອງ ຫຼືຄຳຮ້ອງຂໍ້.

**ມາດຕາ 2 (ໃໝ່) ພື້ນຖານຂອງຄວາມຮັບຜິດຊອບທາງອາຍາ**

ບຸກຄົນຜູ້ໃດຈະມີຄວາມຮັບຜິດຊອບທາງອາຍາ ແລະ ຈະຖືກລົງໂທດທາງອາຍາໄດ້ກໍຕໍ່ເມື່ອບຸກຄົນຜູ້ນັ້ນຫາກມີການກະທຳຜິດໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ ທີ່ເປັນອັນຕະ ຫລາຍຕໍ່ສັງຄົມ ຊຶ່ງມີກຳນົດໄວ້ໃນກົດໝາຍອາຍາ ລື ກົດມາຍອື່ນໃນ ສປປ ລາວ ໂທດທາງອາຍາ, ໃນເມື່ອຄຳຕັດສິນຂອງສານເທົ່ານັ້ນ.

**ມາດຕາ 3 (ໃໝ່) ການນຳໃຊ້ກົດໝາຍອາຍາໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກົດໝາຍອາຍາສະບັບນີ້ ມີຜົນສັກສິດໃນທົ່ວ ສ ປປ ລາວ. ບຸກຄົນຜູ້ໃດຫາກຫະທຳຜິດທາງແອາຍາຢູ່ໃນດິນແດນ ສ ປປ ລາວ ກໍຈະໄດ້ຮັບຜິດຊອບຕາມກົດໝາຍອາຍາ ຫຼື ກົດໝາຍ ອື່ນຂອງ ສ. ປປລາວທີ່ໄດ້ກຳນົດໂທຍທາງອາຍາ ຜູ້ຕ່າງໜ້າທາງການທູດ ຫຼືບຸກຄົນທີ່ໄດ້ຮັບອະພິສິດທາງການທູດຕາມສົນ ຍາລະຫວ່າງຊາດຊຶ່ງໄດ້ກະທຳຜິດໃນດິນແດນ ສປປ ລາວ ກໍໄດ້ການແກ້ໄຂທາງດານການທູດ.

**ມາດຕາ 4 .ການນຳໃຊ້ກົດໝາຍອາຍານອກດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ພົນລະເມືອງລາວທີໄດ້ກະທຳຜິດທາງອາຍາຢູ່ນອກດິນແດນ ສ ປປ ລາວ ກໍໄດ້ຮັບຜິດຊອບທາງອາຍາຖ້າວ່າການກະທຳຜິດດັ່ງກາວ ຫາກໄດ້ກຳນົດໄວໃນກົດໝາຍອາຍ ຫຼືກົດໝາຍຂອງ ສ ປປ ລາວທີ່ກຳນົກໂທຍທາງອາຍາ. ຄົນຕ່າງດ້າວ ແລະ ບຸກຄົນທີ່ບໍ່ມີສັນຊາດທີ່ຢູ່ ຫຼື ອາໃສ່ໃນ ສປປ ລາວ ຈະໄດ້ຮັບຜິດ ຊອບທາງອາຍາຕໍ່ກົດໝາຍຂອງ ສປປ ລາວ ໃນກໍ່ລະນີທີ່ກຳນົດໄວ້ໃນສົນຍາ.

**ມາດຕາ 5. ການນຳໃຊ້ົດໝາຍອາຍາໃນກາລະເວລາ**

ກົດໝາຍສະບັບນີ້ນຳອອກປະຕິບັດແຕ່ວັນທີ່ກົດມາຍທີ່ຖືກປະກາດ ໃຊ້ເປັນຕົນໄປ.ກົດໝາຍໃໝ່ທີ່ກຳນົດການລົງໂທດເບົາກ່ວາ ຫຼື ໄດ້ລົບລາງການກະທຳຜິດທາງອາຍາທີ່ກົດເກົ່າທີ່ໄດ້ກຳນົດໄວ້ ຈະມີຜົນສັກສິດຍ້ອນຫຼັງ ກົດໝາຍໃໝ່ທີ່ກຳນົດການກະທຳຜິດໃໝ່ ຫຼື ການລົງໂທດໜັກກວ່າທີ່ກົດໝາຍ.

**ມາດຕາ 6 (ໃໝ່) ນິຍາມການກະທຳຜິດ**

ທຸກການກະທຳ ຫຼື ການເມີນເສີຍທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ຫຼື ສັງຄົມຂອງ ສປປ ລາວ , ຕໍ່ກຳມະສິດຂອງລັດ, ຂອງລວມໝູ່, ແລະ ຂອງບຸກຄົນ, ຊີວິດ, ສຸຂະພາບ, ກຽດສັກສີສິດເສລີພາບຂອງພົນລະເມືອງ,ຄວາມສະຫງົບຂອງຊາດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຊຶ່ງບົ່ງບອກໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນຂອງ ສ ປປ ລາວທີ່ກຳນົດໂທດທາງອາຍາຈະຖືການກະທຳຜິດທາງອາຍາ ທຸກການກະທຳຜິດ ຫຼື ການເມີນເສີຍທີ່ມີການປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນ ແຕ່ໄດ້ກໍ່ຄວາມເສັຍຫາຍຕໍ່າກ່ວາ 500.000ກີບ ຈະບໍ່ຖືວ່າເປັນການກະທຳຜິດທາງອາຍາ ຍົກເວັ້ນການກະທຳຜິດທີ່ບໍ່ເຂັດຫຼາບ.

**ມາດຕາ 7 (ໃໝ່) ອົງປະກອບຂອງການກະທຳຜິດ**

**ຄະນະສານແພ່ງ ມີສິດອຳນາດ ພິຈາລະນາຕັດສິນຄະດີດັ່ງນີ້:**

1. ຂໍ້ຂັດແຍ່ງກຽ່ວກັບກາມະສິດ ແລະ ມູນມໍລະດົກ.

2. ຂໍ້ຂັດແຍງກຽ່ວກັບສາຍພົວພັນທາງແພ່ງ ຍົກເວັ້ນຂໍ້ຂັດແຍ່ງທາງການຄ້າທີ່ໄດ້ການກຳນົດໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້:

3. ຂໍ້ຂັດແຍາງກ່ຽງກັບການທວງເອົ້າການນໍ້າໃຊ້ແທານຄ່າເສຍເຫຍ

4.ຂໍ້ຂົ້ດແຍ່ງ ກ່ງວກັບສາຍພົວພັນທາງດ້ານບໍ່ລິຫານ

**ມາດຕາ 32 ຄະດີທາງດ້ານບໍ່ລິຫານ**

ຄະດີກ່ຽວກັບສາຍພົວພັນທາງດ້ານບໍ່ລິຫານ ທີ່ບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ຊຶ່ງສານພິຈາລະນາຕັດສິນມີດັ່ງນີ້:

1. ຄະດີກ່ຽວກັບການຜິດພາດ ໃນການຂຶ້ນບັນຊີຜູ້ມີສິດເລືອກຕັ້ງ ຊຶ່ງຄະນະກຳມະການ ເລືອກຕັ້ງບໍ່ສາມາດແກ້ໄຂໄດ້.

2. ຄະດີກຽ່ວການກະທຳຂອງພະນັກງານອົງການບໍລິຫານ ກຽ່ວກັບການປັບໃໝ່, ການເກັບອາ ກອນລາຍໄດ້ທີ່ບໍ່ຖືກຕ້ອງ ແລະ ອື່ນໆ.

3. ຄະດີກຽ່ວການຮິບຊັບສິ່ງຂອງໂດຍບໍ່ຖືກຕ້ອງ.

4. ຄະດີກ່ຽວກັບການຜິດພາດອື່ນ ໃນຂົງເຂດບໍລິຫານ.

**ມາດຕາ34. ຄະດີກ່ຽວກັບແຮງງານ**

ຄະດີກ່ຽວກັບແຮງງານ ຊຶ່ງສານຈະພິຈາລະນາຕັດສິນໄດ້ນັ້ນ ກໍ່ຕໍ່ເທື່ອອົງການຄຸ້ມຄອງແຮງງານ ຫຼື ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບແຮງງານ ຫາກບໍ່ສາມາດແກ້ໄຂໄດ້ມີດັ່ງນີ້:

1. ຂໍ້ຂັດແຍ່ງກ່ຽວກັບການສັນຍາແຮງງານ.

2. ຂໍ້ຂັດແຍ່ງກ່ຽວກັບເງິນອຸດໜູນ ເນື່ອງຈາກຍົກເລີກສັນຍາແຮງງານໂດຍບໍ່ຖືກຕ້ອງ.

3. ຂໍ້ຂັດແຍ່ງ ກ່ຽວກັບຮ້ອງຂໍ້ຄ່າເສຍຫາຍ ຈາກອຸປະຕິເຫດແຮງງານ ຫຼືພະຍາດອາຊີບ;

4. ຂໍ້ຂັດກ່ຽວກັບເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ;

5. ຂໍ້ຂັດແຍ່ງອື່ນກ່ຽວກັບແຮງງານ

**ມາດຕາ37.**(ປັບປຸງ) ສິດອຳນາດຄະນະສານການຄ້າ ໃນການພິຈາລະນາການຮ້ອງຟ້ອງຄະນະສານການຄ້າມີສິດອຳນາດໃນການຕັດສິນຄະດີກ່ຽວກັບ:

1. ສັນຍາຮຸ້ນສ່ວນ;

2. ສັນຍາທາງດ້ານທຸລະກິດ, ການຄ້າ ຫຼື ເອກະສານການຄ້າ ເຊັ່ນ ໃບສັນຍາໃຊ້ໜີ້, ພັນທະບັດ ແລກເງິນ, ເຊັກ.

3. ສັນຍາກູຍືມທາງການຄ້າ.

4. ການລົ້ມລາຍ ຂອງວິຊາຫະກິດ ແລະ ການສຳລະສະສາ

5. ການສົ່ງອອກ ຫຼື ນຳເຂົ້າສິນຄ້າ ,ການປະກັນໄພ;

6. ຂໍ້ຂັດແຍ່ງ ແລະ ຄຳຮ້ອງກ່ຽວການລະເປີດຊັບສິນທາງປັນຍາ ເປັນຕົ້ນລິຂະສິດ, ເຄື່ອງໝາຍການຄ້າ, ສິດທິບັດ ແລະ ການກະທຳອື່ນທີ່ພາໃຫ້ເກີດການແຂ່ງຂັນທີ່ບໍ່ເປັນຕາມກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງເປັນຍາ.

**ມາດຕາ 44** (ປັບປຸງ). ສິດອຳນາດຂອງຄະນະສານຄອບຄົວ ໃນການພິຈາລະນາການຮ້ອງຟ້ອງຄະນະສານຄອບຄົວ ມີສິດອຳ ນາດ ມີ ສິດອຳນາດໃນການຕັດສິນຄະດີກ່ຽວກັບ:

1. ສາຍຜົວເມັຍ ເຊັ່ນ ການຢ່າຮ້າງ,ການແບ່ງປັນສິນສົມສ້າງ,ໜີ້ສິນຂອງຜົວເມັຍ;

2. ການຮ້ອງຟ້ອງ ທວງເອົາຄ່າລ້ຽງດູລູກ;

3. ການຮ້ອງຟ້ອງຄ່າລຽງດູລູກ ຜົວ ຫຼື ເມັຍ,ພໍ່ແມ່ ແລະ ລູກທີພົ້ນກະສຍນອາຍຸແຕ່ຂາດຄວາມສາມາດ ໃນການອອກແຮງງານ ຫຼື ເປັນບ້າເສັຍຈິດ:

4.ສາຍພົວພັນຄອບຄົວ ເປັນຕົ້ນ ການຮັບເປັນສາຍຍາດ;

5.ການຮ້ອງຟ້ອງ ເອົາລູກມາໃນການຄຸ້ມຄອງ;

6.ການປົດສິດໃນເປັນພໍ່ແມ່ ແລະ ລູກ;

7.ການເປັນລູກລ້ຽງ;

8.ການຮັບຮູ້ເດັກເປັນລູກ ິຫຼື ຮັບຮູ້ການເປັນພໍ່

9.ຜົນປະໂຫຍດຂອງເດັກ ເຊັ່ນ: ການໃຊ້ຊື່, ນາມສະກຸນ ແລະ ສັນຊາດ ຂອງເດັກ;

10.ຄວາມເສັຍທີ່ເນື່ອງມາຈາກການບໍ່ປະຕິບັດການໝັ້ນໝ້າຍ, ການສູ່ຂໍການຮວມປະເພນີກັນ ກ່ອນຈະເປັນຜົວເມັຍ ແລະ ອື່ນໆ.

## 2 ກົດໝາຍແຮງງານ.

### 2.1 ໜ້າທີ່ຂອງກົດໝາຍແຮງງານ

ໜ້າທີ່ຂອງກົດໝາຍແຮງງານ ແມ່ນດັດສົມສາຍພົວພັນແຮງງານ ເສີມຂະຫຍາຍທຸກຄວາມສາມາດຂອງແຮງງານຢ່າງຄົບຖ້ວນ ໃນການພັດທະນາເສດທະກິດ - ສັງຄົມຂອງຊາດຍົກສູງປະສິດທິພາບ ແລະ ຜະລິດຕະພັນຂອງແຮງງານສັງຄົມເຮັດໃຫ້ຊີວິດການເປັນຢູ່ຂອງຊາດ ຜູ້ອອກແຮງງານໄດ້ຮັບການປັບປຸງໃຫ້ດີຂຶ້ນ

### 2.2 ຫຼັກການລວມຂອງກົດໝາຍແຮງງານ

ຫຼັກການຕ່າງຝ່າຍລ້ວນໄດ້ຮັບຜົນປະໂຫຍດ ລະຫ່ວາງຜູ້ໃຊ້ແຮງງານກັບຜູ້ອອກແຮງງານລັດ ປະຕິ ບັດຫຼັກການຮັບປະກັນໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ຜູ້ອອກແຮງງານຕ້ອງເຄົາ ລົບລະບຽບອອກແຮງງານ ແລະ ປະຕິບັດຕາມຂໍ້ ກຳນົດຂອງການອອກ ແຮງງານ“ ຜູ້ໃຊ້ແຮງງານ ” ຕ້ອງຮັບປະກັນຈາຍເງິນເດືອນຢ່າງຍຸຕິທຳ ຮັບປະກັນບັນດາເງື່ອນໃຂການອອກແຮງງານຜູ້ໃຊ້ແຮງງານ ຕາມທີ່ໄດ້ກ່າວມານີ້ປະກອບດ້ວຍເຈົ້າກຳມະສິດຂອງຫົວໜ່ວຍພື້ນຖານ.

### 2.3 ຂອບເຂດການນຳໃຊ້ກົດໝາຍແຮງງານ

ກົດໝາຍແຮງງານມີຂໍ້ກຳນົດໃຫ້ນຳໃຊ້ ແລະ ປະຕິບັດຕາມໃນຂົງເຂດຂອງຊາວກຳມະກອນ, ລັດ ຖະກອນທີ່ເຮັດວຽກໃນຂົງເຂດລັດ, ລັດ, ເອກະຊົນ, ລັດວິສາຫະກິດ ຫຼື ອື່ນໆ ເຊິ່ງເອີ້ນວ່າ : ກົມກອງແຮງງານ.

### ກ. ແຮງງານເພດຍິງ ແລະ ເດັກນ້ອຍ

- ຫ້າມເພດຍິງເຮັດວຽກ ຄື ວຽກສ້ອມແປງຄາດຫ້າງ ເຊິ່ງມີຄວາມສູງຈາກໜ້າດິນ 5 ແມັດຂຶ້ນໄປວຽກທີ່ເລື່ອຍຈັກໃຫ່ຍ, ມີຄວາມໃວສູງວຽກງານທີ່ໜັກໜ່ວງທີ່ເປັນອັນຕະລາຍຕໍ່ສຸຂະພາບ
- ຫ້າມໃຊ້ແຮງງານເພດຍິງທີ່ພວມຖືພາ ຫຼື ຢູ່ໃນໄລຍະລ້ຽງລູກນ້ອຍ, ຫ້າມຜູ້ໃຊ້ແຮງງານນຳໃຊ້ຜູ້ອອກແຮງງານເພດຍິງທີ່ພວມຖືພາ ຫຼື ພາຍຫຼັງການອອກລູກຕໍ່າກ່ວາຫົກເດືອນເຂົ້າເຮັດວຽກ ເຊັ່ນ: ວຽກຍົກຖ່າຍ ແລະ ການແບກຫາບໜັກ, ວຽກທີ່ຕ້ອງຢືນດົນເປັນເວລາຕິດໆກັນ....
- ຫ້າມຜູ້ໃຊ້ແຮງງານນຳໃຊ້ຜູ້ອອກແຮງງານເພດຍິງທີ່ພວມຖືພາ ຫຼື ລ້ຽງລູກນ້ອຍອາຍຸຕໍ່າກ່າວສິບສອງເດືອນເຮັດວຽກເພີ່ມໂມງ. ເຮັດວຽກມື້ພັກ ແລະ ເຮັດວຽກໃນເວລາກາງຄືນ.
- ການພັກວຽກຂອງຜູ້ອອກແຮງງານເພດຍິງກ່ອນ ຫຼື ຫຼັງການອອກລູກມີສິດໄດ້ພັກວຽກຢ່າງໜ້ອຍບໍ່ຕໍ່າກ່ວາສາມເດືອນໂດຍໄດ້ຮັບເງິນເດືອນ ຫຼື ຄ່າແຮງງານເຕັມຕາມປົກກະຕິຄືກັນກັບເວລາເຮັດວຽກ

### ຂ. ເງື່ອນໄຂອາກອນລາຍໄດ້ ການປະກັນໄພສັງຄົມ

- ເງິນເດືອນ ຫຼື ຄ່າແຮງງານແມ່ນລາຍໄດ້ທີ່ຜູ້ອອກແຮງງານໄດ້ຮັບທຽບມູນຄ່າເປັນເງິນໂດຍແມ່ນຜູ້ໃຊ້ແຮງງານຈ່າຍເງິນເດືອນໃຫ້ ຫຼື ຄ່າແຮງງານອາດຈະເບີກຕົ້ນເດືອນ ຫຼື ທ້າຍເດືອນກ່ອນ ຫຼື ພາຍຫຼັງການປະຕິບັດງານສຳເລັດແລ້ວ
- ສິດສະເໝີພາບການຮັບເງິນເດືອນ ຫຼື ຄ່າແຮງງານຜູ້ອອກແຮງງານທີ່ປະຕິບັດດວຽກງານດ້ວຍປະລິມານຄຸນນະພາບ ແລະ ເງື່ອນໄຂເທົ່າທຽມກັນຈະໄດ້ຮັບເງິນເດືອນ ຫຼື ຄ່າແຮງງານເທົ່າກັນໂດຍບໍ່ມີການຈຳແນກເພດ, ອາຍຸສັນຊາດແຕ່ຢ່າງໃດ ເອັ້ນເສຍຜູ້ອອກແຮງງານຫາກແມ່ນຄົນຕ່າງປະເທດທີ່ມີສັນ ຍາແຮງງານສະເພາະຕ່າງຫາກ

### ຄ. ການປ້ອງກັນໄພແຮງງານ ແລະ ອຸບັດຕິເຫດແຮງງານ

ຜູ້ໃຊ້ແຮງງານມີສິດດວາງກົດລະບຽບພາຍໃນກ່ຽວກັບການປ້ອງກັນໄພແຮງງານ ແລະ ຮັກສາຂະພາບລວມທັງການນຳໃຊ້ມາດຕະການທີ່ຈຳເປັນໃນການປົກປັກຮັກສາເຄື່ອງຈັກ ແລະ ການຕິດຕັ້ງອຸປະ ກອນ, ປ້ອງກັນໄພຕ່າງໆກົດລະບຽບດັ່ງກ່າວ ຕ້ອງເຜີຍແຜ່ໃຫ້ຜູ້ອອກແຮງງານຊາບ ແລະ ການຮັກສາອະ ນາໄມສະຖານທີ່ວຽກງານຕ້ອງປະກອບດ້ວຍ :

- ໃຫ້ມີແສງສະຫ່ວາງໂດຍທຳມະຊາດຢ່າງພຽງພໍ, ຈຳກັດສຽງດັງເກີນຂອບເຂດ ປ້ອງກັນພະຍາດ ແລະ ຂີ້ຝຸ່ນ
- ໃຫ້ມີນ້ຳດື່ມ ນ້ຳລ້າງ ຫ້ອງອາບນ້ຳ ຫ້ອງສຸຂະອະນາໄມ ຫ້ອງກິນເຂົ້າ ແລະ ຫ້ອງສຳລັບປ່ຽນຖ່າຍເຄື່ອງນຸ່ງຂອງຜູ້ອອກແຮງງານ.
- ໃຫ້ມີສະຖານທີ່ ຫຼື ຫ້ອງເກັບມ້ຽນວັດຖຸທີ່ມີພິດ ຫຼື ສິ່ງຮັບປະກັນການຮົ່ວໄຫຼຢ່າງພຽງພໍ.
- ສະໜອງເຄື່ອງອຸປະກອນປ້ອງກັນໄພສ່ວນບຸກຄົນ ໃນຂະແໜງວຽກງານທີ່ມີຄວາມຈຳເປັນຕ້ອງໃຊ້ ແລະ ເຄື່ອງນຸ່ງເຮັດວຽກໃຫ້ຜູ້ອອກແຮງງານທີ່ເຮັດການຜະລິດໂດຍບໍ່ເສຍຄ່າ ມາດຕະການອື່ນທີ່ ຈຳເປັນ.
- ໂຮງງານ,ອົງການ, ຕ້ອງມີຖົງຢາປະຖົມພະຍາບານສຳລັດກົມກອງທີ່ມີຜູ້ອອກແຮງງານແຕ່ 50 ຄົນຂຶ້ນຕ້ອງມີແພດປະຈຳເພື່ອເບິ່ງແຍງ ແລະ ປິ່ນປົວສຸຂະພາບ.

**2.4 ເບັ້ຍບານານ ແລະ ບຳເນັດ**

ການຮັບເບັ້ຍບຳນານຜູ້ອອກແຮງງນໃນໂຮງງານ,ອົງການ,ການຈັດຕັ້ງໃນຂັງເຂດເຄື່ອນໄຫວເສດທະກິດສັງຄົມມີສິດໄດ້ຮັບບຳນານມີເງື່ອນໄຂຄົບຖ້ວນດັ່ງນີ້,

- ຜູ້ຊາຍອາຍຸ 60 ປີ,ຜູ້ຍິງອາຍຸ 55 ປີອາຍຸການເຮັດວຽກຄົບ 25 ປີຂຶ້ນໄປ.
- ສຳລັດຜູ້ອອກແຮງງານ ທີ່ເຮັດວຽກຢູ່ບ່ອນທີ່ເປັນອັນຕະລາຍຕໍ່ສຸຂະພາບຜູ້ຊາຍອາຍຸ 55 ປີຂຶ້ນໄປ, ສຳ ລັບຜູ້ຍິງ 50 ປີຂຶ້ນໄປ ອາຍຸການແມ່ນ 20 ປີຈິ່ງໄດ້ຮັບເບ້ຍບຳນານ.
- ຜູ້ອອກແຮງງານໄດ້ເສຍເງິນຄ່າປະກັນໄພສັງຄົມຄົບ25 ປີສຳລັບຜູ້ອອກແຮງງານທີ່ເຮັດວຽກຢູ່ບ່ອນທີ່ເປັນອັນຕະລາຍຕໍ່ສຸຂະພາບແຕ່ 5 ຂຶ້ນໄປນັ້ນແມ່ນ 20 ປີ.
- ຜູ້ອອກແຮງງານເຊິ່ງບໍ່ມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກ່າວມາຂ້າງເທິງນີ້ ແມ່ນຈະໄດ້ຮັບບຳເນັດວິທີຄິດໄລ່ເບັ້ຍບຳານແລະບຳເນັດແມ່ນສຳນັກງານນາຍົກລັດທະມົນຕີເ◌ັນຜູ້ກຳນົດແຕ່ລະໄລຍະ.

## 3 ກົດໝາຍຄອບຄົວ.

**ມາດຕາ 1** (ປັບປຸງ).ຈຸດປະສົງ

ກົດໝາຍວ່າດ້ວຍຄອບຄົວກຳນົດຫຼັກການລະບຽບການ ແລະ ມາດຖານກ່ຽວກັບການສູ່ຂໍການແຕ່ງດອງຢ່າຮ້າງ ການເອົາເດັກມາເປັນລູກລ້ຽງ ສາຍພົວພັນຜົວເມຍ, ຊັດສິນບັດຂອງຄູ່ຜົວເມັຍ, ສິດ ແລະ ພັນທະຂອງພໍ່ແມ່ ແລະ ລູກ, ແນໃສ່ການຄຸ້ມຄອງປົກປັກຮັກສາ, ສ້າງຄວາມຄົວໃຫ້ມີພາສຸກ, ໃຫ້ເປັນຈຸລັງອັນແຂັ້ມແຂງຂອງສັງຄົມລາວເປັນຄອບຄົວວັດທະນາທຳ, ສ້າງສາຍພົວພັນຄອບຄົວດ້ວຍການແຕ່ງດອງ ບົນພື້ນຖານຄວາມສະມໝັກໃຈ, ຄວາມສະເໝີພາບລະຫວ່າງຍິງຊາຍເສີມຂະຫຍາຍມູນເຊື້ອແລະ ຮິດຄອງປະເພນີອັນດີງາມຂອງລາວ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ເປັນຫົວໜ່ວຍເສດຖະກິດປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ.

**ມາດຕາ1/1**(ໃໝ່).ຄອບຄົວ

ຄອບຄົວແມ່ນຈຸງລັງໜຶ່ງຂອງສັງຄົມຊຶ່ງມີຜົວ, ເມຍ, ລູກ ຫຼື ສາມາຊິກອື່ນ ໃນຄອບຄົວທີມີສາຍພົວພັນເຊິງກັນແລະກັນ ດຳລົງຊີວິດຮ່ວມກັນ ໂດຍມີສຳມະໂນຄົວຢັ້ງຢືນຢ່າງຖືກຕ້ອງ

**ມາດຕາ 1/2**(ໃໝ່).ສາຍພົວພັນຄອບ

ສາຍພົວພັນຄອບຄົວ ແມ່ນພົວພັນທີ່ຍົ້ມາຈາກການຈົດທະບຽນແຕ່ງດອງ, ການມີລູກຮ່ວມກັນແລະການເອົາລູກຂອງບຸກຄົນອື່ນມາເປັນລູກຫລ້ຽງເຊິ່ງໃຫ້ເກີດມີສິດ ແລະ ພັນທະທາງຄອບຄົວຕໍ່ກັນ.

**ມາດຕາ 2.** ຄວາມສະເໝີລະຫ່ວາງຍິງຊາຍໃນສາຍພົວພັນຄອບຄົວ

ຍິງ - ຊາຍມີສິດເທົ່າທຽມກັນ ໃນທຸກດ້ານກ່ຽວກັບການພົວພັນຄອບຄົວ. ສາຍພົວພັນຄອບຄົວ ເກີດຂຶ້ນໂດຍບໍ່ຂຶ້ນກັບຕົ້ນກໍາເນີດ, ຖານະທາງດ້ານເສດຖະກິດ ແລະ ສັງຄົມເຊື້ອຊາດ, ຊົນເຜົ່າ, ລະດັບວັດທະນະທາ, ອາຊີບ, ສາດສະໜາ, ພູມລາເນົາ ແລະ ອື່ນໆ.

**ມາດຕາ 3** ສິດເສລີພາບໃນການແຕ່ງດອງ

ລັດປົກປ້ອງສິດເສລີພາບຂອງຍິງຊາຍໃນການແຕ່ງດອງ.ຍິງ ຊາຍ ທີ່ຮອດກະສຽນອາຍຸ 18 ປີ ມີສິດເສລີພາບໃນການເລືອກເອົາຄູ່ຮັກຕາມຄວາມສະໝັກໃຈ ແລະ ຄວາມຮັກມັກຂອງທັງສອງຝ່າຍ ເພື່ອເອົາ ກັນເປັນຜົວເມຍ ຕາມຮີດຄອງປະເພນີອັນດີງາມຂອງຊາດລາວ. ລັດບໍ່ອະນຸຍາດ ໃຫ້ບຸກຄົນ,ຄອບຄົວ ຫຼື ການຈັດຕັ້ງໃດໜຶ່ງບັງຄັບ ຫຼື ຂັດຂວາງການແຕ່ງດອງຂອງລູກຫຼານ, ສະມາຊິກອື່ນໃນຄອບຄົວ, ພະນັກງານ, ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

**ມາດຕາ 4.**ການເປັນຜົວໜຶ່ງເມຍດຽວ

ຍິງ ແລະ ຊາຍ ທີ່ຮອດກະສຽນອາຍຸເອົາກັນເປັນຜົວເມຍ ຕ້ອງປະຕິບັດຫຼັກການຜົວໜຶ່ງເມຍດຽວ ເທົ່ານັ້ນ.ລັດ ບໍ່ອະນຸຍາດໃຫ້ຍິງ ແລະ ຊາຍມີຫຼາຍຜົວ ຫຼາຍເມຍ

**ມາດຕາ 5.** ການປົກຄອງປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ

ລັດ ແລະ ສັງຄົມ ຖືເອົາການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ເປັນແມ່ ແລະ ເດັກເປັນບູລິມະສິດ ໃນເວລາຜົວເມຍຢູ່ຮ່ວມກັນ,ແຍກກັນຢູ່ ຫຼ ຢ່າຮ້າງກັນ.

**ມາດຕາ 6** (ໃໝ່).ການໝັ້ນໝາຍ

ເມື່ອຄູ່ບ່າວສາວຫາກມັກຮັກກັນ ແຕ່ຍັງບໍທັນມີເງື່ອນໄຂແຕ່ງດອງກັນເວລານັ້ນ ທັງສອງຝ່າຍກໍຈະເຮັດບົດບັນທຶກຕົກລົງ ກ່ຽວກັບການໝັ້ນໝາຍ ຕາມຮີດຄອງປະເພນີ ໂດຍຝ່າຍຊາຍຈະນໍາເອົາຊັບສິນວັດຖຸມີຄ່າ ໄປໄວ້ນໍາ ຫຼື ບໍ່ໄວ້ນໍາ ຝ່າຍຍິງກໍໄດ້.

**ມາດຕາ 6/1** ການສູ່ຂໍ

ເມື່ອຄູ່ບ່າວສາວຫາກມັກຮັກ ແລະ ຕົກລົງຈະເອົາກັນເປັນຜົວເມຍແລ້ວ ຝ່າຍຊາຍກໍເອົາພໍ່ແມ່ ເຖົ້າແກ່ການຈັດຕັ້ງຂອງຕົນໄປສູ່ຂໍນໍາພໍ່ແມ່, ເຖົ້າແກ່ຂອງຝ່າຍຍິງຕາມຮີດຄອງປະເພນີເພື່ອຕົກລົງກ່ຽວກັບຄ່າດອງ ແລະ ພິທີແຕ່ງດອງຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງຂອງຝ່າຍຍິງ ແລະ ຝ່າຍຊາຍ ໂດຍໃຫ້ເຮັດບົດບັນທຶກໄວ້ຢ່າງຖືກຕ້ອງ.

**ມາດຕາ 7** (ປັບປຸງ).ການຮ່ວມປະເວນີກັນກ່ອນການເປັນຜົວເມຍ

ເມື່ອຊູ້ສາວ ໄດ້ຮ່ວມປະເວນີກັນກ່ອນການເປັນຜົວເມຍ ຖ້າຫາກຊາຍຊູ້ ບໍ່ເອົາຍິງຊູ້ເປັນເມຍແລ້ວ ຊາຍຊູ້ນັ້ນກໍຈະໄດ້ເສຍຄ່າປົວແປງຈິດໃຈ, ຄ່າທາຂ້ອນຍິງຊູ້ ຫຼື ຄອບຄົວຂອງຍິງຊູ້ຕາມຮີດຄອງປະເພນີ ໃນກໍນີທີ່ຍິງຊູ້ຫາກບໍ່ເອົາຊາຍເປັນຜົວ ກໍຈະບໍ່ມີການເສຍຄ່າປົວແປງຈິດໃຈ, ຄ່າທາຂ້ອນນັ້ນແຕ່ຢ່າງໃດ.

ໃນກໍລະນີທີ່ມີການຖືພາ ນອກຈາກຈະໄດ້ເສຍຄ່າທໍາຂວັນແລ້ວ ຊາຍຊູ້ຍັງຈະຕ້ອງເສຍຄ່າອອກລູກຄ່າຢູ່ກໍາ ແລະ ຄ່າໃຊ້ຈ່າຍອື່ນຕື່ມອີກ ບໍ່ວ່າໃນກໍລະນີໃດກໍຕາມຊາຍຊູ້ມີພັນທະລ້ຽງດູລູກທີ່ເກີດມານັ້ນຈົນກ່ວາເດັກຈະຮອດກະສຽນອາຍຸ 18 ປີຂຶ້ນໄປ.

**ມາດຕາ 8** (ປັບປຸງ) ເງື່ອນໄຂການເອົາເປັນຜົວເມຍ

ຍິງ ແລະ ຊາຍທີ່ຈະເອົາກັນເປັນຜົວເມຍຕ້ອງມີເງື່ອນໄຂດັ່ງນີ້:

1. ມີອາຍຸແຕ່ 18 ປີຂຶ້ນໄປ

2. ມີຄວາມມັກຮັກ,ການຕົກລົງ ແລະ ຄວາມສະໝັກໃຈຂອງຜູ້ບ່າວສາວ.

3. ເປັນໂສດ,ເປັນຮ້າງ ຫຼື ໝ້າຍໂດຍມີເອກະສານຢັ້ງຢືນຢ່າງຖືກຕ້ອງ.

4. ບໍ່ເປັນບ້າເສຍຈິດ ຫຼື ບໍ່ເປັນພະຍາດຮ້າຍແຮງ ຫຼືຕິດແປດ.

**ມາດຕາ 9** (ປັບປຸງ ).ການບໍ່ອະນຸຍາດແຕ່ງດອງ

ການແຕ່ງດອງ ຈະບໍ່ອະນຸຍາດໄດ້ ໃນກໍລະນີດັ່ງນີ້:

1. ບຸກຄົນທີ່ເປັນເພດດຽວກັນ,ເປັນບ້າເສຍຈິດ ຫຼື ເປັນພະຍາດຮ້າຍແຮງ ຫຼ ຕິດແປດທີ່ຈະເປັນອັນຕະລາຍຕໍ່ຊີວິດ ຫຼືສຸຂະພາບຂອງຜົວ,ເມຍແລະລູກ

2. ບຸກຄົນທີ່ຢູ່ໃນຕະກຸນ ຊົງຊາດດຽວກັນຂອງບາງຊົນເຜົ່າ ຫຼື ເປັນຍາດໃກ້ຊິດກັນ ຄື: ພໍ່ແມ່ ປູ່ຍ່າພໍ່ເຖົ້າແມ່ເຖົ້າຂຶ້ນໄປກັບລູກ, ຫຼານ, ເຫຼນຕໍ່ລົງມາ, ລະຫວ່າງພໍ່ລ້ຽງ, ແມ່ລ້ຽງກັບລູກນ້ຳ, ລະຫວ່າງລູກຄີງກັບລູກຄີງລູກລ້ຽງກັບລູກນ້ຳ, ລະຫວ່າງລູກລ້ຽງກັບລູກລ້ຽງ, ກັບລູກນ້ຳ, ລະຫວ່າງລູກນ້ຳກັບລູກນ້ຳລະຫວ່າງລຸງປ້າ, ອາວອາ, ນ້າບ່າວ, ນ້າສາວກັບຫຼານ. ສາລັບລູກນ້ຳກັບລູກນ້ຳນັ້ນສາມາດເອົາກັນໄດ້ໃນກໍລະນີທີ່ພໍ່ແມ່ໄດ້ຢ່າຮ້າງກັນແລ້ວ.

**ມາດຕາ 16** (ປັບປຸງ).ສາເຫດຂອງການສິ້ນສຸດການເປັນຜົວເມຍກັນ

ການເປັນຜົວເມຍກັນ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ຄາຕັດສີນຂອງສານທີ່ຮັບຮູ້ການແຕ່ງດອງເປັນໂມຄະ.

2. ການຢ່າຮ້າງ

3. ຄາຕັດສີນຂອງສານຂັ້ນຕົ້ນ ຫຼື ຄາພິພາກສາຂອງສານຂັ້ນອຸທອນ ໃຫ້ຜົວເມຍຢ່າຮ້າງກັນໂດຍບໍ່ມີການອຸທອນ ຫຼື ການຂໍລົບລ້າງ ກ່ຽວກັບການຢ່າຮ້າງ ຈະຖືວ່າມີການຢ່າງຮ້າງໄດ້ ກໍຕໍ່ເມື່ອມີການຈົດທະບຽນການຢ່າຮ້າງ ຢູ່ຫ້ອງການທະບຽນ ຄອບຄົວເມືອງ,ເທດສະບານ ເທົ່ານັ້ນ.

4. ການເສຍຊີວິດຂອງຜົວ ຫຼື ເມຍ

5. ຄາຕັດສີນຂອງສານວ່າ ຜົວ ຫຼື ເມຍ ເປັນຜູ້ເສຍຊີວິດ ໃນກໍລະນີທີ່ຜົວ ຫຼື ເມຍ ນັ້ນຫາກໜີຈາກຄອບຄົວໂດຍບໍ່ຮູ້ບ່ອນຢູ່ ແລະ ບໍ່ຮູ້ຂ່າວຄາວເປັນເວລາສາມປີ.

**ມາດຕາ17** (ປັບປຸງ).ປັບປຸງການແຕ່ງດອງເປັນໂມຄະ

ການແຕຮງດອງເປັນໂມຄະແມ່ນການແຕ່ງດອງທີ່ລະເມີດ

1. ການເປັນຜົວໜຶ່ງເມັຍດຽວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ4ຂອງກົດໝາຍສະບັບນີ້.

2. ເງື່ອນໄຂການເອົາກັນເປັນຜົວເມັຍຕາມທີ່ໄດ້ກຳໄວ້ໃນຕາ9ຊອງກົດໝາຍສະບັບນີ້.

3. ການບໍ່ອະນຸຍາດໃຫ້ແຕ່ງດອງທີ່ໄດ້ກຳນົດໄວ້ໃນມາດຕາ10ຂອງກົດໝາດສະບັບນີ້.

**ມາດຕາ26** (ປັບປຸງ.ຊັບເດີມແລະສິນສົມສ້າງ

ຊັບເດີມແມ່ນ ຊັບສົມບັດທີ່ຜົວຫຼືເມັຍໄດ້ມາກ່ອນການແຕ່ງດອງ ຫຼື ຊັບສົມບັດທີ່ໄດ້ມາຈາກສືບທອດມູນມໍລະ ຫຼື ຈາກການມອບຫຼືການຍົກຊັບໃຫ້ຜົວ ຫຼື ເມຍສະເພາະພາຍຫຼັງການແຕ່ງດອງແລະແມ່ນຊັບສົມບັດຂອງຜົວ ຫຼື ເມຍທີ່ຍັງຄົງຢູ່ ຫຼື ປ່ຽນສະພາບໄປເປັນຊັບສິ່ງຂອງໃໝ່ແລ້ວ.

ນອກໝາກຜົນທີ່ເກີດຈາກຊັບເດີມຂອງຜົວຫຼືເມຍໃຫ້ຖືເປັນຊັບເດີມຂອງຜູ້ ນັ້ນເວັ້ນເສຍແຕ່ຜົວ ຫຼື ເມຍຫາກໄດ້ປະກອບສ່ວນເຂົ້າໃນການຜະລິດ ຫຼື ໃນການສ້າງສາຮ່ວມກັນນັ້ນລາຍໄດ້ແລະໝາກຜົນໃຫ້ຖືເປັນສິນສົມສ້າງ.

ສິນສົມສ້າງແມ່ນຊັບສົມບັບທີ່ຄູ່ຜົວເມຍນັ້ນສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມຍນຳກັນ ເວັ້ນເສຍແຕ່ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວຊຶ່ງບໍ່ມີຄ່າສູງ.

ລາຍໄດ້ທັງໝົດທີ່ຜົວ ຫຼື ເມຍໄດ້ຮັບໃນເວລາຢູ່ຮ່ວມກັນ ຫຼື ແຍກກັນຢູ່ນັ້ນໃຫ້ຖືເປັນສິນສົມສ້າງສຳລັບໜີ້ສິນທີ່ກູ້ຢືມມາພາຍຫຼັງທີ່ໄດ້ແຍກກັນຢູ່ ເພື່ອຜົນປະໂຫຍດຂອງຄອບຄົວ ຫຼື ໂດຍມີການຕົກລົງເຫັນດີນຳກັນນັ້ນຜົວເມຍຕ້ອງຮັບຜິດຊອບຮ່ວມກັນ, ຖ້າຫາກກູ້ຢືມມາເພື່ອຜົນປະໂຫຍດສ່ວນຕົວ ຫຼືໂດຍບໍ່ມີການຕົກລົງເຫັນດີນຳກັນໃນແຕ່ລະຄົນຮັບຜິດຊອບຕໍ່ໜີ້ສິນນັ້ນເອງ.

**ມາດຕາ37**(ປັບປຸງ) ການເອົາເດັກມາເປັນລູກລ້ຽງ

ການເອົາລູກຂອງຜູ້ອື່ນມາເປັນລູກລ້ຽງນັ້ນ ພໍ່ລ້ຽງ ແມ່ລ້ຽງ ແລະ ຍາດພີ່ນ້ອງຂອງພໍ່ລ້ຽງ ແມ່ລ້ຽງ ໃຫ້ຖືວ່າເດັກຜູ້ນັ້ນເປັນຄືກັນກັບລູກຄີງ, ອ້າຍເອື້ອຍນ້ອງຄີງ ແລະ ຫຼານຄີງຂອງຕົນ, ສ່ວນເດັກຜູ້ນັ້ນກໍ່ຈະໝົດສິດ ແລະ ພັນທະຈາກພໍ່ແມ່ແລະຍາດພີ່ນ້ອງຂອງຄີງຕົນ. ການເປັນລູກລ້ຽງນັ້ນຕ້ອງໃຫ້ມີເອກະສານຢັ້ງຢືນຢ່າງຖືກຕ້ອງທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

## ຄຳຖາມຄົ້ນຄວ້າ :

1. ກົດໝາຍແພ່ງແມ່ນກົດໝາຍແນວໃດ ?
2. ກົດໝາຍແຮງງານແມ່ນກົດໝາຍແນວໃດ ?
3. ກົດໝາຍການສຶກສາແມ່ນກົດໝາຍແນວໃດ ?

# ( ອ່ານເພີ່ມ )

# ກົດໝາຍການສຶກສາ

## ພາກທີ1

## ບົດບັນຍັດທົ່ວໄປ

**ມາດຕາ1** (ປັບປຸງ)ຈຸດປະສົງ ກົດໝາຍສະບັບນີ້ກໍານົດຫຼັກການ,ລະບຽບການແລະມາດຕະການກ່ຽວກັບການຄຸ້ມຄອງ,ຕິດຕາມ,ກວດກາການເຄື່ອນໄຫວວຽກງານສຶກສາເພື່ອພັດທະນາວຽກງານດັ່ງກ່າວໃຫ້ໄດ້ມາດຕະຖານ,ມີຄຸນນະພາບ,ມີຄວາມຍືນຍົງແນໃສ່ພັດທະນາຊັບພະຍາກອນມະນຸດໃຫ້ກາຍເປັນພົນລະເມືອງດີ,ມີຄຸນສົມບັດສົມທໍາປະຕິວັດ,ມີຄວາມຮູ້ຄວາມສາມາດ,ມີວິຊາຊີບ,ມີຄວາມຊໍານານງານ,ມີສຸຂະພາບພະລານາໄມ,ຮູ້ຮັກສາແລະສົ່ງເສີມສິລະປະວັດທະນະທໍາແລະຮີດຄອງປະເພນີອັນດີງາມຂອງຊາດສາມາດເຊື່ອມໂຍງເຂົ້າກັບພາກພື້ນແລະສາກົນປະກອບສ່ວນເຂົ້າໃນການປົກປັກຮັກສາ,ສ້າງສາພັດທະນາປະເທດຊາດ.

**ມາດຕາ2** (ປັບປຸງ)ການສຶກສາ ການສຶກສາແມ່ນຂະບວນການສອນ,ການຮຽນຮູ້ທາງດ້ານທິດສະດີແລະພຶດຕິກໍາຕົວຈິງກ່ຽວກັບວິທະຍາສາດທໍາມະຊາດ,ວິທະຍາສາດສັງຄົມແລະເຕັກໂນໂລຊີເພື່ອພັດທະນາຊັບພະຍາກອນມະນຸດໃຫ້ຂະຫຍາຍຕົວຢ່າງຮອບດ້ານ.

**ມາດຕາ3** (ປັບປຸງ)ການອະທິບາຍຄໍາສັບ ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ມີຄວາມໝາຍດັ່ງນີ້:

1. ພົນລະເມືອງໝາຍເຖິງຄົນລາວ,ຄົນຕ່າງດ້າວ,ຄົນຕ່າງປະເທດແລະຄົນບໍ່ມີສັນຊາດຢູ່ສປປລາວ;

2. ຫຼັກສູດຕໍ່ເນື່ອງໝາຍເຖິງຫຼັກສູດຕໍ່ຍອດຫຼັກສູດໃດໜຶ່ງໃນລະດັບທີ່ສູງກວ່າໃນສາຂາວິຊາສະເພາະດຽວກັນ;

3. ຫຼັກສູດເຊື່ອມຕໍ່ໝາຍເຖິງຫຼັກສູດຕໍ່ຍອດຫຼັກສູດໃດໜຶ່ງໃນລະດັບທີ່ສູງກວ່າໃນສາຂາວິຊາສະເພາະທີ່ໃກ້ຄຽງກັນ

4. ຜູ້ທີ່ມີບັນຫາໝາຍເຖິງຜູ້ຖືກກັກຂັງ,ດັດສ້າງແລະບໍາບັດ;

5. ຄອບຄົວໝາຍເຖິງພໍ່,ແມ່ຫຼືຜູ້ປົກຄອງຂອງຜູ້ຮຽນ;

6. ລະບົບການສຶກສາແຫ່ງຊາດໝາຍເຖິງລະບົບການສຶກສາທີ່ເປັນເອກະພາບຊຶ່ງປະກອບດ້ວຍການສຶກສາໃນໂຮງຮຽນແລະການສຶກສານອກໂຮງຮຽນ;

7. ການສຶກສາຫຼັງປະລິນຍາໝາຍເຖິງການສຶກສາລົງເລິກຂະແໜງວິຊາສະເພາະດ້ານໃດໜຶ່ງ;

8. ການຈັດຕັ້ງປະກັນຄຸນນະພາບພາຍນອກໝາຍເຖິງການຈັດຕັ້ງທີ່ຢູ່ນອກຫຼືບໍ່ຂຶ້ນກັບສະຖານການສຶກສາ

9. ທຸດຈະລິດໝາຍເຖິງຄວາມລໍາອຽງ,ຕົວະຍົວະແລະບໍ່ສັດຊື່ບໍລິສຸດ

10. ຈັນຍາບັນຂອງຄູໝາຍເຖິງແບບແຜນໃນການປະພຶດຂອງຄູຊຶ່ງປະກອບດ້ວຍຄວາມສັດຊື່ບໍລິສຸດ,ຮັກອາຊີບ,ຮັກແພງຜູ້ຮຽນ,ເປັນແບບຢ່າງນໍາໜ້າແລະພັດທະນາຕົນເອງ;

11. ມູນຄ່າຫົວໜ່ວຍໝາຍເຖິງຈໍານວນເງິນບໍລິຫານໃຫ້ສະຖານການສຶກສາຂອງລັດຕໍ່ຄົນຕໍ່ປີ;

12. ການວັດຜົນໝາຍເຖິງຂະບວນການຈັດຫາຂໍ້ມູນກ່ຽວກັບຜົນສໍາເລັດການຮຽນຂອງຜູ້ຮຽນເພື່ອນໍາໄປສູ່ການຕັດສິນຄຸນຄ່າດ້ວຍຫຼາຍວິທີການເຊັ່ນການກວດກາ,ການທົດສອບ,ການສອບເສັງແລະອື່ນໆ;

13. ການປະເມີນຜົນໝາຍເຖິງການນໍາເອົາຜົນຂອງການວັດຜົນມາຕັດສິນຄຸນຄ່າຂອງຜົນສໍາເລັດທາງການຮຽນ;

14. ຄະນະພັດທະນາການສຶກສາໝາຍເຖິງການຈັດຕັ້ງໜຶ່ງທີ່ມີຄວາມຮັບຜິດຊອບໃນການພັດທະນາການສຶກສາທັງໃນແລະນອກໂຮງຮຽນພື່ອຊຸກຍູ້,ສົ່ງເສີມແລະອຳນວຍຄວາມສະດວກໃຫ້ທຸກຄົນໄດ້ຮັບການສຶກສາຢ່າທົ່ວເຖິງຊຶ່ງປະກອບດ້ວຍບຸກຄະລາກອນຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

**ມາດຕາ4** (ປັບປຸງ)ນະໂຍບາຍຂອງລັດກ່ຽວກັບວຽກງານສຶກສາ ລັດກຳນົດເອົາການສຶກສາເປັນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດແລະສົ່ງເສີມທຸກເພດໄວ,ທຸກເຜົ່າໃຫ້ເຂົ້າເຖິງການສຶກສາ. ລັດເອົາໃຈໃສ່ຂະຫຍາຍການສຶກສາກ່ອນໄວຮຽນ,ສົ່ງເສີມສຸຂະພາບ,ໂພຊະນາການຂັ້ນພື້ນຖານໃນໂຮງຮຽນແລະກຳນົດເອົາການສຶກສາພາກບັງຄັບເປັນການສຶກສາທີ່ບໍ່ໄດ້ເສຍຄ່າຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ຕ່າງຫາກ. ລັດເພີ່ມທະວີການລົງທຶນໃສ່ການພັດທະນາການສຶກສາໃຫ້ມີຄຸນນະພາບ,ຂະຫຍາຍຕົວຢ່າງທົ່ວເຖິງ,ພ້ອມກັນນັ້ນກໍ່ເອົາໃຈໃສ່ໃນການສ້າງ,ພັດທະນາແລະມີນະໂຍບາຍຕໍ່ຄູ,ບຸກຄະລາກອນການສຶກສາແລະຜູ້ຮຽນຢ່າງເໝາະສົມ. ລັດສົ່ງເສີມແລະຊຸກຍູ້ໃຫ້ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງພາຍໃນແລະຕ່າງປະເທດລົງທຶນໃສ່ການພັດທະນາການສຶກສາແຫ່ງຊາດໂດຍສະເພາະອາຊີວະສຶກສາແລະການຝຶກອົບຮົມວິຊາຊີບໃຫ້ໄດ້ມາດຕະຖານ,ມີຄຸນນະພາບດ້ວຍນະຖຍບາຍດ້ານຕ່າງໆເປັນຕົ້ນສ້າງເງື່ອນໄຂອຳນວຍຄວາມສະດວກ,ນະໂຍບາຍສິນເຊື່ອ,ຍົກເວັ້ນຫຼືຫຼຸດຜ່ອນພາສີ,ອາກອນແລະຄ່າທຳນຽມຕາມກົດໝາຍແລະລະບຽບການ.

**ມາດຕາ5** (ປັບປຸງ)ຫຼັກການກ່ຽວກັບວຽກງານສຶກສາ ການເຄື່ອນໄຫວວຽກງານສຶກສາໃຫ້ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ສອດຄ່ອງກັບແຜນການພັດທະນາເສດຖະກິດສັງຄົມແລະແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ;
2. ຮັບປະກັນສາມລັກສະນະຄືລັກສະນະຊາດ,ລັກສະນະວິທະຍາສາດທັນສະໄໝແລະລັກສະນະມະຫາຊົນ;
3. ປະຕິບັດຕາມຫ້າຫຼັກມູນຄືຄຸນສົມບັດສຶກສາ,ປັນຍາສຶກສາ,ແຮງງານສຶກສາ,ພະລະສຶກສາແລະສິລະປະສຶກສາຢ່າງເປັນເອກະພາບ;
4. ຮັບປະກັນໃຫ້ການຮຽນໄປຄຽງຄູ່ກັບການປະຕິບັດຕົວຈິງແລະໃຫ້ມີຄວາມສະເໝີພາບ;
5. ປະສານສົມທົບລະຫວ່າງການສຶກສາໃນໂຮງຮຽນແລະນອກໂຮງຮຽນກັບການສຶກສາອົບຮົມຢູ່ໃນຄອບຄົວແລະ ສັງຄົມ;
6. ຮັບປະກັນຄຸນນະພາບ,ເຊື່ອມໂຍງເຂົ້າກັບການສຶກສາພາກພື້ນແລະສາກົນ.

**ມາດຕາ6** (ປັບປຸງ)ສິດຂອງພົນລະເມືອງໃນການສຶກສາ ພົນລະເມືອງທຸກຄົນໃນສປປລາວໂດຍບໍ່ຈຳແນກສັນຊາດ,ເຊື້ອຊາດ,ສາດສະໜາ,ເຜົ່າ,ເພດ,ໄວ,ສະຖານະພາບທາງດ້ານຮ່າງກາຍແລະດ້ານເສດຖະກິດສັງຄົມລ້ວນແຕ່ມີສິດໄດ້ຮັບການສຶກສາທີ່ມີຄຸນນະພາບ,ການຮຽນຮູ້ຕະຫຼອດຊີວິດຢ່າງເທົ່າທຽມກັນຕາມກົດໝາຍແລະລະບຽບການ.

**ມາດຕາ7** (ປັບປຸງ)ພັນທະຂອງພົນລະເມືອງຕໍ່ການສຶກສາ ພົນລະເມືອງທຸກຄົນໃນສປປລາວລ້ວນແຕ່ມີພັນທະໃນການປະກອບທຶນ,ວັດຖຸປະກອນ,ເຫື່ອແຮງ,ສະຕິປັນຍາເພື່ອພັດທະນາການສຶກສາໃຫ້ຂະຫຍາຍຕົວແລະມີຄຸນນະພາບລວມທັງສຶກສາອົບຮົມ,ຊ່ວຍເຫຼືອຜູ້ຮຽນ,ຄູແລະບຸກຄະລາກອນການສຶກສາ.

**ມາດຕາ8** (ໃໝ່)ຂອບເຂດການນຳໃຊ້ກົດໝາຍ ກົດໝາຍສະບັບນີ້ນຳໃຊ້ສຳລັບບຸກຄົນ,ນິຕິບຸກຄົນ,ການຈັດຕັ້ງພາກລັດແລະເອກະຊົນທັງພາຍໃນແລະຕ່າງປະເທດທີ່ເຄື່ອນໄຫວວຽກງານສຶກສາໃນສປປລາວ.

**ມາດຕາ9** (ປັບປຸງ)ການຮ່ວມມືສາກົນ ລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ,ພາກພື້ນແລສາກົນກ່ຽວກັບການພັດທະນາວຽກງານສຶກສາດ້ວຍການແລກປ່ຽນບົດຮຽນດ້ານວິຊາການ,ວິທະຍາສາດເຕັກໂນໂລຊີຂໍ້ມູນຂ່າວານແລະການສື່ສານ,ການຄົ້ນຄວ້າ,ການສິດສອນ,ການຄຸ້ມຄອງບໍລິຫານການສຶກສາ,ການຍາດແຍ່ງທຶນຮອນໃນການສ້າງ,ຝຶກອົບຮົມ,ຍົກລະດັບການສຶສາ,ປະຕິບັດສັນຍາສາກົນແລະສົນທິສັນຍາທີ່ສປປລາວເປັນພາຄີ.

## ພາກທີ2

## ລະບົບການສຶກສາແຫ່ງຊາດ

## ໝວດທີ1

## ການສຶກສາໃນໂຮງຮຽນ

**ມາດຕາ10** (ປັບປຸງ)ການສຶກສາໃນໂຮງຮຽນ ການສຶກສາໃນໂຮງຮຽນແມ່ນການຈັດຕັ້ງການຮຽນການສອນຢູ່ໃນໂຮງຮຽນຢ່າງເປັນລະບົບປົກກະຕິ,ມີການກຳນົດເວລາຮຽນແລະມີເນື້ອໃນຫຼັກສູດທີ່ຖືກຕ້ອງຕາມມາດຕະຖານການສຶກສາແຫ່ງຊາດ. ການສຶກສາໃນໂຮງຮຽນປະກອບດ້ວຍ:

1. ການສຶກສາກ່ອນໄວຮຽນ

2. ສາມັນສຶກສາ

3. ອາຊີວະສຶກສາ

4. ການສຶກສາຊັ້ນສູງ.

**ມາດຕາ11** (ປັບປຸງ)ການສຶກສາກ່ອນໄວຮຽນ ການສຶກສາກ່ອນໄວຮຽນແມ່ນການລ້ຽງດູເດັກໃນໂຮງລ້ຽງເດັກ,ການຮຽນການສອນໃນໂຮງຮຽນອະນຸບານແລະສະຖານການສຶກສາກ່ອນໄວຮຽນອື່ນໂດຍມີຈຸດໝາຍເພື່ອພັດທະນາເດັກໃຫ້ມີການຂະຫຍາຍຕົວແລະພັດທະນາການທາງດ້ານຮ່າງກາຍ,ສະຕິປັນຍາ,ອາລົມຈິດ,ພາສາແລະຮຽນຮູ້ຊີວິດສັງຄົມເພື່ອກຽມຄວາມພ້ອມເຂົ້າຮຽນຊັ້ນປະຖົມສຶກສາ.

**ມາດຕາ12** (ໃໝ່)ໂຄງປະກອບການສຶກສາກ່ອນໄວຮຽນ ການສຶກສາກ່ອນໄວຮຽນປະກອບດ້ວຍຊັ້ນຮຽນດັ່ງນີ້:

1. ຊັ້ນລ້ຽງເດັກຮັບເດັກອາຍຸແຕ່ສາມເດືອນຫາຕໍ່າກວ່າສາມປີ

2. ຊັ້ນອະນຸບານສຶກສາຮັບເດັກອາຍຸແຕ່ສາມປີຫາຕໍ່າກວ່າຫົກປີໃນຊັ້ນອະນຸບານສຶກສາຍັງມີກຸ່ມຮຽນຜ່ານການຫຼິ້ນແລະຫ້ອງກຽມປະຖົມ.

**ມາດຕາ13** (ປັບປຸງ)ສາມັນສຶກສາ ສາມັນສຶກສາແມ່ນການຮຽນການສອນຄວາມຮູ້ພື້ນຖານທົ່ວໄປຊຶ່ງປະກອບດ້ວຍປະຖົມສຶກສາ,ມັດທະຍົມສຶກສາຕອນຕົ້ນ,ມັດທະຍົມສຶກສາຕອນປາຍແລະໃຊ້ເວລາຮຽນທັງໝົດສິບສອງປີໂດຍມີຈຸດໝາຍດັ່ງນີ້:

1. ປະຖົມສຶກສາເພື່ອຮັບປະກັນໃຫ້ຜູ້ຮຽນມີຄວາມຮູ້ທົ່ວໄປແລະມີຄວາມສາມາດໃນການຟັງ,ການອ່ານ,ການຂຽນ,ການເວົ້າ,ການເບິ່ງ,ການຖາມ,ການຄິດໄລ່,ການສຸຂານາໄມ,ກິລາກາຍຍະກຳແລະການຝຶກແອບສິລະປະຂັ້ນພື້ນຖານ;

2. ມັດທະຍົມສຶກສາຕອນຕົ້ນເພື່ອໃຫ້ຄວາມຮູ້ພື້ນຖານກ່ຽວກັບພາສາລາວ,ຄະນິດສາດ,ວິທະຍາສາດທຳມະຊາດສັງຄົມ,ກິລາກາຍຍະກຳ,ສິລະປະ,ກົດໝາຍ,ເຕັກໂນໂລຊີ,ວິຊາຊີບແລະພາສາຕ່າງປະເທດສຳລັບຮຽນຕໍ່ໃນມັດທະຍົມຕອນປາຍແລະອາຊີວະສຶກສາ

3. ມັດທະຍົມສຶກສາຕອນປາຍເພື່ອຍົກລະດັບແລະຂະຫຍາຍເນື້ອໃນທີ່ໄດ້ຮຽນມານັ້ນນອກຈາກນີ້ຍັງລົງເລິກບາງວິຊາເພື່ອພັດທະນາຄວາມຮູ້ຄວາມສາມາດແລະພອນສະຫວັນຂອງຜູ້ຮຽນສຳລັບຮຽນຕໍ່ອາຊີວະສຶກສາ,ການສຶກສາຂັ້ນສູງແລະປະກອບອາຊີບ.

**ມາດຕາ14** (ປັບປຸງ)ໂຄງປະກອບສາມັນສຶກສາ ສາມັນສຶກສາປະກອບດ້ວຍຊັ້ນປະຖົມສຶກສາແລະຊັ້ນມັດທະຍົມສຶກສາ.

1. ຊັ້ນປະຖົມສຶກສາແມ່ນການສຶກສາເບື້ອງຕົ້ນຂອງສາຍສາມັນສຶກສາ, ມີກຳນົດເວລາຮຽນຫ້າປີ

2. ຊັ້ນມັດທະຍົມສຶກສາແມ່ນການສຶກສາຖັດຈາກຊັ້ນປະຖົມສຶກສາທີ່ມີກຳນົດເວລາຮຽນເຈັດປີປະກອບດ້ວຍ

ມັດທະຍົມສຶກສາຕອນຕົ້ນແລະມັດທະຍົມສຶກສາຕອນປາຍ:

ກ. ຊັ້ນມັດທະຍົມສຶກສາຕອນຕົ້ນແມ່ນການສຶກສາຂັ້ນພື້ນຖານທີ່ມີກຳນົດເວລາຮຽນສີ່ປີ

ຂ. ຊັ້ນມັດທະຍົມສຶກສາຕອນປາຍແມ່ນການສຶກສາທີ່ສືບຕໍ່ການຮຽນການສອນຈາກມັດທະຍົມສຶກສາຕອນຕົ້ນທີ່ມີກຳນົດເວລາຮຽນສາມປີ.

**ມາດຕາ15** (ປັບປຸງ)ອາຊີວະສຶສາ ອາຊີວະສຶກສາແມ່ນການສຶກສາເຕັກນິກວິຊາຊີບແລະການຝຶກອົບຮົມວິຊາຊີບໂດຍມີຈຸດໝາຍສ້າງ,ພັດທະນາຜູ້ຮຽນແລະຜູ້ຝຶກອົບຮົມໃຫ້ມີຄວາມຮູ້ຄວາມສາມາດ,ຄວາມຊຳນານງານ,ວິຊາຊີບ,ວຽກເຮັດງານທຳ,ວິໄນແຮງງານເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ.

**ມາດຕາ16** (ປັບປຸງ)ໂຄງປະກອບອາຊີວະສຶກສາ ອາຊີວະສຶກສາປະກອບດ້ວຍອາຊີວະສຶກສາຊັ້ນຕົ້ນ,ຊັ້ນກາງແລະຊັ້ນສູງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຊີວະສຶກສາ.

**ມາດຕາ17** (ປັບປຸງ)ການສຶກສາຊັ້ນສູງ ການສຶກສາຊັ້ນສູງແມ່ນການສຶກສາຖັດຈາກຊັ້ນມັດທະຍົມສຶກສາຕອນປາຍ,ວິຊາຊີບຊັ້ນກາງຫຼືທຽບເທົ່າຕາມຫຼັກສູດການສຶກສາໂດຍເລີ່ມແຕ່ລະດັບອະນຸປະລິນຍາຈົນເຖິງປະລິນຍາເອກເພື່ອສົ່ງເສີມການສຶກສາຕະຫຼອດຊີວິດໂດຍມີຈຸດໝາຍສ້າງນັກວິຊາການ,ນັກວິຊາສະເພາະ,ນັກຄົ້ນຄວ້າແລະນັກວິທະຍາສາດ.

ມາດຕາ18 (ປັບປຸງ)ໂຄງປະກອບການສຶກສາຊັ້ນສູງ ການສຶກສາຊັ້ນສູງປະກອບດ້ວຍອະນຸປະລິນຍາ,ປະລິນຍາຕີ,ປະລິນຍາໂທ,ປະລິນຍາເອກແລະການສຶກສາຫຼັງປະລິນຍາ. ສຳລັບການສຶກສາຫຼັງປະລິນຍາໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2

## ການສຶກສານອກໂຮງຮຽນ

**ມາດຕາ19** (ປັບປຸງ)ການສຶກສານອກໂຮງຮຽນ ການສຶກສານອກໂຮງຮຽນແມ່ນການຈັດການຮຽນການສອນທີ່ມີເນື້ອໃນຫຼັກສູດແລະຊັ້ນຮຽນຕ່າງໆຄືກັບການສຶກສາໃນໂຮງຮຽນຕ່າງແຕ່ວິທີການຈັດການສອນການຮຽນ, ເວລາ, ຮູບການຕາມເງື່ອນໄຂຄວາມສາມາດແລະຄວາມພ້ອມຂອງຜູ້ຮຽນ,ການຮຽນໜັງສືຕ້ອງຄວບຄູ່ກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ. ການສຶກສານອກໂຮງຮຽນປະກອບດ້ວຍການສຶກສານອກໂຮງຮຽນຈາມລະບົບປົກກະຕິແລະການສຶກສາຕາມອັດທະຍາໄສ.

**ມາດຕາ20** (ໃໝ່)ການສຶກສານອກໂຮງຮຽນຕາມລະບົບປົກກະຕິການສຶກສານອກໂຮງຮຽນຕາມລະບົບປົກກະຕິມີດັ່ງນີ້:

1. ການລຶບລ້າງຄວາມບໍ່ຮູ້ໜັງສື

2. ການບຳລຸງຍົກລະດັບການສຶກສາ

3. ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ.

**ມາດຕາ21** (ໃໝ່)ການລຶບລ້າງຄວາມບໍ່ຮູ້ໜັງສື ການລຶບລ້າງຄວາມບໍ່ຮູ້ໜັງສືແມ່ນການຈັດການຮຽນການສອນໃຫ້ກຸ່ມເປົ້າໝາຍຜູ້ທີ່ດ້ອຍໂອກາດແລະບໍ່ມີເງື່ອນໄຂໄດ້ເຂົ້າຮຽນໂດຍມີຈຸດໝາຍໃຫ້ຜູ້ຮຽນສາມາດອ່ານ,ຂຽນພາສາລາວແລະຄິດໄລ່ເລກໄດ້ຂັ້ນພື້ນຖານ.

**ມາດຕາ22** (ໃໝ່)ການບຳລຸງຍົກລະດັບການສຶກສາ ການບຳລຸງຍົກລະດັບການສຶກສາແມ່ນການຈັດການຮຽນການສອນທີ່ສືບຕໍ່ຈາກການລຶບລ້າງຄວາມບໍ່ຮູ້ໜັງສືເພື່ອເຂົ້າຮຽນຊັ້ນປະຖົມສຶກສາ,ຊັ້ນມັດທະຍົມສຶກສາຫຼືສູງກວ່ານັ້ນໂດຍມີຈຸດໝາຍໃຫ້ຜູ້ຮຽນມີຄວາມຮູ້ແລະຄວາມສາມາດທາງດ້ານວິທະຍາສາດເຕັກນິກສູງຂຶ້ນເພື່ອຍົກຄຸນນະພາບຊີວິດຂອງຕົນ.

**ມາດຕາ23** (ໃມ່)ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານແມ່ນການພັດທະນາຄວາມຮູ້,ທັກສະ,ຄວາມຊຳນິຊຳນານແລະຄຸນສົມບັດໃນການປະກອບອາຊີບໃດໜຶ່ງລວມທັງການພັດທະນາອາຊີບເດີມໃຫ້ດີຂຶ້ນໂດຍມີຈຸດໝາຍສ້າງຄວາມໝັ້ນຄົງໃຫ້ແກ່ຕົນເອງແລະຄອບຄົວ.

**ມາດຕາ24** (ໃໝ່)ການສຶກສາຕາມອັດທະຍາໄສ ການສຶກສາຕາມອັດທະຍາໄສແມ່ນການສຶກສາທີ່ມີເນື້ອໃນກ້ວາງຂວາງແລະບໍ່ຈຳກັດຂອບເຂດທັງແມ່ນການຮຽນ,ການຄົ້ນຄວ້າດ້ວຍຕົນເອງດ້ວຍຫຼາຍວິທີລວມທັງຜ່ານສື່ຕ່າງໆຊຶ່ງບໍ່ຈຳກັດເວລາ,ເນື້ອໃນແລະສະຖານທີ່ຮຽນ,ພົນລະເມືອງທຸກຄົນໄດຮັບການສົ່ງເສີມໃຫ້ໄດ້ຮັບການສຶກສາຕາມອັດທະຍາໄສ. ການຈັດຕັ້ງປະຕິບັດການສຶກສາຕາມອັດທະຍາໄສໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ25** (ໃໝ່)ຮູບແບບການຈັດການຮຽນການສອນການສຶກສານອກໂຮງຮຽນ ການສຶກສານອກໂຮງຮຽນມີຮູບແບບການຈັດການຮຽນການສອນມີດັ່ງນີ້:

1. ການຈັດການຮຽນການສອນແບບປະຈຳທີ່;

2. ການຈັດການຮຽນການສອນແບບເຄື່ອນທີ່;

3. ການຈັດການຮຽນການສອນແບບທາງໄກ. ການຈັດການຮຽນການສອນລວມທັງການຄຸ້ມຄອງໃນແຕ່ລະຮູບແບບນັ້ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ26** (ໃໝ່)ການຮຽນຮູ້ຕະຫຼອດຊີວິດ ການຮຽນຮູ້ຕະຫຼອດຊີວິດແມ່ນການສຶກສາທີ່ປະສົມປະສານລະຫວ່າງການສຶກສາໃນໂຮງຮຽນແລະນອກໂຮງຮຽນເພື່ອສົ່ງເສີມໃຫ້ທຸກຄົນທັງຍິງແລະຊາຍໄດ້ຮັບການຮຽນຮູ້ຕະຫຼອດຊີວິດເພື່ອສ້າງສັງຄົມພູນປັນຍາຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາ.

## ໝວດທີ 3

## ການສຶກສາຂັ້ນພື້ນຖານແລະການສຶກສາພາກບັງຄັບ

**ມາດຕາ27** (ໃໝ່)ການສຶກສາຂັ້ນພື້ນຖານ ການສຶກສາຂັ້ນພື້ນຖານແມ່ນການຮຽນການສອນກ່ຽວກັບຄວາມຮູ້ຂັ້ນພື້ນຖານເພື່ອສາມາດປະກອບອາຊີບແລະດຳລົງຊີວິດຢູ່ໃນສັງຄົມພ້ອມທັງເປັນພື້ນຖານໃຫ້ແກ່ການຮຽນຮູ້ໃນຂັ້ນຕໍ່ໄປ. ລັດກຳນົດເອົາຊັ້ນມັດທະຍົມສຶກສາຕອນຕົ້ນເປັນການສຶກສາຂັ້ນພື້ນຖານ.

**ມາດຕາ28** (ໃໝ່)ການສຶກສາພາກບັງຄັບ ການສຶກສາພາກບັງຄັບແມ່ນການສຶກສາທີ່ຈຳເປັນສຳລັບພົນລະເມືອງທຸກຄົນຊຶ່ງຕ້ອງຮຽນໃຫ້ຈົບ. ລັດກຳນົດເອົາການສຶກສາແຕ່ຊັ້ນປະຖົມສຶກສາຈົນຈົບຊັ້ນມັດທະຍົມສຶກສາຕອນຕົ້ນເປັນການສຶກສາພາກບັງຄັບ.

## ພາກທີ 3

## ສະຖານການສຶກສາ

**ມາດຕາ 29** (ປັບປຸງ)ສະຖານການສຶກສາ ສະຖານການສຶກສາແມ່ນບ່ອນດຳເນີນການຮຽນການສອນ,ການຄົ້ນຄວ້າວິໄຈ,ການຝຶກອົບຮົມ,ການຝຶກປະຕິບັດຕົວຈິງທັງໃນໂຮງຮຽນແລະນອກໂຮງຮຽນທັງພາກລັດແລະພາກເອກະຊົນຊຶ່ງປະກອບດ້ວຍສູນ,ໂຮງຮຽນ,ວິທະຍາໄລ,ສະຖາບັນຫຼືວິທະຍາຄານແລະມະຫາວິທະຍາໄລ.

**ມາດຕາ 30** (ໃໝ່)ປະເພດສະຖານການສຶກສາ ສະຖານການສຶກສາແບ່ງອອກເປັນປະເພດດັ່ງນີ້:

1. ສະຖານລ້ຽງເດັກແລະພັດທະນາເດັກເອີ້ນວ່າໂຮງລ້ຽງເດັກຫຼືສູນພັດທະນາເດັກ;

2. ສະຖານການຮຽນການສອນເດັກອະນຸບານເອີ້ນວ່າໂຮງຮຽນອະນຸບານ;

3. ສະຖານການຮຽນການສອນຊັ້ນຖະຖົມສຶກສາເອີ້ນວ່າໂຮງຮຽນມູນລະປະຖົມແລະໂຮງຮຽນປະຖົມສົມບູນ;

4. ສະຖານການຮຍນການສອນຊັ້ນມັດທະຍົມສຶກສາເອີ້ນວ່າໂຮງຮຽນມັດທະຍົມຕອນຕົ້ນ,ໂຮງຮຽນມັດທະຍົມຕອນປາຍແລະໂຮງຮຽນມັດທະຍົມສົມບູນ;

5. ສະຖານການຮຽນການສອນຂອງອາຊີວະສຶກສາເອີ້ນວ່າສູນຝຶກອົບຮົມ,ໂຮງຮຽນ,ວິທະຍາໄລແລະສະຖາບັນ

6. ສະຖານການຮຽນການສອນຂອງການສຶກສາຊັ້ນສູງເອີ້ນວ່າວິທະຍາໄລ,ສະຖາບັນຫຼືວິທະຍາຄານ ແລະມະຫາວິທະຍາໄລ

7. ສະຖານການຮຽນການສອນຂອງການສຶກສານອກໂຮງຮຽນເອີ້ນວ່າສູນການສຶກສານອກໂຮງຮຽນຂັ້ນຕ່າງໆ.

ໃນກໍລະນີຈຳເປັນສະຖານການສຶກສາແຕ່ລະປະເພດອາດຈະມີການເພີ່ມເຕີມຫຼືປ່ຽນແປງຕາມການຕົກລົງຂອງກະຊວງສຶກສາທິການແລະກິລາ.

**ມາດຕາ31** (ປັບປຸງ)ການສ້າງຕັ້ງແລະການຮັບຮອງສະຖານການສຶກສາ ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງທີ່ມີຈຸດປະສົງສ້າງຕັ້ງແລະຮັບຮອງສະຖານການສຶກສາໃຫ້ຍື່ນຄຳຮ້ອງຕໍ່ຂະແໜງການສຶກສາທິການແລະກິລາເພື່ອພິຈາລະນາ. ການພິຈາລະນາຮັບຮອງສະຖານການສຶກສາທັງພາກລັດແລະເອກະຊົນຕ້ອງໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ,ແຜນຍຸດທະສາດການສຶກສາແລະມາດຕະຖານການສ້າງຕັ້ງສະຖານການສຶກສາໂດຍແມ່ນກະຊວງສຶກສາທິການແລະກິລາເປັນຜູ້ຕົກລົງ. ສຳລັບມະຫາວິທະຍາໄລແມ່ນລັດຖະບານເປັນຜູ້ຕົກລົງຕາມການສະເໜີຂອງກະຊວງສຶກສາທິການແລະກິລາ. ສຳລັບສະຖານການສຶກສາຂອງພາກເອກະຊົນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ,ກົດໝາຍວ່າດ້ວຍວິສາຫະກິດ,ກົດໝາຍແລະລະບຽບການອື່ນທີ່ກ່ຽວຂ້ອງ. ກຳນົດເວລາຂອງການພິຈາລະນາການຮັບຮອງສະຖານການສຶກສາໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ32** (ປັບປຸງ)ມາດຕະຖານສະຖານການສຶກສາ ສະຖານການສຶກສາທັງພາກລັດແລະເອກະຊົນມີມາດຕະຖານຕົ້ນຕໍຄືຫຼັກສູດ,ສື່ການຮຽນການສອນ,ຄູແລະບຸກຄະລາກອນການສຶກສາ,ພື້ນຖານໂຄງລ່າງແລະສິ່ງອຳນວຍຄວາມສະດວກ. ມາດຕະການລະອຽດຂອງສະຖານການສຶກສາລວມທັງການສຶກສາສຳລັບຄົນພິການໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ4

## ຫຼັກສູດແລະເຕັກໂນໂລຊີການສຶກສາ

### ໝວດທີ1

### ຫຼັກສູກການສຶກສາ

**ມາດຕາ33** (ປັບປຸງ)ຫຼັກສູດການສຶກສາ ລັກສູດການສຶກສາແມ່ນເອກະສານທີ່ກຳນົດຫຼັກການ,ຈຸດໝາຍຂອງການສຶກສາ,ໂຄງສ້າງເນື້ອໃນວິຊາຕ່າງໆ,ວິທີການຈັດຕັ້ງການຮຽນການສອນຂອງແຕ່ລະຊັ້ນ,ແຕ່ລະສາຍ,ການວັດຜົນແລະການປະເມີນຜົນວິຊາຮຽນຕ່າງໆເພື່ອຮັບປະກັນໃຫ້ຜູ້ຮຽນມີຄວາມຮູ້ຄວາມສາມາດ,ທັກສະ,ຄວາມສະຫຼາດແລະຄຸນສົມບັດສິນທຳປະຕິວັດ. ຫຼັກສູດການສຶກສາປະກອບດ້ວຍຫຼັກສູດການສຶກສາແຫ່ງຊາດ,ຫຼັກສູດການສຶກສາທ້ອງຖິ່ນແລະຫຼັກສູດການສຶກສານາໆຊາດຫຼືຫຼັກສູດສອງພາສາ.

**ມາດຕາ34** (ໃໝ່)ເນື້ອໃນຫຼັກສູກການສຶກສາ ເນື້ອໃນຫຼັກສູດການສຶກສາແຫ່ງຊາດຕ້ອງຮັບປະກັນສາມລັກສະນະແລະຫ້າຫຼັກມູນຂອງການສຶກສາແລະສາມາດເຊື່ອມໂຍງກັບພາກພື້ນແລະສາກົນ. ເນື້ອໃນຫຼັກສູດການສຶກສາແຫ່ງຊາດໃຫ້ເປັນເອກະພາບກັນໃນທົ່ວປະເທດສຳລັບທ້ອງຖິ່ນທີ່ມີຈຸດພິເສດ,ທ່າແຮງແລະພູມປັນຍາທີ່ໂດດເດັ່ນກໍ່ສາມາດກຳນົດເຂົ້າເປັນເນື້ອໃນຫຼັກສູດການສຶກສາທ້ອງຖິ່ນຕາມການເຫັນດີຂອງກະຊວງສຶກສາທິການແລະກິລາ. ສຳລັບຫຼັກສູດນາໆຊາດຫຼືຫຼັກສູດສອງພາສາລະຫວ່າງພາສາລາວແລະພາສາຕ່າງປະເທດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ35** (ປັບປຸງ)ການຮັບຮອງເນື້ອໃນຫຼັກສູດ ເນື້ອໃນຫຼັກສູດຂອງການສຶກສາໃນໂຮງຮຽນແລະນອກໂຮງຮຽນແຕ່ລະຊັ້ນແຕ່ລະສາຍຕ້ອງຮັບປະກັນໃຫ້ມີມາດຕະຖານແລະປະກາສະນິຍະບັດທຽບເທົ່າກັນໂດຍການຮັບຮອງຈາກກະຊວງສຶກສາທິການແລະກິລາ. ສຳລັບມາດຕະຖານຫຼັກສູດແລະປະກາສະນິຍະບັດລະຫວ່າງປະເທດໃຫ້ປະຕິບັດບົນພື້ນຖານການຕົກລົງຮ່ວມກັນຂອງສອງຝ່າຍຫຼືຫຼາຍຝ່າຍແຕ່ຕ້ອງສອດຄ່ອງກັບມາຕະຖານການສຶກສາຂອງບັນດາປະເພດໃນພາກພື້ນແລະສາກົນ.

**ມາດຕາ36** (ປັບປຸງ)ການພັດທະນາແລະການປັບປຸງຫຼັກສູດ ສະຖານການສຶກສາສາມາດພັດທະນາແລະປັບປຸງຫຼັກສູດການສຶກສາຂອງຕົນຕາມແຜນຍຸດທະສາດພັດທະນາການສຶກສາໂດຍການເຫັນດີແລະຮັບຮອງຈາກກະຊວງສຶກສາທິການແລະກິລາ.

**ມາດຕາ37** ການອະນຸມັດຫຼັກສູດ ຫຼັກສູດການສຶກສາທຸກຊັ້ນທຸກສາຍແລະທູກຮູບແບບໃນລະບົບການສຶກສາແຫ່ງຊາດແມ່ນກະຊວງສຶກສາທິການແລະກິລາເປັນຜູ້ອະນຸມັດແລະປະກາດໃຊ້. ຫຼັກສູດການສຶກສາສະເພາະທ້ອງຖິ່ນທີ່ໄດ້ກຳນົດໄວ້ໃນມາດຕາ34ຂອງກົດໝາຍສະບັບນີ້ແມ່ນພະແນກສຶກສາທິການແລະກິລາແຂວງ,ນະຄອນເປັນຜູ້ອະນຸມັດພາຍຫຼັງທີ່ໄດ້ຮັບຄວາມເຫັນດີຈາກກະຊວງສຶກສາທິການແລະກິລາ. ຫຼັກສູດວິຊາສະເພາະຂະແໜງການແມ່ນຂະແໜງການທີ່ກ່ຽວຂ້ອງເປັນຜູ້ຄົ້ນຄວ້າສະເໜີໃຫ້ກະຊວງສຶກສາທິການແລະກິລາເປັນຜູ້ອະນຸມັດ.

**ມາດຕາ38** (ປັບປຸງ)ການກຳນົດເວລາຮຽນ ການກຳນົດເວລາຮຽນຂອງການສຶກສາທຸກຊັ້ນແລະທຸກສາຍໃນລະບົບການສຶກສາແຫ່ງຊາດຕ້ອງໃຫ້ສອດຄ່ອງກັບມາດຕະຖານຫຼັກສູດທີ່ກະຊວງສຶກສາທິການແລະກິລາໄດ້ກຳນົດເພື່ອຮັບປະກັນເນື້ອໃນແລະຄຸນນະພາບຂອງການສຶກສາ. ກຳນົດເວລາໃນການຮຽນການສອນແຕ່ລະຊັ້ນແລະແຕ່ລະສາຍຂອງສະຖານການສຶກສາໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ39** ການສອບເສັງແລະການອອກປະກາສະນິຍະບັດ ກະຊວງສຶກສາທິການແລະກິລາເປັນຜູ້ກຳນົດຫຼັກການ,ລະບຽບການກ່ຽວກັບການສອບເສັງ,ການອອກປະກາສະນິຍະບັດຂອງທຸກຊັ້ນແລະທຸກສາຍທີ່ຂຶ້ນກັບ

ການຄຸ້ມຄອງມະຫາພາກຂອງກະຊວງສຶກສາທິການແລະກິລາແລະຮັບຮອງການທຽບປະກາສະນິຍະບັດການສຶກສາທັງພາຍໃນແລະຕ່າງປະເທດ.

**ມາດຕາ40** (ປັບປຸງ)ພາສາທີ່ໃຊ້ໃນການຮຽນການສອນ ພາສາລາວແລະອັກສອນລາວແມ່ນພາສາແລະອັກສອນທາງການທີ່ໃຊ້ໃນການຮຽນການສອນໃນສະຖານການສຶກສາ. ຕົວເລກລາວແລະຕົວເລກສາກົນໃຫ້ນຳໃຊ້ເຂົ້າໃນການຮຽນການສອນໂດຍເລີ່ມຕົ້ນຊັ້ນປະຖົມສຶກສາເປັນຕົ້ນໄປ.

**ມາດຕາ41** ການຮຽນການສອນພາສາຕ່າງປະເທດ ສະຖານການສຶກສາສາມາດຈັດຕັ້ງການຮຽນການສອນພາສາຕ່າງປະເທດ,ໃນນັ້ນໃຫ້ເອົາພາສາອັງກິດເປັນວິຊາບັງຄັບໂດຍເລີ່ມແຕ່ຊັ້ນປະຖົມສຶກສາປີທີສາມຂຶ້ນໄປ.ສ່ວນພາສາອື່ນໃຫ້ເລືອກຮຽນ,ເລືອກສອນຕາມຄວາມເໝາະສົມແລະຕາມເງື່ອນໄຂຕົວຈິງຂອງສະຖານການສຶກສາ.

## ໝວດທີ 2

## ເຕັກໂນໂລຊີການສຶກສາ

**ມາດຕາ42** (ໃໝ່)ເຕັກໂນໂລຊີການສຶກສາ ເຕັກໂນໂລຊີການສຶກສາແມ່ນການນຳໃຊ້ລະບົບເຄື່ອງມືແລະວິທີການທາງດ້ານເຕັກໂນໂລຊີເຂົ້າມາໃຊ້ໃນການຮຽນການສອນ,ການຝຶກອົບຮົມ,ການຄົ້ນຄວ້າວິໄຈແລະຄຸ້ມຄອງບໍລິຫານການສຶກສາ.

**ມາດຕາ43** (ໃໝ່)ການຜະລິດ,ການສະໜອງ,ການພັດທະນາແລະນຳໃຊ້ເຕັກໂນໂລຊີການສຶກສາ. ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງທີ່ມີຈຸດປະສົງເຄື່ອນໄຫວວຽກງານການສຶກສາໄດ້ຮັບການສົ່ງເສີມການຜະລິດ,ການສະໜອງ,ການພັດທະນາແລະນຳໃຊ້ເຕັກໂນໂລຊີການສຶກສາເຊັ່ນຫ້ອງສະໝຸດ,ຫ້ອງທົດລອງ,ຫ້ອງວິເຄາະ,ຫໍພິພິດທະພັນ,ຫ້ອງຟ້າຈຳລອງສວນສັດ,ສວນສາທາລະນະ,ສວນພຶກສາສາດ,ສວນວິທະຍາສາດ,ສູນເຕັກໂນໂລຊີ,ແຫຼ່ງຂໍ້ມູນຂ່າວສານແລະອື່ນໆໃຫ້ພຽງພໍກັບຄວາມຕ້ອງການທີ່ຈຳເປັນຕາມມາດຕະຖານທີ່ກະຊວງສຶກສາທິການແລະກິລາກຳນົດໄວ້.

# ພາກທີ 5

## ຜູ້ຮຽນ

**ມາດຕາ44** (ປັບປຸງ)ຜູ້ຮຽນ ຜູ້ຮຽນແມ່ນຜູ້ທີ່ກໍາລັງສຶກສາຮຽນຮູ້ຫຼືຄົ້ນຄວ້າຢູ່ທຸກຊັ້ນ,ທຸກຂັ້ນໃນໂຮງຮຽນແລະນອກໂຮງຮຽນຂອງລະບົບການສຶກສາແຫ່ງຊາດ. ຜູ້ຮຽນມີສາມປະເພດດັ່ງນີ້: 1.ນັກຮຽນແມ່ນຜູ້ຮຽນໃນຊັ້ນການສຶກສາກ່ອນໄວຮຽນ,ສາມັນສຶກສາ,ວິຊາຊີບຊັ້ນຕົ້ນ,ວິຊາຊີບຊັ້ນກາງ; 2.ນັກສຶກສາແມ່ນຜູ້ຮຽນໃນລະດັບວິຊາຊີບຊັ້ນສູງ,ອະນຸປະລິນຍາ,ປະລິນຍາຕີ,ປະລິນຍາໂທແລະປະລິນຍາເອກ. 3.ນັກຄົ້ນຄວ້າແມ່ນຜູ້ທີ່ເຮັດການວິໄຈ,ການຄົ້ນຄວ້າໃນຫົວຂໍ້ໃດໜຶ່ງເພື່ອຊອກຫາຄວາມເປັນຈິງທາງດ້ານວິທະຍາສາດທໍາມະຊາດແລະສັງຄົມ.

**ມາດຕາ45** (ປັບປຸງ)ການອຸດໜູນຜູ້ຮຽນ ຜູ້ຮຽນທີ່ມີຈາກຄອບຄົວທຸກຍາກ,ຜູ້ດ້ອຍໂອກາດ,ຜູ້ພິການ,ຜູ້ມີພອນສະຫວັນຫຼືຜູ້ຮຽນເກັ່ງໂດຍສະເພາະເພດຍິງແລະເຜົ່າໄດ້ຮັບການອຸດໜູນຕາມລະບຽບການ. ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງແລະສັງຄົມມີສ່ວນຮ່ວມໃນການຊ່ວຍເຫຼືອຜູ້ຮຽນດັ່ງກ່າວດ້ວຍຮູບການທີ່ເໝາະສົມແລະສ້າງເງື່ອນໄຂໃຫ້ຜູ້ພິການໄດ້ເຂົ້າຮຽນຮ່ວມກັບຜູ້ຮຽນປົກກະຕິ.

**ມາດຕາ46** ການສຶກສາສໍາລັບຜູ້ທີ່ມີບັນຫາ ລັດມີໜ້າທີ່ຈັດຕັ້ງແລະສ້າງເງື່ອນໄຂແກ່ຜູ້ທີ່ມີບັນຫາໃຫ້ໄດ້ຮັບການສຶກສາແລະອົບຮົມດ້ານວິຊາຊີບຕາມຄວາມເໝາະສົມ.

**ມາດຕາ47** (ປັບປຸງ) ສິດແລະ ພັນທະຂອງຜູ້ຮຽນ ຜູ້ຮຽນມີສິດດັ່ງນີ້:

1. ໄດ້ຮັບຄວາມສະເໝີພາບໃນການສຶກສາຮຽນຮູ້,ຄົ້ນຄວ້າແລະສະແຫວງຫາຄວາມກ້າວໜ້າ;

2. ໄດ້ຮັບທຶນການສຶກສາ,ການຍ້ອງຍໍແລະນະໂຍບາຍອື່ນຕາມລະບຽບການ;

3. ໄດ້ຮັບການສົ່ງເສີມສຸຂະພາບແລະປິ່ນປົວຂັ້ນພື້ນຖານໂດຍບໍ່ເສຍຄ່າສໍາລັບການສຶກສາພາກບັງຄັບ;

4. ໄດ້ຮັບໃບຢັ້ງຢືນການສຶກສາແລະປະກາສະນິຍະບັດເມື່ອສໍາເລັດການສຶກສາ;

5. ເຂົ້າເປັນສະມາຊິກອົງການຈັດຕັ້ງມະຫາຊົນຕາມລະບຽບການ;

6. ສະເໜີຄໍາເຫັນຕໍ່ຄູ,ການຈັດຕັ້ງທີ່ກ່ຽວຂ້ອງກ່ຽວກັບຜົນການຮຽນແລະການປະພຶດພ້ອມທັງມີສ່ວນຮ່ວມໃນການພັດທະນາສະຖານການສຶກສາ;

7. ໄດ້ຮັບຂໍ້ມູນຂ່າວສານ,ເຂົ້າໃຊ້ບໍລິການຫ້ອງສະໝຸດແລະຫໍພິພິດທະພັນໂດຍບໍ່ເສຍຄ່າ;

8. ໄດ້ຮັບການຫຼຸດຜ່ອນຄ່າເດີນທາງດ້ວຍພາຫະນະຕ່າງໆຕາມທີ່ໄດ້ກໍານົດໄວ້ໃນລະບຽບການ;

9. ນໍາໃຊ້ສິດອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍແລະລະບຽບການ.

**ຜູ້ຮຽນມີພັນທະດັ່ງນີ້:**

1 ເຄົາລົບແລະປະຕິບັດຕາມກົດໝາຍ,ລະບຽບການກ່ຽວກັບການສຶກສາ ແລະ ສະຖານການສຶກສາທີ່ກ່ຽວຂ້ອງຢ່າງເຂັ້ມງວດ

2. ພັດທະນາຕົນເອງໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທໍາປະຕິວັດ, ເອົາໃຈໃສ່ການຮຽນແລະຮຽນໃຫ້ສໍາເລັດ

3. ເຂົ້າຮ່ວມການເຄື່ອນໄຫວກິດຈະກໍາຕ່າງໆຂອງສະຖານການສຶກສາລວມທັງກິດຈະກໍາສາທາລະນະປະໂຫຍດ;

4. ເຄົາລົບ,ປະຕິບັດຄໍາສັ່ງສອນຂອງຜູ້ນໍາ,ຄູແລະຜູ້ປົກຄອງ;

5. ປົກປັກຮັກສາສະຖານການສຶກສາແລະນຳໃຊ້ອຸປະກອນການສຶກສາ,ສື່ການຮຽນແລະແຫຼ່ງຄວາມຮູ້ອື່ນລວມທັງເຕັກໂນໂລຊີການສຶກສາ;

6. ສາມັກຄີຊ່ວຍເຫຼືອຊຶ່ງກັນແລະກັນໃນການສຶກສາຮຽນຮູ້;

7. ຕ້ານແລະສະກັດກັ້ນປາກົດການຫຍໍ້ທໍ້ໃນສະຖານການສຶກສາແລະສັງຄົມ;

8. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແລະລະບຽບການ.

# ພາກທີ 4

# ຄູ ແລະ ບຸກຄະລາກອນການສຶກສາ

## ໝວດທີ 1

## ຄູ

**ມາດຕາ48** (ປັບປຸງ)ຄູ ຄູແມ່ນຜູ້ປະຕິບັດໜ້າທີ່ສິດສອນ,ຖ່າຍທອດຄວາມຮູ້,ສຶກສາອົບຮົມ,ຄົ້ນຄວ້າວິໄຈ,ຊຸກຍູ້ ,ສົ່ງເສີມແລະຊ່ວຍເຫຼືອຜູ້ຮຽນດ້ວຍຫຼາຍຮູບການ. ສໍາລັບການຄຸ້ມຄອງລັດຖະກອນຄູແລະຄູທີ່ສອນໃນສະຖານການສຶກສາຂອງກໍາລັງປ້ອງກັນຊາດ,ປ້ອງກັນຄວາມສະຫງົບແລະພາກເອກະຊົນໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ49** (ປັບປຸງ)ມາດຕະຖານຂອງຄູ ຄູຕ້ອງມີມາດຕະຖານດັ່ງນີ້:

1. ມີຫຼັກໝັ້ນ,ທັດສະນະການເມືອງຖືກຕ້ອງ,ຮັກແລະປົກປ້ອງລະບອບປະຊາທິປະໄຕປະຊາຊົນ;

2. ມີຈັນຍາບັນຂອງຄູແລະມີຄຸນສົມບັດສິນທໍາປະຕິວັດ;

3. ມີຄວາມຮູ້,ຄວາມສາມາດ,ວິຊາສະເພາະໃນການສອນຢູ່ຊັ້ນຮຽນຕາມມາດຕະຖານຂອງກະຊວງສຶກສາທິການແລະກິລາ

4. ມີປະກາສະນິຍະບັດຫຼືໃບຢັ້ງຢືນວິຊາຄູຫຼື/ແລະໃບອະນຸຍາດການສອນ;

5. ມີຄວາມດຸໝັ່ນຊອກຮຽນຮູ້ແລະພັດທະນາຕົນເອງຢູ່ເລື້ອຍໆ;

6. ມີສຸຂະພາບດີ.

**ມາດຕາ50** (ປັບປຸງ) ນາມມະຍົດແລະຕໍາແໜ່ງວິຊາການຄູ ຄູທີ່ໄດ້ສິດສອນໃນສະຖານການສຶກສາປະເພດຕ່າງໆມີ

1 . ນາມມະຍົດ:ຄູແຫ່ງຊາດແລະຄູປະຊາຊົນ

2. ຕໍາແໜ່ງວິຊາການ:ຄູປະສົບການ,ຄູ່ຊໍານານການ,ຄູຊ່ຽວຊານ,ຄູຊ່ຽວຊານອາວຸໂສ,ຜູ້ຊ່ວຍອາຈານ,ອາຈານ,ຮອງສາດສະດາຈານ,ສາດສະດາຈານ. ໃນກໍລະນີຈໍາເປັນນາມມະຍົດແລະຕໍາແນ່ງວິຊາການຄູອາດຈະມີການເພີ່ມເຕີມຫຼືການປ່ຽນແປງຕາມການຕົກລົງຂອງລັດຖະບານ.

**ມາດຕາ51** (ປັບປຸງ)ສິດ,ໜ້າທີ່ແລະພັນທະຂອງຄູ ຄູມີສິດແລະໜ້າທີ່ດັ່ງນີ້:

1. ແຕ່ງ,ປັບປຸງ,ຮຽບຮຽງບົດສອນແລະປຶ້ມຕໍາລາ,ກຽມອຸປະກອນແລະສື່ການຮຽນການສອນ,ຄົ້ນຄວ້າວິໄຈແລະບໍລິການທາງດ້ານວິຊາການແກ່ສັງຄົມຕາມລະບຽບການ

2. ສອນຕາມຫຼັກສູດ,ຕາມວິຊາສະເພາະແລະຕາມຄວາມຊໍານານ

3. ຕິດຕາມ,ກວດກາ,ວັດຜົນແລະປະເມີນຜົນຜູ້ຮຽນຢ່າງຕໍ່ເນື່ອງແລະເປັນທໍາ

4. ປະຕິບັດໜ້າທີ່ຕາມການມອບໝາຍຂອງການຈັດຕັ້ງຢ່າງເຂັ້ມງວດ

5. ໄດ້ຮັບການບໍາລຸງ,ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະທີ່ຕົນສອນແລະສິ່ງທີ່ກ່ຽວຂ້ອງກັບການສິນໃຫ້ສູງຂຶ້ນ

6. ສະເໜີຄໍາຄິດຄໍາເຫັນແລະລາຍງານຜົນການເຄື່ອນໄຫວຂອງຕົນໃຫ້ຜູ້ບໍລິຫານທີ່ຕົນຂຶ້ນກັບ

7. ໄດ້ຮັບການປົກປ້ອງສິດ,ຜົນປະໂຫຍດແລະກຽດສັກສີຂອງຕົນ

8. ນໍາໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍແລະລະບຽບການ.

**ຄູມີພັນທະດັ່ງນີ້:**

1. ເຄົາລົບແລະປະຕິບັດຕາມແຜນຍຸດທະສາດ,ກົດໝາຍ,ລະບຽບການກ່ຽວກັບການສຶກສາແລະສະຖານການສຶກສາທີ່ກ່ຽວຂ້ອງຢ່າງເຂັ້ມງວດ;

2. ເປັນແບບຢ່າງທີ່ດີ,ຮັກສາກຽດແລະສັກສີຂອງຄວາມເປັນຄູ

3. ປະຕິບັດຕໍ່ຜູ້ຮຽນຢ່າງເປັນທໍາ,ນັບຖືແລະປົກປ້ອງສິດ,ຜົນປະໂຫຍດອັນຊອບທໍາຂອງຜູ້ຮຽນ

4. ຊ່ວຍບໍາລຸງຜູ້ຮຽນອ່ອນແລະສຶກສາອົບຮົມ, ປູກຈິດສໍານຶກໃຫ້ຜູ້ຮຽນຮູ້ບຸນຄຸນພໍ່ແມ່, ຜູ້ປົກຄອງ, ຜູ້ອຸປະການລະຄຸນແລະ ຄູ

5. ນໍາໃຊ້ແລະປົກປັກຮັກສາອາຄານສະຖານທີ່,ວັດຖຸປະກອນແລະສື່ການຮຽນການສອນ;

6. ປົກປັກຮັກສາຄວາມສະຫງົບ,ຄວາມສະອາດສວຍງາມແລະຄວາມເປັນລະບຽບຮຽບຮ້ອຍຂອງສະຖານການສຶກສາ; 7. ເຂົ້າຮ່ວມການເຄື່ອນໄຫວກິດຈະກໍາຂອງສະຖານການສຶກສາແລະສັງຄົມ;

8. ປະຕິບັດພັນທະອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍແລະລະບຽບການ.

**ມາດຕາ52** (ປັບປຸງ)ນະໂຍບາຍຕໍ່ຄູ ໃນການປະຕິບັດໜ້າທີ່ຄູໄດ້ຮັບຄ່າຕອບແທນແຮງງານ,ຍົກລະດັບວິຊາສະເພາະ,ວິຊາການ,ຊີວິດການເປັນຢູ່ແລະສະຖານະທາງສັງຄົມ,ໄດ້ຮັບການພັກຜ່ອນ,ຮັບບໍານານແລະນະໂຍບາຍອື່ນຕາມກົດໝາຍແລະລະບຽບການ. ບຸກຄົນ,ນິຕິບຸກຄົນ,ການຈັດຕັ້ງແລະສັງຄົມທັງພາກລັດແລະເອກະຊົນພາຍໃນແລະຕ່າງປະເທດມີສ່ວນຮ່ວມໃນການຊ່ວຍເຫຼືອແລະອໍານວຍຄວາມສະດວກໃນການປະຕິບັດໜ້າທີ່ຂອງຄູ.

**ມາດຕາ53** (ປັບປຸງ)ການສ້າງແລະການພັດທະນາຄູ ການສ້າງແລະການພັດທະນາຄູຕ້ອງຮັບປະກັນທາງດ້ານປະລິມານແລະຄຸນນະພາບຕາມມາດຕະຖານການສຶກສາແນໃສ່ປູກຈິດສໍານຶກແລະສະຕິຊາດ. ສະຖານການສຶກສາ,ການຈັດຕັ້ງ,ສັງຄົມ,ຊຸມຊົນແລະພາກສ່ວນທີ່ກ່ຽວຂ້ອງສ້າງເງື່ອນໄຂໃຫ້ຄູໄດ້ຮັບການບໍາລຸງແລະຍົກລະດັບທາງດ້ານວິຊາສະເພາະຢ່າງຕໍ່ເນື່ອງ.

## ໝວດທີ2

## ບຸກຄະລາກອນການສຶກສາ

**ມາດຕາ54** (ປັບປຸງ) ບຸກຄະລາກອນການສຶກສາ ບຸກຄະລາກອນການສຶກສາແມ່ນຜູ້ເຮັດໜ້າທີ່ຄຸ້ມຄອງ,ບໍລິຫານ,ກວດກາ,ແນະນໍາ,ຊ່ວຍເຫຼືອແລະອໍານວຍຄວາມສະດວກໃຫ້ແກ່ການຮຽນການສອນຢູ່ສະຖານການສຶກສາທັງພາກລັດແລະເອກະຊົນ. ມາດຕະຖານຂອງບຸກຄະລາກອນການສຶກສາໃຫ້ປະຕິບັດຕາມລະບຽບການຂອງລັດຖະກອນທົ່ວໄປ.

**ມາດຕາ55** (ໃໝ່)ສິດ,ໜ້າທີ່ແລະພັນທະຂອງບຸກຄະລາກອນການສຶກສາ ບຸກຄະລາກອນການສຶກສາມີສິດແລະໜ້າທີ່ດັ່ງນີ້:

1. ປະຕິບັດໜ້າທີ່ຕາມຂອບເຂດສິດທີການຈັດຕັ້ງມອບໝາຍໃຫ້ແລະລາຍງານຕໍ່ສະຖານການສຶກສາທີ່ຕົນສັງກັດ;

2. ໄດ້ຮັບການບຳລຸງ,ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະແລະວຽກງານອື່ນທີ່ຕົນຮັບຜິດຊອບ;

3. ປະກອບຄຳເຫັນກ່ຽວກັບການພັດທະນາວຽກງານສຶກສາ;

4. ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແລະລະບຽບການ.

**ບຸກຄະລາກອນການສຶກສາມີພັນທະດັ່ງນີ້:**

1. ເຄົາລົບແລະປະຕິບັດຕາມແຜນຍຸດທະສາດ,ກົດໝາຍແລະລະບຽບການກ່ຽວກັບການສຶກສາຢ່າງເຂັ້ມງວດ;

2. ຮັກສາຄວາມລັບທາງລັດຖະການແລະປົກປ້ອງຜົນປະໂຫຍດສ່ວນລວມ;

3. ອຳນວຍຄວາມສະດວກແລະໃຫ້ການບໍລິການຕາມກົດໝາຍແລະລະບຽບການ;

4. ປົກປັກຮັກສາຄວາມສະຫງົບແລະຄວາມເປັນລະບຽບຮຽບຮ້ອຍຂອງສະຖານການສຶກສາ;

5. ເປັນແບບຢ່າງທີ່ດີ,ຮັກສາກຽດແລະສັກສີຂອງບຸກຄະລາກອນການສຶກສາ;

6. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳຂອງການຈັດຕັ້ງແລະສັງຄົມ;

7. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແລະລະບຽບການ.

**ມາດຕາ56** (ໃໝ່)ນະໂຍບາຍຕໍ່ບຸກຄະລາກອນການສຶກສາ ບຸກຄະລາກອນການສຶກສາໄດ້ຮັບນະໂຍບາຍໃນການປະຕິບັດໜ້າທີ່,ຍົກລະດັບວິຊາສະເພາະ,ຊີວິດການເປັນຢູ່ແລະສະຖານະທາງສັງຄົມຕາມກົດໝາຍແລະລະບຽບການ.

**ມາດຕາ57** (ໃໝ່)ການສ້າງແລະການພັດທະນາບຸກຄະລາກອນການສຶກສາ ຂະແໜງການສຶກສາທິການແລະກິລາແລະຂະແໜງການອື່ນສົ່ງເສີມແລະສ້າງເງື່ອນໄຂໃຫ້ບຸກຄະລາກອນການສຶກສາຂອງສະຖານການສຶກສາທັງພາກລັດແລະເອກະຊົນໄດ້ຮັບການຝຶກອົບຮົມ,ຍົກລະດັບທາງດ້ານວິຊາສະເພາະແລະໄດ້ຮັບການພັດທະນາຢ່າງຮອບດ້ານເພື່ອສ້າງເປັນຜູ້ສືບທອດແລະຕອບສະໜອງຄວາມຕ້ອງການຂອງວຽກງານສຶກສາໃນແຕ່ລະໄລຍະ.

## ພາກທີ7

## ການລົງທຶນໃສ່ການສຶກສາ

### ໝວດທີ1

### ການລົງທຶນຂອງລັດ

**ມາດຕາ58** (ປັບປຸງ)ການລົງທຶນຂອງລັດ ການລົງທຶນຂອງລັດແມ່ນການສະໜອງງົບປະມານໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ, ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງພາຫະນະ, ວັດຖຸປະກອບ,ສື່ການຮຽນການສອນ, ສິ່ງອໍານວຍຄວາມສະດວກຕ່າງໆໃນວຽກງານສຶກສາລວມທັງວຽກງານສົ່ງເສີມສຸຂະພາບແລະໂພຊະການ.

**ມາດຕາ59** (ປັບປຸງ)ແຫຼ່ງທຶນການສຶກສາ ແຫຼ່ງທຶນການສຶກສາໄດ້ມາຈາກ:

1. ງົບປະມານຂອງລັດ

2. ການຊ່ວຍເຫຼືອຂອງຊຸມຊົນ,ບຸກຄົນ,ນິຕິບຸກຄົນ,ຄອບຄົວແລະອົງການຈັດຕັ້ງສັງຄົມທັງພາຍໃນແລະຕ່າງປະເທດ. ເພື່ອພັດທະນາວຽກງານສຶກສາບຸກຄົນ,ນິຕິບຸກຄົນ,ການຈັດຕັ້ງທັງພາກລັດແລະເອກະຊົນພາຍໃນແລະຕ່າງປະເທດສາມາດສ້າງຕັ້ງກອງທຶນຂຶ້ນໄດ້. ການສ້າງຕັ້ງ,ການຄຸ້ມຄອງແລະນໍາໃຊ້ກອງທຶນໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ60** (ປັບປຸງ)ງົບປະມານຂອງຂະແໜງການສຶກສາ ລັດຕ້ອງຈັດບູລິມະສິດແລະເພີ່ມອັດຕາສ່ວນລາຍຈ່າຍງົບປະມານແຫ່ງລັດໃຫ້ແກ່ຂະແໜງການສຶກສາຈົນບັນລຸສິບແປດສ່ວນຮ້ອຍຂຶ້ນໄປ.ການສະໜອງງົບປະມານສໍາລັບການບໍລິຫານປົກກະຕິໃຫ້ແກ່ສະຖານການສຶກສາຂອງລັດໃຫ້ຄິດໄລ່ຕາມມູນຄ່າຫົວໜ່ວຍ,ລັດຖະບານແລະອົງການປົກຄອງທ້ອງຖິ່ນມີຄວາມຮັບຜິດຊອບໃນການຈັດແບ່ງງົບປະມານດັ່ງກ່າວຢ່າງເຂັ້ມງວດຕາມກົດໝາຍແລະລະບຽບການ. **ມາດຕາ61** (ປັບປຸງ)ຄ່າທໍານຽມແລະຄ່າບໍລິການ ສະຖານການສຶກສາມີສິດເກັບຄ່າທໍານຽມແລະຄ່າບໍລິການການສຶກສາຕາມລະບຽບການທີ່ປະກາດໃຊ້ໃນແຕ່ລະໄລຍະຍົກເວັ້ນການສຶກສາພາກບັງຄັບທີ່ເປັນຂອງລັດ.

### ໝວດທີ 2

### ການລົງທຶນຂອງເອກະຊົນ

**ມາດຕາ62** (ປັບປຸງ)ການລົງທຶນຂອງເອກະຊົນ ບຸກຄົນ,ນິຕິບຸກຄົນແລະການຈັດຕັ້ງເອກະຊົນທັງພາຍໃນແລະຕ່າງປະເທດທີ່ລົງທຶນໃສ່ການສຶກສາໄດ້ຮັບການສົ່ງເສີມໃນການສ້າງຕັ້ງສະຖານການສຶກສາລະດັບຕ່າງໆ.ເປີດການຮຽນການສອນຕາມລະບົບການສຶກສາແຫ່ງຊາດແລະຕາມຫຼັກສູດທີ່ກະຊວງສຶກສາທິການແລະກິລາອະນຸມັດເພື່ອບໍລິການໃຫ້ແກ່ສັງຄົມຕາມທີ່ໄດ້ກໍານົດໄວ້ໃນກົດໝາຍແລະລະບຽບການ.

**ມາດຕາ63** (ປັບປຸງ)ການຄຸ້ມຄອງການສຶກສາເອກະຊົນ. ລັດເປັນຜູ້ກໍານົດຫຼັກການ,ລະບຽບການແລະນະໂຍບາຍກ່ຽວກັບການຈັດຕັ້ງ,ການເຄື່ອນໄຫວ,ການຄຸ້ມຄອງສະຖານການສຶກສາເອກະຊົນ. ການຄຸ້ມຄອງການສຶກສາເອກະຊົນໃຫ້ປະຕິບັດຄືກັນກັບການຄຸ້ມຄອງການສຶກສາຂອງລັດ.

## ພາກທີ 8

## ການປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດ

## ໝວດທີ 1

## ການປະກັນຄຸນນະພາບການສຶກສາ

**ມາດຕາ64** (ໃໝ່)ການປະກັນຄຸນນະພາບການສຶກສາ ການປະກັນຄຸນນະພາບການສຶກສາແມ່ນການກຳນົດມາດຕະຖານ,ການຕິດຕາມ,ປະເມີນຜົນແລະກວດສອບຄຸນນະພາບການສຶກສາທັງພາກລັດແລະເອກະຊົນດ້ວຍການຈັດຕັ້ງກົນໄກປະກັນຄຸນນະພາບພາຍໃນແລະພາຍນອກໂດຍມີຈຸດປະສົງເພື່ອຮັບຮອງແລະຢັ້ງຢືນຜົນຂອງການສຶກສາ,ສ້າງຄວາມເຊື່ອໝັ້ນຕໍ່ສັງຄົມ,ຊຸມຊົນແລະຜູ້ປົກຄອງດຶງດູດຄວາມສົນໃຈຕໍ່ການຮຽນເຮັດໃຫ້ຜົນຂອງການສຶກສາມີມາດຕະຖານທຽບເທົ່າກັບມາດຕະຖານພາກພື້ນແລະສາກົນ.

**ມາດຕາ65** (ໃໝ່)ກົນໄກການປະກັນຄຸນນະພາບການສຶກສາ ກົນໄກການປະກັນຄຸນນະພາບການສຶກສາປະກອບດ້ວຍການປະກັນຄຸນນະພາບພາຍໃນແລະພາຍນອກ. 1ການປະກັນຄຸນນະພາບພາຍໃນແມ່ນການຕິດຕາມແລະປະເມີນຜົນຄຸນນະພາບຕາມມາດຕະຖານຂອງກະຊວງສຶກສາທິການແລະກິລາໂດຍແມ່ນສະຖານການສຶກສາເປັນຜູ້ປະເມີນ; 2.ການປະກັນຄຸນນະພາບພາຍນອກແມ່ນການຕິດຕາມ,ປະເມີນຜົນແລະກວດສອບຄຸນນະພາບຕາມາດຕະຖານຂອງກະຊວງສຶກສາທິການແລະກິລາຫຼືຂອງສາກົນໂດຍແມ່ນການຈັດຕັ້ງປະຕິບັດຄຸນນະພາບພາຍນອກເປັນຜູ້ປະເມີນ. ວິທີການປະເມີນການປະກັນຄຸນນະພາບພາຍໃນແລະພາຍນອກໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2

## ຂອບວຸດທິການສຶກສາແຫ່ງຊາດ

**ມາດຕາ66** (ໃໝ່)ຂອບວຸດທິການສຶກສາແຫ່ງຊາດ ຂອບວຸດທິການສຶກສາແຫ່ງຊາດແມ່ນການກຳນົດວຸດທິການສຶກສາແຕ່ລະລະດັບໂດຍກຳນົດຂົງເຂດຄວາມຮູ້,ຄວາມຊຳນານງານແລະປະສົບການຂອງຜູ້ຮຽນແຕ່ລະລະດັບໂດຍມີຈຸດປະສົງດັ່ງນີ້:

1. ສະໜັບສະໜູນການສຶກສາຮຽນຮູ້ຕະຫຼອດຊີວິດ;

2. ສະໜັບສະໜູນການຮຽນຕໍ່ລະຫວ່າງຊັ້ນແລະສາຍບົນພື້ນຖານເງື່ອນໄຂການເຂົ້າຮຽນ,ການປະເມີນຜົນການຮຽງຂອງ

ນັກສຶກສາໂດຍມີເກນມາດຕະການຮັບຮອງ;

3. ສ້າງຄວາມໂປ່ງໃສໃນການຮັບຮູ້ຄຸນວຸດທິຂອງຜູ້ຖືປະກາສະນີຍະບັດ, ທຽບໂອນປະສົບການແລະການຮຽນຮູ້ທີ່ມີມາກ່ອນ

4. ສົ່ງເສີມຄວາມເຊື່ອໝັ້ນໃນລະບົບການສຶກສາ ແລະ ວຸດທິການສຶກສາທີ່ໄດ້ຮັບເພື່ອເປັນພື້ນຖານໃນການສົມທຽບຜົນການຮຽນແລະເປັນບ່ອນອີງໃນການສຶກສາຕໍ່ພາຍໃນແລະຕ່າງປະເທດ.

**ມາດຕາ67** (ໃໝ່)ການກຳນົດຂອບວຸດທິການສຶກສາແຫ່ງຊາດ ຫຼັກການແລະວິທີການໃນການກຳນົດລະດັບຂອບວຸດທິການສຶກສາແຫ່ງຊາດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ9

## ການມີສ່ວນຮ່ວມຂອງສັງຄົມຕໍ່ການສຶກສາ

**ມາດຕາ68** (ປັບປຸງ)ການປະກອບສ່ວນຂອງສັງຄົມ ຊຸມຊົນແລະການຈັດຕັ້ງສັງຄົມມີພັນທະປະກອບສ່ວນດ້ານທຶນ,ວັດຖຸປະກອນແລະອື່ນໆດ້ວຍຫຼາຍຮູບການເຂົ້າໃນການພັດທະນາການສຶກສາ. ບັນດາຫົວໜ່ວຍທຸລະກິດແລະຜູ້ປະກອບການອື່ນມີພັນທະໃຫ້ຄວາມຮ່ວມມື,ອຳນວຍຄວາມສະດວກແລະສະໜັບສະໜູນຄູ,ຜູ້ຮຽນເຂົ້າໄປສຶກສາຄົ້ນຄວ້າ,ທັດສະນະສຶກສາແລະຝຶກງານຢູ່ບ່ອນປະກອບການຂອງຕົນ. ສື່ມວນຊົນມີພັນທະໂຄສະນາເຜີຍແຜ່ວຽກງານສຶກສາດ້ວຍຫຼາຍຮູບການຕາມເງື່ອນໄຂແລະຄວາມສາມາດຕົວຈິງ.

ມາດຕາ69 (ປັບປຸງ)ການປະກອບສ່ວນຂອງຄອບຄົວ ຄອບຄົວມີພັນທະປະກອບສ່ວນທາງດ້ານສະຕິປັນຍາ,ທຶນຮອນ,ພາຫະນະ,ວັດຖຸປະກອນ,ສື່ການຮຽນການສອນ,ການກໍ່ສ້າງ,ປົກປັກຮັກສາແລະບູລະນະສະຖານການສຶກສາຮ່ວມກັບຄະນະພັດທະນາການສຶກສາ,ສະຖານການສຶກສາແລະຄູເພື່ອສ້າງເງື່ອນໄຂແລະອຳນວຍຄວາມສະດວກແກ່ລູກຫຼານໃຫ້ໄດ້ຮັບການສຶກສາທີ່ດີ,ເຂົ້າຮ່ວມກິດຈະກຳແລະສຶກສາອົບຮົມພວກກ່ຽວໃຫ້ເປັນພົນລະເມືອງດີຂອງຊາດ.

## ພາກທີ 10

## ຂໍ້ຫ້າມ

**ມາດຕາ170** (ປັບປຸງ)ຂໍ້ຫ້າມສຳລັບຜູ້ຮຽນ ຫ້າມຜູ້ຮຽນມີພຶດຕິກຳດັ່ງນີ້:

1. ລະເມີດລະບຽບວິໄນຂອງສະຖານການສຶກສາ;

2. ໃຫ້ສິນບົນແກ່ຄູແລະບຸກຄະລາກອນການສຶກສາ;

3. ທຸດຈະລິດການຮຽນ,ການຝຶກອົບຮົມວິຊາຊີບ,ການສອບເສັງແລະການທົດສອບ;

4. ພົວພັນ,ຊື້ຂາຍ,ເສບສິ່ງເສບຕິດ,ສິ່ງມຶນເມົາ,ສິ່ງລາມົກອະນາຈານ,ຫຼິ້ນການພະນັນທຸກປະເພດຢູ່ສະຖານການສຶກສາ ແລະ ສະຖານທີ່ອື່ນເຊັ່ນຮ້ານກິນດື່ມ,ຮ້ານສະໜຸກເກີ້,ຮ້ານເກມ,ຮ້ານບັນເທີງແລະນຸ່ງເຄື່ອງແບບນັກຮຽນເຂົ້າໃນສະຖານທີ່ດັ່ງກ່າວ

5. ພົວພັນຊູ້ສາວທີ່ຂັດກັບກົດໝາຍ,ລະບຽບຂອງສະຖານການສຶກສາແລະຮີດຄອງປະເພນີອັນດີງາມ;

6. ຄອບຄອງອາວຸດ,ວັດຖຸລະເບີດແລະສານເຄມີທີ່ຕ້ອງຫ້າມ;

7. ສ້າງກຸ່ມກ້ອນ,ພັກພວກເພື່ອກໍ່ຄວາມບໍ່ສະຫງົບຢູ່ໃນສະຖານການສຶກສາແລະສັງຄົມ

8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍແລະລະບຽບການ.

**ມາດຕາ171** (ປັບປຸງ)ຂໍ້ຫ້າມສຳລັບຄູ ຫ້າມຄູມີພຶດຕິກຳດັ່ງນີ້:

1. ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຕໍ່ການສິດສອນ;

2. ສວຍໃຊ້ໜ້າທີ່,ໃຫ້ຫຼືຮັບສິນບົນເພື່ອຜົນປະໂຫຍດສ່ວນຕົວ,ຄອບຄົວ,ຈຸ້ມເຈື້ອແລະພັກພວກ;

3. ປົດເປືອເນື້ອໃນຫຼັກສູດ,ນຳໃຊ້ການສອນເພີ່ມໂດຍເປັນການບັງຄັບ;

4. ທຸດຈະລິດໃນການຈັດຕັ້ງການຮຽນການສອນ,ການຝຶກອົບຮົມວິຊາຊີບ,ການສອບເສັງແລະການທົດສອບ

5. ທຸບຕີ,ຮ້າຍດ່າ,ທາລຸນແລະລໍາອຽງຕໍ່ຜູ້ຮຽນ

6. ແບ່ງແຍກຄວາມສາມັກຄີຫຼືສ້າງຄວາມປັ່ນປ່ວນພາຍໃນສະຖານການສຶກສາແລະສັງຄົມ;

7. ເປີດເຜີຍຫຼືເຜີຍແຜ່ສິ່ງລາມົກອະນາຈານ;

8. ພົວພັນ,ຊື້ຂາຍ,ເສບສິ່ງເສບຕິດແລະຫຼິ້ນການພະນັນທຸກປະເພດທີ່ຜິດກົດມາຍ

9. ນຸ່ງເຄື່ອງແບບຄູເຂົ້າໃນຮ້ານບັນເທີງຫຼືສະຖານທີ່ອື່ນທີ່ບໍ່ເໝາະສົມ

10. ໂຄສະນາສິ່ງເສີມຫຼືດື່ມເຄື່ອງດື່ມທີ່ມີທາດເຫຼົ້າໃນສະຖານການສຶກສ

11. ພົວພັນຊູ້ສາວຫຼືຊຸກຍູ້ສິ່ງເສີມໃຫ້ຜູ້ຮຽນກະທໍາຜິດຕໍ່ຮີດຄອງປະເພນີ,ລະບຽບຂອງສະຖານການສຶກສາ

12. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍແລະລະບຽບການ.

**ມາດຕາ172** (ປັບປຸງ)ຂໍ້ຫ້າມສໍາລັບບຸກຄະລາກອນການສຶກສາ ຫ້າມບຸກຄະລາກອນການສຶກສາມີພຶດຕິກໍາດັ່ງນີ້:

1. ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານຂອງຕົນ;

2. ສໍ້ລາດບັງຫຼວງ,ສວຍໃຊ້ໜ້າທີ່ຕໍາແໜ່ງ, ຮັບ ແລະ ໃຫ້ສິນບົນ, ເປີດເຜີຍຄວາມລັບເພື່ອຫາຜົນປະໂຫຍດສ່ວນຕົວ

3. ທຸດຈະລິດໃນການຈັດຕັ້ງການຮຽນການສອນ,ການຝຶກອົບຮົມວິຊາຊີບ,ການສອບເສັງແລະການທົດສອບ;

4. ສ້າງກຸ່ມກ້ອນ,ພັກພວກເພື່ອແບ່ງແຍກຄວາມສາມັກຄີຫຼືສ້າງຄວາມບໍ່ສະຫງົບໃນອົງການຄຸ້ມຄອງວຽກງານສຶກສາ,ໃນສະຖານການສຶກສາແລະສັງຄົມ

5. ຊື້ຂາຍ,ພົວພັນກັບສິ່ງເສດບຕິດແລະຫຼິ້ນການພະນັນທຸກປະເພດທີ່ຜິດກົດໝາຍ

6. ພົວພັນຊູ້ສາວທີ່ຂັດກັບກົດໝາຍ,ລະບຽບຂອງສະຖານການສຶກສາແລະຮີດຄອງປະເພນີອັນດີງາມ

7. ເປີດເຜີຍຫຼືເຜີຍແຜ່ສິ່ງລາມົກອະນາຈານ

8. ໂຄສະນາສິ່ງເສີມເຄື່ອງດື່ມທີ່ມີທາດເຫຼົ້າໃນສະຖານການສຶກສາ

9. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍແລະລະບຽບການ.

**ມາດຕາ173** (ໃໝ່)ຂໍ້ຫ້າມສໍາລັບສະຖານການສຶກສາ ຫ້າມສະຖານການສຶກສາມີພຶດຕິກໍາດັ່ງນີ້:

1. ຊື້ຂາຍ,ໂຄສະນາ,ສົ່ງເສີມເຄື່ອງດື່ມທີ່ມີທາດເຫຼົ້າ,ສິ່ງເສບຕິດ,ອາຫານແລະເຄື່ອງດື່ມທີ່ບໍ່ມີຄຸນນະພາບ

2. ໂອນແລະແລກປ່ຽນອາຄານຫຼືສິດນໍາໃຊ້ທີ່ດິນແລະຊັບສິນອື່ນຂອງຕົນໃຫ້ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການສຶກສາທິການແລະກິລາ

3. ນໍາໃຊ້ເປັນບ່ອນດໍາເນີນທຸລະກິດທີ່ເປັນຜົນກະທົບຕໍ່ການຮຽນການສອນ

4. ກໍານົດຄ່າທໍານຽມ,ຄ່າຮຽນໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການສຶກສາທິການແລະກິລາ

5. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍແລະລະບຽບການ.

**ມາດຕາ174** (ໃໝ່)ຂໍ້ຫ້າມສໍາລັບຄອບຄົວ ຫ້າມຄອບຄົວມີພຶດຕິກໍາດັ່ງນີ້:

1. ກີດກັ້ນ,ລໍາອຽງລູກແລະຜູ້ຢູ່ໃຕ້ການຄຸ້ມຄອງຂອງຕົນໃນການສຶກສາ

2. ສະແດງພຶດຕິກໍາທີ່ສົ່ງເສີມເດັກໄປໃນທາງທີ່ບໍ່ຖືກຕ້ອງ;

3. ໃຊ້ແຮງງານຜູ້ຢູ່ໃຕ້ການຄຸ້ມຄອງຂອງຕົນຊຶ່ງມີຜົນສະທ້ອນເຖິງການຮຽນ;

4. ໃຫ້ສິນບົນແກ່ຄູແລະບຸກຄະລາກອນການສຶກສາ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍແລະລະບຽບການ.

**ມາດຕາ175** (ໃໝ່)ຂໍ້ຫ້າມສຳລັບບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງອື່ນ ຫ້າມບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງອື່ນທີ່ມີພຶດຕິກຳດັ່ງນີ້:

1. ຂັດຂວາງການເຄື່ອນໄຫວວຽກງານ,ກິດຈະກຳກ່ຽວກັບການສຶກສາ

2. ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຜົນປະໂຫຍດສ່ວນຕົວ,ຄອບຄົວ,ຈຸ້ມເຈື້ອແລະພັກພວກ

3. ເຄື່ອນໄຫວທີ່ເປັນການແຕະຕ້ອງເຖິງກຽດສັກສີຫຼືບິດບາດຂອງຄູ,ບຸກຄະລາກອນການສຶກສາ ແລະ ສະຖານການສຶກສາ

4. ໂຄສະນາຊວນເຊື່ອກ່ຽວກັບວຽກງານສຶກສາເກີນຄວາມເປັນຈິງ

5. ບໍລິການສິ່ງມຶນເມົາ,ສິ່ງເສບຕິດ,ຫຼິ້ນການພະນັນທີ່ຕ້ອງຫ້າມ,ບັນເທີງແລະສິ່ງສຽງດັງຢູ່ໃນບໍລິເວນແລະບ່ອນໃກ້ຄຽງສະຖານການສຶກສາ;

6. ນຳໃຊ້ກາໝາຍ,ເຄື່ອງແບບແລະຕາປະທັບຂອງອົງການຄຸ້ມຄອງວຽກງານສຶກສາໂດຍບໍ່ໄດ້ຮັບອະນຸຍາດ;

7. ປະພຶດໃນສິ່ງທີ່ບໍ່ຖືກຕ້ອງຕາມຮີດຄອງປະເພນີອັນດີງາມຂອງຊາດ;

8. ເຜີຍແຜ່ສິ່ງລາມົກອະນາຈານທີ່ຂັດກັບຮີດຄອງປະເພນີອັນດີງາມຂອງຊາດພາຍໃນສະຖານການສຶກສາ;

9. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍແລະລະບຽບການ.

## ພາກທີ 11

## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ176**(ໃໝ່)ຮູບການແກ້ໄຂຂໍ້ຂັດແຍ່ງການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການສຶກສາອາດຈະດຳເນີນດ້ວຍຮູບການດັ່ງນີ້:

1. ການໄກ່ເກ່ຍຫຼືການປະນີປະນອມ;

2. ການແກ້ໄຂທາງດ້ານບໍລິຫານ;

3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຕັດສິນຂອງສານ;

5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ177** (ໃໝ່)ການໄກ່ເກ່ຍຫຼືການປະນີປະນອມ ໃນກໍລະນີທີ່ເກີດຂໍ້ຂັດແຍ່ງກ່ຽວກັບວຽກງານສຶກສາຄູ່ກໍລະນີສາມາດເຈລະຈາດ້ວຍການໄກ່ເກ່ຍຫຼືການປະນີປະນອມກັນ.

**ມາດຕາ178** (ໃໝ່)ການແກ້ໄຂທາງດ້ານບໍລິຫານ ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບວຽກງານສຶກສາຄູ່ກໍລະນີມີສິດສະເໜີຕໍ່ຂະແໜງການສຶກສາທິການແລະກິລາບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນເປັນຜູ້ພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະ

ບຽບການ.

**ມາດຕາ179** (ໃໝ່)ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບວຽກງານສຶກສາຢູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເພື່ອພິຈາລະນາແກ້ໄຂຕາມກົດໝາຍແລະລະບຽບການ.

**ມາດຕາ180** (ໃໝ່)ການຕັດສິນຂອງສານ ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນວຽກງານສຶກສາຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນເພື່ອພິຈາລະນາຕັດສິນຕາມກົດໝາຍແລະລະບຽບການ.

**ມາດຕາ181** (ໃໝ່)ການແກ້ໄຂທີ່ມີລັກສະນະສາກົນ ເມື່ອມີຂໍ້ຂັດແຍ່ງກ່ຽວກັບວຽກງານສຶກສາທີ່ມີລັກສະນະສາກົນໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງຂອງສປປລາວ,ສັນຍາສາກົນແລະສົນທິສັນຍາທີ່ສປປລາວເປັນພາຄີ.

# ພາກທີ່ 12

# ການຄຸ້ມຄອງແລະການກວດກາວຽກງານສຶກສາ

## ໝວດທີ 1

## ການຄຸ້ມຄອງວຽກງານສຶກສາ

**ມາດຕາ82** (ປັບປຸງ)ອົງການຄຸ້ມຄອງວຽກງານສຶກສາ ລັດຖະບານເປັນຜູ້ຄຸ້ມຄອງວຽກງານສຶກສາຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດໂດຍມອບໃຫ້ກະຊວງສຶກສາທິການແລະກິລາເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະພັດທະນາການສຶກສາກ່ຽວຂ້ອງ.

**ອົງການຄຸ້ມຄອງວຽກງານສຶກສາປະກອບດ້ວຍ:**

1. ກະຊວງສຶກສາທິການແລະກິລາ;
2. ພະແນກສຶກສາທິການແລະກິລາແຂວງ,ນະຄອນ;
3. ຫ້ອງການສຶກສາທິການແລະກິລາເມືອງ,ເທດສະບານ;
4. ສະຖານການສຶກສາ.

**ມາດຕາ83** (ປັບປຸງ)ສິດແລະໜ້າທີ່ຂອງກະຊວງສຶກສາທິການແລະກິລາ ໃນການຄຸ້ມຄອງວຽກງານສຶກສາ ກະຊວງສຶກສາທິການແລະກິລາມີສິດແລະໜ້າທີ່ດັ່ງນີ້:

1. ຄົ້ນຄວ້າສ້າງນະຖຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນງານ, ໂຄງການພັດທະນາການສຶກສາເພື່ອສະເໜີລັດຖະບານພິຈາລະນາ
2. ໂຄສະນາເຜີຍແຜ່ນະໂຍບາຍ,ແຜຍຍຸດທະສາດ,ກົດໝາຍ,ແຜນງານ,ໂຄງການພັດທະນາການສຶກສາແລະນິຕິກຳອື່ນກ່ຽວກັບວຽກງານສຶກສາ;
3. ສ້າງແລະປັບປຸງນິຕິກຳຕ່າງໆກ່ຽວກັບການຄຸ້ມຄອງແລະບໍລິຫານການສຶກສາ;
4. ສ້າງ, ພັດທະນາຫຼັກສູດ, ອຸປະກອນ, ສື່ການຮຽນການສອນໃນແຕ່ລະໄລຍະ, ສິ່ງອຳນວຍຄວາມສະດວກຕ່າງໆ ແລະ ຊີ້ນຳການຈັດຕັ້ງຝຶກອົບຮົມ, ການນຳໃຊ
5. ຊີ້ນຳການປະຕິບັດແຜນການສຶກສາພາກບັງຄັບແລະການລຶບລ້າງຄວາມບໍ່ຮູ້ໜັງສື;
6. ກຳນົດມາດຕະຖານການສຶກສາແລະສະຖານການສຶກສາ;
7. ສ້າງ,ນຳໃຊ້,ບຳລຸງ,ຄຸ້ມຄອງຄູແລະບຸກຄະລາກອນການສຶກສາ;
8. ຄຸ້ມຄອງບັນດາມະຫາວະທິຍາໄລ,ສະຖາບັນແລະສະຖານການສຶກສາອື່ນຕາມລະບຽບການ;
9. ຊີ້ນຳ,ຕິດຕາມ,ຊຸກຍູ້,ກວດກາ,ກວດການແລະປະເມີນຜົນວຽກງານສຶກສາ;
10. ປະສານສົມທົບກັບການຈັດຕັ້ງຂອງລັດແລະການຈັດຕັ້ງອື່ນກ່ຽວກັບວຽກງານສຶກສາ;
11. ພົວພັນຮ່ວມມືກັບຕ່າງປະເທດ,ພາກພື້ນແລະສາກົນກ່ຽວກັບວຽກງານສຶກສາ;
12. ສະຫຼຸບ,ລາຍງານການຈັດຕັ້ງປະຕິບັດວຽກງານສຶກສາໃຫ້ລັດຖະບານຢ່າງເປັນປົກກະຕິ;

13. ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມກົດໝາຍແລະລະບຽບການ.

**ມາດຕາ84** (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນໃນການຄຸ້ມຄອງວຽກງານສຶກສາພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນມີສິດແລະໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານສຶກສາມາເປັນແຜນການ, ແຜນງານແລະ ໂຄງການສະເພາະຂອງຕົນແລ້ວຈັດຕັ້ງປະຕິບັດ;

2. ໂຄສະນາ,ເຜີຍແຜ່,ຕິດຕາມ,ຊີ້ນຳແລະກວດກາການຈັດຕັ້ງປະຕິບັດກົດໝາຍແຜນການ,ແຜນງານແລະໂຄງການກ່ຽວກັບວຽກງານສຶກສາ;

3. ຈັດຕັ້ງປະຕິບັດແຜນການສຶກສາພາກບັງຄັບ,ການລຶບລ້າງຄວາມບໍ່ຮູ້ໜັງສືແລະຍົກລະດັບການສຶກສາຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;

4. ສະເໜີແຜນການບຳລຸງ,ສ້າງ,ນຳໃຊ້ຄູແລະບຸກຄະລາກອນການສຶກສາ;

5. ຄຸ້ມຄອງບັນດາວິທະຍາໄລແລະສະຖານການສຶກສາອື່ນຕາມລະບຽບການ;

6. ຄຸ້ມຄອງແລະບຸກຄະລາກອນການສຶກສາລວມທັງການບັນຈຸແລະສັບຊ້ອນ;

7. ຊີ້ນຳ,ຊຸກຍູ້,ຕິດຕາມ,ກວດກາ,ກວດການແລະປະເມີນຜົນການປະຕິບັດແຜນການ,ແຜນງານແລະໂຄງການພັດທະນາການສຶກສາ;

8. ປະສານສົມທົບກັບການຈັດຕັ້ງຂອງລັດແລະການຈັດຕັ້ງອື່ນກ່ຽວກັບວຽກງານສຶກສາ;

9. ພົວພັນຮ່ວມມືກັບຕ່າງປະເທດ,ພາກພື້ນແລະສາກົນກ່ຽວກັບວຽກງານສຶກສາຕາມການມອບໝາຍ;

10. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານສຶກສາໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງແຂວງ, ນະຄອນຢ່າງເປັນປົກກະຕິ;

11. ນຳໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມກົດໝາຍແລະລະບຽບການ.

**ມາດຕາ85** (ປັບປຸງ)ສິດແລະໜ້າທີ່ຂອງຫ້ອງການສຶກສາທິການແລະກິລາເມືອງ,ເທດສະບານ ໃນການຄຸ້ມຄອງວຽກງານສຶກສາຫ້ອງການສຶກສາທິການແລະກິລາເມືອງ,ເທດສະບານມີສິດແລະໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ,ແຜນຍຸດທະສາດ,ກົດໝາຍແລະນິຕິກຳອື່ນກ່ຽວກັບວຽກງານສຶກສາ;

2. ເຜີຍແຜ່,ຕິດຕາມແລະກວດກາການຈັດຕັ້ງປະຕິບັດກົດໝາຍແລະລະບຽບການກ່ຽວກັບວຽກງານການສຶກສາ

3. ຈັດຕັ້ງປະຕິບັດແຜນການສຶກສາພາກບັງຄັບ,ການລຶບລ້າງຄວາມບໍ່ຮູ້ໜັງສືແລະຍົກລະດັບການສຶກສາຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;

4. ສະເໜີແຜນການບຳລຸງ, ສ້າງ, ນຳໃຊ້ຄູ ແລະ ບຸກຄະລາກອນການສຶກສາ

5. ຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ,ປະຖົມສຶກສາ, ມັດທະຍົມສຶກສາແລະສະຖານການສຶກສາອື່ນຕາມລະບຽບການ

6. ຄຸ້ມຄອງຄູແລະບຸກຄະລາກອນການສຶກສາລວມທັງການບັນຈຸແລະສັບຊ້ອນ;

7. ນໍາ,ຊຸກຍູ້,ຕິດຕາມ,ກວດກາ,ກວດການແລະປະເມີນຜົນການປະຕິບັດແຜນການ,ແຜນງານແລະໂຄງການພັດທະນາການສຶກສາ

8. ປະສານສົມທົບກັບການຈັດຕັ້ງຂອງລັດແລະການຈັດຕັ້ງອື່ນກ່ຽວກັບວຽກງານສຶກສາ;

9. ສະຫຼຸບ,ລາຍງານການຈັດຕັ້ງປະຕິບັດວຽກງານສຶກສາໃຫ້ພະແນກສຶກສາທິການ ແລະ ກິລາແຂວງ,ນະຄອນ ແລະ ອົງການປົກຄອງເມືອງ,ເທດສະບານຢ່າງເປັນປົກກະຕິ;

10. ນໍາໃຊ້ສິດແລະປະຕິບັດໜ້າທີ່ອື່ນຕາມກົດໝາຍແລະລະບຽບການ.

**ມາດຕາ86** (ໃໝ່)ສິດແລະໜ້າທີ່ຂອງສະຖານການສຶກສາ ໃນການຄຸ້ມຄອງວຽກງານສຶກສາສະຖານການສຶກສາມີສິດແລະໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍແລະຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສຶກສາຢ່າງເຂັ້ມງວດ

2. ອອກລະບຽບການຄຸ້ມຄອງວຽກງານສຶກສາຕາມຈຸດພິເສດແລະຂອບເຂດຄວາມຮັບຜິດຊອບຂອງຕົນ

3. ຈັດຕັ້ງການຮຽນການສອນໃຫ້ມີຄຸນນພາບຄົບເນື້ອໃນຫຼັກສູດຕາມສາມລັກສະນະຫ້າຫຼັກມູນຂອງການສຶກສາ, ຄົ້ນຄວ້າວິທະຍາສາດແລະຢັ້ງຢືນການສຶກສາຕາມຊັ້ນຂອງຜູ້ຮຽນ

4. ໃຫ້ການບໍລິການດ້ານວິຊາການແກ່ສັງຄົມແລະຊຸມຊົນດ້ວຍຫຼາຍຮູບແບບຕາມຄວາມສາມາດຕົວຈິງ

5. ຄຸ້ມຄອງແລະປັບປຸງການຈັດຕັ້ງຂອງຕົນໃຫ້ເຂັ້ມຂແງ,ມີປະສິດທິພາບແລະປະສິດທິຜົນ

6. ຄຸ້ມຄອງ,ນໍາໃຊ້,ປົກປັກຮັກສາ,ສ້ອມແປງອາຄານສະຖານທີ່,ວັດຖຸປະກອນ,ສື່ການຮຽນການສອນສິ່ງອໍານວຍຄວາມສະດວກຕາມລະບຽບການ;

7. ເກັບແລະຄຸ້ມຄອງຄ່າທໍານຽມ,ຄ່າບໍລິການການຮຽນການສອນຕາມກົດໝາຍແລະລະບຽບການ;

8. ພິຈາລະນາເກັບຮັບແລະບັນຈຸຄູ,ບຸກຄະລາກອນການສຶກສາແລະຜູ້ຮຽນຕາມແຜນການ;

9. ຍ້ອງຍໍແລະລົງວິໄນຕໍ່ຄູ,ບຸກຄະລາກອນການສຶກສາແລະຜູ້ຮຽນຕາມລະບຽບການ;

10. ຮັບປະກັນການປະຕິບັດສິດສະເໝີພາບຂອງຜູ້ຮຽນ, ປົກປ້ອງສິດແລະຜົນປະໂຫຍດອັນຊອບທໍາຂອງຄູ, ບຸກຄະລາກອນການສຶກສາແລະຜູ້ຮຽນ;

11. ຕ້ານ,ສະກັດກັ້ນປາກົດການຫຍໍ້ທໍ້,ສ້າງສະພາບແວດລ້ອມທີ່ດີ,ປອດໄພ,ອະນຸລັກແລະສົ່ງເສີມວັດທະນະທໍາອັນດີງາມຂອງຊາດ;

12. ປະສານສົມທົບແລະຮ່ວມມືກັບອົງການປົກຄອງ,ອົງການຈັດຕັ້ງທັງພາຍໃນແລະຕ່າງປະເທດແລະພາກສ່ວນອື່ນທີ່ກ່ຽວຂ້ອງເພື່ອສົ່ງເສີມການຮຽນການສອນແລະການຄຸ້ມຄອງບໍລິຫານວຽກງານ;

13. ຕິດຕາມ,ກວດກາແລະປະເມີນຜົນວຽກງານສຶກສາແລ້ວສະຫຼຸບ,ລາຍງານຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ,ປະຕິບັດໜ້າທີ່ແລະພັນທະອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍແລະລະບຽບການ.

**ມາດຕາ87** (ປັບປຸງ)ສິດແລະໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະພັດທະນາການສຶກສາທີ່ກ່ຽວຂ້ອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະພັດທະນາການສຶກສາທີ່ກ່ຽວຂ້ອງມີສິດແລະໜ້າທີ່ປະສານສົມທົບແລະຮ່ວມມືກັບຂະແໜງການສຶກສາທິການ ແລະ ກິລາໃນການສ້າງແຜນ, ແບ່ງ

ງົບປະມານ, ລົງທຶນ,ກໍ່ສ້າງພື້ນຖານໂຄງລ່າງ, ຈັດຫາແລະປົກປັກຮັກສາສະຖານການສຶກສາ,ວັດຖຸປະກອນ, ຊ່ວຍເຫຼືອ,ອໍານວຍຄວາມສະດວກ,ຕິດຕາມ,ກວດກາແລະປະເມີນຜົນເພື່ອເຮັດໃຫ້ວຽກງານສຶກສາມີຄຸນນະພາບຕາມພາລະບົດບາດແລະຄວາມຮັບຜິດຊອບຂອງຕົນ.

**ມາດຕາ88** (ປັບປຸງ)ສະພາທີ່ປຶກສາການສຶກສາ ສະພາທີ່ປຶກສາການສຶກສາແມ່ນການຈັດຕັ້ງໜຶ່ງທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການສຶກສາທິການແລະກິລາ,ປະກອບດ້ວຍຫຼາຍພາກສ່ວນທີ່ກ່ຽວຂ້ອງເຊັ່ນຜູ້ຊົງຄຸນວຸດທິ,ປັນຍາຊົນ,ຜູ້ຕາງໜ້າແນວລາວສ້າງຊາດ,ອົງການຈັດຕັ້ງມະຫາຊົນ,ຜູ້ປະກອບການດ້ານທຸລະກິດທັງພາກລັດແລະເອກະຊົນຊຶ່ງມີນ້າທີ່ໃຫ້ຄໍາປຶກສາດ້ານນະໂຍບາຍ,ການມີສ່ວນຮ່ວມໃນການພັດທະນາການສຶກສາ. ການສ້າງຕັ້ງສະຖາທີ່ປຶກສາການສຶກສາຂອງສະຖານການສຶກສາໃຫ້ປະຕິບັດຕາມການແບ່ງຂັ້ນຄຸ້ມຄອງທີ່ກະຊວງສຶກສາທິການແລະກິລາວາງອອກ. ການຈັດຕັ້ງແລະການເຄື່ອນໄຫວຂອງສະພາທີ່ປຶກສາການສຶກສາໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2

## ການກວດກາວຽກງານສຶກສາ

**ມາດຕາ89** (ປັບປຸງ)ອົງການກວດກາວຽກງານສຶກສາ ອົງການກວດກາວຍກງານສຶກສາປະກອບດ້ວຍອົງການກວດກາພາຍໃນແລະອົງການກວດກາພາຍນອກ. ອົງການກວດກາພາຍໃນແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານສຶກສາທີ່ໄດ້ກໍານົດໄວ້ໃນມາດຕາ82ຂອງກົດໝາຍສະບັບນີ້. ອົງການກວດກາພາຍນອກປະກອບດ້ວຍສະພາແຫ່ງຊາດ,ອົງການກວດກາລັດຖະບານແລະຕ້ານການສໍ້ລາດບັງຫຼວງ,ອົງການກວດສອບແຫ່ງລັດແລະການຕິດຕາມກວດກາຂອງປະຊາຊົນ.

**ມາດຕາ90** (ໃໝ່)ເນື້ອໃນການກວດກາ ການກວດກາວຽກງານສຶກສາມີເນື້ອໃນຕົ້ນຕໍດັ່ງນີ້:

1. ການປະຕິບັດນະໂຍບາຍ,ກົດໝາຍແລະລະບຽບການກ່ຽວກັບວຽກງານສຶກສາ;

2. ການຈັດຕັ້ງແລະການເຄື່ອນໄຫວວຽກງານຂອງຂະແໜງການສຶກສາທິການແລະກິລາ;

3. ຄວາມຮັບຜິດຊອບ,ການປະພຶດແລະແບບແຜນວິທີເຮັດວຽກຂອງຄູແລະບຸກຄະລາກອນການສຶກສາ;

4. ການເຄື່ອນໄຫວຂອງຜູ້ປະກອບການດ້ານການສຶກສາ;

5. ການນໍາໃຊ້ງົບປະມານ ແລະ ການເງິນຂອງຂະແໜງການສຶກສາທິການແລະກິລາ;

6. ການປະຕິບັດສັນຍາສາກົນ ແລະ ສົນທິສັນຍາກ່ຽວກັບວຽກງານສຶກສາທີ່ ສປປ ລາວເປັນພາຄີ.

**ມາດຕາ91** (ໃໝ່)ຮູບການການກວດກາ ການກວດກາວຽກງານສຶກສາມີສາມຮູບການດັ່ງນີ້:

1. ການກວດກາຕາມລະບົບປົກກະຕິຊຶ່ງແມ່ນການກວດກາທີ່ດໍາເນີນຕາມແຜນການຢ່າງເປັນປະຈໍາແລະມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າຊຶ່ງແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈໍາເປັນຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນຊຶ່ງແມ່ນການກວດກາຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ພາກທີ 13

## ວັນຄູແຫ່ງຊາດ, ກາໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ92** (ປັບປຸງ)ວັນຄູແຫ່ງຊາດ ລັດກຳນົດເອົາວັນທີ7 ຕຸລາ ເປັນວັນຄູແຫ່ງຊາດຊຶ່ງເປັນວັນພັກລັດຖະການສຳລັບຄູ,ບຸກຄະລາກອນການສຶກສາແລະຜູ້ຮຽນ.ທຸກຂະແໜງການທັງພາກລັດແລະເອກະຊົນ,ແນວລາວສ້າງຊາດ,ອົງການຈັດ

ຕັ້ງມະຫາຊົນແລະອົງການຈັດຕັ້ງສັງຄົມພ້ອມດ້ວຍປະຊາຊົນປະກອບສ່ວນໃນການສະເຫຼີມສະຫຼອງວັນຄູແຫ່ງຊາດເພື່ອລະນຶກເຖິງຄຸນງາມຄວາມດີຂອງຜູ້ເປັນຄູ.

**ມາດຕາ93** (ປັບປຸງ)ກາໝາຍ,ເຄື່ອງແບບແລະຕາປະທັບ ອົງການຄຸ້ມຄອງວຽກງານການສຶກສາມີກາໝາຍ,ເຄື່ອງແບບຂອງຄູ,ບຸກຄະລາກອນການສຶກສາ,ເຄື່ອງແບບຂອງຜູ້ຮຽນແລະຕາປະທັບຂອງຕົນເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ. ກາໝາຍ,ເຄື່ອງແບບແລະຕາປະທັບດັ່ງກ່າວໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ14

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະຖານຕໍ່ຜູ້ລະເມີດ

**ມາດຕາ94** (ປັບປຸງ)ນະໂຍບາຍຕໍ່ຜູ້ມີຜົນງານ ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ຈະໄດ້ຮັບການຍ້ອງຍໍຫຼືນະໂຍບາຍອື່ນຕາມລະບຽບການ.

**ມາດຕາ95** (ປັບປຸງ)ມາດຕະການຕໍ່ຜູ້ລະເມີດ ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ຈະຖືກສຶກສາອົບຮົມ,ກ່າວເຕືອນ,ລົງວິໄນ,ປັບໃໝ,ໃຊ້ແທນທາງແພ່ງຫຼືຖືກລົງໂທດທາງອາຍາຕາມກໍລະນີເບົາຫຼືໜັກ.

## ພາກທີ 15

## ບົດບັນຍັດສຸດທ້າຍ

**ມາດຕາ96** ການຈັດຕັ້ງປະຕິບັດ ລັດຖະບານແຫ່ງສປປລາວເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ97 (ປັບປຸງ)ຜົນສັກສິດ ກົດໝາຍສະບັບນີ້ມີຜົນສັກສິດນັບແຕ່ວັນປະທານປະເທດແຫ່ງສປປລາວອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ. ກົດໝາຍສະບັບນີ້ປ່ຽນແທນກົດໝາຍວ່າດ້ວຍການສຶກສາສະບັບເລກທີ04 /ສພຊ ລົງວັນທີ3 ກໍລະກົດ 2007; ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

# ( ອ່ານເພີ່ມ )

## ຮູບແບບເອກະສານທາງລັດຖະການ

### 1. ຄວາມສຳຄັນຂອງເອກະສານທາງລັດຖະການ

ເອກະສານທາງລັດຖະການເປັນເອກະສານທີ່ຜະລິດອອກໂດຍອົງການຈັດຕັ້ງຂອງລັດ, ນັບທັງອົງການບໍລິຫານ, ຕຸລາການ ແລະ ອົງການນິຕິບັນຍັດ. ມີການລົງທະບຽນ, ວັນທີພິມ ແລະ ຢັ້ງຢືນຂອງມື້ອອກ ແລະ ມີການຢັ້ງຢືນຈາກພະນັກງານ ຜູ້ທີ່ມີສິດອຳນາດໃນຂອບເຂດຂອງອົງການນັ້ນ ແລະ ເປັນເອກະສານເພື່ອໄວ້ເປັນຫຼັກຖານຍາວນານ.

ເອກະສານທາງລັດຖະການແມ່ນເອກະສານ ເຊິ່ງຂຽນຈາກອົງການທີ່ເປັນນິຕິບຸກຄົນໃດໜຶ່ງມີເນື້ອພົວພັນເຖິງວຽກງານຂອງອົງການຈັດຕັ້ງ ຫຼື ວຽກງານທາງລັດຖະການ.

ເອກະສານທາງລັດຖະການມີສ່ວນປະກອບດັ່ງນີ້: ເຄື່ອງໝາຍກາຊາດ, ຊື່ປະເທດ, ຄຳຂວັນ, ຊື່ສຳນັກງານຂອງເອກະສານ, ເລກທີ, ວັນທີ ເດືອນ ປີ, ຊື່ເອກະສານ, ຮຽນ ຫຼື ເຖິງ, ເລື່ອງ, ເນື້ອໃນ, ຄຳລົງທ້າຍ, ຕຳແໜ່ງຂອງຫົວໜ້າເອກະສານ, ລາຍເຊັນ, ການຈ້ຳກາປະທັບ, ຊື່ ແລະ ນາມສະກຸນຜູ້ເຊັນທີ່ຢູ່ຂອງສຳນັກງານອອກເອກະສານ ແລະ ສະໂນດນຳສົ່ງ.

### 2. ການຂຽນຮູບແບບເອກະສານທາງລັດຖະການ.

ເຄື່ອງໝາຍຊາດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ເບິ່ງຕາມລັດຖະທຳມະນູນ ມາດຕາ 90 ). ເອກະສານທາງລັດຖະການຊະນິດໃດທີ່ມີຄວາມໝາຍທາງດ້ານແນວທາງນະໂຍບາຍຂອງອົງການສູງສຸດຝ່າຍນິຕິບັນຍັດ, ຝ່າຍບໍລິຫານ, ຝ່າຍຕຸລາການ, ລັດຖະມົນຕີວ່າການກະຊວງ, ຫົວໜ້າທີ່ທຽບເທົ່າທີ່ປະກາດໃນຂົງເຂດທົ່ວປະເທດ, ພົວພັນກັບຕ່າງປະເທດໃຫ່ໃຊ້ກາຊາດ, ເຄືອບຄຳ, ສີຄຳຢູ່ເຄິ່ງກາງໜ້າເຈ້ຍໃບທີໜຶ່ງເບື້ອງເທິງ ເຊັ່ນ : ລັດຖະທຳມະນູນ, ກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ, ດຳ ລັດ, ຂໍ້ກຳນົດ ແລະ ໜັງສືທາງການທີ່ພົວພັນກັບສາກົນ. ສ່ວນເອກະສານທາງບໍລິຫານ ເຊັ່ນ : ຂໍ້ຕົກລົງ ຄຳສັ່ງແຈ້ງການ, ບົດລາຍງານ, ໃບສະເໜີ ໃຫ້ໃສ່ເຄື່ອງໝາຍຊາດສີໃດໜຶ່ງນອກຂາກສີເຄືອບຄຳ.

## 3. ຕົວຢ່າງຮູບແບບເອກະສານທາງລັດຖະການ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການຈັດຕັ້ງປະກາດໃຊ້ເອກະສານ — ເລກທີ………/ຕົວຫຍໍ້……
ວັນທີ….ເດືອນ….ປີ……….

### ໜັງສືສະເໜີ

ຮຽນ:………………………………………………………………………………
ເລື່ອງ:………………………………………………………………………………
- ອີງຕາມ:……………………………………………………………………………
( ຊື່ອົງການຈັດຕັ້ງ ຫຼື ຕາແໜ່ງຜູ້ສະໜີ……, ຂໍຖືເປັນກຽດຢ່າງສູງສະເໜີມາຍັງ
…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
…………………………………………………………………………………

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອພິຈາລະນາຕາມຄວາມເໝາະສົມດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ຕາແໜ່ງຫົວໜ້າອົງການຈັດຕັ້ງ**

ເຊັນ ແລະ ປະທັບຕາ

ຊື່ ແລະ ນາມສະກຸນ

ເອກະສານຕິດຄັດ:

1. ……………………… ສະບັບ
2. ……………………… ສະບັບ
3. ເກັບຮັກໄວ້ ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການຈັດຕັ້ງປະກາດໃຊ້ເອກະສານ ເລກທີ........./ຕົວຫຍໍ້.........

ວັນທີ....ເດືອນ....ປີ.............

**ຄໍາສັ່ງ**

ຂອງ................................

ວ່າດ້ວຍ.............................................

- ອີງຕາມ:...............................................................................
- ອີງຕາມ:...............................................................................

**ຕໍາແໜ່ງຫົວໜ້າ, ສໍານັກງານ-ອົງການຕົກລົງ :**

ມາດຕາ 1. ..........................................................................................................

ມາດຕາ 2. ..........................................................................................................

ມາດຕາ 3. ..........................................................................................................

ມາດຕາ 4. ..........................................................................................................

ມາດຕາ 5. ຂໍ້ຕົກລົງສະບັບນີ້ມີຜົນບັງຄັບນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຕາແໜ່ງຫົວໜ້າອົງການຈັດຕັ້ງ

ເຊັນ ແລະ ປະທັບຕາ

ຊື່ ແລະ ນາມສະກຸນ

ບ່ອນສົ່ງ:

1. .........................
2. .........................
3. .........................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການຈັດຕັ້ງປະກາດໃຊ້ເອກະສານ ເລກທີ........./ຕົວຫຍໍ້……

ວັນທີ....ເດືອນ....ປີ..........

# ແຈ້ງການ

ເຖິງ:.........................................................................................

ເລື່ອງ:.......................................................................................

- ອີງຕາມ:...............................................................................

( ຊື່ສານັກງານ, ອົງການ ຫຼື ຕາແໜ່ງ )............ຂໍເປັນກຽດແຈ້ງມາຍັງທ່ານຊາບວ່າ:

.....................................................................................................................

.....................................................................................................................

.....................................................................................................................

...........................................................................................

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ພ້ອມກັນປະຕິບັດແລ້ວລາຍງານ ຜົນໃຫ້ຊາບໃນເວລາອັນຄວນ.

ຕາແໜ່ງຫົວໜ້າອົງການຈັດຕັ້ງ

ເຊັນ ແລະ ປະທັບຕາ

ຊື່ ແລະ ນາມສະກຸນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກົມສ້າງຄູ.

ວິທະຍາໄລຄູສາລະວັນ. ເລກທີ .......ວຄ.ສລວ/2014.

ຫ້ອງການວິທະຍາສາດສັງຄົມ.

# <u>ໃບສະເໜີ</u>

**ຮຽນ :** ..........................................................

( ໂດຍຜ່ານອົງການຈັດຕັ້ງທີ່ກ່ຽວຂ້ອງ )

**ເລື່ອງ** : ..............................................................................................

...........................................................................................................

- ໂດຍປະຕິບັດຕາມ..........................................................
- ອີງຕາມ ..........................................................

...........................................................................................................

..................................................................................................................

..................................................................................................................

...................

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ພ້ອມກັນປະຕິບັດແລ້ວລາຍງານ ຜົນໃຫ້ຊາບໃນເວລາອັນຄວນ.

( ຮຽນມາດ້ວຍຄວາມເຄົາລົບ ແລະນັບຖືຢ່າງສູງ )

ຕຳແໜ່ງຫົວໜ້າອົງການຈັດຕັ້ງ

ເຊັນ ແລະ ປະທັບຕາ

ຊື່ ແລະ ນາມສະກຸນ

# ເອກະສານອ້າງອີງ


- ປື້ມກົດໝາຍການສຶກສາ ປີ 2009; 2.
- ປື້ມວິທະຍາສາດການເມືອງ 3 ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 2, ຮຽບຮຽງໂດຍ ທ່ານ ບຸນສຸວັນ ລັດຕະນາ.
- ປື້ມກົດໝາຍແພ່ງ - ກົດໝາຍອາຍາ 2012; 12-45.
- ເອກະສານປະກອບການຮຽນ-ການສອນວິຊາວິທະຍາສາດການເມືອງ ຄູການເມືອງ ປີທີ 3.
- ປື້ມວິທະຍາສາດການເມືອງ 4 ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 2, ຮຽບຮຽງໂດຍ ທ່ານ ລີວັນ ວົງດານັນທະພັນ.
- ປື້ມເສດຖະສາດການເມືອງ ຄະນະເສດຖະສາດ - ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ.
- https://www.google.la/economyasean
- https://www.google/gov.la
- ປື້ມວິທະຍາສາດການເມືອງ 2 ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 1, ຮຽບຮຽງໂດຍ ທ່ານ ລີວັນ ວົງດານັນທະພັນ.
- ປື້ມວັດທະນະທຳລາວ - ອາຊຽນ ສາຍ ມັດທະຍົມຕອນຕົ້ນ ກົມສ້າງຄູ.
- ປື້ມວິທະຍາສາດການເມືອງ ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ປີທີ 2, ຮຽບຮຽງໂດຍ ທ່ານ ປັງກອນ ຄອນພິລາວັນ.
- ສຶກສາພົນລະເມືອງ ຊັ້ນມັດທະຍົມປີທີ 3 ຮຽບຮຽງໂດຍ : ທ່ານ ມີໄຊສະຫວັດ ແສງສະຫວ່າງ.
- ເອກະສານເກັບກຳສະຖິຕິຊົນເຜົ່າ ແລະ ລາຍຊື່ຊົນເຜົ່າຕ່າງໆຂອງສູນກາງພັກ ປີ 2009.
- ກົດລະບຽບຂອງພັກປະຊາຊົນປະຕິວັດລາວສະໃໝທີ IX 2015.
- ແຜນການ ແລະ ເນື້ອໃນອົບຮົມມັດຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ປີ 2006.